ຄູ່ມື

# ການຈະເຣີນເມຕຕາ

# LOVING-KINDNESS DEVELOPMENT HANDBOOK

THE WORD OF THE BUDDHA

ສຶກສາ ປະຕິບັຕ ແລະເຜີຍແຜ່ທັມວິນັຍຂອງພຣະຕະຖາຄົຕອະຣະຫັນຕະ
ສັມມາສັມພຸທທະທີ່ຊົງປະກາສໄວ້ດີແລ້ວ

ພິກຂຸທັງຫລາຍ ຫາກມີພວກໂຈຣຜູ້ມີຄວາມປະພຶດ
ອັນຕ່ຳຊ້າ ເອົາເລື່ອຍທີ່ມີຫູຈັບທັງສອງຂ້າງເລື່ອຍອະ
ໄວຍະວະໃຫຍ່ນ້ອຍຂອງພວກເຈົ້າ ໃນກໍຣະນີນີ້
ພິກຂຸ ຫລື ພິກຂຸນີອົງຄ໌ໃດມີໃຈຄິດຮ້າຍຕໍ່ໂຈຣ
ເຫລົ່ານັ້ນ ພິກຂຸ ຫລື ພິກຂຸນີອົງຄ໌ນັ້ນບໍ່ຊື່ວ່າເປັນຜູ້
ກະທຳຕາມຄຳສັ່ງສອນຂອງເຮົາ ເພາະເຫດທີ່ອົດ
ກັ້ນບໍ່ໄດ້ນັ້ນ.

ມັຊຊິມະນິກາຍ ມູລປັນນາສກ໌ ໑໘/໑໙໗/໘໙໘

ພິກຂຸທັງຫລາຍ ການປາກົດຂອງບຸຄຄົລ ໓
ຈຳພວກນີ້ ຫາໄດ້ຍາກໃນໂລກ;
ບຸຄຄົລ ໓ ຈຳພວກຄືໃຜ? ຄື:
ຕະຖາຄົຕອະຣະຫັນຕະສັມມາສັມພຸທທະ ໑
ບຸຄຄົລຜູ້ສະແດງທັມວິນັຍທີ່ຕະຖາຄົຕປະກາສແລ້ວ ໑
ບຸຄຄົລທີ່ມີຄວາມກະຕັນຍູກະຕະເວທີ ໑

ພິກຂຸທັງຫລາຍ ການປາກົດຂອງບຸຄຄົລ ໓ ຈຳພວກ
ນີ້ແລ ຫາໄດ້ຍາກໃນໂລກ.



*ອັງຄຸຕຕະຣະນິກາຍ ເອກະ-ທຸກ-ຕິກະນິບາຕ ໒໐/໒໕໓/໕໕*

ພິກຂຸທັງຫລາຍ ທັມມະທານເລີດກວ່າທານທັງຫລາຍ.

ພິກຂຸທັງຫລາຍ ການສະແດງທັມເນື່ອງໆແກ່ບຸຄຄົລຜູ້ຕ້ອງການຜູ້ງ່ຽງໂສຕະລົງຟັງ ນີ້ເລີດກວ່າການເວົ້າຖ້ອຍຄຳອັນເປັນທີ່ຮັກ.

ພິກຂຸທັງຫລາຍ ການຊັກຊວນບຸຄຄົລຜູ້ບໍ່ມີສັທທາໃຫ້ຕັ້ງໝັ້ນດຳຣົງຢູ່ໃນສັທທາສັມປະທາ, ຊັກຊວນຜູ້ທຸສີລໃຫ້ຕັ້ງໝັ້ນດຳຣົງຢູ່ໃນສີລສັມປະທາ, ຊັກຊວນຜູ້ມີຄວາມຂີ້ຖີ່ໃຫ້ຕັ້ງໝັ້ນດຳຣົງຢູ່ໃນຈາຄະສັມປະທາ, ຊັກຊວນຜູ້ມີປັນຍາຊາມ*(ທຸປປັນຍັງ)* ໃຫ້ຕັ້ງໝັ້ນດຳຣົງຢູ່ໃນປັນຍາສັມປະທາ ນີ້ເລີດກວ່າການປະພຶດປະໂຍຊນ໌ທັງຫລາຍ.

*ອັງຄຸຕຕະຣະນິກາຍ ສັຕຕະກະ-ອັຕຖະກະ-ນະວະກະນິບາຕ ໒໓/໒໗໓/໒໐໗*



CONTENTS

ໜ ຄຳນຳ
໑໓ ບົທນຳ
໔໔ ປະໂຍຊນ໌ຂອງການຈະເຣີນເມຕຕາຈິຕ
໔໕ ຄວາມເປັນຜູ້ມີເມຕຕາຍ່ອມເຖິງ
ຄວາມຈະເຣີນຢ່າງດຽວບໍ່ມີເສື່ອມເລີຍ
໔໙ ອານິສົງສ໌ແຫ່ງການຈະເຣີນ
ເມຕຕາເຈໂຕວິມຸຕ ໑໑ ປະການ
໓໔ ອານຸພາບແຫ່ງເມຕຕາເຈໂຕວິມຸຕ
໓໕ ທາຕເປັນເຄື່ອງສະລັດອອກ ໕ ປະການ
໔໓ ສາຣານີຍະທັມ (ທັມອັນເປັນທີ່ຕັ້ງ
ແຫ່ງຄວາມຣະນຶກເຖິງກັນ) ສູຕທີ ໑
໔໗ ສາຣານີຍະທັມ (ທັມອັນເປັນທີ່ຕັ້ງ
ແຫ່ງຄວາມຣະນຶກເຖິງກັນ) ສູຕທີ ໔
໕໑ ຄວາມເຖິງພ້ອມດ້ວຍເມຕຕາກະທຳໃຫ້ກັນ
ທີ່ທຳແລ້ວພໍປະມານສງົບຣະງັບລົງໄດ້
໕໑ ຄວາມແຕກຕ່າງລະຫວ່າງອະຣິຍະສາວົກ
ຜູ້ໄດ້ສະດັບ ກັບປຸຖຸຊົນຜູ້ບໍ່ໄດ້ສະດັບ

| | |
|---|---|
| ໗໗ | ບຸຄຄົລ ໔ ຈຳພວກທີ່ບໍ່ມີທົ່ວໄປໃນປຸຖຸຊົນ |
| ໗໙ | ຊົງໂປດພິກຂຸຊາວເມືອງໂກສັມພີ |
| ໘໔ | ເຣື່ອງພິກຂຸຖືກງູກັດຈົນມໍຣະນະພາບ ເນື່ອງຈາກບໍ່ໄດ້ຈະເຣີນເມຕຕາ |
| ໘໗ | ວິທີການຮັບມືກັບຖ້ອຍຄຳ ໕ ປະການ ດ້ວຍໃຈປະກອບດ້ວຍເມຕຕາ |
| ໘໙ | ການມີໃຈປະກອບດ້ວຍເມຕຕາ ອຸປະມາເໝືອນແຜ່ນດິນ |
| ໙໖ | ການປຽບບຸຣຸສຂຽນຮູປໃນອາກາສ |
| ໙໗ | ປຽບເໝືອນບຸຣຸສເຜົາແມ່ນ້ຳຄົງຄາ |
| ໑໐໑ | ປຽບເໝືອນກະສອບໜັງແມວ |
| ໑໐໕ | ໂອວາທທີ່ສະແດງການປຽບດ້ວຍເລື່ອຍ |
| ໑໐໗ | ວາຈາທີ່ກ່າວດ້ວຍເມຕຕາເປັນວາຈາສຸພາສິຕ |
| ໑໑໑ | ການເສພ ການຈະເຣີນ ການໃສ່ໃຈເຊິ່ງເມຕຕາຈິຕ ຍ່ອມຢູ່ບໍ່ເຫີນຫ່າງຈາກຊານ |
| ໑໑໖ | ພິກຂຸຜູ້ປະກອບດ້ວຍທັມ ໕ ປະການ ບໍ່ຄວນປິ່ນປົວພິກຂຸປ່ວຍ |
| ໑໑໗ | ອານິສົງສ໌ແຫ່ງການຈະເຣີນເມຕຕາເຈໂຕວິມຸຕ ໗ ປະການ |
| ໑໔໐ | ການບໍ່ຈະເຣີນເມຕຕາເຈໂຕວິມຸຕ ຍ່ອມຖືກພວກອະມະນຸສກຳຈັດໄດ້ງ່າຍ |
| ໑໔໔ | ການຈະເຣີນເມຕຕາມີອານິສົງສ໌ ຫລາຍກວ່າການໃຫ້ທານ |
| ໑໔໕ | ເມື່ອຈະເຣີນເມຕຕາຈິຕຢູ່ ພວກອະມະນຸສ |

ຍ່ອມກະທຳຈິຕໃຫ້ຫວັ່ນໄຫວບໍ່ໄດ້
໑໒໗ ທາງທີ່ນຳໄປສູ່ຄວາມເປັນສະຫາຍຂອງພຣົມ
໑໓໔ ຫລັກການຈະເຣີນພຣົມວິຫາຣະທັມ
໑໔໓ ເມຕຕາເຈໂຕວິມຸຕມີອັນໃດເປັນຢ່າງຍິ່ງ?
໑໕໖ ພິກຂຸທີ່ເປັນຜູ້ປະຕິບັຕຂໍ້ປະຕິບັຕອັນດີຍິ່ງ
ຂອງສະມະນະ
໑໖໔ ການຂ້າສັຕເຈາະຈົງພຣະຕະຖາຄົຕ
ຫລືສາວົກຂອງພຣະຕະຖາຄົຕ
ຜູ້ນັ້ນຍ່ອມປະສົບກັບສິ່ງທີ່ບໍ່ເປັນບຸນຍ໌ເປັນອັນມາກ
໑໘໐ ລັກສະນະຂອງບຸຄຄົລທີ່ມີທະມະແລະອຸປະສະມະ
໒໐໒ ພຣະນາງສາມາວະດີ
ຜູ້ມີປົກກະຕິຢູ່ດ້ວຍເມຕຕາ
໒໐໕ ການໂຈດທີ່ເດືອດຮ້ອນແລະບໍ່ເດືອດຮ້ອນ
໒໑໓ ວິທີຣະງັບຄວາມອາຄາຕ
໒໑໕ ຈະເຣີນເມຕຕາເພື່ອລະໂທສະ
໒໑໘ ບຸຄຄົລປຽບດ້ວຍຮອຍຂີດ
໒໒໓ ພຣະຜູ້ມີພຣະພາຄຊົງແຜ່ເມຕຕາຈິຕ
ໄປສູ່ຊ້າງນາລາຄີຣີ
໒໓໐ ວິທີປະຕິບັຕເມື່ອມີຄົນຕຳນິຫລືສັນລະເສີນ
ພຣະພຸທທະເຈົ້າ ພຣະທັມ ພຣະສົງຄ໌
໒໔໑ ເວຣຍ່ອມຣະງັບດ້ວຍການບໍ່ຈ່ອງເວຣ
໒໖໑ ທັມປະຣິຍາຍທີ່ຄວນນ້ອມເຂົ້າມາໃນຕົນ
໒໗໔ ບຸຄຄົລຜູ້ປະກອບດ້ວຍທັມ ໔໐ ປະການ

ຍ່ອມໄປເກີດໃນນະຣົກ ແລະບຸຄຄົລຜູ້ປະກອບດ້ວຍ
ທັມ ໔໐ ປະການຍ່ອມໄປເກີດໃນສວັນ
໘໙໑ ຄວາມທຸກຂ໌ຍ່ອມບໍ່ເປັນທີ່ຮັກຂອງເຮົາ
ຄວາມທຸກຂ໌ກໍບໍ່ເປັນທີ່ຮັກຂອງຜູ້ອື່ນເໝືອນກັນ
໘໙໔ ວິທີປະຕິບັຕເມື່ອຖືກຄົນຕຳນິຕໍ່ໜ້າ
໙໐໐ ແມ່ເຮືອນເວເທຫິກາ
໙໐໗ ໂທສຂອງຄວາມບໍ່ອົດທົນ
ແລະອານິສົງສ໌ຂອງຄວາມອົດທົນ (ສູຕທີ ໑)
໙໑໐ ໂທສຂອງຄວາມບໍ່ອົດທົນ
ແລະອານິສົງສ໌ຂອງຄວາມອົດທົນ (ສູຕທີ ໘)
໙໑໔ ເຈົ້າໂກທເຮັດຫຍັງໜໍ?
໙໑໗ ຜູ້ໜັກໃນຄວາມໂກທແລະຄວາມລົບຫລູ່
ໜັກໃນລາພແລະສັກກາຣະ ພວກເຂົາຍ່ອມບໍ່ງອກ
ງາມໃນທັມອັນພຣະສັມມາສັມພຸທທະເຈົ້າ
ຊົງສະແດງແລ້ວ
໙໘໑ ອະສັທທັມ ໔ ປະການ
໙໘໔ ຜູ້ໜັກໃນຄວາມໂກທ ບໍ່ໜັກໃນສັທທັມ
ຍ່ອມໄປສູ່ນະຣົກ
໙໘໗ ອະຄະຕິ ໔
໙໙໐ ພັຕຕຸທເທສະກະສູຕ


ATLANTIC OCEAN
SOUTH AMERICA
BRAZIL

# ຄຳນຳ

ຫລັກການຢູ່ຮ່ວມກັນຢ່າງສງົບ ສັນຕິ ສາມັກຄີ ປາສະຈາກຄວາມພະຍາບາທ ບຽດບຽນ ນັບວ່າເປັນສິ່ງທີ່ທຸກຄົນຕ່າງກໍມຸ່ງຫວັງສະແຫວງຫາ ແລະກໍມີຄົນຈຳນວນຫລາຍຕ່າງກໍກ່າວເຖິງຄວາມມີສັນຕິພາບ ຢາກໃຫ້ສັງຄົມມະນຸສຢູ່ຮ່ວມກັນຢ່າງສັນຕິ ເພາະເຣື່ອງລາວອັນເປັນເຫຕການສະເທືອນຂ້ວນໃນຫລາຍທົດສະວັດທີ່ຜ່ານມາ ລວມທັງຄວາມຂັດແຍ່ງທີ່ເກີດຂຶ້ນໃນສັງຄົມໂລກປັຈຈຸບັນ ອັນເປັນເຫຕນຳໄປສູ່ຄວາມລົ້ມຕາຍຂອງມວນມະນຸສຊາຕ ສິ່ງທັງຫລາຍເຫລົ່ານັ້ນຈະແກ້ໄຂໄດ້ຢ່າງໃດ ສັນຕິສຸຂຈະເກີດຂຶ້ນໄດ້ດ້ວຍວິທີໃດ ນັບວ່າເປັນຄຳຖາມທີ່ມີຢູ່ໃນໃຈຂອງຄົນສ່ວນໃຫຍ່.

ເຮົາໃນຖານະພຸທທະສາສະນິກະຊົນທີ່ມີຄວາມຮັກ ຄວາມສັທທາໃນພຣະຕະຖາຄົຕອະຣະຫັນຕະສັມມາສັມພຸທທະ ເຊື່ອໃນການຕຣັສຮູ້ເອງໂດຍຊອບຂອງພຣະອົງຄ໌ ເຊື່ອວ່າພຣະອົງຄ໌ຊົງເປັນສັພພັນຍູຈິງ ກໍຄວນເຂົ້າໄປສຶກສາວ່າພຣະຕະຖາຄົຕອະຣະຫັນຕະສັມມາສັມພຸທທະ ພຣະອົງຄ໌ຊົງສອນເຣື່ອງນີ້ໄວ້ຢ່າງໃດ?

ຫລັກທັມແຫ່ງການຢູ່ຮ່ວມກັນ*(ຢ່າງສງົບສັນຕິ)* ພຣະຜູ້ມີພຣະພາຄຊົງຕຣັສສອນໄວ້ຫລາຍ ເພື່ອຄວາມບໍ່ບຽດບຽນຕົນ ບໍ່ບຽດບຽນຄົນອື່ນ ບໍ່ບຽດບຽນທັງຕົນແລະຄົນອື່ນທັງສອງຝ່າຍ ເປັນການກະທຳທີ່ເປັນກຸສົລ ມີຄວາມສຸຂເປັນກຳໄລ ມີຄວາມສຸຂເປັນຜົລ ພຣະສາສດາຊົງສອນໃຫ້ມີ**ເມຕຕາກາຍະກັມ ເມຕຕາວະຈີກັມ ເມຕຕາມະໂນກັມ** ເຊັ່ນໃນຫລັກທັມທີ່ເປັນເຫຕໃຫ້ຣະນຶກເຖິງກັນ ທີ່ຮຽກວ່າ **ສາຣານີຍະທັມ** ເຊິ່ງໄດ້ນຳມາຮຽບຮຽງໄວ້ແລ້ວໃນໜັງສືເຫລັ້ມນີ້.

ອີກຢ່າງໜຶ່ງ ພຣະຜູ້ມີພຣະພາຄຊົງສອນໃຫ້ຈະເຣີນເມຕຕາ ເພື່ອລະພະຍາບາທ ເຊິ່ງໄດ້ຕຣັສກັບພຣະຣາຫຸລວ່າ **"ຣາຫຸລ ເຈົ້າຈົ່ງຈະເຣີນເມຕຕາພາວະນາເຖີດ ເພາະເມື່ອເຈົ້າຈະເຣີນເມຕຕາພາວະນາຢູ່ ກໍຈັກລະພະຍາບາທໄດ້..."** ສ່ວນໃນຫລັກການປະພຶດສຸຈະຣິຕທາງກາຍ

ວາຈາ ທີ່ຮຽກວ່າ ສີລ ໕ ປະການ ກໍເປັນຄໍາຕອບຊັດເຈນ ເມື່ອນໍາມາປະຕິບັດແລ້ວຍ່ອມນໍາສັນຕິສຸຂມາສູ່ຊີວິຕ.

ສິ່ງສໍາຄັນຢ່າງຍິ່ງທີ່ພຣະສາສດາຊົງໃຫ້ໃສ່ໃຈໃນການຈະເຣີນເມຕຕາຈິຕ ອັນເປັນພຣະໂອວາທທີ່ຊົງສະແດງການປຽບດ້ວຍເລື່ອຍເຊັ່ນ **"ພິກຂຸທັງຫລາຍ ພວກເຈົ້າທັງຫລາຍຈົ່ງໃສ່ໃຈໃນໂອວາທທີ່ສະແດງການປຽບດ້ວຍເລື່ອຍນີ້ຢູ່ເນື່ອງໆເຖີດ ຂໍ້ນັ້ນຈັກເປັນປະໂຍຊນ໌ແລະຄວາມສຸຂແກ່ພວກເຈົ້າທັງຫລາຍສິ້ນກາລະນານ."**

ການໄດ້ຮວບລວມທັມວິນັຍທີ່ພຣະຕະຖາຄົຕອະຣະຫັນຕະສັມມາສັມພຸທທະຊົງຕຣັສໄວ້ດີແລ້ວ ມີເປົ້າໝາຍເພື່ອປະກາສຫລັກຄໍາສອນຂອງພຣະອົງຄ໌ສູ່ສັງຄົມ ສູ່ມວນມະນຸສຊາຕ ເພື່ອຄວາມສຸຂຄວາມຈະເຣີນຂອງສັຕທັງປວງ ເພື່ອປະໂຍຊນ໌ສຸຂແກ່ຊາວໂລກ ແລະຫລັກທັມດັ່ງກ່າວກໍເປັນຄໍາຕອບໃຫ້ເຮົາທັງຫລາຍ ທີ່ຕ້ອງການສັນຕິສຸຂອັນແທ້ຈິງ.

ດ້ວຍຄວາມສັທທາໃນພຣະຕະຖາຄົຕ
ວ. ວົງແສງສີ

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ໂຣຊະມັລລະກະສັຕຜູ້ນີ້ເປັນຄົນມີຊື່ສຽງ ມີຄົນຮູ້ຈັກຫລາຍ, ຄວາມເຫລື້ອມໃສໃນທັມວິນັຍນີ້ຂອງຄົນທີ່ມີຜູ້ຮູ້ຈັກຫລາຍເຊັ່ນນີ້ມີອິທທິພົລຫລາຍ ຂໍປະທານພຣະວະໂຣກາສ ຂໍພຣະອົງຄ໌ຊົງກະຣຸນາໂປດກະທຳໃຫ້ໂຣຊະມັລລະກະສັຕເຫລື້ອມໃສໃນທັມວິນັຍນີ້ດ້ວຍເຖີດ ພຣະອົງຄ໌ຜູ້ຈະເຣີນ!

**ອານົນທ໌ ການທີ່ຈະກະທຳໃຫ້ໂຣຊະມັລລະກະສັຕເຫລື້ອມໃສໃນທັມວິນັຍນີ້ນັ້ນ ຕະຖາຄົຕກະທຳໄດ້ບໍ່ຍາກເລີຍ.**

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງແຜ່ເມຕຕາຈິຕໄປຍັງໂຣຊະມັລລະກະສັຕ...

ວິນັຍປິດົກ ມະຫາວັຄ ພາຄ ໘ ເຫລັ້ມທີ ໕/໙໙-໑໐໘/໗໗

# ບົທນໍາ

ຄັ້ງນັ້ນ ພຣະຜູ້ມີພຣະພາຄປະທັບຢູ່ທີ່ອາປະນະນິຄົມ ຕາມພຣະພຸທທາພິຣົມ ແລ້ວສະເດັຈຈາຣິກໄປທາງພຣະນະຄອຣກຸສິນາຣາພ້ອມດ້ວຍພິກຂຸສົງຄ໌ໝູ່ໃຫຍ່ ໑,໔໕໐ ອົງຄ໌.

ພວກມັລລະກະສັຕຊາວພຣະນະຄອຣກຸສິນາຣາໄດ້ຊົງຊາບຂ່າວແນ່ຊັດວ່າ ພຣະຜູ້ມີພຣະພາຄກໍາລັງສະເດັຈມາພຣະນະຄອຣກຸສິນາຣາ ພ້ອມດ້ວຍພິກຂຸສົງຄ໌ໝູ່ໃຫຍ່ ໑,໔໕໐ ອົງຄ໌ ພວກມັລລະກະສັຕເຫລົ່ານັ້ນໄດ້ຕັ້ງກະຕິກາໄວ້ວ່າ ຜູ້ໃດບໍ່ຕ້ອນຮັບສະເດັຈພຣະຜູ້ມີພຣະພາຄ ຈະຕ້ອງຖືກປັບໄໝເປັນເງິນ ໕໐໐ ກະຫາປະນະ ສມັຍນັ້ນ

ໂຣຊະມັລລະກະສັຕເປັນສະຫາຍຂອງທ່ານພຣະອານົນທ໌ ຄັນພຣະຜູ້ມີພຣະພາຄສະເດັຈຈາຣິກໂດຍລຳດັບ ເຖິງພຣະນະຄອຣກຸສິນາຣາແລ້ວ ພວກມັລລະກະສັຕ ຊາວພຣະນະຄອຣກຸສິນາຣາໄດ້ຈັດການຕ້ອນຮັບສະ ເດັຈພຣະຜູ້ມີພຣະພາຄ ຄັນໂຣຊະມັລລະກະສັຕຮັບສະ ເດັຈພຣະຜູ້ມີພຣະພາຄແລ້ວ ເຂົ້າໄປຫາທ່ານພຣະ ອານົນທ໌ເຖິງທີ່ພັກ ຊົງອະພິວາທແລ້ວປະທັບຢືນໃນທີ່ ຄວນສ່ວນຂ້າງໜຶ່ງ.

ທ່ານພຣະອານົນທ໌ໄດ້ປາສັຍກັບໂຣຊະມັລລະກະສັຕຜູ້ປະ ທັບຢືນໃນທີ່ຄວນສ່ວນຂ້າງໜຶ່ງວ່າ ທ່ານໂຣຊະ ການຮັບ ສະເດັຈພຣະຜູ້ມີພຣະພາຄຂອງທ່ານໂອລານແທ້.

ໂຣຊະມັລລະກະສັຕຕຣັສວ່າ ທ່ານອານົນທ໌ ພຣະພຸທທະ ເຈົ້າກໍດີ ພຣະທັມກໍດີ ພຣະສົງຄ໌ກໍດີ ບໍ່ໄດ້ເຮັດໃຫ້ ຂ້ານ້ອຍໃຫຍ່ໂຕ ພວກຍາຕຕ່າງຫາກໄດ້ຕັ້ງກະຕິກາໄວ້ ວ່າ ຜູ້ໃດບໍ່ຕ້ອນຮັບສະເດັຈພຣະຜູ້ມີພຣະພາຄຈະຕ້ອງຖືກ ປັບໄໝເປັນເງິນ ໕໐໐ ກະຫາປະນະ ຂ້ານ້ອຍນັ້ນແລໄດ້ ຕ້ອນຮັບສະເດັຈພຣະຜູ້ມີພຣະພາຄເຊັ່ນນີ້ ເພາະຢ້ານ ພວກຍາຕປັບໄໝ.

ທັນໃດນັ້ນ ທ່ານພຣະອານົນທ໌ສະແດງຄວາມບໍ່ພໍໃຈວ່າເຫຕໃດໂຣຊະມັລລະກະສັຕຈຶ່ງໄດ້ຕຣັສຢ່າງນີ້ ແລ້ວເຂົ້າໄປເຝົ້າພຣະຜູ້ມີພຣະພາຄ ອະພິວາທແລ້ວນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ແລ້ວໄດ້ກຣາບທູລຄຳນີ້ແດ່ພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ໂຣຊະມັລລະກະສັຕຜູ້ນີ້ເປັນຄົນມີຊື່ສຽງ ມີຄົນຮູ້ຈັກຫລາຍ, ຄວາມເຫລື້ອມໃສໃນທັມວິນັຍນີ້ຂອງຄົນທີ່ມີຜູ້ຮູ້ຈັກຫລາຍເຊັ່ນນີ້ມີອິທທິພົລຫລາຍ ຂໍປະທານພຣະວະໂຣກາສ ຂໍພຣະອົງຄ໌ຊົງກະຣຸນາໂປດກະທຳໃຫ້ໂຣຊະມັລລະກະສັຕເຫລື້ອມໃສໃນທັມວິນັຍນີ້ດ້ວຍເຖີດ ພຣະອົງຄ໌ຜູ້ຈະເຣີນ!

**ອານົນທ໌! ການທີ່ຈະກະທຳໃຫ້ໂຣຊະມັລລະກະສັຕເຫລື້ອມໃສໃນທັມວິນັຍນີ້ນັ້ນ ຕະຖາຄົຕກະທຳໄດ້ບໍ່ຍາກເລີຍ.**

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງແຜ່ເມຕຕາຈິຕໄປຍັງໂຣຊະມັລລະກະສັຕ ແລ້ວຊົງລຸກຈາກທີ່ປະທັບສະເດັຈເຂົ້າພຣະວິຫາຣ ຄັນໂຣຊະມັລລະກະສັຕອັນພຣະເມຕຕາຈິຕຂອງພຣະຜູ້ມີພຣະພາຄຖືກຕ້ອງແລ້ວ ໄດ້ທ່ຽວຄົ້ນຫາ

ຕາມວິຫາຣ ຕາມບໍຣິເວນທົ່ວທຸກແຫ່ງ ເໝືອນງົວແມ່ລູກອ່ອນ ແລ້ວຕຣັສຖາມພິກຂຸທັງຫລາຍວ່າ

ຂ້າແຕ່ທ່ານຜູ້ຈະເຣີນ! ເວລານີ້ພຣະຜູ້ມີພຣະພາຄອະຣະຫັນຕະສັມມາສັມພຸທທະເຈົ້າພຣະອົງຄ໌ນັ້ນປະທັບຢູ່ໃສໜໍ ເພາະຂ້ານ້ອຍໃຄ່ຈະເຂົ້າເຝົ້າພຣະອົງຄ໌?

ພິກຂຸທັງຫລາຍກ່າວຕອບວ່າ ທ່ານໂຣຊະ ພຣະວິຫາຣນັ້ນເຂົາປິດປະຕູເສຍແລ້ວ ຂໍທ່ານໄປດສງົບສຽງ ສະເດັຈເຂົ້າໄປທາງພຣະວິຫາຣນັ້ນ ຄ່ອຍໆຢ່ອງເຂົ້າໄປທີ່ໜ້າມຸຂ ຊົງອະແຮມ ແລ້ວຊົງເຄາະປະຕູເຖີດ ພຣະຜູ້ມີພຣະພາຄຈັກຊົງເປີດປະຕູຮັບທ່ານ.

ຂະນະນັ້ນ ໂຣຊະມັລລະກະສັຕຊົງສງົບສຽງ ສະເດັຈເຂົ້າໄປທາງພຣະວິຫາຣເຊິ່ງປິດປະຕູເສຍແລ້ວນັ້ນ ຄ່ອຍໆຢ່ອງເຂົ້າໄປທີ່ໜ້າມຸຂ ຊົງອະແຮມ ແລ້ວເຄາະບານປະຕູ ພຣະຜູ້ມີພຣະພາຄຊົງເປີດປະຕູຮັບ ໂຣຊະມັລລະກະສັຕຈິ່ງສະເດັຈເຂົ້າພຣະວິຫາຣ ອະພິວາທພຣະຜູ້ມີພຣະພາຄແລ້ວ ປະທັບນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ພຣະຜູ້ມີພຣະພາຄໄດ້ຊົງສະແດງອະນຸປຸພພິກະຖາແກ່ໂຣຊະມັລລະກະສັຕຄື ຊົງປະກາສທານກະຖາ ສີລກະຖາ ສັຄຄະກະຖາ ໂທສ ຄວາມຕ່ຳຊາມ ຄວາມເສົ້າໝອງແຫ່ງການ

ທັງຫລາຍ ແລະອານິສົງສ໌ໃນການອອກຈາກກາມ ເມື່ອພຣະອົງຄ໌ຊົງຊາບວ່າ ໂຣຊະມັລລະກະສັຕມີຈິຕຄ່ອງ ມີຈິຕອ່ອນ ມີຈິຕປາສະຈາກນິວອຣ ມີຈິຕເບີກບານ ມີຈິຕ ຜ່ອງໃສແລ້ວ ຈິ່ງຊົງປະກາສພຣະທັມມະເທສະນາທີ່ພຣະ ພຸທທະເຈົ້າທັງຫລາຍຊົງຍົກຂຶ້ນສະແດງດ້ວຍພຣະອົງຄ໌ ເອງຄື ທຸກຂ໌ ສະມຸທັຍ ນິໂຣທ ມັຄຄ໌ ທັມມະຈັກຂຸອັນ ປາສະຈາກທຸລີ ປາສະຈາກມົລທິນໄດ້ເກີດຂຶ້ນແກ່ໂຣຊະ ມັລລະກະສັຕໃນສະຖານທີ່ປະທັບນັ່ງນັ້ນແລວ່າ **ສິ່ງໃດສິ່ງ ໜຶ່ງມີຄວາມເກີດຂຶ້ນເປັນທັມມະດາ ສິ່ງນັ້ນທັງມວນຍ່ອມມີ ຄວາມດັບໄປເປັນທັມມະດາ** ເໝືອນຜ້າທີ່ສະອາດ ປາສະຈາກມົລທິນຄວນໄດ້ຮັບນ້ຳຍ້ອມດ້ວຍດີສັນນັ້ນ.

ໂຣຊະມັລລະກະສັຕໄດ້ຊົງເຫັນທັມແລ້ວ ໄດ້ຊົງບັນລຸທັມ ແລ້ວ ໄດ້ຮູ້ທັມແຈ່ມແຈ້ງ ໄດ້ຢັ່ງລົງສູ່ທັມແລ້ວ ຂ້າມພົ້ນ ຄວາມສົງສັຍໄດ້ແລ້ວ ປາສະຈາກຖ້ອຍຄຳສະແດງຄວາມ ສົງສັຍ ເຖິງຄວາມເປັນຜູ້ອົງອາດ ບໍ່ຕ້ອງເຊື່ອຜູ້ອື່ນໃນຄຳ ສອນຂອງພຣະສາສດາ ໄດ້ກຣາບທູລຄຳນີ້ແດ່ພຣະຜູ້ ມີພຣະພາຄວ່າ:

ຂໍປະທານພຣະວະໂຣກາສ ຂໍພຣະຄຸນເຈົ້າທັງຫລາຍໂປດ ຮັບຈີວອຣ ບິນທະບາຕ ເສນາສະນະ ແລະຄິລານະ

ປັຈຈັຍເພສັຊບໍຣິຂານຂອງຂ້ານ້ອຍຜູ້ດຽວ ຢ່າຮັບຂອງຄົນອື່ນ.

ພຣະຜູ້ມີພຣະພາຄຕຣັສວ່າ

**ໂຣຊະ! ແມ່ນແຕ່ອະຣິຍະບຸຄຄົລຜູ້ໄດ້ເຫັນທັມແລ້ວດ້ວຍຍານຂອງເສຂະ ດ້ວຍທັສສະນະຂອງເສຂະເໝືອນຢ່າງທ່ານ ກໍຄົງມີຄວາມປາຖນາຢ່າງນີ້ວ່າ ໂອພຣະຄຸນເຈົ້າທັງຫລາຍຄົງກະຣຸນາຮັບຈີວອຣ ບິນທະບາຕ ເສນາສະນະ ແລະຄິລານະປັຈຈັຍເພສັຊບໍຣິຂານຂອງພວກເຮົາເທົ່ານັ້ນ ຄົງບໍ່ຮັບຂອງຜູ້ອື່ນ ເພາະສະນັ້ນ ພິກຂຸທັງຫລາຍຈັກຮັບປັຈຈັຍຂອງທ່ານດ້ວຍ ຂອງຄົນອື່ນດ້ວຍ.**

ກໍສມັຍນັ້ນແລ ປະຊາຊົນທັງຫລາຍໄດ້ຈັດຕັ້ງລຳດັບພັຕຕາຫານອັນປະນີຕໄວ້ທີ່ນະຄອຣກຸສິນາຣາ ຄົນໂຣຊະມັລລະກະສັຕບໍ່ໄດ້ລຳດັບທີ່ຈະຖວາຍພັຕຕາຫານ ຈຶ່ງໄດ້ຊົງດຳຣິວ່າ ຖ້າຢ່າງນັ້ນ ເຮົາຄວນກວດເບິ່ງໂຮງອາຫານ ສິ່ງໃດບໍ່ມີໃນໂຮງອາຫານ ເຮົາຄວນຕົກແຕ່ງສິ່ງນັ້ນຖວາຍ ຄັນແລ້ວຊົງກວດເບິ່ງໃນໂຮງອາຫານ ບໍ່ທອດພຣະເນຕເຫັນຂອງ ໔ ຢ່າງຄື ຜັກສົດ, ຂອງຂົບສັນທີ່ທຳດ້ວຍແປ້ງ

ຈິ່ງສະເດັຈເຂົ້າໄປຫາທ່ານພຣະອານົນທ໌ ຄັນແລ້ວໄດ້ທູລຫາຣືວ່າ:

ຂ້າແຕ່ທ່ານອານົນທ໌! ເມື່ອຂ້ານ້ອຍບໍ່ໄດ້ລໍາດັບທີ່ຈະຖວາຍພັຕຕາຫາຣໃນສະຖານທີ່ແຫ່ງນີ້ ໄດ້ມີຄວາມດໍາຣິວ່າ ຖ້າຢ່າງນັ້ນ ເຮົາຄວນກວດເບິ່ງໂຮງອາຫາຣ ສິ່ງໃດບໍ່ມີໃນໂຮງອາຫາຣ ເຮົາຄວນຕົກແຕ່ງສິ່ງນັ້ນຖວາຍ.

ຂ້າແຕ່ທ່ານອານົນທ໌! ເມື່ອຂ້ານ້ອຍກວດເບິ່ງໃນໂຮງອາຫາຣ ບໍ່ໄດ້ເຫັນຂອງ ໔ ຢ່າງຄື ຜັກສົດ, ຂອງຂົບສັນທີ່ທໍາດ້ວຍແປ້ງ, ຫາກຂ້ານ້ອຍຈັກຕົກແຕ່ງຜັກສົດແລະຂອງຂົບສັນທີ່ທໍາດ້ວຍແປ້ງຖວາຍ ພຣະຜູ້ມີພຣະພາຄຈະຊົງຮັບຂອງຂ້ານ້ອຍຫລືໜໍ?

ທ່ານພຣະອານົນທ໌ກ່າວຕອບວ່າ ທ່ານໂຮຊະ ຖ້າຢ່າງນັ້ນອາຕະມາຈະທູລຖາມພຣະຜູ້ມີພຣະພາຄເບິ່ງ ແລ້ວໄດ້ທູລຖາມພຣະຜູ້ມີພຣະພາຄ.

ພຣະຜູ້ມີພຣະພາຄຕຣັສວ່າ:

**ອານົນທ໌! ຖ້າເຊັ່ນນັ້ນຈົ່ງໃຫ້ເຂົາຕົກແຕ່ງເຖີດ.**

ທ່ານພຣະອານົນທ໌ໄດ້ກ່າວວ່າ ທ່ານໂຣຊະ ຖ້າຢ່າງນັ້ນທ່ານຈົ່ງຕົກແຕ່ງຖວາຍ.

ໂຣຊະມັລລະກະສັຕຈຶ່ງສັ່ງໃຫ້ຕົກແຕ່ງຜັກສົດແລະຂອງຂົບຄ້ຽວທີ່ທຳດ້ວຍແປ້ງເປັນອັນມາກ ໂດຍຜ່ານຣາຕຣີນັ້ນແລ້ວ ນ້ອມຖວາຍພຣະຜູ້ມີພຣະພາຄ ກຣາບທູລວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂໍພຣະຜູ້ມີພຣະພາຄໂປດຮັບຜັກສົດແລະຂອງຂົບສັນທີ່ທຳດ້ວຍແປ້ງຂອງຂ້ານ້ອຍດ້ວຍເຖີດ ຂ້ານ້ອຍ!

**ໂຣຊະ! ຖ້າເຊັ່ນນັ້ນຈົ່ງຖວາຍພິກຂຸທັງຫລາຍ.**

ພິກຂຸທັງຫລາຍລັງກຽດ ບໍ່ຮັບການເຄນ ພຣະຜູ້ມີພຣະພາຄຕຣັສວ່າ:

**ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຈົ່ງຮັບເຄນສັນເຖີດ.**

ຂະນະນັ້ນ ໂຣຊະມັລລະກະສັຕຊົງຖວາຍພິກຂຸສົງຄ໌ມີພຣະພຸທທະເຈົ້າເປັນປະມຸຂດ້ວຍຜັກສົດແລະຂອງຂົບສັນທີ່ທຳດ້ວຍແປ້ງມາກມາຍດ້ວຍພຣະຫັຕຖ໌ຂອງພຣະອົງຄ໌ ຈົນຍັງພຣະຜູ້ມີພຣະພາຄຜູ້ລ້າງພຣະຫັຕຖ໌ແລ້ວ ຊົງ

ນຳພຣະຫັຕຖ໌ອອກຈາກບາຕແລ້ວ ໃຫ້ຫ້າມພັຕແລ້ວ ໄດ້ປະທັບນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ພຣະຜູ້ມີພຣະພາຄຊົງຊີ້ແຈງໃຫ້ໂຣຊະມັລລະກະສັຕຜູ້ນັ່ງຢູ່ໃນທີ່ຄວນສ່ວນຂ້າງໜຶ່ງ ຊົງເຫັນແຈ້ງ ສະມາທານ ອາດຫານ ຣ່າເຣີງ ດ້ວຍທັມມີກະຖາແລ້ວ ຊົງລຸກຈາກທີ່ປະທັບສະເດັຈກັບ.

ພາຍຫລັງພຣະຜູ້ມີພຣະພາຄຊົງທຳມີກະຖາແລ້ວ ໃນເພາະເຫຕອັນເປັນເຄົ້າມູລ ໃນເພາະເຫຕແຣກເກີດນັ້ນແລ້ວຕຣັສອະນຸຍາດແກ່ພິກຂຸທັງຫລາຍວ່າ:

**ພິກຂຸທັງຫລາຍ! ເຣົາອະນຸຍາດຜັກສົດທຸກຊະນິດແລະຂອງຂົບສັນທີ່ທຳດ້ວຍແປ້ງທຸກຊະນິດ.**

---

*ວິນັຍປິດົກ ມະຫາວັຄ ພາຄ ໔ ເຫລັ້ມທີ ໕/໙໙-໑໐໔/໗໗*



...ຄົນເຫລົ່າອື່ນຈັກມີຈິດພະຍາບາທ

**ເຮົາທັງຫລາຍຈັກເປັນຜູ້ບໍ່ມີຈິດພະຍາບາທ**

# ປະໂຍຊນ໌ຂອງການຈະເຣີນເມຕຕາຈິຕ

**ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຢ່າກົວຕໍ່ບຸນຍ໌ເລີຍ ຄຳວ່າ ບຸນຍ໌ນີ້ ເປັນຊື່ແຫ່ງຄວາມສຸຂ.**

ພິກຂຸທັງຫລາຍ! ເຣົາຍ່ອມຮູ້ຊັດເຈນເຊິ່ງຜົລແຫ່ງບຸນຍ໌ອັນໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ທີ່ເຣົາສເວີຍແລ້ວຕະຫລອດການລະນານ **ເຣົາຈະເຣີນເມຕຕາຈິຕຕະຫລອດ ໆ ປີ ເຣົາບໍ່ໄດ້ກັບມາຍັງໂລກນີ້ຕະຫລອດ ໆ ສັງວັຕຕະວິວັຕຕະກັປ.**

ພິກຂຸທັງຫລາຍ! ເມື່ອໂລກເຖິງຄວາມພິນາດ ເຣົາເຂົ້າເຖິງພຣົມມະໂລກຊັ້ນອາພັສສະຣະ ເມື່ອໂລກຍັງບໍ່ເຖິງ

ຄວາມພິນາດ ເຮົາຍ່ອມເຂົ້າເຖິງວິມານພຣົມອັນວ່າງເປົ່າ ໃນວິມານພຣົມນັ້ນ ເຮົາເປັນພຣົມ ເປັນທ້າວມະຫາພຣົມ ມີຄວາມເປັນໃຫຍ່ເຊິ່ງໃຜໆບໍ່ສາມາດຄອບງຳໄດ້ ມີຄວາມເຫັນແນ່ນອນ ມີອຳນາດ, ເຮົາໄດ້ເປັນທ້າວສັກກະເທວະຣາຊເຖິງ ໓໖ ຄັ້ງ, ເຮົາໄດ້ເປັນພຣະເຈົ້າຈັກກະພັຕຜູ້ຊົງທັມ ເປັນພຣະຣາຊາໂດຍທັມ ມີມະຫາສະໝຸດທັງ ໔ ເປັນຂອບເຂດ ເປັນຜູ້ຊະນະສົງຄາມ ມີຊົນບົທທີ່ມີຄວາມໝັ້ນຄົງ **ປະກອບດ້ວຍຣັຕະນະ ໗ ປະການ ຫລາຍຮ້ອຍຄັ້ງຄື ຈັກແກ້ວ, ຊ້າງແກ້ວ, ມ້າແກ້ວ, ມະນີແກ້ວ, ນາງແກ້ວ, ຄະຫະບໍດີແກ້ວ, ຂຸນພົລແກ້ວເປັນທີເຈັດ.** ອີກຢ່າງໜຶ່ງ ເຮົາເຄີຍມີບຸຕຫລາຍກວ່າພັນ ລ້ວນແຕ່ເປັນຜູ້ກ້າຫານ ສາມາດຢ່ຳຍີຂ້າເສິກໄດ້ ເຮົາຄອບຄອງປະຖະພີອັນມີມະຫາສະໝຸດເປັນຂອບເຂດໂດຍທັມ ບໍ່ຕ້ອງໃຊ້ອາດຍາ ບໍ່ຕ້ອງໃຊ້ສັສຕຣາ.

ສຸຕຕັນຕະປິດົກ ອັງຄຸຕຕະຣະນິກາຍ
ສັຕຕະກະ-ອັຕຖະກະ-ນະວະກະນິບາຕ ໔໓/໗໕/໕໙

## ຄວາມເປັນຜູ້ມີເມຕຕາຍ່ອມເຖິງຄວາມ ຈະເຣີນຢ່າງດຽວ ບໍ່ມີຄວາມເສື່ອມເລີຍ

ພິກຂຸທັງຫລາຍ! ເມື່ອພິກຂຸທັງຫລາຍເຂົ້າໄປຕັ້ງ**ກາຍະກັມ ປະກອບດ້ວຍເມຕຕາໃນເພື່ອນພຣົມມະຈັນຍ໌ທັງຫລາຍ** ທັງໃນທີ່ແຈ້ງແລະທີ່ລັບຢູ່ພຽງໃດ ຍ່ອມຫວັງໄດ້ເຊິ່ງ ຄວາມຈະເຣີນຢ່າງດຽວ ບໍ່ມີຄວາມເສື່ອມພຽງນັ້ນ.

ພິກຂຸທັງຫລາຍ! ເມື່ອພິກຂຸທັງຫລາຍເຂົ້າໄປຕັ້ງ**ວະຈີກັມ ປະກອບດ້ວຍເມຕຕາໃນເພື່ອນພຣົມມະຈັນຍ໌ທັງຫລາຍ** ທັງໃນທີ່ແຈ້ງແລະທີ່ລັບຢູ່ພຽງໃດ ຍ່ອມຫວັງໄດ້ເຊິ່ງ ຄວາມຈະເຣີນຢ່າງດຽວ ບໍ່ມີຄວາມເສື່ອມພຽງນັ້ນ.

ພິກຂຸທັງຫລາຍ! ເມື່ອພິກຂຸທັງຫລາຍເຂົ້າໄປຕັ້ງ**ມະໂນກັມປະກອບດ້ວຍເມຕຕາໃນເພື່ອນພຣົມມະຈັນຍ໌ທັງຫລາຍ** ທັງໃນທີ່ແຈ້ງແລະທີ່ລັບຢູ່ພຽງໃດ ຍ່ອມຫວັງໄດ້ເຊິ່ງຄວາມຈະເຣີນຢ່າງດຽວ ບໍ່ມີຄວາມເສື່ອມພຽງນັ້ນ.

---

*ທີຄະນິກາຍ ມະຫາວັຄ ໑໐/໗໑-໗໔/໗໕*

- ຣາຫຸລ! ເຈົ້າຈົ່ງຈະເຣີນເມຕຕາພາວະນາເຖີດ ເພາະເມື່ອເຈົ້າຈະເຣີນເມຕຕາພາວະນາຢູ່ ກໍຈັກລະ**ພະຍາບາທໄດ້.**
- ເຈົ້າຈົ່ງຈະເຣີນ**ກະຣຸນາພາວະນາ**ເຖີດ ເພາະເມື່ອເຈົ້າຈະເຣີນກະຣຸນາພາວະນາຢູ່ ກໍຈັກລະ**ວິຫິງສາ**ໄດ້.
- ເຈົ້າຈົ່ງຈະເຣີນ**ມຸທິຕາພາວະນາ**ເຖີດ ເພາະເມື່ອເຈົ້າຈະເຣີນມຸທິຕາພາວະນາຢູ່ ກໍຈັກລະ**ອະຣະຕິ**ໄດ້.
- ເຈົ້າຈົ່ງຈະເຣີນ**ອຸເປກຂາພາວະນາ**ເຖີດ ເພາະເມື່ອເຈົ້າຈະເຣີນອຸເປກຂາພາວະນາຢູ່ ກໍຈັກລະ**ປະຕິຄະ**ໄດ້.
- ເຈົ້າຈົ່ງຈະເຣີນ**ອະສຸພະພາວະນາ**ເຖີດ ເພາະເມື່ອເຈົ້າຈະເຣີນອະສຸພະພາວະນາຢູ່ ກໍຈັກລະ**ຣາຄະ**ໄດ້.
- ເຈົ້າຈົ່ງຈະເຣີນ**ອະນິຈຈະສັນຍາພາວະນາ**ເຖີດ ເພາະເມື່ອເຈົ້າຈະເຣີນ**ອະນິຈຈະສັນຍາພາວະນາ**ຢູ່ ກໍຈັກລະ**ອັສມິມານະ**ໄດ້.

*ມັຊຊິມະນິກາຍ ມັຊຊິມະປັນນາສກ໌ ໑໓/໑໑໕/໑໕໕*

# ອານິສົງສ໌ແຫ່ງການຈະເຣີນ
# ເມຕຕາເຈໂຕວິມຸຕ ໑໑ ປະການ

ພິກຂຸທັງຫລາຍ! ເມື່ອເມຕຕາເຈໂຕວິມຸຕ ອັນບຸຄຄົລເສພແລ້ວ ຈະເຣີນແລ້ວ ກະທຳໃຫ້ຫລາຍແລ້ວ ກະທຳໃຫ້ເປັນດັ່ງຍານ ກະທຳໃຫ້ເປັນທີ່ຕັ້ງ ໃຫ້ຕັ້ງໝັ້ນໂດຍລຳດັບ ສັ່ງສົມດີແລ້ວ ປຣາຣົພດີແລ້ວ ຍ່ອມຫວັງອານິສົງສ໌ ໑໑ ປະການ, ໑໑ ປະການເປັນຢ່າງໃດ? ຄື:

**ຍ່ອມຫລັບເປັນສຸຂ ໑**
**ຍ່ອມຕື່ນເປັນສຸຂ ໑**
**ຍ່ອມບໍ່ຝັນຮ້າຍ ໑**
**ຍ່ອມເປັນທີ່ຮັກຂອງມະນຸສທັງຫລາຍ ໑**

**ຍ່ອມເປັນທີ່ຮັກຂອງອະມະນຸສທັງຫລາຍ ໑**
**ເທວະດາທັງຫລາຍຍ່ອມຮັກສາ ໑**
**ໄຟ ຢາພິດ ຫລືສັສຕຣາຍ່ອມບໍ່ກ້ຳກ່າຍໄດ້ ໑**
**ຈິຕຍ່ອມຕັ້ງໝັ້ນໄດ້ໄວ ໑**
**ສີໜ້າຜ່ອງໃສ ໑**
**ເປັນຜູ້ບໍ່ຫລົງທຳກາລະ ໑**
**ເມື່ອຍັງບໍ່ແທງຕະຫລອດຄຸນອັນຍິ່ງ**
**ຍ່ອມເປັນຜູ້ເຂົ້າເຖິງພຣົມມະໂລກ**
*(ອຸຕຕະຣິງ ອັປປະຕິວິຊຊັນໂຕ ພຣັມມະໂລກູປະໂຄ ໂຫຕິ)* **໑**

ພິກຂຸທັງຫລາຍ! ເມື່ອເມຕຕາເຈໂຕວິມຸຕ ອັນບຸຄຄົລເສພແລ້ວ ຈະເຣີນແລ້ວ ກະທຳໃຫ້ຫລາຍແລ້ວ ກະທຳໃຫ້ເປັນດັ່ງຍານ ກະທຳໃຫ້ເປັນທີ່ຕັ້ງ ໃຫ້ຕັ້ງໝັ້ນໂດຍລຳດັບ ສັ່ງສົມດີແລ້ວ ປຣາຣົພດີແລ້ວ ຍ່ອມຫວັງອານິສົງສ໌ ໑໑ ປະການນີ້ແລ.

---

*ອັງຄຸຕຕະຣະນິກາຍ ທະກະສະ-ເອກາທະສະກະນິບາຕ ໒໔/໓໑໗/໒໒໒*

ຄົນພາລກ່າວຄຳຫຍາບດ້ວຍວາຈາ
ຍ່ອມສຳຄັນວ່າ ຊະນະແລ້ວ
ແຕ່ຄວາມອົດກັ້ນໄດ້ເປັນຄວາມຊະນະ
ຂອງບັນດິຕຜູ້ຮູ້ແຈ້ງຢູ່
ຜູ້ໃດໂກທຕອບບຸຄຄົລຜູ້ໂກທແລ້ວ
ຜູ້ນັ້ນເປັນຜູ້ຊົ່ວກວ່າບຸຄຄົລຜູ້ໂກທແລ້ວ
ເພາະການໂກທຕອບນັ້ນ...

*ສັງຍຸຕຕະນິກາຍ ສະຄາຖະວັຄ ໑໕/໑໙໗/໒໒໒*



## ອານຸພາບແຫ່ງເມຕຕາເຈໂຕວິມຸຕ

ພິກຂຸທັງຫລາຍ! **ບຸນຍ໌ກິຣິຍາວັຕຖຸຢ່າງໃດຢ່າງໜຶ່ງທີ່ມີອຸປະທິກິເລສເປັນເຫຕ ບຸນຍ໌ກິຣິຍາວັຕຖຸທັງໝົດນັ້ນຍ່ອມບໍ່ເຖິງສ່ວນທີ ໑໖ ຂອງເມຕຕາເຈໂຕວິມຸຕ ເມຕຕາເຈໂຕວິມຸຕນັ້ນແລ ຄອບງຳບຸນຍ໌ກິຣິຍາວັຕຖຸເຫລົ່ານັ້ນສະຫວ່າງສະໄຫວ** ປຽບເໝືອນຣັສມີຂອງດາວຊະນິດໃດຊະນິດ ໜຶ່ງ ຣັສມີຂອງດາວທັງໝົດນັ້ນ ຍ່ອມບໍ່ເຖິງສ່ວນທີ ໑໖ ແຫ່ງຣັສມີຂອງດວງຈັນທ໌ ຣັສມີຂອງດວງຈັນທ໌ນັ້ນແລ ຄອບງຳຣັສມີຂອງດາວເຫລົ່ານັ້ນ ຮຸ່ງເຮືອງສະຫວ່າງສະໄຫວສັນນັ້ນ.

ພິກຂຸທັງຫລາຍ! ປຽບເໝືອນໃນຊ່ວງເວລາອາກາສປອດໂປ່ງປາສະຈາກເມກໃນສາຣະທະສມັຍໃນເດືອນສຸດທ້າຍແຫ່ງລະດູຝົນ ພຣະອາທິຕລອຍຂຶ້ນສູ່ທ້ອງຟ້າກຳຈັດອາກາສອັນມືດມົລທັງປວງ ຮຸ່ງເຮືອງສະຫວ່າງສະໄຫວສັນນັ້ນ.

ອີກຢ່າງໜຶ່ງ ປຽບເໝືອນດາວປະກາຍພຶກໃນປັຈຈຸບັນສມັຍແຫ່ງຣາຕຣີ ຍ່ອມຮຸ່ງເຮືອງສະຫວ່າງສະໄຫວສັນນັ້ນ.

**ຜູ້ໃດມີສະຕິ ຈະເຣີນເມຕຕາບໍ່ມີປະມານ ສັງໂຍຊທັງຫລາຍຂອງຜູ້ນັ້ນ ຜູ້ທີ່ພິຈາຣະນາເຫັນທັມອັນເປັນທີ່ສິ້ນໄປແຫ່ງອຸປາທິ ຍ່ອມເປັນທັມມະຊາຕເບົາບາງ ຖ້າວ່າຜູ້ນັ້ນມີຈິຕບໍ່ມຸ້ງຮ້າຍເຊິ່ງສັຕທີ່ມີຊີວິຕແມ່ນແຕ່ຊະນິດດຽວເປັນຜູ້ຈະເຣີນເມຕຕາຢູ່ ຜູ້ນັ້ນຍ່ອມຊື່ວ່າ ເປັນຜູ້ມີກຸສົລເພາະການຈະເຣີນເມຕຕານັ້ນ ອັນພຣະອະຣິຍະບຸຄຄົລມີໃຈອະນຸເຄາະເຊິ່ງສັຕທີ່ມີຊີວິຕທຸກໝູ່ເຫລົ່າ ຍ່ອມກະທຳບຸນຍ໌ມາກມາຍ ພຣະຣາຊະຣືສີທັງຫລາຍຊົງຊະນະເຊິ່ງແຜ່ນດິນອັນເຕັມໄປດ້ວຍໝູ່ສັຕ ຊົງບູຊາຢູ່ເຊິ່ງບຸນຍ໌ເຫລົ່າໃດ ສະເດັຈທ່ຽວໄປ ບຸນຍ໌ເຫລົ່ານັ້ນຍ່ອມບໍ່ເຖິງສ່ຽວທີ ໑໖ ແຫ່ງເມຕຕາຈິຕອັນບຸຄຄົລຈະເຣີນດີແລ້ວ.**

**ຜູ້ໃດມີຈິຕປະກອບດ້ວຍເມຕຕາໃນສັຕທຸກໝູ່ເຫລົ່າ ຍ່ອມບໍ່ຂ້າເອງ ບໍ່ໃຊ້ໃຫ້ຜູ້ອື່ນຂ້າ ບໍ່ຊະນະເອງ ບໍ່ໃຊ້ຜູ້ອື່ນໃຫ້ຊະນະ ເວຣຂອງຜູ້ນັ້ນຍ່ອມບໍ່ມີເພາະເຫຕອັນໃດເລີຍ.**

---

*ອັງຂຸທທະກະນິກາຍ ຂຸທທະກະປາຖະ-ທັມມະບົທ-ອຸທານ-ອິຕິວຸຕຕະກະ-ສຸຕຕະນິບາຕ ໔໕/໑໗໖-໑໗໗/໔໐໕*

ກໍຄົນເຫລົ່າໃດຈ່ອງເວຣໄວ້ວ່າ ຄົນນັ້ນດ່າເຮົາ ຕີເຮົາ ຊະນະເຮົາ ໄດ້ລັກສິ່ງຂອງຂອງເຮົາໄປ ເວຣຂອງຄົນນັ້ນຍ່ອມບໍ່ສງົບຣະງັບ; ສ່ວນຄົນເຫລົ່າໃດບໍ່ຈ່ອງເວຣໄວ້ວ່າ ຄົນນັ້ນດ່າເຮົາ ຕີເຮົາ ຊະນະເຮົາ ໄດ້ລັກສິ່ງຂອງຂອງເຮົາໄປ ເວຣຂອງຄົນນັ້ນຍ່ອມສງົບຣະງັບ.

ໃນຍຸຄໃດກໍຕາມ ເວຣທັງຫລາຍບໍ່ເຄີຍດັບຫາຍໄປດ້ວຍການຜູກເວຣເລີຍ ແຕ່ດັບໄດ້ດ້ວຍການບໍ່ຜູກເວຣ ທັມນີ້ເປັນຂອງເກົ່າ.

*ວິນັຍປິດົກ ມະຫາວັຄ. ໕/໔໖໙/໔໕໗*

## ທາຕເປັນເຄື່ອງສະລັດອອກ ໖ ປະການ

ພິກຂຸທັງຫລາຍ! ທາຕເປັນເຄື່ອງສະລັດອອກ ໖ ປະການ; ໖ ປະການນັ້ນເປັນຢ່າງໃດ?

ພິກຂຸທັງຫລາຍ! ຖ້າພິກຂຸໃນທັມວິນັຍນີ້ ກ່າວຢ່າງນີ້ວ່າ ເມຕຕາເຈໂຕວິມຸຕຂ້ານ້ອຍຈະເຣີນແລ້ວ ກະທຳໃຫ້ຫລາຍແລ້ວ ກະທຳໃຫ້ເປັນດັ່ງຍານທີ່ທຽມດີແລ້ວ ກະທຳໃຫ້ເປັນທີ່ຕັ້ງ ປະພຶດສັ່ງສົມເນື່ອງໆ ອົບຮົມດີແລ້ວ ປຣາຣົພດີແລ້ວ ແຕ່ວ່າພະຍາບາທຍັງຄອບງຳຈິຕຂອງຂ້ານ້ອຍຢູ່ ພິກຂຸທັງຫລາຍຄວນກ່າວຕັກເຕືອນເຂົາວ່າ ອາວຸໂສ ຢ່າໄດ້ກ່າວຢ່າງນັ້ນ ຢ່າໄດ້ກ່າວຕູ່ພຣະຜູ້ມີພຣະພາຄ ເພາະ

ການກ່າວຕູ່ພຣະຜູ້ມີພຣະພາຄບໍ່ດີເລີຍ ພຣະຜູ້ມີພຣະພາຄນັ້ນບໍ່ໄດ້ຕຣັສຢ່າງນີ້.

**ອາວຸໂສ! ຂໍ້ນັ້ນບໍ່ແມ່ນຖານະ ບໍ່ແມ່ນໂອກາສ ຄືເມື່ອເມຕຕາເຈໂຕວິມຸຕທີ່ພິກຂຸຈະເຣີນແລ້ວ ກະທຳໃຫ້ຫລາຍແລ້ວ ກະທຳໃຫ້ເປັນດັ່ງຍານທີ່ທຽມດີແລ້ວ ກະທຳໃຫ້ເປັນທີ່ຕັ້ງປະພຶດສັ່ງສົມເນື່ອງໆ ອົບຮົມດີແລ້ວ ປຣາຣົພດີແລ້ວ ແຕ່ວ່າພະຍາບາທຍັງຄອບງຳຈິຕຂອງເຂົາຢູ່ ນັ້ນບໍ່ແມ່ນຖານະທີ່ຈະມີໄດ້ ເພາະເມຕຕາເຈໂຕວິມຸຕນີ້ ເປັນເຄື່ອງສະລັດອອກເຊິ່ງພະຍາບາທ.**

ພິກຂຸທັງຫລາຍ! ອີກປະການໜຶ່ງ ຖ້າພິກຂຸໃນທັມວິນັຍນີ້ກ່າວຢ່າງນີ້ວ່າ ກະຣຸນາເຈໂຕວິມຸຕຂ້ານ້ອຍຈະເຣີນແລ້ວກະທຳໃຫ້ຫລາຍແລ້ວ ກະທຳໃຫ້ເປັນດັ່ງຍານທີ່ທຽມດີແລ້ວ ກະທຳໃຫ້ເປັນທີ່ຕັ້ງ ປະພຶດສັ່ງສົມເນື່ອງໆ ອົບຮົມດີແລ້ວ ປຣາຣົພດີແລ້ວ ແຕ່ວ່າວິຫິງສາຍັງຄອບງຳຈິຕຂອງຂ້ານ້ອຍຢູ່ ພິກຂຸທັງຫລາຍຄວນກ່າວຕັກເຕືອນເຂົາວ່າ ອາວຸໂສ ຢ່າໄດ້ກ່າວຢ່າງນັ້ນ ຢ່າໄດ້ກ່າວຕູ່ພຣະຜູ້ມີພຣະພາຄ ເພາະການກ່າວຕູ່ພຣະຜູ້ມີພຣະພາຄບໍ່ດີເລີຍພຣະຜູ້ມີພຣະພາຄນັ້ນບໍ່ໄດ້ຕຣັສຢ່າງນີ້.

**ອາວຸໂສ! ຂໍ້ນັ້ນບໍ່ແມ່ນຖານະ ບໍ່ແມ່ນໂອກາສ ຄືເມື່ອກະຣຸນາເຈໂຕວິມຸຕທີ່ພິກຂຸຈະເຣີນແລ້ວ ກະທຳໃຫ້ຫລາຍແລ້ວ ກະທຳໃຫ້ເປັນດັ່ງຍານທີ່ທຽມດີແລ້ວ ກະທຳໃຫ້ເປັນທີ່ຕັ້ງ ປະພຶດສັ່ງສົມເນື່ອງໆ ອົບຮົມດີແລ້ວ ປຣາຣົພດີແລ້ວ ແຕ່ວ່າວິຫິງສາຍັງຄອບງຳຈິຕຂອງເຂົາຢູ່ ນັ້ນບໍ່ແມ່ນຖານະທີ່ຈະມີໄດ້ ເພາະກະຣຸນາເຈໂຕວິມຸຕນີ້ ເປັນເຄື່ອງສະລັດອອກເຊິ່ງວິຫິງສາ.**

ພິກຂຸທັງຫລາຍ! ອີກປະການໜຶ່ງ ຖ້າພິກຂຸໃນທັມວິນັຍນີ້ ກ່າວຢ່າງນີ້ວ່າ ມຸທິຕາເຈໂຕວິມຸຕຂ້ານ້ອຍຈະເຣີນແລ້ວ ກະທຳໃຫ້ຫລາຍແລ້ວ ກະທຳໃຫ້ເປັນດັ່ງຍານທີ່ທຽມດີແລ້ວ ກະທຳໃຫ້ເປັນທີ່ຕັ້ງ ປະພຶດສັ່ງສົມເນື່ອງໆ ອົບຮົມດີແລ້ວ ປຣາຣົພດີແລ້ວ ແຕ່ວ່າອະຣະຕິ*(ຄວາມບໍ່ຍິນດີ)* ຍັງຄອບງຳຈິຕຂອງຂ້ານ້ອຍຢູ່ ພິກຂຸທັງຫລາຍຄວນກ່າວຕັກເຕືອນເຂົາວ່າ ອາວຸໂສ ຢ່າໄດ້ກ່າວຢ່າງນັ້ນ ຢ່າໄດ້ກ່າວຕູ່ພຣະຜູ້ມີພຣະພາຄ ເພາະການກ່າວຕູ່ພຣະຜູ້ມີພຣະພາຄບໍ່ດີເລີຍ ພຣະຜູ້ມີພຣະພາຄນັ້ນບໍ່ໄດ້ຕຣັສຢ່າງນີ້.

**ອາວຸໂສ! ຂໍ້ນັ້ນບໍ່ແມ່ນຖານະ ບໍ່ແມ່ນໂອກາສ ຄືເມື່ອມຸທິຕາເຈໂຕວິມຸຕທີ່ພິກຂຸຈະເຣີນແລ້ວ ກະທຳໃຫ້ຫລາຍແລ້ວ ກະທຳໃຫ້ເປັນດັ່ງຍານທີ່ທຽມດີແລ້ວ ກະທຳໃຫ້ເປັນທີ່ຕັ້ງ ປະພຶດສັ່ງສົມເນື່ອງໆ ອົບຮົມດີແລ້ວ ປຣາຣົພດີ**

**ແລ້ວ ແຕ່ວ່າອະຣະຕິຍັງຄອບງຳຈິຕຂອງເຂົາຢູ່ ນັ້ນບໍ່ແມ່ນຖານະທີ່ຈະມີໄດ້ ເພາະມຸທິຕາເຈໂຕວິມຸຕນີ້ ເປັນເຄື່ອງສະລັດອອກເຊິ່ງອະຣະຕິ.**

ພິກຂຸທັງຫລາຍ! ອີກປະການໜຶ່ງ ຖ້າພິກຂຸໃນທັມວິນັຍນີ້ກ່າວຢ່າງນີ້ວ່າ ອຸເປກຂາເຈໂຕວິມຸຕຂ້ານ້ອຍຈະເຣີນແລ້ວ ກະທຳໃຫ້ຫລາຍແລ້ວ ກະທຳໃຫ້ເປັນດັ່ງຍານທີ່ທຽມດີແລ້ວ ກະທຳໃຫ້ເປັນທີ່ຕັ້ງ ປະພຶດສັ່ງສົມເນື່ອງໆ ອົບຮົມດີແລ້ວ ປຣາຣົພດີແລ້ວ ແຕ່ວ່າຣາຄະຍັງຄອບງຳຈິຕຂອງຂ້ານ້ອຍຢູ່ ພິກຂຸທັງຫລາຍຄວນກ່າວຕັກເຕືອນເຂົາວ່າ ອາວຸໂສ ຢ່າໄດ້ກ່າວຢ່າງນັ້ນ ຢ່າໄດ້ກ່າວຕູ່ພຣະຜູ້ມີພຣະພາຄ ເພາະການກ່າວຕູ່ພຣະຜູ້ມີພຣະພາຄບໍ່ດີເລີຍ ພຣະຜູ້ມີພຣະພາຄນັ້ນບໍ່ໄດ້ຕຣັສຢ່າງນີ້.

**ອາວຸໂສ! ຂໍ້ນັ້ນບໍ່ແມ່ນຖານະ ບໍ່ແມ່ນໂອກາສ ຄືເມື່ອອຸເປກຂາເຈໂຕວິມຸຕທີ່ພິກຂຸຈະເຣີນແລ້ວ ກະທຳໃຫ້ຫລາຍແລ້ວ ກະທຳໃຫ້ເປັນດັ່ງຍານທີ່ທຽມດີແລ້ວ ກະທຳໃຫ້ເປັນທີ່ຕັ້ງ ປະພຶດສັ່ງສົມເນື່ອງໆ ອົບຮົມດີແລ້ວ ປຣາຣົພດີແລ້ວ ແຕ່ວ່າຣາຄະຍັງຄອບງຳຈິຕຂອງເຂົາຢູ່ ນັ້ນບໍ່ແມ່ນຖານະທີ່ຈະມີໄດ້ ເພາະອຸເປກຂາເຈໂຕວິມຸຕນີ້ ເປັນເຄື່ອງສະລັດອອກເຊິ່ງຣາຄະ.**

ພິກຂຸທັງຫລາຍ! ອີກປະການໜຶ່ງ ຖ້າພິກຂຸໃນທັມວິນັຍນີ້ ກ່າວຢ່າງນີ້ວ່າ ອະນິມິຕຕະເຈໂຕວິມຸຕ ຂ້ານ້ອຍຈະເຣີນ ແລ້ວ ກະທຳໃຫ້ຫລາຍແລ້ວ ກະທຳໃຫ້ເປັນດັ່ງຍານທີ່ ທຽມດີແລ້ວ ກະທຳໃຫ້ເປັນທີ່ຕັ້ງ ປະພຶດສັ່ງສົມເນື່ອງໆ ອົບຮົມດີແລ້ວ ປຣາຣົພດີແລ້ວ ແຕ່ວ່າວິນຍານຂອງ ຂ້ານ້ອຍຍັງແສຫານິມິຕຢູ່ ພິກຂຸທັງຫລາຍຄວນກ່າວ ຕັກເຕືອນເຂົາວ່າ ອາວຸໂສ ຢ່າໄດ້ກ່າວຢ່າງນັ້ນ ຢ່າໄດ້ ກ່າວຕູ່ພຣະຜູ້ມີພຣະພາຄ ເພາະການກ່າວຕູ່ພຣະຜູ້ມີພຣະ ພາຄບໍ່ດີເລີຍ ພຣະຜູ້ມີພຣະພາຄນັ້ນບໍ່ໄດ້ຕຣັສຢ່າງນີ້.

**ອາວຸໂສ! ຂໍ້ນັ້ນບໍ່ແມ່ນຖານະ ບໍ່ແມ່ນໂອກາສ ຄືເມື່ອອະ ນິມິຕຕະເຈໂຕວິມຸຕທີ່ພິກຂຸຈະເຣີນແລ້ວ ກະທຳໃຫ້ຫລາຍ ແລ້ວ ກະທຳໃຫ້ເປັນດັ່ງຍານທີ່ທຽມດີແລ້ວ ກະທຳໃຫ້ເປັນ ທີ່ຕັ້ງ ປະພຶດສັ່ງສົມເນື່ອງໆ ອົບຮົມດີແລ້ວ ປຣາຣົພດີ ແລ້ວ ແຕ່ວ່າວິນຍານຂອງເຂົາຍັງແສຫານິມິຕຢູ່ ນັ້ນບໍ່ ແມ່ນຖານະທີ່ຈະມີໄດ້ ເພາະອະນິມິຕຕະເຈໂຕວິມຸຕນີ້ ເປັນເຄື່ອງສະລັດອອກເຊິ່ງນິມິຕທັງປວງ.**

ພິກຂຸທັງຫລາຍ! ອີກປະການໜຶ່ງ ຖ້າພິກຂຸໃນທັມວິນັຍນີ້ ກ່າວຢ່າງນີ້ວ່າ ອັສມິມານະຂອງຂ້ານ້ອຍໝົດສິ້ນແລ້ວ ແລະຂ້ານ້ອຍຍ່ອມບໍ່ຕາມເຫັນວ່ານີ້ເປັນເຮົາ ກໍແຕ່ວ່າ ລູກ ສອນຄືຄວາມສົງສັຍເຄືອບແຄງໃຈຍັງຄອບງຳຈິຕຂອງ

ຂ້ານ້ອຍຢູ່; ພິກຂຸທັງຫລາຍຄວນກ່າວຕັກເຕືອນເຂົາວ່າ ອາວຸໂສ ຢ່າໄດ້ກ່າວຢ່າງນັ້ນ ຢ່າໄດ້ກ່າວຕູ່ພຣະຜູ້ມີພຣະພາຄ ເພາະການກ່າວຕູ່ພຣະຜູ້ມີພຣະພາຄບໍ່ດີເລີຍ ພຣະຜູ້ມີພຣະພາຄນັ້ນບໍ່ໄດ້ຕຣັສຢ່າງນີ້.

**ອາວຸໂສ! ຂໍ້ນັ້ນບໍ່ແມ່ນຖານະ ບໍ່ແມ່ນໂອກາສ ຄືເມື່ອອັສມິມານະຂອງພິກຂຸໝົດສິ້ນແລ້ວ ແລະພິກຂຸຍ່ອມບໍ່ຕາມເຫັນວ່າ ນີ້ເປັນເຮົາ ກໍແຕ່ວ່າ ລູກສອນຄືຄວາມສົງສັຍເຄືອບແຄງໃຈຍັງຄອບງຳຈິຕຂອງເຂົາຢູ່ ນັ້ນບໍ່ແມ່ນຖານະທີ່ຈະມີໄດ້ ເພາະການຖອນເຊິ່ງອັສມິມານະໄດ້ແລ້ວນັ້ນ ຍ່ອມເປັນເຄື່ອງສະລັດອອກເຊິ່ງລູກສອນຄືຄວາມສົງສັຍເຄືອບແຄງໃຈ.**

ພິກຂຸທັງຫລາຍ! ທາຕເປັນເຄື່ອງສະລັດອອກ ໖ ປະການນີ້ແລ.

---

*ສັງຍຸຕຕະຣະນິກາຍ ປັນຈະສັກກະນິບາຕ ໔໔/໔໕໗-໔໖໐/໔໗໔*


Scarfs

## ສາຣານີຍະທັມ ທັມອັນເປັນທີ່ຕັ້ງແຫ່ງຄວາມຣະນຶກເຖິງກັນ (ສູຕທີ ໑)

ພິກຂຸທັງຫລາຍ! ສາຣານີຍະທັມ ໖ ປະການນີ້ ໖ ປະການເປັນຢ່າງໃດ?

ພິກຂຸທັງຫລາຍ! ພິກຂຸໃນທັມວິນັຍນີ້ ເຂົ້າໄປຕັ້ງກາຍະກັມປະກອບດ້ວຍເມຕຕາໃນເພື່ອນພຣົມມະຈັນຍ໌ທັງຫລາຍທັງຕໍ່ໜ້າແລະລັບຫລັງ ນີ້ເປັນສາຣານີຍະທັມ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເຂົ້າໄປຕັ້ງວະຈີກັມປະກອບດ້ວຍເມຕຕາໃນເພື່ອນພຣົມມະຈັນຍ໌ທັງຫລາຍທັງຕໍ່ໜ້າແລະລັບຫລັງ ນີ້ກໍເປັນສາຣານີຍະທັມ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເຂົ້າໄປຕັ້ງມະໂນກັມປະກອບດ້ວຍເມຕຕາໃນເພື່ອນພຣົມມະຈັນຍ໌ທັງຫລາຍທັງຕໍ່ໜ້າແລະລັບຫລັງ ນີ້ກໍເປັນສາຣານີຍະທັມ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸແບ່ງປັນລາພທັງຫລາຍທີ່ປະກອບດ້ວຍທັມ ໄດ້ມາໂດຍທັມ ໂດຍທີ່ສຸດແມ່ນພຽງບິນທະບາຕ ຍ່ອມບໍຣິໂພຄຮ່ວມກັນກັບເພື່ອນພຣົມມະຈັນຍ໌ທັງຫລາຍຜູ້ມີສີລ ນີ້ເປັນສາຣານີຍະທັມ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ມີສີລທີ່ບໍ່ຂາດ ບໍ່ທະລຸ ບໍ່ດ່າງ ບໍ່ພ້ອຍ ເປັນອິສສະຣະ ອັນວິນຍູຊົນສັນລະເສີນ ບໍ່ມີອັນໃດຄອບງຳ ເປັນໄປເພື່ອສະມາທິສະເໝີກັນກັບເພື່ອນພຣົມມະຈັນຍ໌ທັງຫລາຍ ທັງຕໍ່ໜ້າແລະລັບຫລັງ ນີ້ເປັນສາຣານີຍະທັມ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸມີທິຕຖິອັນເປັນອະຣິຍະເປັນເຄື່ອງນຳອອກໄປເພື່ອຄວາມສິ້ນທຸກຂ໌ໂດຍ

ຊອບແກ່ຜູ້ກະທຳຕາມ ສະເໝີກັນກັບເພື່ອນພຣົມມະຈັນຍ໌ທັງຫລາຍ ທັງຕໍ່ໜ້າແລະລັບຫລັງ ນີ້ກໍເປັນສາຣານິຍະທັມ.

ພິກຂຸທັງຫລາຍ! ສາຣານິຍະທັມ ໖ ປະການເຫລົ່ານີ້ແລ.

---

*ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໒໒/໒໔໘/໒໓໒*



## ສາຣານິຍະທັມ ທັມອັນເປັນທີ່ຕັ້ງແຫ່ງຄວາມຣະນຶກເຖິງກັນ (ສູຕທີ ໒) [1]

ພິກຂຸທັງຫລາຍ! **ທັມ ໖ ປະການນີ້ ເປັນທີ່ຕັ້ງແຫ່ງການຣະນຶກເຖິງກັນ ກະທຳໃຫ້ເປັນທີ່ຮັກ ເປັນທີ່ເຄົາຣົພ ຍ່ອມເປັນໄປເພື່ອຄວາມສົງເຄາະ ເພື່ອຄວາມບໍ່ວິວາທກັນ ເພື່ອຄວາມພ້ອມພຽງເປັນອັນໜຶ່ງອັນດຽວກັນ.**

ທັມ ໖ ປະການເປັນຢ່າງໃດ?

ພິກຂຸທັງຫລາຍ! ພິກຂຸໃນທັມວິນັຍນີ້ **ເຂົ້າໄປຕັ້ງກາຍກັມປະກອບດ້ວຍເມຕຕາໃນເພື່ອນພຣົມມະຈັນຍ໌ທັງຫລາຍ**

---

[1] *ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໒໒/໒໖໗/໒໗໙*

**ທັງຕໍ່ໜ້າແລະລັບຫລັງ** ນີ້ກໍເປັນທີ່ຕັ້ງແຫ່ງການຣະນຶກເຖິງກັນ ກະທຳໃຫ້ເປັນທີ່ຮັກ ເປັນທີ່ເຄົາຣົພ ຍ່ອມເປັນໄປເພື່ອຄວາມສົງເຄາະກັນ ເພື່ອຄວາມບໍ່ວິວາທກັນ ເພື່ອຄວາມພ້ອມພຽງເປັນອັນໜຶ່ງອັນດຽວກັນ.

ພິກຂຸທັງຫລາຍ! ອີກປະການໜຶ່ງ **ພິກຂຸເຂົ້າໄປຕັ້ງວະຈີກັມປະກອບດ້ວຍເມຕຕາໃນເພື່ອນພຣົມມະຈັນຍ໌ທັງຫລາຍ ທັງຕໍ່ໜ້າແລະລັບຫລັງ** ນີ້ກໍເປັນທີ່ຕັ້ງແຫ່ງການຣະນຶກເຖິງກັນ ກະທຳໃຫ້ເປັນທີ່ຮັກ ເປັນທີ່ເຄົາຣົພ ຍ່ອມເປັນໄປເພື່ອຄວາມສົງເຄາະກັນ ເພື່ອຄວາມບໍ່ວິວາທກັນ ເພື່ອຄວາມພ້ອມພຽງເປັນອັນໜຶ່ງອັນດຽວກັນ.

ພິກຂຸທັງຫລາຍ! ອີກປະການໜຶ່ງ **ພິກຂຸເຂົ້າໄປຕັ້ງມະໂນກັມ ປະກອບດ້ວຍເມຕຕາໃນເພື່ອນພຣົມມະຈັນຍ໌ທັງຫລາຍ ທັງຕໍ່ໜ້າແລະລັບຫລັງ** ນີ້ກໍເປັນທີ່ຕັ້ງແຫ່ງການຣະນຶກເຖິງກັນ ກະທຳໃຫ້ເປັນທີ່ຮັກ ເປັນທີ່ເຄົາຣົພ ຍ່ອມເປັນໄປເພື່ອຄວາມສົງເຄາະກັນ ເພື່ອຄວາມບໍ່ວິວາທກັນ ເພື່ອຄວາມພ້ອມພຽງເປັນອັນໜຶ່ງອັນດຽວກັນ.

ພິກຂຸທັງຫລາຍ! ອີກປະການໜຶ່ງ **ພິກຂຸແບ່ງປັນລາພທັງຫລາຍທີ່ປະກອບດ້ວຍທັມ ໄດ້ມາໂດຍທັມ ໂດຍທີ່ສຸດແມ່ນພຽງບິນທະບາຕ ຍ່ອມບໍຣິໂພຄຮ່ວມກັນກັບ**

**ເພື່ອນພຣົມມະຈັນຍ໌ທັງຫລາຍຜູ້ມີສິລ** ນີ້ກໍເປັນທີ່ຕັ້ງແຫ່ງການຣະນຶກເຖິງກັນ ກະທຳໃຫ້ເປັນທີ່ຮັກ ເປັນທີ່ເຄົາຣົພ ຍ່ອມເປັນໄປເພື່ອຄວາມສົງເຄາະກັນ ເພື່ອຄວາມບໍ່ວິວາທກັນ ເພື່ອຄວາມພ້ອມພຽງເປັນອັນໜຶ່ງອັນດຽວກັນ.

ພິກຂຸທັງຫລາຍ! ອີກປະການໜຶ່ງ **ພິກຂຸເປັນຜູ້ມີສິລທີ່ບໍ່ຂາດ ບໍ່ທະລຸ ບໍ່ດ່າງ ບໍ່ພ້ອຍ ເປັນອິສສະຣະ ອັນວິນຍູຊົນສັນລະເສີນ ບໍ່ມີອັນໃດຄອບງຳ ເປັນໄປເພື່ອສະມາທິ ສະເໝີກັນກັບເພື່ອນພຣົມມະຈັນຍ໌ທັງຫລາຍ ທັງຕໍ່ໜ້າແລະລັບຫລັງ** ນີ້ກໍເປັນທີ່ຕັ້ງແຫ່ງການຣະນຶກເຖິງກັນ ກະທຳໃຫ້ເປັນທີ່ຮັກ ເປັນທີ່ເຄົາຣົພ ຍ່ອມເປັນໄປເພື່ອຄວາມສົງເຄາະກັນ ເພື່ອຄວາມບໍ່ວິວາທກັນ ເພື່ອຄວາມພ້ອມພຽງເປັນອັນໜຶ່ງອັນດຽວກັນ.

ພິກຂຸທັງຫລາຍ! ອີກປະການໜຶ່ງ **ພິກຂຸມີທິຕຖິອັນເປັນອະຣິຍະເປັນເຄື່ອງນຳອອກໄປ ເພື່ອຄວາມສິ້ນທຸກຂ໌ໂດຍຊອບແກ່ຜູ້ກະທຳຕາມ ສະເໝີກັນກັບເພື່ອນພຣົມມະຈັນຍ໌ທັງຫລາຍ ທັງຕໍ່ໜ້າແລະລັບຫລັງ** ນີ້ກໍເປັນທີ່ຕັ້ງແຫ່ງການຣະນຶກເຖິງກັນ ກະທຳໃຫ້ເປັນທີ່ຮັກ ເປັນທີ່ເຄົາຣົພ ຍ່ອມເປັນໄປເພື່ອຄວາມສົງເຄາະກັນ ເພື່ອຄວາມບໍ່ວິວາທກັນ ເພື່ອຄວາມພ້ອມພຽງເປັນອັນໜຶ່ງອັນດຽວກັນ.



## ຄວາມເຖິງພ້ອມດ້ວຍເມຕຕາ ກະທຳໃຫ້ກັມທີ່ທຳແລ້ວພໍປະມານສງົບຣະງັບລົງໄດ້

ພິກຂຸທັງຫລາຍ! ເຮົາບໍ່ຮູ້ແລ້ວ ຍ່ອມບໍ່ກ່າວຄວາມສິ້ນສຸດແຫ່ງກັມທີ່ສັຕຕັ້ງໃຈກະທຳສັ່ງສົມຂຶ້ນ ກໍວິບາກນັ້ນແລ ອັນສັຕຜູ້ກະທຳຍ່ອມໄດ້ສເວີຍໃນປັຈຈຸບັນ ຫລືໃນອັຕຕະພາບຖັດໄປ ຫລືໃນອັຕຕະພາບຖັດໄປອີກ. ພິກຂຸທັງຫລາຍ ເຮົາບໍ່ຮູ້ແລ້ວ ຍ່ອມບໍ່ກ່າວການທຳທີ່ສຸດທຸກຂ໌ແຫ່ງກັມທີ່ສັຕຕັ້ງໃຈກະທຳສັ່ງສົມຂຶ້ນ.

ພິກຂຸທັງຫລາຍ! ອະຣິຍະສາວົກນັ້ນແລ ເປັນຜູ້ປາສະຈາກອະພິຊຊາ ປາສະຈາກພະຍາບາທ ບໍ່ຫລົງມົວເມົາ ເປັນຜູ້ມີສັມປະຊັນຍະ ມີສະຕິສະເພາະໜ້າ ມີໃຈ

ປະກອບດ້ວຍເມຕຕາແຜ່ໄປຕະຫລອດທິສທີໜຶ່ງຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງທົ່ວສັຕທຸກເຫລົ່າໃນທີ່ທຸກສະຖານ ດ້ວຍໃຈປະກອບດ້ວຍເມຕຕາອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທ ອະຣິຍະສາວົກນັ້ນຍ່ອມຮູ້ຢ່າງນີ້ວ່າ ໃນການກ່ອນແລຈິຕຂອງເຮົາເປັນຈິຕເລັກນ້ອຍ ເປັນຈິຕທີ່ບໍ່ໄດ້ອົບຮົມ ແຕ່ບັດນີ້ຈິຕຂອງເຮົາເປັນຈິຕຫາປະມານບໍ່ໄດ້ເປັນຈິຕທີ່ໄດ້ອົບຮົມດີແລ້ວ **ກໍກັມທີ່ທຳແລ້ວພໍປະມານນັ້ນຍ່ອມບໍ່ເຫລືອຢູ່** ບໍ່ຕັ້ງຢູ່ໃນຈິຕຂອງເຮົານັ້ນ.

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຈະສຳຄັນຄວາມຂໍ້ນີ້ວ່າຢ່າງໃດ ຄື ຫາກໃນເວລາຍັງເປັນເດັກ ເດັກນັ້ນໄດ້ຈະເຣີນເມຕຕາເຈໂຕວິມຸຕ ຈະກະທຳບາບກັມຫລືໜໍ?

ພິກຂຸທັງຫລາຍກຣາບທູລວ່າ ບໍ່ເປັນເຊັ່ນນັ້ນ ພຣະອົງຄ໌ຜູ້ຈະເຣີນ!

ກໍຄວາມທຸກຂ໌ນັ້ນຈະຖືກຕ້ອງບຸຄຄົລຜູ້ບໍ່ກະທຳບາບກັມຫລືໜໍ?

ບໍ່ເປັນເຊັ່ນນັ້ນ ພຣະອົງຄ໌ຜູ້ຈະເຣີນ!

ຂ້າແຕ່ພຣະອົງຜູ້ຈະເຣີນ! ທຸກຂ໌ນັ້ນຈະຖືກຕ້ອງບຸຄຄົລຜູ້ບໍ່ກະທຳບາບກັມໄດ້ຢ່າງໃດ.

ພິກຂຸທັງຫລາຍ! ກໍເມຕຕາເຈໂຕວິມຸຕນີ້ອັນສະຕຣີຫລືບຸຣຸສຄວນຈະເຣີນແລ. ພິກຂຸທັງຫລາຍ ກາຍນີ້ອັນສະຕຣີຫລືບຸຣຸສບໍ່ສາມາດພາເອົານຳໄປໄດ້.

ພິກຂຸທັງຫລາຍ! ສັຕຜູ້ມີຄວາມຕາຍເປັນສະພາບນີ້ ເປັນຜູ້ມີຈິຕເປັນເຫຕ ສັຕນັ້ນຍ່ອມຮູ້ຢ່າງນີ້ວ່າ ບາບກັມໃດໆຂອງເຮົາອັນກາຍນີ້ກະທຳແລ້ວໃນກາລກ່ອນ ບາບກັມທັງໝົດນັ້ນເປັນກັມອັນເຮົາຈະໄດ້ສເວີຍໃນອັຕຕະພາບນີ້ເທົ່ານັ້ນ ຈັກບໍ່ຕິດຕາມໄປດັ່ງນີ້.

ພິກຂຸທັງຫລາຍ! ເມຕຕາເຈໂຕວິມຸຕອັນພິກຂຸຜູ້ມີປັນຍາຜູ້ຍັງບໍ່ແທງຕະຫລອດເຊິ່ງວິມຸຕອັນຍິ່ງໃນທັມວິນັຍນີ້ອົບຮົມແລ້ວ ດ້ວຍປະການຢ່າງນີ້ແລ ຍ່ອມເປັນໄປເພື່ອຄວາມເປັນອະນາຄາມີ.

ພິກຂຸທັງຫລາຍ! ອະຣິຍະສາວົກນັ້ນແລ ເປັນຜູ້ມີຈິຕປະກອບດ້ວຍກະຣຸນາແຜ່ໄປຕະຫລອດທິສທີໜຶ່ງຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງ

ທົ່ວສັຕທຸກເຫລົ່າໃນທີ່ທຸກສະຖານ ດ້ວຍໃຈປະກອບດ້ວຍກະຣຸນາອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທ ອະຣິຍະສາວົກນັ້ນຍ່ອມຮູ້ຢ່າງນີ້ວ່າ ໃນການກ່ອນແລຈິຕຂອງເຮົາເປັນຈິຕເລັກນ້ອຍ ເປັນຈິຕທີ່ບໍ່ໄດ້ອົບຮົມ ແຕ່ບັດນີ້ຈິຕຂອງເຮົາເປັນຈິຕຫາປະມານບໍ່ໄດ້ ເປັນຈິຕທີ່ໄດ້ອົບຮົມດີແລ້ວ **ກໍກັມທີ່ທຳແລ້ວພໍປະມານນັ້ນຍ່ອມບໍ່ເຫລືອຢູ່** ບໍ່ຕັ້ງຢູ່ໃນຈິຕຂອງເຮົານັ້ນ.

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຈະສຳຄັນຄວາມຂໍ້ນີ້ວ່າຢ່າງໃດ ຄື ຫາກໃນເວລາຍັງເປັນເດັກ ເດັກນັ້ນໄດ້ຈະເຣີນກະຣຸນາເຈໂຕວິມຸຕ ຈະກະທຳບາບກັມຫລືໜໍ?

ພິກຂຸທັງຫລາຍກຣາບທູລວ່າ ບໍ່ເປັນເຊັ່ນນັ້ນ ພຣະອົງຄ໌ຜູ້ຈະເຣີນ!

ກໍຄວາມທຸກຂ໌ນັ້ນຈະຖືກຕ້ອງບຸຄຄົລຜູ້ບໍ່ກະທຳບາບກັມຫລືໜໍ?

ບໍ່ເປັນເຊັ່ນນັ້ນ ພຣະອົງຄ໌ຜູ້ຈະເຣີນ!

ຂ້າແຕ່ພຣະອົງຜູ້ຈະເຣີນ! ທຸກຂ໌ນັ້ນຈະຖືກຕ້ອງບຸຄຄົລຜູ້ບໍ່ກະທຳບາບກັມໄດ້ຢ່າງໃດ.

ພິກຂຸທັງຫລາຍ! ກໍກະຣຸນາເຈໂຕວິມຸຕນີ້ອັນສະຕຣີຫລື ບຸຣຸສຄວນຈະເຣີນແລ. ພິກຂຸທັງຫລາຍ ກາຍນີ້ອັນສະຕຣີ ຫລືບຸຣຸສບໍ່ສາມາດພາເອົານຳໄປໄດ້.

ພິກຂຸທັງຫລາຍ! ສັຕຜູ້ມີຄວາມຕາຍເປັນສະພາບນີ້ ເປັນ ຜູ້ມີຈິຕເປັນເຫຕ ສັຕນັ້ນຍ່ອມຮູ້ຢ່າງນີ້ວ່າ ບາບກັມໃດໆ ຂອງເຮົາອັນກາຍນີ້ກະທຳແລ້ວໃນກາລກ່ອນ ບາບກັມທັງ ໝົດນັ້ນເປັນກັມອັນເຮົາຈະໄດ້ສເວີຍໃນອັຕຕະພາບນີ້ເທົ່າ ນັ້ນ ຈັກບໍ່ຕິດຕາມໄປດັ່ງນີ້.

ພິກຂຸທັງຫລາຍ! ກະຣຸນາເຈໂຕວິມຸຕອັນພິກຂຸຜູ້ມີປັນຍາ ຜູ້ຍັງບໍ່ແທງຕະຫລອດເຊິ່ງວິມຸຕອັນຍິ່ງໃນທັມວິນັຍນີ້ ອົບຮົມແລ້ວ ດ້ວຍປະການຢ່າງນີ້ແລ ຍ່ອມເປັນໄປເພື່ອ ຄວາມເປັນອະນາຄາມີ.

ພິກຂຸທັງຫລາຍ! ອະຣິຍະສາວົກນັ້ນເປັນຜູ້ມີຈິຕປະກອບ ດ້ວຍມຸທິຕາແຜ່ໄປຕະຫລອດທິສທີໜຶ່ງຢູ່ ທິສທີສອງ ທິສ ທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງ ທົ່ວສັຕທຸກ ເຫລົ່າໃນທີ່ທຸກສະຖານ ດ້ວຍໃຈປະກອບດ້ວຍມຸທິຕາອັນ ໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາ ບາທ ອະຣິຍະສາວົກນັ້ນຍ່ອມຮູ້ຢ່າງນີ້ວ່າ ໃນກາລກ່ອນ

ແລຈິຕຂອງເຮົາເປັນຈິຕເລັກນ້ອຍ ເປັນຈິຕທີ່ບໍ່ໄດ້ອົບຮົມ ແຕ່ບັດນີ້ຈິຕຂອງເຮົາເປັນຈິຕຫາປະມານບໍ່ໄດ້ ເປັນຈິຕທີ່ໄດ້ອົບຮົມດີແລ້ວ **ກໍກັມທີ່ທຳແລ້ວພໍປະມານນັ້ນຍ່ອມບໍ່ເຫລືອຢູ່** ບໍ່ຕັ້ງຢູ່ໃນຈິຕຂອງເຮົານັ້ນ.

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຈະສຳຄັນຄວາມຂໍ້ນີ້ວ່າຢ່າງໃດ ຄື ຫາກໃນເວລາຍັງເປັນເດັກ ເດັກນັ້ນໄດ້ຈະເຣີນມຸທິຕາເຈໂຕວິມຸຕ ຈະກະທຳບາບກັມຫລືໜໍ?

ພິກຂຸທັງຫລາຍກຣາບທູລວ່າ ບໍ່ເປັນເຊັ່ນນັ້ນ ພຣະອົງຄ໌ຜູ້ຈະເຣີນ!

ກໍຄວາມທຸກຂ໌ນັ້ນຈະຖືກຕ້ອງບຸຄຄົລຜູ້ບໍ່ກະທຳບາບກັມຫລືໜໍ?

ບໍ່ເປັນເຊັ່ນນັ້ນ ພຣະອົງຄ໌ຜູ້ຈະເຣີນ!

ຂ້າແຕ່ພຣະອົງຜູ້ຈະເຣີນ! ທຸກຂ໌ນັ້ນຈະຖືກຕ້ອງບຸຄຄົລຜູ້ບໍ່ກະທຳບາບກັມໄດ້ຢ່າງໃດ.

ພິກຂຸທັງຫລາຍ! ກໍມຸທິຕາເຈໂຕວິມຸຕນີ້ອັນສະຕຣີຫລືບຸຣຸສ ຄວນຈະເຣີນແລ. ພິກຂຸທັງຫລາຍ ກາຍນີ້ອັນສະຕຣີຫລື ບຸຣຸສບໍ່ສາມາດພາເອົານຳໄປໄດ້.

ພິກຂຸທັງຫລາຍ! ສັຕຜູ້ມີຄວາມຕາຍເປັນສະພາບນີ້ ເປັນ ຜູ້ມີຈິຕເປັນເຫຕ ສັຕນັ້ນຍ່ອມຮູ້ຢ່າງນີ້ວ່າ ບາບກັມໃດໆ ຂອງເຮົາອັນກາຍນີ້ກະທຳແລ້ວໃນກາລກ່ອນ ບາບກັມທັງ ໝົດນັ້ນເປັນກັມອັນເຮົາຈະໄດ້ສເວີຍໃນອັຕຕະພາບນີ້ເທົ່າ ນັ້ນ ຈັກບໍ່ຕິດຕາມໄປດັ່ງນີ້.

ພິກຂຸທັງຫລາຍ! ມຸທິຕາເຈໂຕວິມຸຕອັນພິກຂຸຜູ້ມີປັນຍາ ຜູ້ ຍັງບໍ່ແທງຕະຫລອດເຊິ່ງວິມຸຕອັນຍິ່ງໃນທັມວິນັຍນີ້ອົບຮົມ ແລ້ວ ດ້ວຍປະການຢ່າງນີ້ແລ ຍ່ອມເປັນໄປເພື່ອຄວາມ ເປັນອະນາຄາມີ.

ພິກຂຸທັງຫລາຍ! ອະຣິຍະສາວົກນັ້ນມີຈິຕປະກອບດ້ວຍອຸ ເປກຂາ ແຜ່ໄປຕະຫລອດທິສທີໜຶ່ງຢູ່ ທິສທີສອງ ທິສທີ ສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງ ທົ່ວສັຕທຸກ ເຫລົ່າໃນທີ່ທຸກສະຖານ ດ້ວຍໃຈປະກອບດ້ວຍອຸເປກຂາ ອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີ ພະຍາບາທ ອະຣິຍະສາວົກນັ້ນຍ່ອມຮູ້ຢ່າງນີ້ວ່າ ໃນກາລ

ກ່ອນແລ ຈິຕຂອງເຮົາເປັນຈິຕເລັກນ້ອຍ ເປັນຈິຕທີ່ບໍ່ໄດ້ອົບຮົມ ແຕ່ບັດນີ້ຈິຕຂອງເຮົາເປັນຈິຕຫາປະມານບໍ່ໄດ້ ເປັນຈິຕທີ່ໄດ້ອົບຮົມດີແລ້ວ **ກໍກັມທີ່ທຳແລ້ວພໍປະມານນັ້ນຍ່ອມບໍ່ເຫລືອຢູ່** ບໍ່ຕັ້ງຢູ່ໃນຈິຕຂອງເຮົານັ້ນ.

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຈະສຳຄັນຄວາມຂໍ້ນີ້ວ່າຢ່າງໃດ ຄື ຫາກໃນເວລາຍັງເປັນເດັກ ເດັກນັ້ນໄດ້ຈະເຣີນອຸເປກຂາເຈໂຕວິມຸຕ ຈະກະທຳບາບກັມຫລືໜໍ?

ພິກຂຸທັງຫລາຍກຣາບທູລວ່າ ບໍ່ເປັນເຊັ່ນນັ້ນ ພຣະອົງຄ໌ຜູ້ຈະເຣີນ!

ກໍຄວາມທຸກຂ໌ນັ້ນຈະຖືກຕ້ອງບຸຄຄົລຜູ້ບໍ່ກະທຳບາບກັມຫລືໜໍ?

ບໍ່ເປັນເຊັ່ນນັ້ນ ພຣະອົງຄ໌ຜູ້ຈະເຣີນ!

ຂ້າແຕ່ພຣະອົງຜູ້ຈະເຣີນ! ທຸກຂ໌ນັ້ນຈະຖືກຕ້ອງບຸຄຄົລຜູ້ບໍ່ກະທຳບາບກັມໄດ້ຢ່າງໃດ.

ພິກຂຸທັງຫລາຍ! ກໍອຸເປກຂາເຈໂຕວິມຸຕນີ້ອັນສະຕຣີຫລືບຸຣຸສຄວນຈະເຣີນແລ. ພິກຂຸທັງຫລາຍ ກາຍນີ້ອັນສະຕຣີຫລືບຸຣຸສບໍ່ສາມາດພາເອົານຳໄປໄດ້.

ພິກຂຸທັງຫລາຍ! ສັຕຜູ້ມີຄວາມຕາຍເປັນສະພາບນີ້ ເປັນຜູ້ມີຈິຕເປັນເຫຕ ສັຕນັ້ນຍ່ອມຮູ້ຢ່າງນີ້ວ່າ ບາບກັມໃດໆຂອງເຮົາອັນກາຍນີ້ກະທຳແລ້ວໃນກາລກ່ອນ ບາບກັມທັງໝົດນັ້ນເປັນກັມອັນເຮົາຈະໄດ້ສເວີຍໃນອັຕຕະພາບນີ້ເທົ່ານັ້ນ ຈັກບໍ່ຕິດຕາມໄປດັ່ງນີ້.

ພິກຂຸທັງຫລາຍ! ອຸເປກຂາເຈໂຕວິມຸຕອັນພິກຂຸຜູ້ມີປັນຍາຜູ້ຍັງບໍ່ແທງຕະຫລອດເຊິ່ງວິມຸຕອັນຍິ່ງໃນທັມວິນັຍນີ້ອົບຮົມແລ້ວ ດ້ວຍປະການຢ່າງນີ້ແລ ຍ່ອມເປັນໄປເພື່ອຄວາມເປັນອະນາຄາມີ.

---

*ອັງຄຸຕຕະຣະນິກາຍ ທະສະກະ-ເອກາທະສະກະນິບາຕ ໒໔/໒໙໓-໒໙໔/໑໗໘*



# ຄວາມແຕກຕ່າງລະຫວ່າງອະຣິຍະສາວົກຜູ້ໄດ້ສະດັບ ກັບປຸຖຸຊົນຜູ້ບໍ່ໄດ້ສະດັບ

ພິກຂຸທັງຫລາຍ! ບຸຄຄົລ ໔ ຈຳພວກນີ້ ມີປາກົຕຢູ່ໃນໂລກ ໔ ຈຳພວກເປັນຢ່າງໃດ?

ພິກຂຸທັງຫລາຍ! ບຸຄຄົລບາງຄົນໃນໂລກນີ້ ມີໃຈປະກອບດ້ວຍເມຕຕາ ແຜ່ໄປຕະຫລອດທິສທີໜຶ່ງຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງ ທົ່ວສັຕທຸກເຫລົ່າໃນທີ່ທຸກສະຖານ ດ້ວຍໃຈປະກອບດ້ວຍເມຕຕາ

ອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທຢູ່ ບຸຄຄົລນັ້ນພໍໃຈ ຊອບໃຈໃນເມຕຕາ ແລະເຖິງຄວາມປີຕິໃຈດ້ວຍເມຕຕານັ້ນ ຕັ້ງໝັ້ນຢູ່ໃນເມຕຕານັ້ນ ນ້ອມໃຈໄປໃນເມຕຕານັ້ນ ຢູ່ຈົນຄຸ້ນເຄີຍໃນເມຕຕານັ້ນ ບໍ່ເສື່ອມ ເມື່ອກະທຳກາລະ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາເຫລົ່າພຣົມມະກາຍິກາ.

ພິກຂຸທັງຫລາຍ! **ກັປ ໑ ເປັນປະມານອາຍຸຂອງເທວະດາເຫລົ່າພຣົມມະກາຍິກາ** ປຸຖຸຊົນດຳຣົງຢູ່ໃນຊັ້ນພຣົມມະກາຍິການັ້ນຕາບເທົ່າຕະຫລອດອາຍຸ ຍັງປະມານອາຍຸທັງໝົດຂອງເທວະດາເຫລົ່ານັ້ນໃຫ້ສິ້ນໄປແລ້ວ ຍ່ອມເຂົ້າເຖິງນະຣົກແດ່ ກຳເນີດດິຣັຈສານແດ່ ເປຕວິສັຍແດ່ ສ່ວນສາວົກຂອງພຣະຜູ້ມີພຣະພາຄ ດຳຣົງຢູ່ໃນຊັ້ນພຣົມມະກາຍິການັ້ນ ຕາບເທົ່າຕະຫລອດອາຍຸ ຍັງປະມານອາຍຸທັງໝົດຂອງເທວະດາເຫລົ່ານັ້ນໃຫ້ສິ້ນໄປແລ້ວ ຍ່ອມປະຣິນິພພານໃນພົພນັ້ນເອງ.

ພິກຂຸທັງຫລາຍ! ນີ້ເປັນຄວາມພິເສດຜິດແຜກແຕກຕ່າງກັນລະຫວ່າງອະຣິຍະສາວົກຜູ້ໄດ້ສະດັບ ກັບປຸຖຸຊົນຜູ້ບໍ່ໄດ້ສະດັບຄືໃນເມື່ອຄະຕິອຸບັຕຍັງມີຢູ່.

ພິກຂຸທັງຫລາຍ! ອີກປະການໜຶ່ງ ບຸຄຄົລບາງຄົນໃນໂລກນີ້ ມີໃຈປະກອບດ້ວຍກະຣຸນາ ແຜ່ໄປຕະຫລອດທິສທີໜຶ່ງຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງ ທົ່ວສັຕທຸກເຫລົ່າ ໃນທີ່ທຸກສະຖານ ດ້ວຍໃຈປະກອບດ້ວຍກະຣຸນາອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທຢູ່ ບຸຄຄົລນັ້ນພໍໃຈ ຊອບໃຈໃນກະຣຸນານັ້ນ ແລະເຖິງຄວາມປີຕິດ້ວຍກະຣຸນານັ້ນ ຕັ້ງໝັ້ນຢູ່ໃນກະຣຸນານັ້ນ ນ້ອມໃຈໄປໃນກະຣຸນານັ້ນ ຢູ່ຈົນຄຸ້ນເຄີຍໃນກະຣຸນານັ້ນ ບໍ່ເສື່ອມເມື່ອກະທຳກາລະ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາເຫລົ່າອາພັສສະຣະ.

ພິກຂຸທັງຫລາຍ! **໘ ກັປເປັນປະມານອາຍຸຂອງເທວະດາເຫລົ່າອາພັສສະຣະ** ປຸຖຸຊົນດຳຣົງຢູ່ໃນຊັ້ນອາພັສສະຣະນັ້ນ ຕາບເທົ່າຕະຫລອດອາຍຸ ຍັງປະມານອາຍຸທັງໝົດຂອງເທວະດາເຫລົ່ານັ້ນໃຫ້ສິ້ນໄປແລ້ວ ຍ່ອມເຂົ້າເຖິງນະຣົກແດ່ ກຳເນີດດິຣັຈສານແດ່ ເປຕວິສັຍແດ່ ສ່ວນສາວົກຂອງພຣະຜູ້ມີພຣະພາຄ ດຳຣົງຢູ່ໃນຊັ້ນອາພັສສະຣະນັ້ນ ຕາບເທົ່າຕະຫລອດອາຍຸ ຍັງປະມານອາຍຸທັງໝົດຂອງເທວະດາເຫລົ່ານັ້ນໃຫ້ສິ້ນໄປແລ້ວ ຍ່ອມປະຣິນິພພານໃນພົພນັ້ນເອງ.

ພິກຂຸທັງຫລາຍ! ນີ້ເປັນຄວາມພິເສດຜິດແຜກແຕກຕ່າງກັນລະຫວ່າງອະຣິຍະສາວົກຜູ້ໄດ້ສະດັບ ກັບປຸຖຸຊົນຜູ້ບໍ່ໄດ້ສະດັບຄືໃນເມື່ອຄະຕິອຸບັຕຍັງມີຢູ່.

ພິກຂຸທັງຫລາຍ! ອີກປະການໜຶ່ງ ບຸຄຄົລບາງຄົນໃນໂລກນີ້ ມີໃຈປະກອບດ້ວຍມຸທິຕາ ແຜ່ໄປຕະຫລອດທິສທີໜຶ່ງຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງທົ່ວສັຕທຸກເຫລົ່າ ໃນທີ່ທຸກສະຖານ ດ້ວຍໃຈປະກອບດ້ວຍມຸທິຕາອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທຢູ່ ບຸຄຄົລນັ້ນພໍໃຈ ຊອບໃຈໃນມຸທິຕານັ້ນ ແລະເຖິງຄວາມປີຕິດ້ວຍມຸທິຕານັ້ນ ຕັ້ງໝັ້ນຢູ່ໃນມຸທິຕານັ້ນ ນ້ອມໃຈໄປໃນມຸທິຕານັ້ນ ຢູ່ຈົນຄຸ້ນເຄີຍໃນມຸທິຕານັ້ນ ບໍ່ເສື່ອມເມື່ອກະທຳກາລະ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາເຫລົ່າສຸພະກິນຫະ.

ພິກຂຸທັງຫລາຍ! **໔ ກັປເປັນປະມານອາຍຸຂອງເທວະດາເຫລົ່າສຸພະກິນຫະ** ປຸຖຸຊົນດຳຣົງຢູ່ໃນຊັ້ນສຸພະກິນຫະນັ້ນຕາບເທົ່າຕະຫລອດອາຍຸ ຍັງປະມານອາຍຸທັງໝົດຂອງເທວະດາເຫລົ່ານັ້ນໃຫ້ສິ້ນໄປແລ້ວ ຍ່ອມເຂົ້າເຖິງນະຣົກແດ່ ກຳເນີດດິຣັຈສານແດ່ ເປຕວິສັຍແດ່ ສ່ວນສາວົກຂອງພຣະຜູ້ມີພຣະພາຄ ດຳຣົງຢູ່ໃນຊັ້ນສຸພະກິນຫະນັ້ນ

ຕາບເທົ່າຕະຫລອດອາຍຸ ຍັງປະມານອາຍຸທັງໝົດຂອງເທວະດາເຫລົ່ານັ້ນໃຫ້ສິ້ນໄປແລ້ວ ຍ່ອມປະຣິນິພພານໃນພົພນັ້ນເອງ.

ພິກຂຸທັງຫລາຍ! ນີ້ເປັນຄວາມພິເສດຜິດແຜກແຕກຕ່າງກັນລະຫວ່າງອະຣິຍະສາວົກຜູ້ໄດ້ສະດັບ ກັບປຸຖຸຊົນຜູ້ບໍ່ໄດ້ສະດັບຄືໃນເມື່ອຄະຕິອຸບັຕຍັງມີຢູ່.

ພິກຂຸທັງຫລາຍ! ອີກປະການໜຶ່ງ ບຸຄຄົລບາງຄົນໃນໂລກນີ້ ມີໃຈປະກອບດ້ວຍອຸເປກຂາ ແຜ່ໄປຕະຫລອດທິສທີໜຶ່ງຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງ ທົ່ວສັຕທຸກເຫລົ່າ ໃນທີ່ທຸກສະຖານ ດ້ວຍໃຈປະກອບດ້ວຍອຸເປກຂາອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທຢູ່ ບຸຄຄົລນັ້ນພໍໃຈ ຊອບໃຈໃນອຸເປກຂານັ້ນ ແລະເຖິງຄວາມປີຕິດ້ວຍອຸເປກຂານັ້ນ ຕັ້ງໝັ້ນຢູ່ໃນອຸເປກຂານັ້ນ ນ້ອມໃຈໄປໃນອຸເປກຂານັ້ນ ຢູ່ຈົນຄຸ້ນເຄີຍໃນອຸເປກຂານັ້ນ ບໍ່ເສື່ອມເມື່ອກະທຳກາລະຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາຊັ້ນເວຫັປຜະລະ.

ພິກຂຸທັງຫລາຍ! **໕໐໐ ກັປເປັນປະມານອາຍຸຂອງເທວະດາເຫລົ່າເວຫັປຜະລະ** ປຸຖຸຊົນດຳຣົງຢູ່ໃນຊັ້ນເວຫັປຜະລະນັ້ນ ຕາບເທົ່າຕະຫລອດອາຍຸ ຍັງປະມານອາຍຸທັງໝົດຂອງເທວະດາເຫລົ່ານັ້ນໃຫ້ສິ້ນໄປແລ້ວ ຍ່ອມເຂົ້າເຖິງນະຣົກແດ່ ກຳເນີດດີຣັຈສານແດ່ ເປຕວິສັຍແດ່ ສ່ວນສາວົກຂອງພຣະຜູ້ມີພຣະພາຄ ດຳຣົງຢູ່ໃນຊັ້ນເວຫັປຜະລະນັ້ນ ຕາບເທົ່າຕະຫລອດອາຍຸ ຍັງປະມານອາຍຸທັງໝົດຂອງເທວະດາເຫລົ່ານັ້ນໃຫ້ສິ້ນໄປແລ້ວ ຍ່ອມປະຣິນິພພານໃນພົພນັ້ນເອງ.

ພິກຂຸທັງຫລາຍ! ນີ້ເປັນຄວາມພິເສດຜິດແຜກແຕກຕ່າງກັນລະຫວ່າງອະຣິຍະສາວົກຜູ້ໄດ້ສະດັບ ກັບປຸຖຸຊົນຜູ້ບໍ່ໄດ້ສະດັບຄືໃນເມື່ອຄະຕິອຸບັຕຍັງມີຢູ່.

ພິກຂຸທັງຫລາຍ! ບຸຄຄົລ ໔ ຈຳພວກນີ້ແລ ມີປາກົຕໃນໂລກ.

---

*ອັງຄຸຕຕະຣະນິກາຍ ຈະຕຸຕກະນິບາຕ ໒໑/໑໔໙-໑໕໐/໑໔໕*



# ບຸຄຄົລ ໔ ຈຳພວກທີ່ບໍ່ມີທົ່ວໄປໃນປຸຖຸຊົນ

ພິກຂຸທັງຫລາຍ! ບຸຄຄົລ ໔ ຈຳພວກນີ້ມີປາກົຕຢູ່ໃນໂລກ ໔ ຈຳພວກເປັນຢ່າງໃດ?

ພິກຂຸທັງຫລາຍ! ບຸຄຄົລບາງຄົນໃນໂລກນີ້ ມີໃຈປະກອບດ້ວຍເມຕຕາ ແຜ່ໄປຕະຫລອດທິສທີໜຶ່ງຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງ ທົ່ວສັຕທຸກເຫລົ່າ ໃນທີ່ທຸກສະຖານ ດ້ວຍໃຈປະກອບດ້ວຍເມຕຕາ ອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີ

ພະຍາບາທຢູ່ ຣູປ ເວທະນາ ສັນຍາ ສັງຂາຣ ວິນຍານ ອັນໃດທີ່ມີຢູ່ໃນເມຕຕານັ້ນ ບຸຄຄົລນັ້ນພິຈາຣະນາເຫັນທັມ ເຫລົ່ານັ້ນໂດຍຄວາມເປັນຂອງບໍ່ທ່ຽງ ເປັນທຸກຂ໌ ເປັນດັ່ງ ໂຣຄ ເປັນດັ່ງຫົວຝີ ເປັນດັ່ງລູກສອນ ເປັນຂອງທົນໄດ້ ຍາກ ເປັນຂອງບຽດບຽນ ເປັນຂອງບໍ່ເຊື່ອຟັງ ເປັນຂອງ ຕ້ອງແຕກທຳລາຍໄປ ເປັນຂອງວ່າງເປົ່າ ເປັນຂອງບໍ່ ແມ່ນຕົວຕົນ ບຸຄຄົລນັ້ນເມື່ອແຕກກາຍຕາຍໄປ ຍ່ອມເຂົ້າ ເຖິງຄວາມເປັນສະຫາຍຂອງເທວະດາເຫລົ່າສຸທທາວາສ. ພິກຂຸທັງຫລາຍ ຄວາມອຸບັຕນີ້ແລ ບໍ່ມີທົ່ວໄປໃນປຸຖຸຊົນ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ບຸຄຄົລບາງຄົນໃນໂລກ ນີ້ ມີໃຈປະກອບດ້ວຍກະຣຸນາ ແຜ່ໄປຕະຫລອດທິສທີໜຶ່ງ ຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງ ເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງ ປວງ ທົ່ວສັຕທຸກເຫລົ່າ ໃນທີ່ທຸກສະຖານ ດ້ວຍໃຈ ປະກອບດ້ວຍກະຣຸນາ ອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ ໄດ້ ບໍ່ມີເວຣ ບໍ່ມີພະຍາບາທຢູ່ ຣູປ ເວທະນາ ສັນຍາ ສັງຂາຣ ວິນຍານ ອັນໃດທີ່ມີຢູ່ໃນກະຣຸນານັ້ນ ບຸຄຄົລ ນັ້ນພິຈາຣະນາເຫັນທັມເຫລົ່ານັ້ນໂດຍຄວາມເປັນຂອງບໍ່ ທ່ຽງ ເປັນທຸກຂ໌ ເປັນດັ່ງໂຣຄ ເປັນດັ່ງຫົວຝີ ເປັນດັ່ງລູກ ສອນ ເປັນຂອງທົນໄດ້ຍາກ ເປັນຂອງບຽດບຽນ ເປັນ ຂອງບໍ່ເຊື່ອຟັງ ເປັນຂອງຕ້ອງແຕກທຳລາຍໄປ ເປັນຂອງ

ວ່າງເປົ່າ ເປັນຂອງບໍ່ແມ່ນຕົວຕົນ ບຸຄຄົລນັ້ນເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາເຫລົ່າສຸທທາວາສ. ພິກຂຸທັງຫລາຍ ຄວາມອຸບັຕນີ້ແລ ບໍ່ມີທົ່ວໄປໃນປຸຖຸຊົນ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ບຸຄຄົລບາງຄົນໃນໂລກນີ້ ມີໃຈປະກອບດ້ວຍມຸທິຕາ ແຜ່ໄປຕະຫລອດທິສທີໜຶ່ງຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງ ທົ່ວສັຕທຸກເຫລົ່າ ໃນທີ່ທຸກສະຖານ ດ້ວຍໃຈປະກອບດ້ວຍມຸທິຕາ ອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທຢູ່ ຣູປ ເວທະນາ ສັນຍາ ສັງຂາຣ ວິນຍານ ອັນໃດທີ່ມີຢູ່ໃນມຸທິຕານັ້ນ ບຸຄຄົລນັ້ນພິຈາຣະນາເຫັນທັມເຫລົ່ານັ້ນໂດຍຄວາມເປັນຂອງບໍ່ທ່ຽງ ເປັນທຸກຂ໌ ເປັນດັ່ງໂຣຄ ເປັນດັ່ງຫົວຝີ ເປັນດັ່ງລູກສອນ ເປັນຂອງທົນໄດ້ຍາກ ເປັນຂອງບຽດບຽນ ເປັນຂອງບໍ່ເຊື່ອຟັງ ເປັນຂອງຕ້ອງແຕກທຳລາຍໄປ ເປັນຂອງວ່າງເປົ່າ ເປັນຂອງບໍ່ແມ່ນຕົວຕົນ ບຸຄຄົລນັ້ນເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາເຫລົ່າສຸທທາວາສ. ພິກຂຸທັງຫລາຍ ຄວາມອຸບັຕນີ້ແລ ບໍ່ມີທົ່ວໄປໃນປຸຖຸຊົນ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ບຸຄຄົລບາງຄົນໃນໂລກນີ້ ມີໃຈປະກອບດ້ວຍອຸເປກຂາ ແຜ່ໄປຕະຫລອດທິສທີໜຶ່ງຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງ ທົ່ວສັຕທຸກເຫລົ່າ ໃນທີ່ທຸກສະຖານ ດ້ວຍໃຈປະກອບດ້ວຍອຸເປກຂາ ອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທຢູ່ ຣູປ ເວທະນາ ສັນຍາ ສັງຂາຣ ວິນຍານ ອັນໃດທີ່ມີຢູ່ໃນອຸເປກຂານັ້ນ ບຸຄຄົລນັ້ນພິຈາຣະນາເຫັນທັມເຫລົ່ານັ້ນໂດຍຄວາມເປັນຂອງບໍ່ທ່ຽງ ເປັນທຸກຂ໌ ເປັນດັ່ງໂຣຄ ເປັນດັ່ງຫົວຝີ ເປັນດັ່ງລູກສອນ ເປັນຂອງທົນໄດ້ຍາກ ເປັນຂອງບຽດບຽນ ເປັນຂອງບໍ່ເຊື່ອຟັງ ເປັນຂອງຕ້ອງແຕກທຳລາຍໄປ ເປັນຂອງວ່າງເປົ່າ ເປັນຂອງບໍ່ແມ່ນຕົວຕົນ ບຸຄຄົລນັ້ນເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງຄວາມເປັນສະຫາຍຂອງເທວະດາເຫລົ່າສຸທທາວາສ. ພິກຂຸທັງຫລາຍ ຄວາມອຸບັຕນີ້ແລ ບໍ່ມີທົ່ວໄປໃນປຸຖຸຊົນ.

ພິກຂຸທັງຫລາຍ! ບຸຄຄົລ ໔ ຈຳພວກນີ້ແລ ມີປາກົຕຢູ່ໃນໂລກ.

---

*ອັງຄຸຕຕະຣະນິກາຍ ຈະຕຸຕກະນິບາຕ ໔໑/໑໙໐/໑໔໕*

ຜູ້ໃດປະພຶດລ່ວງທັມເພາະຄວາມຮັກ
ເພາະຄວາມຊັງ ເພາະຄວາມຫລົງ
ເພາະຄວາມຢ້ານ
ຍົສຂອງຜູ້ນັ້ນຍ່ອມເສື່ອມ
ເໝືອນດວງເດືອນໃນຂ້າງແຮມ ສັນນັ້ນ.

ຜູ້ໃດບໍ່ປະພຶດລ່ວງທັມເພາະຄວາມຮັກ
ເພາະຄວາມຊັງ ເພາະຄວາມຫລົງ
ເພາະຄວາມຢ້ານ
ຍົສຍ່ອມຈະເຣີນແກ່ບຸຄຄົລນັ້ນ
ເໝືອນດວງເດືອນໃນຂ້າງຂຶ້ນ ສັນນັ້ນ.

*ທີຄະນິກາຍ ປາຕິກະວັດ. ໑໑/໑໘໙/໑໓໓*



# ຊົງໂປດພິກຂຸຊາວເມືອງໂກສັມພີ

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ໃນພຣະວິຫາຣໂຄສິຕາຣາມ ເຂດພຣະນະຄອຣໂກສັມພີ ສມັຍນັ້ນພວກພິກຂຸໃນເມືອງໂກສັມພີ ເກີດຄວາມຂັດໃຈ ວິວາທຜິດຖຽງ ຂັດແຍ່ງກັນແລະກັນດ້ວຍຫອກຄືປາກຢູ່ ບໍ່ກະທຳກັນແລະກັນໃຫ້ເຂົ້າໃຈ ບໍ່ປາຖນາຄວາມເຂົ້າໃຈກັນ ບໍ່ກະທຳກັນແລະກັນໃຫ້ປອງດອງ ບໍ່ປາຖນາຄວາມປອງດອງກັນ.

ຄັ້ງນັ້ນແລ ພິກຂຸອົງຄ໌ໜຶ່ງເຂົ້າໄປເຝົ້າພຣະຜູ້ມີພຣະພາຄອະພິວາທແລ້ວນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ແລ້ວໄດ້ທູລວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂໍປະທານໂອກາສ ພວກພິກຂຸໃນເມືອງໂກສັມພີເກີດຄວາມຂັດໃຈ ວິວາທຜິດຖຽງຂັດແຍ່ງກັນແລະກັນດ້ວຍຫອກຄືປາກຢູ່ ບໍ່ກະທຳກັນແລະກັນໃຫ້ເຂົ້າໃຈ ບໍ່ປາຖນາຄວາມເຂົ້າໃຈກັນ ບໍ່ກະທຳກັນແລະກັນໃຫ້ປອງດອງ ບໍ່ປາຖນາຄວາມປອງດອງກັນ.

ຄັ້ງນັ້ນແລ ພຣະຜູ້ມີພຣະພາຄຕຣັສຮຽກພິກຂຸອົງຄ໌ໜຶ່ງມາແລ້ວຕຣັສສັ່ງວ່າ:

ພິກຂຸ! ເຈົ້າຈົ່ງໄປຮຽກພິກຂຸເຫລົ່ານັ້ນມາຕາມຄຳຂອງເຮົາວ່າ ອາວຸໂສທັງຫລາຍ ພຣະສາສດາຕຣັສສັ່ງໃຫ້ທ່ານທັງຫລາຍໄປຫາ.

ພິກຂຸອົງຄ໌ນັ້ນທູລຮັບຄຳຂອງພຣະຜູ້ມີພຣະພາຄວ່າໂດຍຂ້ານ້ອຍ ດັ່ງນີ້; ແລ້ວເຂົ້າໄປຫາພິກຂຸເຫລົ່ານັ້ນແລ້ວບອກວ່າ ອາວຸໂສທັງຫລາຍ ພຣະສາສດາຕຣັສສັ່ງໃຫ້ທ່ານທັງຫລາຍໄປຫາ ພິກຂຸເຫລົ່ານັ້ນຮັບຄຳຂອງພິກຂຸນັ້ນວ່າ ໂດຍ ອາວຸໂສ ດັ່ງນີ້ ແລ້ວເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ອະພິວາທແລ້ວນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ.

ພຣະຜູ້ມີພຣະພາຄຕຣັສຖາມພິກຂຸເຫລົ່ານັ້ນວ່າ:

ພິກຂຸທັງຫລາຍ! ໄດ້ຍິນວ່າ ພວກເຈົ້າທັງຫລາຍເກີດຄວາມຂັດໃຈ ວິວາທຜິດຖຽງ ຂັດແຍ່ງກັນແລະກັນດ້ວຍຫອກຄືປາກຢູ່ ບໍ່ກະທຳກັນແລະກັນໃຫ້ເຂົ້າໃຈ ບໍ່ປາຖນາຄວາມເຂົ້າໃຈກັນ ບໍ່ກະທຳກັນແລະກັນໃຫ້ປອງດອງ ບໍ່ປາຖນາຄວາມປອງດອງກັນຈິງຫລື?

ພິກຂຸເຫລົ່ານັ້ນທູລຮັບວ່າ ເປັນເຊັ່ນນັ້ນ ພຣະອົງຄ໌ຜູ້ຈະເຣີນ!

ພຣະຜູ້ມີພຣະພາຄຕຣັສວ່າ:

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຈະສຳຄັນຄວາມຂໍ້ນີ້ວ່າຢ່າງໃດ? ສມັຍໃດພວກເຈົ້າທັງຫລາຍເກີດຄວາມຂັດໃຈ ວິວາທຜິດຖຽງກັນ ຂັດແຍ່ງກັນແລະກັນດ້ວຍຫອກຄືປາກຢູ່ ສມັຍນັ້ນພວກເຈົ້າທັງຫລາຍຈັກເຂົ້າໄປຕັ້ງເມຕຕາກາຍະກັມ ເມຕຕາວະຈີກັມ ເມຕຕາມະໂນກັມໃນເພື່ອນພຣົມມະຈາຣີທັງຫລາຍທັງຕໍ່ໜ້າແລະລັບຫລັງຫລືໜໍ?

ຂໍ້ນັ້ນບໍ່ມີເລີຍ ພຣະອົງຄ໌ຜູ້ຈະເຣີນ!

ພິກຂຸທັງຫລາຍ! ກໍເປັນອັນວ່າ ສມັຍໃດພວກເຈົ້າທັງຫລາຍເກີດຄວາມຂັດໃຈ ວິວາທຜິດຖຽງກັນ ຂັດແຍ່ງກັນແລະກັນດ້ວຍຫອກຄືປາກຢູ່ ສມັຍນັ້ນພວກເຈົ້າທັງຫລາຍບໍ່ໄດ້ເຂົ້າໄປຕັ້ງເມຕຕາກາຍະກັມ ເມຕຕາວະຈີກັມ ເມຕຕາມະໂນກັມ ໃນເພື່ອນພຣົມມະຈາຣີທັງຫລາຍທັງຕໍ່ໜ້າແລະລັບຫລັງ.

ໂມຄະບຸຣຸສທັງຫລາຍ! ເມື່ອເປັນດັ່ງນັ້ນ ພວກເຈົ້າທັງຫລາຍຮູ້ອັນໃດ ເຫັນອັນໃດຈຶ່ງເກີດຄວາມຂັດໃຈ ວິວາທຜິດຖຽງກັນ ຂັດແຍ່ງກັນແລະກັນດ້ວຍຫອກຄືປາກຢູ່ ບໍ່ກະທຳກັນແລະກັນໃຫ້ເຂົ້າໃຈ ບໍ່ປາຖນາຄວາມເຂົ້າໃຈກັນ ບໍ່ກະທຳກັນແລະກັນໃຫ້ປອງດອງ ບໍ່ປາຖນາຄວາມປອງດອງກັນ.

ໂມຄະບຸຣຸສທັງຫລາຍ! ຂໍ້ນັ້ນໆແລ ຍ່ອມເປັນໄປເພື່ອຄວາມບໍ່ເປັນປະໂຍຊນ໌ ເພື່ອຄວາມທຸກຂ໌ແກ່ພວກເຈົ້າທັງຫລາຍຕະຫລອດກາລະນານ.

ພິກຂຸທັງຫລາຍ! ທັມ ໖ ປະການນີ້ ເປັນເຫດໃຫ້ຣະນຶກເຖິງກັນ ແລະທຳຄວາມຮັກກັນ ທຳຄວາມເຄົາຣົພກັນ ເປັນໄປເພື່ອຄວາມສົງເຄາະກັນ ເພື່ອຄວາມບໍ່ວິວາທກັນ

ເພື່ອຄວາມພ້ອມພຽງກັນ ເພື່ອຄວາມເປັນພວກດຽວກັນ,
໓ ປະການເປັນຢ່າງໃດ?

ພິກຂຸທັງຫລາຍ! ພິກຂຸໃນທັມວິນັຍນີ້ ເຂົ້າໄປຕັ້ງກາຍະກັມອັນປະກອບດ້ວຍເມຕຕາໃນເພື່ອນພຣົມມະຈາຣີທັງຫລາຍ ທັງໃນທີ່ແຈ້ງແລະທີ່ລັບ ທັມນີ້ເປັນເຫຕໃຫ້ຣະນຶກເຖິງກັນ ທຳຄວາມຮັກກັນ ທຳຄວາມເຄົາຣົພກັນ ເປັນໄປເພື່ອຄວາມສົງເຄາະກັນ ເພື່ອຄວາມບໍ່ວິວາທຜິດຖຽງກັນ ເພື່ອຄວາມພ້ອມພຽງກັນ ເພື່ອຄວາມເປັນພວກດຽວກັນ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເຂົ້າໄປຕັ້ງວະຈີກັມອັນປະກອບດ້ວຍເມຕຕາ ໃນເພື່ອນພຣົມມະຈາຣີທັງຫລາຍ ທັງໃນທີ່ແຈ້ງແລະທີ່ລັບ ແມ່ນແຕ່ທັມນີ້ກໍເປັນເຫຕໃຫ້ຣະນຶກເຖິງກັນ ທຳຄວາມຮັກກັນ ທຳຄວາມເຄົາຣົພກັນ ເປັນໄປເພື່ອຄວາມສົງເຄາະກັນ ເພື່ອຄວາມບໍ່ວິວາທຜິດຖຽງກັນ ເພື່ອຄວາມພ້ອມພຽງກັນ ເພື່ອຄວາມເປັນພວກດຽວກັນ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເຂົ້າໄປຕັ້ງມະໂນກັມອັນປະກອບດ້ວຍເມຕຕາ ໃນເພື່ອນພຣົມມະຈາຣີທັງຫລາຍ ທັງໃນທີ່ແຈ້ງແລະທີ່ລັບ ແມ່ນແຕ່ທັມນີ້ກໍເປັນ

ເຫຕໃຫ້ຣະນຶກເຖິງກັນ ທຳຄວາມຮັກກັນ ທຳຄວາມເຄົາຣົພກັນ ເປັນໄປເພື່ອຄວາມສົງເຄາະກັນ ເພື່ອຄວາມບໍ່ວິວາທຜິດຖຽງກັນ ເພື່ອຄວາມພ້ອມພຽງກັນ ເພື່ອຄວາມເປັນພວກດຽວກັນ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸມີລາພເກີດຂຶ້ນໂດຍທັມ ໄດ້ມາໂດຍທັມ ໂດຍທີ່ສຸດເປັນພຽງລາພອັນເປັນອາຫານທີ່ເນື່ອງດ້ວຍບິນທະບາຕ ກໍບໍຣິໂພຄໂດຍບໍ່ກີດກັ້ນໄວ້ເພື່ອຕົນ ບໍຣິໂພຄເປັນສາທາຣະນະກັບເພື່ອນສະພຣົມມະຈາຣີຜູ້ມີສີລ ແມ່ນແຕ່ທັມນີ້ກໍເປັນເຫຕໃຫ້ຣະນຶກເຖິງກັນ ທຳຄວາມຮັກກັນ ທຳຄວາມເຄົາຣົພກັນ ເປັນໄປເພື່ອຄວາມສົງເຄາະກັນ ເພື່ອຄວາມບໍ່ວິວາທຜິດຖຽງກັນ ເພື່ອຄວາມພ້ອມພຽງກັນ ເພື່ອຄວາມເປັນພວກດຽວກັນ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸເປັນຜູ້ມີສີລທີ່ບໍ່ຂາດ ບໍ່ທະລຸ ບໍ່ດ່າງ ບໍ່ພ້ອຍ ເປັນອິສສະຣະ ອັນວິນຍູຊົນສັນລະເສີນ ບໍ່ມີອັນໃດຄອບງຳ ເປັນໄປເພື່ອສະມາທິເຖິງຄວາມເປັນຜູ້ມີສີລສະເໝີກັນກັບເພື່ອນສະພຣົມມະຈາຣີທັງຫລາຍ ທັງໃນທີ່ແຈ້ງແລະທີ່ລັບ ແມ່ນແຕ່ທັມນີ້ກໍເປັນເຫຕໃຫ້ຣະນຶກເຖິງກັນ ທຳຄວາມຮັກກັນ ທຳຄວາມເຄົາຣົພກັນ ເປັນໄປເພື່ອຄວາມສົງເຄາະກັນ ເພື່ອຄວາມບໍ່

ວິວາທຜິດຖຽງກັນ ເພື່ອຄວາມພ້ອມພຽງກັນ ເພື່ອຄວາມເປັນພວກດຽວກັນ.

ພິກຂຸທັງຫລາຍ! ອີກປະການໜຶ່ງ ພິກຂຸມີທິຕຖິອັນໄກຈາກຂ້າເສິກ ເປັນນິຍຍານິກະທັມ ອັນນຳອອກເຊິ່ງບຸຄຄົລຜູ້ກະທຳຕາມນັ້ນ ເພື່ອຄວາມສິ້ນທຸກຂ໌ໂດຍຊອບ ເຖິງຄວາມເປັນຜູ້ສະເໝີກັນດ້ວຍທິຕຖິເຊັ່ນກັບເພື່ອນສະພຣົມມະຈາຣີທັງຫລາຍ ທັງໃນທີ່ແຈ້ງແລະທີ່ລັບ ແມ່ນແຕ່ທັມນີ້ກໍເປັນເຫຕໃຫ້ຣະນຶກເຖິງກັນ ທຳຄວາມຮັກກັນ ທຳຄວາມເຄົາຣົພກັນ ເປັນໄປເພື່ອຄວາມສົງເຄາະກັນ ເພື່ອຄວາມບໍ່ວິວາທຜິດຖຽງກັນ ເພື່ອຄວາມພ້ອມພຽງກັນເພື່ອຄວາມເປັນພວກດຽວກັນ.

ພິກຂຸທັງຫລາຍ! ທັມ ໖ ປະການນີ້ແລ ເປັນເຫຕໃຫ້ຣະນຶກເຖິງກັນ ແລະທຳຄວາມຮັກກັນ ທຳຄວາມເຄົາຣົພກັນເປັນໄປເພື່ອຄວາມສົງເຄາະກັນ ເພື່ອຄວາມບໍ່ວິວາທກັນເພື່ອຄວາມພ້ອມພຽງກັນ ເພື່ອຄວາມເປັນພວກດຽວກັນ.

ພິກຂຸທັງຫລາຍ! ທິຕຖິອັນໄກຈາກກິເລສອັນເປັນຂ້າເສິກເປັນນິຍຍານິກະທັມ *(ທັມທີ່ນຳສັຕອອກຈາກທຸກຂ໌)*

ນຳອອກເຊິ່ງບຸຄຄົລຜູ້ກະທຳຕາມນັ້ນ ເພື່ອຄວາມສິ້ນທຸກຂ໌ ໂດຍຊອບນີ້ ເປັນຍອດຢຶດຖຸມທັມ ໖ ປະການນີ້ ທີ່ເປັນເຫຕໃຫ້ຣະນຶກເຖິງກັນ.

ພິກຂຸທັງຫລາຍ! ປຽບເໝືອນຍອດອັນເປັນທີ່ສູງສຸດ ເປັນທີ່ຢຶດຖຸມຂອງຫລັງຄາເຮືອນສັນໃດ ທິຕຖິອັນໄກຈາກກິເລສອັນເປັນຂ້າເສິກ ເປັນນິຍຍານິກະທັມ ນຳອອກເຊິ່ງບຸຄຄົລຜູ້ກະທຳຕາມນັ້ນ ເພື່ອຄວາມສິ້ນທຸກຂ໌ໂດຍຊອບນີ້ ເປັນຍອດຢຶດຖຸມທັມ ໖ ປະການນີ້ ທີ່ເປັນເຫຕໃຫ້ຣະນຶກເຖິງກັນ ສັນນັ້ນ.

---

*ມັຊຊິມະນິກາຍ ມູລປັນນາສກ໌ ໑໘/໔໑໘-໔໑໙/໕໔໘*



# ເຣື່ອງພິກຂຸຖືກງູກັດຈົນມໍຣະນະພາບ ເນື່ອງຈາກບໍ່ໄດ້ຈະເຣີນເມຕຕາ

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ພຣະວິຫາຣເຊຕະວັນ ອາຣາມຂອງທ່ານອະນາຖະບິນດິກະເສດຖີ ໃກ້ພຣະນະຄອຣສາວັຕຖີ ໃນສມັຍນັ້ນ ພິກຂຸອົງຄ໌ໜຶ່ງໃນພຣະນະຄອຣສາວັຕຖີຖືກງູກັດຈົນ ມໍຣະນະພາບ ຄັ້ງນັ້ນ ພິກຂຸຈຳນວນຫລາຍເຂົ້າໄປເຝົ້າພຣະຜູ້ ມີພຣະພາຄເຖິງທີ່ປະທັບ ອະພິວາທແລ້ວ ນັ່ງໃນທີ່ຄວນສ່ວນ ຂ້າງໜຶ່ງ ຄັນແລ້ວໄດ້ກຣາບທູລພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ພິກຂຸອົງຄ໌ໜຶ່ງໃນພຣະນະຄອຣສາ ວັຕຖີຖືກງູກັດ ທຳກາລະແລ້ວ.

ພຣະຜູ້ມີພຣະພາຄຕຣັສວ່າ:

ພິກຂຸທັງຫລາຍ! ພິກຂຸອົງຄ໌ນັ້ນບໍ່ໄດ້ແຜ່ເມຕຕາຈິຕໄປສູ່ຕະກຸນພະຍາງູທັງ ๔ ຢ່າງແນ່ນອນ ເພາະຖ້າພິກຂຸນັ້ນແຜ່ເມຕຕາຈິຕໄປສູ່ຕະກຸນພະຍາງູທັງ ๔ ພິກຂຸນັ້ນຈະບໍ່ຖືກງູກັດຈົນມໍຣະນະພາບ ຕະກຸນພະຍາງູທັງ ๔ ເປັນຢ່າງໃດ? ຄື:

**໑. ຕະກຸນພະຍາງູວິຣູປັກຂະ**

**໒. ຕະກຸນພະຍາງູເອຣາປະຖະ**

**໓. ຕະກຸນພະຍາງູສັພພະຍາປຸຕຕະ**

**໔. ຕະກຸນພະຍາງູກັນຫາໂຄຕະມະກະ**

ພິກຂຸອົງຄ໌ນັ້ນບໍ່ໄດ້ແຜ່ເມຕຕາຈິຕໄປສູ່ຕະກຸນພະຍາງູທັງ ๔ ແນ່ນອນ ຖ້າພິກຂຸນັ້ນແຜ່ເມຕຕາຈິຕໄປສູ່ຕະກຸນພະຍາງູທັງ ๔ ພິກຂຸນັ້ນຈະບໍ່ຖືກງູກັດຈົນມໍຣະນະພາບ.

ພິກຂຸທັງຫລາຍ! ເຮົາອະນຸຍາດໃຫ້ແຜ່ເມຕຕາຈິຕໄປສູ່ຕະກຸນພະຍາງູທັງ ๔ ນີ້ ເພື່ອຄຸ້ມຄອງຕົນ ເພື່ອຮັກສາຕົນເພື່ອປ້ອງກັນຕົນ ແລະຈົ່ງກະທຳການແຜ່ຢ່າງນີ້ວ່າ:

**ເຮົາກັບພະຍາງູຕະກຸນວິຣູປັກຂະ ຈົ່ງມີເມຕຕາຕໍ່ກັນ.**

**ເຮົາກັບພະຍາງູຕະກຸນເອຣາປະຖະ ຈົ່ງມີເມຕຕາຕໍ່ກັນ.**

**ເຮົາກັບພະຍາງູຕະກຸນສັພພະຍາປຸຕຕະຈົ່ງມີເມຕຕາຕໍ່ກັນ.**

**ເຮົາກັບພະຍາງູຕະກຸນກັນຫາໂຄຕະມະກະ ຈົ່ງມີເມຕຕາຕໍ່ກັນ.**

ເຮົາກັບຝູງສັຕທີ່ບໍ່ມີຕີນ ຈົ່ງມີເມຕຕາຕໍ່ກັນ.
ເຮົາກັບຝູງສັຕ ໒ ຕີນ ຈົ່ງມີເມຕຕາຕໍ່ກັນ.
ເຮົາກັບຝູງສັຕ ໔ ຕີນ ຈົ່ງມີເມຕຕາຕໍ່ກັນ.
ເຮົາກັບຝູງສັຕທີ່ມີຫລາຍຕີນ ຈົ່ງມີເມຕຕາຕໍ່ກັນ.
ສັຕບໍ່ມີຕີນຢ່າໄດ້ບຽດບຽນເຮົາ ສັຕສອງຕີນຢ່າໄດ້ບຽດບຽນເຮົາ ສັຕສີ່ຕີນຢ່າໄດ້ບຽດບຽນເຮົາ ສັຕມີຫລາຍຕີນຢ່າໄດ້ບຽດບຽນເຮົາ ແລະສັຕທີ່ເກີດແລ້ວທີ່ຍັງມີຊີວິຕທັງມວນ ທຸກໝູ່ເຫລົ່າຈົ່ງປະສົບຄວາມຈະເຣີນ ຢ່າໄດ້ພົບເຫັນສິ່ງຊົ່ວຮ້າຍແມ່ນແຕ່ນ້ອຍເລີຍ.

ພຣະພຸທທະເຈົ້າຊົງມີພຣະຄຸນຫາປະມານບໍ່ໄດ້ ພຣະທັມມີພຣະຄຸນຫາປະມານບໍ່ໄດ້ ພຣະສົງຄ໌ມີພຣະຄຸນຫາປະມານບໍ່ໄດ້ ແຕ່ສັຕເລືອຄານທັງຫລາຍຄື ງູ ແມງງອດ ຂີ້ເຂັບ ແມງມຸມ ກັບແກ້ ໜູ ມີຄຸນພໍປະມານ ຄວາມຮັກສາອັນເຮົາກະທຳແລ້ວ ຄວາມປ້ອງກັນອັນເຮົາກະທຳແລ້ວ ຂໍໝູ່ສັຕທັງຫລາຍຈົ່ງຖອຍກັບໄປເຖີດ ເຮົານັ້ນຂໍນອບນ້ອມແດ່ພຣະຜູ້ມີພຣະພາຄ ຂໍນອບນ້ອມແດ່ພຣະສັມມາສັມພຸທທະເຈົ້າທັງ ໗ ພຣະອົງຄ໌.

---

*ອັງຄຸຕຕະຣະນິກາຍ ຈະຕຸກກະນິບາຕ ອະຫິສູຕ ເຫລັ້ມທີ ໒໑/໗໑/໖໗*

## ຄວາມມີຈິຕບໍ່ພະຍາບາທເປັນແນວໃດ?

ເປັນຜູ້ມີຈິຕບໍ່ພະຍາບາທ ມີຄວາມດຳຣິໃນໃຈອັນບໍ່ຊົ່ວຊ້າວ່າ ຂໍສັຕທັງຫລາຍ ຈົ່ງເປັນຜູ້ບໍ່ມີເວຣ ບໍ່ມີພະຍາບາທ ປາສະຈາກຄວາມທຸກຂ໌ ປະສົບແຕ່ຄວາມສຸຂ ຮັກສາຕົນເຖີດ ດັ່ງນີ້.
(ອັພພະຍາປັນນະຈິຕໂຕ ໂຂ ປະນະ ໂຫຕິ ອັປປະທຸຕຖະມະນະສັງກັປໂປ ອິເມ ສັຕຕາ ອະເວຣາ ອັພພະຍາປັຊຊາ ອະນີຄາ ສຸຂີ ອັຕຕານັງ ປະຣິຫະຣັນຕູຕິ)

*ມັຊຊິມະນິກາຍ ມູລປັນນາສກ໌ ໑໘/໓໗໗/໔໗໕*

# ວິທີການຮັບມືກັບຖ້ອຍຄຳ ໕ ປະການ ດ້ວຍໃຈປະກອບດ້ວຍເມຕຕາ

ພິກຂຸທັງຫລາຍ! ທາງແຫ່ງຖ້ອຍຄຳທີ່ບຸຄຄົລອື່ນຈະກ່າວກັບເຈົ້າມີຢູ່ ໕ ປະການຄື:

**ການກ່າວໂດຍກາລອັນສົມຄວນຫລືບໍ່ສົມຄວນ ໑**
**ກ່າວດ້ວຍເຣື່ອງຈິງຫລືເຣື່ອງບໍ່ຈິງ ໑**
**ກ່າວດ້ວຍຄຳອ່ອນຫວານຫລືຄຳຫຍາບຄາຍ ໑**
**ກ່າວດ້ວຍຄຳທີ່ປະກອບດ້ວຍປະໂຍຊນ໌**
**ຫລືບໍ່ປະກອບດ້ວຍປະໂຍຊນ໌ ໑**
**ມີຈິຕເມຕຕາຫລືມີໂທສະໃນພາຍໃນກ່າວ ໑**

ພິກຂຸທັງຫລາຍ! ເມື່ອບຸຄຄົລອື່ນຈະກ່າວໂດຍກາລອັນສົມຄວນຫລືບໍ່ສົມຄວນກໍຕາມ, ຈະກ່າວດ້ວຍເຣື່ອງຈິງຫລືເຣື່ອງບໍ່ຈິງກໍຕາມ, ຈະກ່າວດ້ວຍຖ້ອຍຄຳອ່ອນຫວານຫລືຄຳຫຍາບຄາຍກໍຕາມ, ຈະກ່າວດ້ວຍຖ້ອຍຄຳທີ່ປະກອບດ້ວຍປະໂຍຊນ໌ ຫລືບໍ່ປະກອບດ້ວຍປະໂຍຊນ໌ກໍຕາມ, ຈະມີຈິຕເມຕຕາ ຫລືມີໂທສະໃນພາຍໃນກ່າວກໍຕາມ;

ພິກຂຸທັງຫລາຍ! ໃນຂໍ້ນັ້ນ ພວກເຈົ້າທັງຫລາຍຄວນສຶກສາຢ່າງນີ້ວ່າ **ຈິຕຂອງເຮົາຈັກບໍ່ປັ່ນປ່ວນ ເຮົາຈັກບໍ່ກ່າວວາຈາອັນຊົ່ວຫຍາບ ເຮົາຈັກອະນຸເຄາະດ້ວຍສິ່ງອັນເປັນປະໂຍຊນ໌ ເຮົາຈັກມີເມຕຕາ ບໍ່ມີໂທສະໃນພາຍໃນ ເຮົາຈັກແຜ່ເມຕຕາໄປເຖິງບຸຄຄົລນັ້ນ ແລະເຮົາຈັກແຜ່ເມຕຕາຈິຕອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທ ໄປຕະຫລອດໂລກທັງປວງ** *(ສັພພາວັນຕັງ ໂລກັງ)* **ເຊິ່ງເປັນອາຣົມມ໌ຂອງຈິຕນັ້ນ ດັ່ງນີ້.**

**ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຄວນສຶກສາດ້ວຍອາການດັ່ງທີ່ກ່າວມານີ້ແລ.**

---

*ມັຊຊິມະນິກາຍ ມູລປັນນາສກ໌ ໑໘/໑໗໙/໔໓໗*



## ການມີໃຈປະກອບດ້ວຍເມດຕາ ອຸປະມາເໝືອນແຜ່ນດິນ

ພິກຂຸທັງຫລາຍ! ປຽບເໝືອນບຸຣຸສຖືເອົາສຽມແລະກະຊ້າມາແລ້ວ ກ່າວຢ່າງນີ້ວ່າ ເຮົາຈັກກະທຳແຜ່ນດິນອັນໃຫຍ່ນີ້ບໍ່ໃຫ້ເປັນແຜ່ນດິນ ດັ່ງນີ້, ເຂົາຂຸດລົງໃນທີ່ນັ້ນໆ ຊ້ອນດິນຖິ້ມໃນທີ່ນັ້ນໆ ບ້ວນນ້ຳລາຍລົງໃນທີ່ນັ້ນໆ ຖ່າຍປັສສາວະຫົດໃນທີ່ນັ້ນໆ ແລ້ວເວົ້າວ່າ ຢ່າເປັນແຜ່ນດິນໆ ດັ່ງນີ້.

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຈະສຳຄັນຄວາມຂໍ້ນັ້ນວ່າຢ່າງໃດ ບຸຣຸສນັ້ນຈັກກະທຳແຜ່ນດິນອັນໃຫຍ່ນີ້ບໍ່ໃຫ້ເປັນແຜ່ນດິນໄດ້ຫລືບໍ່?

ບໍ່ໄດ້ເລີຍ ພຣະອົງຄ໌ຜູ້ຈະເຣີນ!

ຂໍ້ນັ້ນເພາະເຫຕໃດ?
ເພາະເຫຕວ່າ ແຜ່ນດິນອັນໃຫຍ່ຫລວງນີ້ ເລິກຫາປະມານບໍ່ໄດ້ເຂົາຈະກະທຳແຜ່ນດິນອັນໃຫຍ່ຫລວງນີ້ບໍ່ໃຫ້ເປັນແຜ່ນດິນບໍ່ໄດ້ງ່າຍເລີຍ ແລະບຸຣຸສນັ້ນຈະຕ້ອງອິດເມື່ອຍລຳບາກເສຍເປົ່າແນ່ນອນ ນີ້ສັນໃດ;

ພິກຂຸທັງຫລາຍ! ທາງແຫ່ງຖ້ອຍຄຳທີ່ບຸຄຄົລອື່ນຈະກ່າວກັບເຈົ້າມີຢູ່ ໕ ປະການຄື:
**ການກ່າວໂດຍກາລອັນສົມຄວນຫລືບໍ່ສົມຄວນ ໑**
**ກ່າວດ້ວຍເຣື່ອງຈິງຫລືເຣື່ອງບໍ່ຈິງ ໑**
**ກ່າວດ້ວຍຄຳອ່ອນຫວານຫລືຄຳຫຍາບຄາຍ ໑**
**ກ່າວດ້ວຍຄຳທີ່ປະກອບດ້ວຍປະໂຍຊນ໌**
**ຫລືບໍ່ປະກອບດ້ວຍປະໂຍຊນ໌ ໑**
**ມີຈິຕເມຕຕາຫລືມີໂທສະໃນພາຍໃນກ່າວ ໑**

ພິກຂຸທັງຫລາຍ! ເມື່ອບຸຄຄົລອື່ນຈະກ່າວໂດຍກາລອັນສົມຄວນຫລືບໍ່ສົມຄວນກໍຕາມ, ຈະກ່າວດ້ວຍເຣື່ອງຈິງຫລືເຣື່ອງບໍ່ຈິງກໍຕາມ, ຈະກ່າວດ້ວຍຖ້ອຍຄຳອ່ອນຫວານຫລືຄຳຫຍາບຄາຍກໍຕາມ, ຈະກ່າວດ້ວຍຖ້ອຍຄຳທີ່ປະກອບ

ດ້ວຍປະໂຍຊນ໌ ຫລືບໍ່ປະກອບດ້ວຍປະໂຍຊນ໌ກໍຕາມ, ຈະມີຈິດເມດຕາ ຫລືມີໂທສະໃນພາຍໃນກ່າວກໍຕາມ;

ພິກຂຸທັງຫລາຍ! ໃນຂໍ້ນັ້ນ ພວກເຈົ້າທັງຫລາຍຄວນສຶກສາຢ່າງນີ້ວ່າ **ຈິດຂອງເຮົາຈັກບໍ່ປັ່ນປ່ວນ ເຮົາຈັກບໍ່ກ່າວວາຈາອັນຊົ່ວຫຍາບ ເຮົາຈັກອະນຸເຄາະດ້ວຍສິ່ງອັນເປັນປະໂຍຊນ໌ ເຮົາຈັກມີເມດຕາ ບໍ່ມີໂທສະໃນພາຍໃນ ເຮົາຈັກແຜ່ເມດຕາໄປເຖິງບຸຄຄົລນັ້ນ ແລະເຮົາຈັກແຜ່ເມດຕາຈິດອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທ ໄປຕະຫລອດໂລກທັງປວງ ເຊິ່ງເປັນອາຣົມນ໌ຂອງຈິດນັ້ນ** ດັ່ງນີ້.

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຄວນສຶກສາດ້ວຍອາການດັ່ງທີ່ກ່າວມານີ້ແລ.

---

*ມັຊຊິມະນິກາຍ ມູລປັນນາສກ໌ ໑໔/໑໗໖-໑໗໗/໒໖໗*



# ການປຽບບຸຣຸສຂຽນຮູປໃນອາກາສ

ພິກຂຸທັງຫລາຍ! ປຽບເໝືອນບຸຣຸສຖືເອົາຄັ່ງກໍຕາມ ສີເຫລືອງ ສີຂຽວ ຫລືສີເຫລືອງແກ່ກໍຕາມມາແລ້ວກ່າວ ຢ່າງນີ້ວ່າ ເຮົາຈັກຂຽນຮູປຕ່າງໆໃນອາກາສນີ້ ກະທຳໃຫ້ເປັນຮູປຊັດເຈນ ດັ່ງນີ້.

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຈະສຳຄັນຄວາມຂໍ້ນັ້ນວ່າຢ່າງໃດ ບຸຣຸສນັ້ນຈະຂຽນຮູປຕ່າງໆໃນອາກາສນັ້ນກະທຳໃຫ້ເປັນຮູປທີ່ຊັດເຈນໄດ້ຫລືບໍ່?

ບໍ່ໄດ້ເລີຍ ພຣະອົງຄ໌ຜູ້ຈະເຣີນ!

ຂໍ້ນັ້ນເພາະເຫຕໃດ?

ເພາະທັມມະດາອາກາສນີ້ ຍ່ອມເປັນຂອງບໍ່ມີຮູບຮ່າງ ຊີ້ໃຫ້ເຫັນບໍ່ໄດ້ ເຂົາຈະຂຽນຮູປໃນອາກາສນັ້ນ ກະທຳໃຫ້ເປັນຮູປທີ່ຊັດເຈນບໍ່ໄດ້ງ່າຍເລີຍ ແລະບຸຣຸສນັ້ນຈະຕ້ອງອິດເມື່ອຍລຳບາກເປົ່າຢ່າງແນ່ນອນ ນີ້ສັນໃດ;

ພິກຂຸທັງຫລາຍ! ທາງແຫ່ງຖ້ອຍຄຳທີ່ບຸຄຄົລອື່ນຈະກ່າວກັບເຈົ້າມີຢູ່ ໕ ປະການຄື:

**ການກ່າວໂດຍກາລອັນສົມຄວນຫລືບໍ່ສົມຄວນ ໑**
**ກ່າວດ້ວຍເຣື່ອງຈິງຫລືເຣື່ອງບໍ່ຈິງ ໑**
**ກ່າວດ້ວຍຄຳອ່ອນຫວານຫລືຄຳຫຍາບຄາຍ ໑**
**ກ່າວດ້ວຍຄຳທີ່ປະກອບດ້ວຍປະໂຍຊນ໌**
**ຫລືບໍ່ປະກອບດ້ວຍປະໂຍຊນ໌ ໑**
**ມີຈິຕເມຕຕາຫລືມີໂທສະໃນພາຍໃນກ່າວ ໑**

ພິກຂຸທັງຫລາຍ! ເມື່ອບຸຄຄົລອື່ນຈະກ່າວໂດຍກາລອັນສົມຄວນຫລືບໍ່ສົມຄວນກໍຕາມ, ຈະກ່າວດ້ວຍເຣື່ອງຈິງຫລືເຣື່ອງບໍ່ຈິງກໍຕາມ, ຈະກ່າວດ້ວຍຖ້ອຍຄຳອ່ອນຫວານຫລືຄຳຫຍາບຄາຍກໍຕາມ, ຈະກ່າວດ້ວຍຖ້ອຍຄຳທີ່ປະກອບດ້ວຍປະໂຍຊນ໌ ຫລືບໍ່ປະກອບດ້ວຍປະໂຍຊນ໌ກໍຕາມ, ຈະມີຈິຕເມຕຕາ ຫລືມີໂທສະໃນພາຍໃນກ່າວກໍຕາມ;

ພິກຂຸທັງຫລາຍ! ໃນຂໍ້ນັ້ນ ພວກເຈົ້າທັງຫລາຍຄວນສຶກສາຢ່າງນີ້ວ່າ **ຈິຕຂອງເຮົາຈັກບໍ່ປັ່ນປ່ວນ ເຮົາຈັກບໍ່ກ່າວວາຈາອັນຊົ່ວຫຍາບ ເຮົາຈັກອະນຸເຄາະດ້ວຍສິ່ງອັນເປັນປະໂຍຊນ໌ ເຮົາຈັກມີເມຕຕາ ບໍ່ມີໂທສະໃນພາຍໃນ ເຮົາຈັກແຜ່ເມຕຕາໄປເຖິງບຸຄຄົລນັ້ນ ແລະເຮົາຈັກແຜ່ເມຕຕາຈິຕອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທ ໄປຕະຫລອດໂລກທັງປວງ ເຊິ່ງເປັນອາຣົມນ໌ຂອງຈິຕນັ້ນ** ດັ່ງນີ້.

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຄວນສຶກສາດ້ວຍອາການດັ່ງທີ່ກ່າວມານີ້ແລ.

---

*ມັຊຊິມະນິກາຍ ມູລປັນນາສກ໌ ໑໘/໑໗໗/໔໙໖*



# ປຽບເໝືອນບຸຣຸສເຜົາແມ່ນໍ້າຄົງຄາ

ພິກຂຸທັງຫລາຍ! ປຽບເໝືອນບຸຣຸສຖືເອົາມັດຫຍ້າທີ່ຈູດໄຟມາແລ້ວ ກ່າວຢ່າງນີ້ວ່າ ເຮົາຈັກກະທຳແມ່ນ້ຳຄົງຄາໃຫ້ຮ້ອນຢ່າງຍິ່ງ ໃຫ້ເດືອດເປັນຄ້ອນຟູ້ງຂຶ້ນດ້ວຍມັດຫຍ້າທີ່ຈູດໄຟແລ້ວນີ້ ດັ່ງນີ້.

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຈະສຳຄັນຄວາມຂໍ້ນັ້ນວ່າຢ່າງໃດ ບຸຣຸສນັ້ນຈັກກະທຳແມ່ນ້ຳຄົງຄາໃຫ້ຮ້ອນໃຫ້ເດືອດເປັນຄ້ອນຟູ້ງຂຶ້ນດ້ວຍມັດຫຍ້າທີ່ຈູດໄຟໄດ້ຫລືບໍ່ ?

ບໍ່ໄດ້ເລີຍ ພຣະອົງຄ໌ຜູ້ຈະເຣີນ!

ຂໍ້ນັ້ນເພາະເຫຕໃດ?

ເພາະແມ່ນ້ຳຄົງຄາເປັນແມ່ນ້ຳທີ່ເລິກ ສຸດທີ່ຈະປະມານ ເຂົາຈັກກະທຳແມ່ນ້ຳຄົງຄານັ້ນໃຫ້ຮ້ອນ ໃຫ້ເດືອດເປັນຄວັນຟຸ້ງຂຶ້ນດ້ວຍມັດຫຍ້າທີ່ຈູດໄຟແລ້ວບໍ່ໄດ້ງ່າຍເລີຍ ແລະບຸຣຸສນັ້ນຈະຕ້ອງອິດເມື່ອຍລຳບາກເປົ່າຢ່າງແນ່ນອນ ນີ້ສັນໃດ;

ພິກຂຸທັງຫລາຍ! ທາງແຫ່ງຖ້ອຍຄຳທີ່ບຸຄຄົລອື່ນຈະກ່າວກັບເຈົ້າມີຢູ່ ໕ ປະການຄື:
**ການກ່າວໂດຍກາລອັນສົມຄວນຫລືບໍ່ສົມຄວນ ໑**
**ກ່າວດ້ວຍເຣື່ອງຈິງຫລືເຣື່ອງບໍ່ຈິງ ໑**
**ກ່າວດ້ວຍຄຳອ່ອນຫວານຫລືຄຳຫຍາບຄາຍ ໑**
**ກ່າວດ້ວຍຄຳທີ່ປະກອບດ້ວຍປະໂຍຊນ໌**
**ຫລືບໍ່ປະກອບດ້ວຍປະໂຍຊນ໌ ໑**
**ມີຈິຕເມຕຕາຫລືມີໂທສະໃນພາຍໃນກ່າວ ໑**

ພິກຂຸທັງຫລາຍ! ເມື່ອບຸຄຄົລອື່ນຈະກ່າວໂດຍກາລອັນສົມຄວນຫລືບໍ່ສົມຄວນກໍຕາມ, ຈະກ່າວດ້ວຍເຣື່ອງຈິງຫລືເຣື່ອງບໍ່ຈິງກໍຕາມ, ຈະກ່າວດ້ວຍຖ້ອຍຄຳອ່ອນຫວານຫລືຄຳຫຍາບຄາຍກໍຕາມ, ຈະກ່າວດ້ວຍຖ້ອຍຄຳທີ່ປະກອບ

ດ້ວຍປະໂຍຊນ໌ ຫລືບໍ່ປະກອບດ້ວຍປະໂຍຊນ໌ກໍຕາມ, ຈະມີຈິຕເມຕຕາ ຫລືມີໂທສະໃນພາຍໃນກ່າວກໍຕາມ;

ພິກຂຸທັງຫລາຍ! ໃນຂໍ້ນັ້ນ ພວກເຈົ້າທັງຫລາຍຄວນສຶກສາຢ່າງນີ້ວ່າ **ຈິຕຂອງເຮົາຈັກບໍ່ປັ່ນປ່ວນ ເຮົາຈັກບໍ່ກ່າວວາຈາອັນຊົ່ວຫຍາບ ເຮົາຈັກອະນຸເຄາະດ້ວຍສິ່ງອັນເປັນປະໂຍຊນ໌ ເຮົາຈັກມີເມຕຕາ ບໍ່ມີໂທສະໃນພາຍໃນ ເຮົາຈັກແຜ່ເມຕຕາໄປເຖິງບຸຄຄົລນັ້ນ ແລະເຮົາຈັກແຜ່ເມຕຕາຈິຕອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທ ໄປຕະຫລອດໂລກທັງປວງ ເຊິ່ງເປັນອາຣົມນ໌ຂອງຈິຕນັ້ນ** ດັ່ງນີ້.

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຄວນສຶກສາດ້ວຍອາການດັ່ງທີ່ກ່າວມານີ້ແລ.

---

*ມັຊຊິມະນິກາຍ ມູລປັນນາສກ໌ ໑໔/໑໗໙/໔໗໐*



## ປຽບເໝືອນກະສອບໜັງແມວ

ພິກຂຸທັງຫລາຍ! ປຽບເໝືອນກະສອບໜັງແມວທີ່ນາຍຊ່າງໜັງຟອກຮຽບຮ້ອຍແລ້ວ ອ່ອນນຸ້ມດັ່ງປຸຍນຸ່ນແລະສຳລີ ເປັນກະສອບທີ່ຕີໄດ້ບໍ່ດັງກ້ອງ ຖ້າມີບຸຣຸສຖືເອົາໄມ້ຫລືກະເບື້ອງມາ ເວົ້າຂຶ້ນຢ່າງນີ້ວ່າ ເຮົາຈັກກະທຳກະສອບໜັງແມວທີ່ເຂົາຟອກໄວ້ຮຽບຮ້ອຍແລ້ວ ອ່ອນນຸ້ມດັ່ງປຸຍນຸ່ນແລະສຳລີທີ່ຕີໄດ້ບໍ່ດັງກ້ອງນີ້ໃຫ້ເປັນຂອງມີສຽງດັງກ້ອງດ້ວຍໄມ້ຫລືກະເບື້ອງ ດັ່ງນີ້.

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຈະສຳຄັນຄວາມຂໍ້ນັ້ນວ່າຢ່າງໃດ ບຸຣຸສນັ້ນຈະກະທຳກະສອບໜັງແມວທີ່ເຂົາ

ຟອກໄວ້ຮຽບຮ້ອຍແລ້ວ ອ່ອນນຸ້ມດັ່ງປຸຍນຸ່ນແລະສຳລີທີ່ຕີໄດ້ບໍ່ດັງກ້ອງນີ້ໃຫ້ເປັນຂອງມີສຽງດັງກ້ອງດ້ວຍໄມ້ຫລືກະເບື້ອງໄດ້ຫລືບໍ່?

ບໍ່ໄດ້ເລີຍ ພຣະອົງຄ໌ຜູ້ຈະເຣີນ!

ຂໍ້ນັ້ນເພາະເຫຕໃດ?

ເພາະເຫຕວ່າ ກະສອບໜັງແມວນີ້ເຂົາຟອກຮຽບຮ້ອຍແລ້ວ ອ່ອນນຸ້ມດັ່ງປຸຍນຸ່ນແລະສຳລີທີ່ຕີໄດ້ບໍ່ດັງກ້ອງ ເຂົາຈະກະທຳກະສອບໜັງແມວນັ້ນໃຫ້ກັບເປັນຂອງມີສຽງດັງກ້ອງຂຶ້ນດ້ວຍໄມ້ຫລືກະເບື້ອງບໍ່ໄດ້ງ່າຍເລີຍ ບຸຣຸສນັ້ນຈະຕ້ອງອິດເມື່ອຍລຳບາກເປົ່າຢ່າງແນ່ນອນ ນີ້ສັນໃດ;

ພິກຂຸທັງຫລາຍ! ທາງແຫ່ງຖ້ອຍຄຳທີ່ບຸຄຄົລອື່ນຈະກ່າວກັບເຈົ້າມີຢູ່ ໕ ປະການຄື:

**ການກ່າວໂດຍກາລອັນສົມຄວນຫລືບໍ່ສົມຄວນ ໑**
**ກ່າວດ້ວຍເຣື່ອງຈິງຫລືເຣື່ອງບໍ່ຈິງ ໑**
**ກ່າວດ້ວຍຄຳອ່ອນຫວານຫລືຄຳຫຍາບຄາຍ ໑**
**ກ່າວດ້ວຍຄຳທີ່ປະກອບດ້ວຍປະໂຍຊນ໌**
**ຫລືບໍ່ປະກອບດ້ວຍປະໂຍຊນ໌ ໑**
**ມີຈິຕເມຕຕາຫລືມີໂທສະໃນພາຍໃນກ່າວ ໑**

ພິກຂຸທັງຫລາຍ! ເມື່ອບຸຄຄົລອື່ນຈະກ່າວໂດຍກາລອັນສົມຄວນຫລືບໍ່ສົມຄວນກໍຕາມ, ຈະກ່າວດ້ວຍເຣື່ອງຈິງຫລືເຣື່ອງບໍ່ຈິງກໍຕາມ, ຈະກ່າວດ້ວຍຖ້ອຍຄຳອ່ອນຫວານຫລືຄຳຫຍາບຄາຍກໍຕາມ, ຈະກ່າວດ້ວຍຖ້ອຍຄຳທີ່ປະກອບດ້ວຍປະໂຍຊນ໌ ຫລືບໍ່ປະກອບດ້ວຍປະໂຍຊນ໌ກໍຕາມ, ຈະມີຈິຕເມຕຕາ ຫລືມີໂທສະໃນພາຍໃນກ່າວກໍຕາມ;

ພິກຂຸທັງຫລາຍ! ໃນຂໍ້ນັ້ນ ພວກເຈົ້າທັງຫລາຍຄວນສຶກສາຢ່າງນີ້ວ່າ **ຈິຕຂອງເຮົາຈັກບໍ່ປັ່ນປ່ວນ ເຮົາຈັກບໍ່ກ່າວວາຈາອັນຊົ່ວຫຍາບ ເຮົາຈັກອະນຸເຄາະດ້ວຍສິ່ງອັນເປັນປະໂຍຊນ໌ ເຮົາຈັກມີເມຕຕາ ບໍ່ມີໂທສະໃນພາຍໃນ ເຮົາຈັກແຜ່ເມຕຕາໄປເຖິງບຸຄຄົລນັ້ນ ແລະເຮົາຈັກແຜ່ເມຕຕາຈິຕອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທ ໄປຕະຫລອດໂລກທັງປວງ ເຊິ່ງເປັນອາຣົມນ໌ຂອງຈິຕນັ້ນ** ດັ່ງນີ້.

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຄວນສຶກສາດ້ວຍອາການດັ່ງທີ່ກ່າວມານີ້ແລ.

---

*ມັຊຊິມະນິກາຍ ມູລປັນນາສກ໌ ໑໒/໒໖໙-໒໖໘/໒໖໑*



# ໂອວາທທີ່ສະແດງການປຽບດ້ວຍເລື່ອຍ

ພິກຂຸທັງຫລາຍ! ຫາກມີພວກໂຈຣຜູ້ມີຄວາມປະພຶດອັນຕ່ຳຊ້າ ເອົາເລື່ອຍທີ່ມີຫູຈັບທັງສອງຂ້າງເລື່ອຍອະໄວຍະວະໃຫຍ່ນ້ອຍຂອງພວກເຈົ້າ ໃນກໍຣະນີນີ້ ພິກຂຸ ຫລືພິກຂຸນີອົງຄ໌ໃດມີໃຈຄິດຮ້າຍຕໍ່ໂຈຣເຫລົ່ານັ້ນ ພິກຂຸ ຫລືພິກຂຸນີອົງຄ໌ນັ້ນບໍ່ຊື່ວ່າເປັນຜູ້ທຳຕາມຄຳສັ່ງສອນຂອງເຣົາ ເພາະເຫຕທີ່ອົດກັ້ນບໍ່ໄດ້ນັ້ນ.

ພິກຂຸທັງຫລາຍ! ໃນຂໍ້ນັ້ນ ພວກເຈົ້າທັງຫລາຍຄວນສຶກສາຢ່າງນີ້ວ່າ ຈິຕຂອງເຣົາຈັກບໍ່ປັ່ນປ່ວນ ເຣົາຈັກບໍ່ກ່າວວາຈາອັນຊົ່ວຫຍາບ ເຣົາຈັກອະນຸເຄາະດ້ວຍສິ່ງອັນເປັນປະໂຍຊນ໌ ເຣົາຈັກມີເມຕຕາ ບໍ່ມີໂທສະໃນພາຍໃນ ເຣົາ

ຈັກແຜ່ເມຕຕາໄປເຖິງບຸຄຄົລນັ້ນ ແລະເຮົາຈັກແຜ່ເມຕຕາຈິຕອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທ ໄປຕະຫລອດໂລກທັ້ງປວງ ເຊິ່ງເປັນອາຣົມນ໌ຂອງຈິຕນັ້ນ ດັ່ງນີ້. ພິກຂຸທັງຫລາຍ ພວກເຈົ້າທັງຫລາຍຄວນສຶກສາດ້ວຍອາການດັ່ງທີ່ກ່າວມານີ້ແລ.

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍຄວນໃສ່ໃຈໃນໂອວາທທີ່ສະແດງການປຽບດ້ວຍເລື່ອຍນີ້ຢູ່ເນື່ອງໆເຖີດ.

ພິກຂຸທັງຫລາຍ! ພວກເຈົ້າທັງຫລາຍເຫັນທາງແຫ່ງຖ້ອຍຄຳທີ່ມີໂທສໜ້ອຍຫລືໂທສຫລາຍທີ່ພວກເຈົ້າທັງຫລາຍຈະອົດກັ້ນບໍ່ໄດ້ຫລືບໍ່?

ບໍ່ເຫັນ ພຣະອົງຄ໌ຜູ້ຈະເຣີນ!

ພິກຂຸທັງຫລາຍ! ເພາະເຫຕນັ້ນແລ ພວກເຈົ້າທັງຫລາຍຄວນໃສ່ໃຈໃນໂອວາທທີ່ສະແດງການປຽບດ້ວຍເລື່ອຍນີ້ຢູ່ເນື່ອງໆເຖີດ ຂໍ້ນັ້ນຈັກເປັນປະໂຍຊນ໌ແລະຄວາມສຸຂແກ່ພວກເຈົ້າທັງຫລາຍສິ້ນກາລະນານ.

---

*ມັຊຊິມະນິກາຍ ມູລປັນນາສກ໌ ໑໘/໑໗໙-໑໘໐/໔໗໔-໔໗໖*

ພິກຂຸທັງຫລາຍ ຖ້າພິກຂຸຈະເຣີນເມຕຕາຈິຕ ພຽງຊົ່ວຂະນະການດີດນິ້ວມື ພິກຂຸນັ້ນ ເຮົາກ່າວວ່າຢູ່ບໍ່ເຫີນຫ່າງຈາກຊານ ກະທຳຕາມຄຳສອນຂອງພຣະສາສດາ ປະຕິບັຕຕາມໂອວາທ ບໍ່ສັນບິນທະບາຕຂອງຊາວແວ່ນແຄວ້ນໃຫ້ເປົ່າປະໂຍຊນ໌ ຈະກ່າວເຖິງຫຍັງເຊິ່ງຜູ້ທີ່ກະທຳໃຫ້ຫລາຍເຊິ່ງເມຕຕາຈິຕນັ້ນ.

*ອັງຄຸຕຕະຣະນິກາຍ ເອ-ທຸກ-ຕິກນິບາຕ ໔໐/໙/໕໕*

## ວາຈາທີ່ກ່າວດ້ວຍເມຕຕາເປັນວາຈາສຸພາສິຕ

ພິກຂຸທັງຫລາຍ! ວາຈາປະກອບດ້ວຍອົງຄ໌ ໕ ປະການ ເປັນວາຈາສຸພາສິຕ ບໍ່ເປັນວາຈາທຸພພາສິຕ ແລະເປັນວາຈາທີ່ບໍ່ມີໂທສ ອັນວິນຍູຊົນບໍ່ຕິຕຽນ ອົງຄ໌ ໕ ປະການເປັນຢ່າງໃດ? ຄື:

**ເປັນວາຈາທີ່ກ່າວຖືກກາລ**

*(ກາເລນະ ຈະ ພາສິຕາ ໂຫຕິ)*

**ເປັນວາຈາທີ່ກ່າວຕາມຄວາມເປັນຈິງ**

*(ສັຈຈາ ຈະ ພາສິຕາ ໂຫຕິ)*

**ເປັນວາຈາທີ່ກ່າວດ້ວຍຄວາມອ່ອນຫວານ**

*(ສັນຫາ ຈະ ພາສິຕາ ໂຫຕິ)*

**ເປັນວາຈາທີ່ປະກອບດ້ວຍປະໂຍຊນ໌**

*(ອັຕຖະສັນຫິຕາ ຈະ ພາສິຕາ ໂຫຕິ)*

**ເປັນວາຈາທີ່ກ່າວດ້ວຍເມຕຕາຈິຕ**

*(ເມຕຕະຈິຕເຕນະ ຈະ ພາສິຕາ ໂຫຕິ)*

ພິກຂຸທັງຫລາຍ! ວາຈາປະກອບດ້ວຍອົງຄ໌ ໕ ປະການນີ້ ແລ ເປັນວາຈາສຸພາສິຕ ບໍ່ເປັນວາຈາທຸພພາສິຕ ແລະ ເປັນວາຈາທີ່ບໍ່ມີໂທສ ອັນວິນຍູຊົນບໍ່ຕິຕຽນ.

---

*ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໔໔/໔໑໗/໑໙໘*



ເມື່ອບຸຄຄົລຈະເຣີນເມຕຕາຈິຕ
ໂດຍທີ່ສຸດແມ່ນພຽງຊົ່ວເວລາສູບດົມຂອງຫອມ ຍ່ອມມີຜົລ
ຫລາຍກວ່າການທີ່ບຸຄຄົລມີຈິຕເຫລື້ອມໃສ ສະມາທານ
ສິກຂາບົດ ຄື ງົດເວັ້ນຈາກປານາຕິບາຕ ງົດເວັ້ນຈາກ
ອະທິນນາທານ ງົດເວັ້ນຈາກກາເມສຸມິຈສາຈາຣ ງົດເວັ້ນຈາກ
ມຸສາວາທ ງົດເວັ້ນຈາກການດື່ມນ້ຳເມົາຄືສຸຣາແລະເມຣັຍອັນ
ເປັນທີ່ຕັ້ງແຫ່ງຄວາມປະມາທ.

*ອັງຄຸຕຕະຣະນິກາຍ ສັຕຕະກະ-ອັຕຖະກະ ນະວະກະນິບາຕ ໒໓/໓໑໗/໒໒໔*

## ການເສພ ການຈະເລີນ ການໃສ່ໃຈເຊິ່ງເມຕຕາຈິຕຍ່ອມຢູ່ບໍ່ເຫີນຫ່າງຈາກຊານ

ພິກຂຸທັງຫລາຍ! ຖ້າພິກຂຸເສພເຊິ່ງເມຕຕາຈິຕພຽງຊົ່ວຂະນະການດີດນິ້ວມື *(ອັຈສະຣາສັງຄາຕະມັຕຕັງປິ ເຈ ພິກຂະເວ ພິກຂຸ ເມຕຕະຈິຕຕັງ ອາເສວະຕິ)* ພິກຂຸນັ້ນເຮົາກ່າວວ່າ ຢູ່ບໍ່ເຫີນຫ່າງຈາກຊານ ກະທຳຕາມຄຳສອນຂອງພຣະສາສດາ ປະຕິບັຕຕາມໂອວາທ ບໍ່ສັນບິນທະບາຕຂອງຊາວແວ່ນແຄວ້ນໃຫ້ເປົ່າປະໂຍຊນ໌ ຈະກ່າວເຖິງຫຍັງເຊິ່ງຜູ້ທີ່ກະທຳໃຫ້ຫລາຍເຊິ່ງເມຕຕາຈິຕນັ້ນ.

ພິກຂຸທັງຫລາຍ! ຖ້າພິກຂຸຈະເລີນເຊິ່ງເມດຕາຈິດພຽງຊົ່ວຂະນະການດີດນິ້ວມື ພິກຂຸນັ້ນເຮົາກ່າວວ່າ ຢູ່ບໍ່ເຫີນຫ່າງຈາກຊານ ກະທຳຕາມຄຳສອນຂອງພຣະສາສດາ ປະຕິບັດຕາມໂອວາທ ບໍ່ສັນບິນທະບາດຂອງຊາວແວ່ນແຄວ້ນໃຫ້ເປົ່າປະໂຍຊນ໌ ຈະກ່າວເຖິງຫຍັງເຊິ່ງຜູ້ທີ່ກະທຳໃຫ້ຫລາຍເຊິ່ງເມດຕາຈິດນັ້ນ.

ພິກຂຸທັງຫລາຍ! ຖ້າພິກຂຸໃສ່ໃຈເຊິ່ງເມດຕາຈິດພຽງຊົ່ວຂະນະການດີດນິ້ວມື ພິກຂຸນັ້ນເຮົາກ່າວວ່າ ຢູ່ບໍ່ເຫີນຫ່າງຈາກຊານ ກະທຳຕາມຄຳສອນຂອງພຣະສາສດາ ປະຕິບັດຕາມໂອວາທ ບໍ່ສັນບິນທະບາດຂອງຊາວແວ່ນແຄວ້ນໃຫ້ເປົ່າປະໂຍຊນ໌ ຈະກ່າວເຖິງຫຍັງເຊິ່ງຜູ້ທີ່ກະທຳໃຫ້ຫລາຍເຊິ່ງເມດຕາຈິດນັ້ນ.

---

*ອັງຄຸຕຕະຣະນິກາຍ ເອກະ-ທຸກ-ຕິກະນິບາຕ ໒໐/໗-໘/໕໔-໕໖*

# ພິກຂຸຜູ້ປະກອບດ້ວຍທັມ ໕ ປະການ ບໍ່ຄວນປິ່ນປົວພິກຂຸປ່ວຍ

ພິກຂຸທັງຫລາຍ! ພິກຂຸຜູ້ປິ່ນປົວພິກຂຸປ່ວຍປະກອບດ້ວຍທັມ ໕ ປະການ ບໍ່ຄວນປິ່ນປົວພິກຂຸປ່ວຍ, ໕ ປະການເປັນຢ່າງໃດ?

**ພິກຂຸຜູ້ປິ່ນປົວເປັນຜູ້ບໍ່ສາມາດຈັດຢາ.**
**ເປັນຜູ້ຫວັງອາມິດຈາກການປິ່ນປົວ.**
**ເປັນຜູ້ບໍ່ມີເມຕຕາຈິດໃນການປິ່ນປົວຮັກສາ.**
**ເປັນຜູ້ລັງກຽດເມື່ອນຳອອກເຊິ່ງອຸຈຈາຣະ ປັສສາວະ ອາຈຽນ ຫລືນ້ຳລາຍ.**
**ບໍ່ສາມາດຊີ້ແຈງໃຫ້ພິກຂຸປ່ວຍສະມາທານ**

**ອາດຫານ ຣ່າເຣີງດ້ວຍທັມມິກະຖາໂດຍກາລອັນສົມຄວນ.**

ພິກຂຸທັງຫລາຍ! ພິກຂຸຜູ້ປິ່ນປົວພິກຂຸປ່ວຍປະກອບດ້ວຍທັມ ໕ ປະການນີ້ແລ ບໍ່ຄວນເປັນຜູ້ປິ່ນປົວພິກຂຸປ່ວຍ.

ພິກຂຸທັງຫລາຍ! ພິກຂຸຜູ້ປິ່ນປົວພິກຂຸປ່ວຍປະກອບດ້ວຍທັມ ໕ ປະການ ຄວນປິ່ນປົວພິກຂຸປ່ວຍ, ໕ ປະການເປັນຢ່າງໃດ ຄື:

**ພິກຂຸຜູ້ປິ່ນປົວຍ່ອມເປັນຜູ້ສາມາດຈັດຢາ.**

**ຮູ້ສິ່ງທີ່ສະບາຍແລະບໍ່ສະບາຍ ນຳສິ່ງທີ່ບໍ່ສະບາຍອອກໄປ ນຳສິ່ງທີ່ສະບາຍເຂົ້າມາ.**

**ເປັນຜູ້ມີຄວາມເມຕຕາໃນການຮັກສາພະຍາບານ ບໍ່ເປັນຜູ້ຫວັງອາມິຕໃນການຮັກສາ.**

**ບໍ່ລັງກຽດເມື່ອນຳອອກເຊິ່ງອຸຈຈາຣະ ປັສສາວະ ອາຈຽນຫລືນ້ຳລາຍ.**

**ເປັນຜູ້ສາມາດຊີ້ແຈງໃຫ້ພິກຂຸປ່ວຍສະມາທານ ອາດຫານ**

**ຣ່າເຣີງດ້ວຍທັມມີກະຖາໂດຍກາລອັນສົມຄວນ.**

ພິກຂຸທັງຫລາຍ! ພິກຂຸຜູ້ປິ່ນປົວພິກຂຸປ່ວຍປະກອບດ້ວຍທັມ ໕ ປະການນີ້ແລ ຄວນເປັນຜູ້ປິ່ນປົວພິກຂຸປ່ວຍ.

---

*ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໒໒/໑໘໐/໑໒໔*

## ອານິສົງສ໌ແຫ່ງການຈະເຣີນ ເມຕຕາເຈໂຕວິມຸຕ ໑໑ ປະການ

ພິກຂຸທັງຫລາຍ! ເມື່ອເມຕຕາເຈໂຕວິມຸຕ ອັນບຸຄຄົລຈະເຣີນແລ້ວ ກະທຳໃຫ້ຫລາຍແລ້ວ ກະທຳໃຫ້ເປັນດັ່ງຍານ ກະທຳໃຫ້ເປັນທີ່ຕັ້ງ ໝັ່ນຈະເຣີນເນື່ອງໆ ສັ່ງສົມໄວ້ສະໝ່ຳສະເໝີ ປຣາຣົພດີແລ້ວ ຍ່ອມຫວັງໄດ້ອານິສົງສ໌ ໑໑ ປະການ, ໑໑ ປະການເປັນຢ່າງໃດ? ຄື:

**ຫລັບເປັນສຸຂ,**

**ຕື່ນເປັນສຸຂ,**

**ບໍ່ຝັນຮ້າຍ,**

**ເປັນທີ່ຮັກຂອງມະນຸສທັງຫລາຍ,**
**ເປັນທີ່ຮັກຂອງອະມະນຸສທັງຫລາຍ,**
**ເທວະດາຍ່ອມຮັກສາ,**
**ໄຟ ຢາພິດ ຫລືສັສຕຣາຍ່ອມບໍ່ກ້ຳກ່າຍໄດ້,**
**ເມື່ອຍັງບໍ່ແທງຕະຫລອດຄຸນອັນຍິ່ງ**
**ຍ່ອມເປັນຜູ້ເຂົ້າເຖິງພຣົມມະໂລກ**
*(ອຸຕຕະຣິງ ອັປປະຕິວິຊຊັນໂຕ ພຣັມມະໂລກູປະໂຄ ໂຫຕິ).*

ພິກຂຸທັງຫລາຍ! ເມື່ອເມຕຕາເຈໂຕວິມຸຕ ອັນບຸຄຄົລຈະເຣີນແລ້ວ ກະທຳໃຫ້ຫລາຍແລ້ວ ກະທຳໃຫ້ເປັນດັ່ງຍານ ກະທຳໃຫ້ເປັນທີ່ຕັ້ງ ໝັ່ນຈະເຣີນເນື່ອງໆ ສັ່ງສົມໄວ້ສະໝ່ຳສະເໝີ ປຣາຣົພດີແລ້ວ ຍ່ອມຫວັງໄດ້ອານິສົງສ໌ ໑໑ ປະການນີ້ແລ.

ຜູ້ໃດມີສະຕິໝັ້ນຄົງ ຈະເຣີນເມຕຕາອັນຫາປະມານບໍ່ໄດ້ສັງໂຍຊຂອງຜູ້ນັ້ນ ຜູ້ເຫັນທັມເປັນທີ່ສິ້ນໄປແຫ່ງອຸປະທິກິເລສ ຍ່ອມເບົາບາງ ຫາກເຂົາບໍ່ມີຈິຕຄິດປອງຮ້າຍສັຕແມ່ນພຽງໂຕດຽວຈະເຣີນເມຕຕາຈິຕຢູ່ ເພາະເຫຕທີ່ຈະເຣີນເມຕຕາຈິຕນັ້ນ ຍ່ອມເປັນກຸສົລ ເຂົາມີໃຈອະນຸເຄາະແກ່ໝູ່ສັຕທັງປວງ ເປັນຜູ້ປະເສີດກະທຳບຸນຍ໌ມາກມາຍພຣະຣາຊາຜູ້ປະກອບດ້ວຍທັມເຊັ່ນກັບລືສີ ປົກປ້ອງແຜ່ນດິນອັນປະກອບດ້ວຍໝູ່ສັຕ ຈະເຣີນຮອຍຕາມກັນ

ບູຊາຍັນເຫລົ່າໃດ ຄື ສັສສະເມທະ ຊຶ່ງຄວາມເກັ່ງກ້າໃນການບໍາຣຸງພືດພັນ ທັນຍາຫານ, ປຸຣິສະເມທະ ຊຶ່ງຄວາມສາມາດໃນການເກັ້ຍກ່ອມປະຊາຊົນ, ສັມມາປາສະ ມີອັດທະຍາສັຍເໝືອນບ້ວງຄ້ອງນໍ້າໃຈປະຊາຊົນ, ວາຊະເປີຍະ ຊຶ່ງມີພຣະວາຈາເປັນທີ່ດູດດື່ມນໍ້າໃຈຄົນ ເຊິ່ງມີຜົລຄືກະທໍາໃຫ້ນະຄອຣບໍ່ຕ້ອງມີຫລິ້ມກອນ **ມະຫາຍັນເຫລົ່ານັ້ນທັງໝົດ ຍັງບໍ່ເຖິງສ່ວນທີ ໑໖ ແຫ່ງເມຕຕາຈິຕທີ່ບຸຄຄົລຈະເຣີນດີແລ້ວ** ເໝືອນກຸ່ມດວງດາວທັງໝົດບໍ່ທຽບເທົ່າແສງເດືອນ ສັນນັ້ນ.

ຜູ້ໃດມີເມຕຕາຈິຕໃນສັພພະສັຕ ບໍ່ຂ້າເອງ ບໍ່ໃຊ້ໃຫ້ຜູ້ອື່ນຂ້າ ບໍ່ຊະນະເອງ ບໍ່ໃຊ້ໃຫ້ຜູ້ອື່ນຊະນະ ຜູ້ນັ້ນຍ່ອມບໍ່ມີເວຣກັບຄົນໃດໆ.

---

*ອັງຄຸຕຕະຣະນິກາຍ ສັຕຕະກະ-ອັຕຖກະ-ນະວະກະນິບາຕ ໒໓/໑໑໗-໑໑໘/໗໑*

ພິກຂຸທັງຫລາຍ ເຮົາເບິ່ງບໍ່ເຫັນທັມອື່ນແມ່ນແຕ່ຢ່າງດຽວ ທີ່ເປັນເຫຕໃຫ້ກຸສົລທັມທີ່ຍັງບໍ່ເກີດເກີດຂຶ້ນ ຫລືອະກຸສົລທັມທີ່ເກີດຂຶ້ນແລ້ວຍ່ອມເສື່ອມໄປ ເໝືອນການປຣາຣົພຄວາມພຽນ. ພິກຂຸທັງຫລາຍ ເມື່ອບຸຄຄົລເປັນຜູ້ປຣາຣົພຄວາມພຽນ ກຸສົລທັມທີ່ຍັງບໍ່ເກີດ ຍ່ອມເກີດຂຶ້ນແລະອະກຸສົລທັມທີ່ເກີດຂຶ້ນແລ້ວ ຍ່ອມເສື່ອມສິ້ນໄປ.

*ອັງຄຸຕຕະຣະນິກາຍ ເອກະ-ທຸກ-ຕິກະນິບາຕ ໔໐/໙-໑໐/໘໔*

## ການບໍ່ຈະເຣີນເມຕຕາເຈໂຕວິມຸຕ ຍ່ອມຖືກພວກອະມະນຸສກຳຈັດໄດ້ງ່າຍ

ພິກຂຸທັງຫລາຍ! ຕະກຸນເຫລົ່າໃດມີສະຕຣີຫລາຍ ມີບຸຣຸສໜ້ອຍ ຕະກຸນເຫລົ່ານັ້ນຍ່ອມຖືກພວກໂຈຣປຸ້ນໄດ້ງ່າຍ ສັນໃດ;

**ພິກຂຸທັງຫລາຍ! ພິກຂຸອົງຄ໌ໃດບໍ່ຈະເຣີນເມຕຕາເຈໂຕວິມຸຕ ບໍ່ກະທຳໃຫ້ຫລາຍແລ້ວ ພິກຂຸອົງຄ໌ນັ້ນຍ່ອມຖືກພວກອະມະນຸສກຳຈັດໄດ້ງ່າຍ ສັນນັ້ນເໝືອນກັນ.**

ພິກຂຸທັງຫລາຍ! ຕະກຸນເຫລົ່າໃດມີສະຕຣີໜ້ອຍ ມີບຸຣຸສຫລາຍ ຕະກຸນເຫລົ່ານັ້ນຍ່ອມຖືກພວກໂຈຣປຸ້ນໄດ້ຍາກສັນໃດ;

**ພິກຂຸທັງຫລາຍ! ພິກຂຸອົງຄ໌ໃດຈະເຣີນເມຕຕາເຈໂຕວິມຸຕກະທຳໃຫ້ຫລາຍແລ້ວ ພິກຂຸອົງຄ໌ນັ້ນຍ່ອມເປັນຜູ້ທີ່ອະມະນຸສກຳຈັດໄດ້ຍາກ, ສັນນັ້ນເໝືອນກັນ.**

ພິກຂຸທັງຫລາຍ! ເພາະເຫຕນັ້ນແລ ພວກເຈົ້າທັງຫລາຍຄວນສຶກສາຢ່າງນີ້ວ່າ ເຮົາຈັກຈະເຣີນເມຕຕາເຈໂຕວິມຸຕກະທຳໃຫ້ຫລາຍ ກະທຳໃຫ້ເປັນດັ່ງຍານທີ່ທຽມດີແລ້ວ ກະທຳໃຫ້ເປັນທີ່ອາສັຍໄດ້ ປະພຶດໃຫ້ໝັ້ນຄົງ ສັ່ງສົມເນື່ອງໆ ປຣາຣົພສະໝ່ຳສະເໝີດ້ວຍດີ. ພິກຂຸທັງຫລາຍພວກເຈົ້າທັງຫລາຍຄວນສຶກສາຢ່າງນີ້ແລ.

---

*ສັງຍຸຕຕະຣນິກາຍ ນິທານ. ກຸລສູຕ ໑໖/໔໖໗/໖໖໕-໖໖໖*

# ການຈະເຣີນເມຕຕາ<br>ມີອານິສົງສ໌ຫລາຍກວ່າການໃຫ້ທານ

ພິກຂຸທັງຫລາຍ! ຜູ້ໃດທີ່ໃຫ້ທານປະມານ ໑໐໐ ໝໍ້ໃຫຍ່ໃນເວລາເຊົ້າ; ຜູ້ໃດທີ່ໃຫ້ທານປະມານ ໑໐໐ ໝໍ້ໃຫຍ່ໃນເວລາທ່ຽງ; ຜູ້ໃດທີ່ໃຫ້ທານປະມານ ໑໐໐ ໝໍ້ໃຫຍ່ໃນເວລາແລງ.

**ຜູ້ໃດທີ່ຈະເຣີນເມຕຕາຈິຕໃນເວລາເຊົ້າ ໂດຍທີ່ສຸດພຽງຊົ່ວການຢາດນໍ້ານົມແຫ່ງແມ່ງົວ ຫລືຜູ້ໃດທີ່ຈະເຣີນເມຕຕາຈິຕໃນເວລາທ່ຽງ ໂດຍທີ່ສຸດພຽງຊົ່ວການຢາດນໍ້ານົມແຫ່ງແມ່ງົວ ຫລືຜູ້ໃດທີ່ຈະເຣີນເມຕຕາຈິຕໃນເວລາແລງ ໂດຍ**

**ທີ່ສຸດພຽງຊົ່ວການຢາດນ້ຳນົມແຫ່ງແມ່ງົວ ການຈະເຣີນເມຕຕາຈິຕນັ້ນມີຜົລຫລາຍກວ່າທານທີ່ບຸຄຄົລໃຫ້ແລ້ວ ໓ ຄັ້ງໃນວັນໜຶ່ງນັ້ນ.**

ພິກຂຸທັງຫລາຍ! ເພາະເຫຕນັ້ນແລ ພວກເຈົ້າທັງຫລາຍຄວນສຶກສາຢ່າງນີ້ວ່າ **ເຮົາຈັກຈະເຣີນເມຕຕາເຈໂຕວິມຸຕ ກະທຳໃຫ້ຫລາຍ ກະທຳໃຫ້ເປັນດັ່ງຍານທີ່ທຽມດີແລ້ວ ກະທຳໃຫ້ເປັນທີ່ອາສັຍໄດ້ ປະພຶດໃຫ້ໝັ້ນຄົງ ສັ່ງສົມເນື່ອງໆ ປຣາຣົພສະໝ່ຳສະເໝີດ້ວຍດີ.** ພິກຂຸທັງຫລາຍພວກເຈົ້າທັງຫລາຍຄວນສຶກສາຢ່າງນີ້ແລ.

---

*ສັງຍຸຕຕະນິກາຍ ນິທານ. ໂອກະຂາສູຕ ໑໖/໔໗໗/໖໗໗*



## ເມື່ອຈະເຣີນເມຕຕາຈິຕຢູ່ ພວກອະມະນຸສຍ່ອມກະທຳຈິຕໃຫ້ຫວັ່ນໄຫວບໍ່ໄດ້

ພິກຂຸທັງຫລາຍ! ຫອກມີໃບອັນຄົມ ຖ້າມີບຸຣຸສມາກ່າວວ່າ ເຮົາຈະງໍເຂົ້າ ຈະພັບ ຈະມ້ວນເຊິ່ງຫອກມີໃບອັນຄົມນີ້ ດ້ວຍຝາມື ຫລືດ້ວຍກຳມື ດັ່ງນີ້, ພວກເຈົ້າທັງຫລາຍຈະສຳຄັນຄວາມຂໍ້ນີ້ວ່າຢ່າງໃດ ບຸຣຸສນັ້ນຈະເປັນຜູ້ສາມາດເພື່ອຈະງໍເຂົ້າ ຈະພັບ ຈະມ້ວນເຊິ່ງຫອກທີ່ມີໃບອັນຄົມນັ້ນ ດ້ວຍຝາມື ຫລືດ້ວຍກຳມືໄດ້ຫລືໜໍ?

ເປັນໄປບໍ່ໄດ້ ພຣະອົງຄ໌ຜູ້ຈະເຣີນ!

ຂໍ້ນັ້ນເພາະເຫຕໃດ?

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ເພາະວ່າການທີ່ຈະງໍເຂົ້າຈະພັບ ແລະຈະມ້ວນເຊິ່ງຫອກທີ່ມີໃບອັນຄົມດ້ວຍຝາມື ຫລືດ້ວຍກໍາມື ກະທໍາໄດ້ບໍ່ງ່າຍເລີຍ ແລະບຸຣຸສນັ້ນຍ່ອມເປັນຜູ້ມີສ່ວນແຫ່ງ ຄວາມອິດເມື່ອຍລໍາບາກທ່າດຽວ.

ພິກຂຸທັງຫລາຍ! **ພິກຂຸອົງຄ໌ໃດຈະເຣີນເມຕຕາເຈໂຕວິມຸຕ ກະທໍາໃຫ້ຫລາຍ ກະທໍາໃຫ້ເປັນດັ່ງຍານທີ່ທຽມດີແລ້ວ ກະທໍາໃຫ້ເປັນທີ່ຕັ້ງອາສັຍ ກະທໍາໃຫ້ຕັ້ງໝັ້ນ ສັ່ງສົມ ເນື່ອງໆ ປຣາຣົພສະໝໍ່າສະເໝີດ້ວຍດີ ຖ້າອະມະນຸສຈະ ກະທໍາຈິຕຂອງພິກຂຸນັ້ນໃຫ້ຫວັ່ນໄຫວ** *(ຕັສສະ ເຈ ອະມະນຸສ ໂສ ຈິຕຕັງ ຂິປິຕັພພັງ ມັນເຍັຍຍະ)* **ອະມະນຸສນັ້ນຍ່ອມເປັນຜູ້ ມີສ່ວນແຫ່ງຄວາມອິດເມື່ອຍລໍາບາກທ່າດຽວ** ສັນນັ້ນ ເໝືອນກັນ.

ພິກຂຸທັງຫລາຍ! ເພາະເຫຕນັ້ນແລ, ພວກເຈົ້າທັງຫລາຍ ຄວນສຶກສາຢ່າງນີ້ວ່າ ເຮົາຈັກຈະເຣີນເມຕຕາເຈໂຕວິມຸຕຕິ ກະທໍາໃຫ້ຫລາຍ ກະທໍາໃຫ້ເປັນດັ່ງຍານທີ່ທຽມດີແລ້ວ ກະທໍາໃຫ້ເປັນທີ່ຕັ້ງອາສັຍ ກະທໍາໃຫ້ຕັ້ງໝັ້ນ ສັ່ງສົມ ເນື່ອງໆ ປຣາຣົພສະໝໍ່າສະເໝີດ້ວຍດີ. ພິກຂຸທັງຫລາຍ ພວກເຈົ້າທັງຫລາຍຄວນສຶກສາຢ່າງນີ້ແລ.

---

*ສັງຍຸຕຕະນິກາຍ ນິທານ. ສັນຕິສູຕ ໑໖/໔໙໗/໙໗໘-໙໙໙*



# ທາງທີ່ນຳໄປສູ່ຄວາມເປັນສະຫາຍຂອງພຣົມ

ມານົບ! ກໍທາງເພື່ອຄວາມເປັນສະຫາຍຂອງພຣົມເປັນຢ່າງໃດ?

ມານົບ! ພິກຂຸໃນທັມວິນັຍນີ້ ມີໃຈປະກອບດ້ວຍເມຕຕາ ແຜ່ໄປຕະຫລອດທິສທີໜຶ່ງຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງ ທົ່ວສັຕທຸກເຫລົ່າ ໃນທີ່ທຸກສະຖານ ດ້ວຍໃຈປະກອບດ້ວຍເມຕຕາ ອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາຫຢູ່

ເມື່ອເມຕຕາເຈໂຕວິມຸຕ ອັນພິກຂຸນັ້ນຈະເຣີນແລ້ວຢ່າງນີ້ ກັມທີ່ກະທຳພໍປະມານອັນໃດ ກັມນັ້ນກໍຈະບໍ່ເຫລືອຢູ່ ສັນນັ້ນເໝືອນກັນ.

ມານົບ! ປຽບເໝືອນບຸຣຸສເປົ່າສັງຜູ້ມີກຳລັງທີ່ໃຫ້ຄົນຮູ້ໄດ້ ຕະຫລອດທິສທັງສີ່ໂດຍບໍ່ຍາກ ສັນໃດ; ເມື່ອເມຕຕາເຈໂຕວິມຸຕທີ່ພິກຂຸນັ້ນຈະເຣີນແລ້ວຢ່າງນີ້ ກັມໃດທີ່ກະທຳແລ້ວພໍປະມານ ກັມນັ້ນກໍຈະບໍ່ເຫລືອຢູ່ ສັນນັ້ນເໝືອນກັນ ຂໍ້ນີ້ກໍເປັນທາງເພື່ອຄວາມເປັນສະຫາຍຂອງພຣົມ.

ມານົບ! ອີກປະການໜຶ່ງ ພິກຂຸມີໃຈປະກອບດ້ວຍກະຣຸນາ ແຜ່ໄປຕະຫລອດທິສທີໜຶ່ງຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງ ທົ່ວສັຕທຸກເຫລົ່າ ໃນທີ່ທຸກສະຖານ ດ້ວຍໃຈປະກອບດ້ວຍກະຣຸນາ ອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທຢູ່ ເມື່ອກະຣຸນາເຈໂຕວິມຸຕ ອັນພິກຂຸນັ້ນຈະເຣີນແລ້ວຢ່າງນີ້ ກັມທີ່ກະທຳພໍປະມານອັນໃດ ກັມນັ້ນກໍຈະບໍ່ເຫລືອຢູ່ ສັນນັ້ນເໝືອນກັນ.

ມານົບ! ປຽບເໝືອນບຸຣຸສເປົ່າສັງຜູ້ມີກຳລັງທີ່ໃຫ້ຄົນຮູ້ໄດ້ ຕະຫລອດທິສທັງສີ່ໂດຍບໍ່ຍາກ ສັນໃດ; ເມື່ອກະຣຸນາເຈ

ໂຕວິມຸຕທີ່ພິກຂຸນັ້ນຈະເຣີນແລ້ວຢ່າງນີ້ ກັມໃດທີ່ກະທຳແລ້ວພໍປະມານ ກັມນັ້ນກໍຈະບໍ່ເຫລືອຢູ່ ສັນນັ້ນເໝືອນກັນ ຂໍ້ນີ້ກໍເປັນທາງເພື່ອຄວາມເປັນສະຫາຍຂອງພຣົມ.

ມານົບ! ອີກປະການໜຶ່ງ ພິກຂຸມີໃຈປະກອບດ້ວຍມຸທິຕາ ແຜ່ໄປຕະຫລອດທິສທີໜຶ່ງຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງ ທົ່ວສັຕທຸກເຫລົ່າ ໃນທີ່ທຸກສະຖານ ດ້ວຍໃຈປະກອບດ້ວຍມຸທິຕາອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທຢູ່ ເມື່ອມຸທິຕາເຈໂຕວິມຸຕ ອັນພິກຂຸນັ້ນຈະເຣີນແລ້ວຢ່າງນີ້ ກັມທີ່ກະທຳພໍປະມານອັນໃດ ກັມນັ້ນກໍຈະບໍ່ເຫລືອຢູ່ ສັນນັ້ນເໝືອນກັນ.

ມານົບ! ປຽບເໝືອນບຸຣຸສເປົ່າສັງຜູ້ມີກຳລັງທີ່ໃຫ້ຄົນຮູ້ໄດ້ຕະຫລອດທິສທັງສີ່ໂດຍບໍ່ຍາກ ສັນໃດ; ເມື່ອມຸທິຕາເຈໂຕວິມຸຕທີ່ພິກຂຸນັ້ນຈະເຣີນແລ້ວຢ່າງນີ້ ກັມໃດທີ່ກະທຳແລ້ວພໍປະມານ ກັມນັ້ນກໍຈະບໍ່ເຫລືອຢູ່ ສັນນັ້ນເໝືອນກັນ ຂໍ້ນີ້ກໍເປັນທາງເພື່ອຄວາມເປັນສະຫາຍຂອງພຣົມ.

ມານົບ! ອີກປະການໜຶ່ງ ພິກຂຸມີໃຈປະກອບດ້ວຍອຸເປກຂາ ແຜ່ໄປຕະຫລອດທິສທີໜຶ່ງຢູ່ ທິສທີສອງ ທິສທີສາມ

ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງ ທົ່ວສັດທຸກເຫລົ່າໃນທີ່ທຸກສະຖານ ດ້ວຍໃຈປະກອບດ້ວຍອຸເປກຂາ ອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທຢູ່ ເມື່ອ ອຸເປກຂາເຈໂຕວິມຸຕ ອັນພິກຂຸນັ້ນຈະເຣີນແລ້ວຢ່າງນີ້ ກັມໃດທີ່ກະທຳແລ້ວພໍປະມານ ກັມນັ້ນກໍຈະບໍ່ເຫລືອຢູ່ ສັນນັ້ນເໝືອນກັນ.

ມານົບ! ປຽບເໝືອນບຸຣຸສເປົ່າສັງຜູ້ມີກຳລັງທີ່ໃຫ້ຄົນຮູ້ໄດ້ຕະຫລອດທິສທັງສີ່ໂດຍບໍ່ຍາກ ສັນໃດ; ເມື່ອອຸເປກຂາເຈໂຕວິມຸຕທີ່ພິກຂຸນັ້ນຈະເຣີນແລ້ວຢ່າງນີ້ ກັມທີ່ກະທຳພໍປະມານ ກັມນັ້ນກໍຈະບໍ່ເຫລືອຢູ່ ສັນນັ້ນເໝືອນກັນ ຂໍ້ນີ້ກໍເປັນທາງເພື່ອຄວາມເປັນສະຫາຍຂອງພຣົມ.

ເມື່ອພຣະຜູ້ມີພຣະພາຄຕຣັສຢ່າງນີ້ແລ້ວ ສຸພະມານົບໂຕເທີຍຍະບຸຕໄດ້ກຣາບທູລພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະໂຄດົມຜູ້ຈະເຣີນ! ພາສິຕຂອງພຣະອົງຄ໌ແຈ່ມແຈ້ງຫລາຍ ຂ້າແຕ່ພຣະໂຄດົມຜູ້ຈະເຣີນ ພາສິຕຂອງພຣະອົງຄ໌ແຈ່ມແຈ້ງຫລາຍ ພຣະອົງຄ໌ຊົງປະກາສທັມໂດຍອະເນກປະຣິຍາຍ ປຽບເໝືອນບຸຄຄົລຫງາຍຂອງທີ່ຂວ້ຳເປີດຂອງທີ່ປິດ ບອກທາງແກ່ຄົນຫລົງທາງ ຫລືຕາມ

ປະທີບໄວ້ໃນທີ່ມືດ ດ້ວຍຫວັງວ່າ ຄົນມີຈັກຂຸຈັກເຫັນຮູບ ໄດ້ສັນນັ້ນ ຂ້ານ້ອຍຂໍເຖິງທ່ານພຣະໂຄດົມກັບທັງພຣະທັມແລະພຣະພິກຂຸສົງຄ໌ວ່າເປັນສະຣະນະ ຂໍທ່ານພຣະໂຄດົມໂປດຊົງຈຳຂ້ານ້ອຍວ່າ ເປັນອຸປາສົກຜູ້ເຖິງສະຣະນະຕະຫລອດຊີວິຕຕັ້ງແຕ່ວັນນີ້ເປັນຕົ້ນໄປ.

ຂ້າແຕ່ພຣະໂຄດົມຜູ້ຈະເຣີນ! ຂ້ານ້ອຍຂໍທູລລາໄປໃນບັດນີ້ ຂ້ານ້ອຍມີກິຈຫລາຍ ມີກະຣະນີຍະຫລາຍ.

ມານົບ! ທ່ານຈົ່ງສຳຄັນເວລາອັນຄວນໃນບັດນີ້ເຖີດ *(ຍັສສະທານິ ຕະວັງ ມານະວະ ກາລັງ ມັນຍະສີຕິ)*.

ຄັ້ງນັ້ນແລ ສຸພະມານົບໂຕເທີຍຍະບຸຕເພີດເພີນພຣະພາສິຕຂອງພຣະຜູ້ມີພຣະພາຄ ແລ້ວລຸກຈາກອາສະນະອະພິວາທພຣະຜູ້ມີພຣະພາຄ ກະທຳປະທັກຂິນແລ້ວກັບໄປ.

---

*ມັຊຊິມະນິກາຍ ມັຊຊິມະປັນນາສກ໌ ໑໓/໕໐໑-໕໐໘/໗໖໐*



# ຫລັກການຈະເຣີນພຣົມວິຫາຣະທັມ

ຄັ້ງນັ້ນແລ ພິກຂຸອົງຄ໌ໜຶ່ງໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ໆລໆ ຄັນແລ້ວໄດ້ກຣາບທູລພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂໍປະທານພຣະວະໂຣກາສຂໍພຣະຜູ້ມີພຣະພາຄໂປດສະແດງທັມໂດຍຫຍໍ້ແກ່ຂ້ານ້ອຍດ້ວຍ ເມື່ອຂ້ານ້ອຍໄດ້ຟັງແລ້ວ ຈະເປັນຜູ້ຫລີກອອກຈາກໝູ່ ຢູ່ຜູ້ດຽວ ບໍ່ປະມາທ ມີຄວາມພຽນ ມີໃຈເດັດດ່ຽວຢູ່.

ໂມຄະບຸຣຸສບາງພວກໃນໂລກນີ້ ຍ່ອມເຊື້ອເຊີນເຮົາໂດຍຫາເຫຕບໍ່ໄດ້ ເມື່ອເຮົາກ່າວທັມແລ້ວ ຍ່ອມສຳຄັນເຮົາວ່າຄວນຕິດຕາມເລື້ອຍໄປ.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂໍພຣະຜູ້ມີພຣະພາຄໂປດສະແດງທັມໂດຍຫຍໍ້ແກ່ຂ້ານ້ອຍດ້ວຍ ຂໍພຣະສຸຄົຕໂປດສະແດງທັມໂດຍຫຍໍ້ ສັນໃດໜໍ ຂ້ານ້ອຍຈຶ່ງຈະຮູ້ທົ່ວເຖິງເນື້ອຄວາມແຫ່ງພາສິຕຂອງພຣະຜູ້ມີພຣະພາຄ ສັນໃດໜໍ ຂ້ານ້ອຍຈຶ່ງຈະເປັນທາຍາຕແຫ່ງພາສິຕຂອງພຣະຜູ້ມີພຣະພາຄ.

ພິກຂຸ! ເພາະສະນັ້ນແລ ເຈົ້າຄວນສຶກສາຢ່າງນີ້ວ່າ ຈິຕຂອງເຮົາຈັກຕັ້ງໝັ້ນ ດຳຣົງຢູ່ດ້ວຍດີໃນພາຍໃນ ແລະທັມອັນເປັນບາບອະກຸສົລທີ່ເກີດຂຶ້ນແລ້ວຈັກບໍ່ຄອບງຳຈິຕໄດ້. ພິກຂຸ ເຈົ້າຄວນສຶກສາຢ່າງນີ້ແລ.

**ພິກຂຸ! ເມື່ອໃດ ຈິຕຂອງເຈົ້າຕັ້ງໝັ້ນ ດຳຣົງຢູ່ດ້ວຍດີໃນພາຍໃນ ແລະທັມອັນເປັນບາບອະກຸສົລທີ່ເກີດຂຶ້ນແລ້ວບໍ່ຄອບງຳຈິຕໄດ້ ເມື່ອນັ້ນເຈົ້າຄວນສຶກສາຢ່າງນີ້ວ່າ ເຮົາຈັກຈະເຣີນ ກະທຳໃຫ້ຫລາຍເຊິ່ງເມຕຕາເຈໂຕວິມຸຕ ກະທຳໃຫ້ເປັນດັ່ງຍານ ກະທຳໃຫ້ເປັນທີ່ຕັ້ງ ໃຫ້ຕັ້ງໝັ້ນ ສັ່ງສົມດີແລ້ວ ປຣາຣົພດີແລ້ວ. ພິກຂຸ ເຈົ້າຄວນສຶກສາຢ່າງນີ້ແລ.**

ພິກຂຸ! ເມື່ອໃດ ເຈົ້າຈະເຣີນກະທຳໃຫ້ຫລາຍເຊິ່ງສະມາທິຢ່າງນີ້ແລ້ວ ເມື່ອນັ້ນເຈົ້າຄວນຈະເຣີນສະມາທິທີ່ມີວິຕົກວິ

ຈາຣແດ່ ຄວນຈະເຣີນສະມາທິທີ່ບໍ່ມີວິຕົກ ມີແຕ່ວິຈາຣແດ່ ຄວນຈະເຣີນສະມາທິທີ່ບໍ່ມີວິຕົກ ບໍ່ມີວິຈາຣແດ່ ຄວນຈະເຣີນສະມາທິທີ່ມີປີຕິແດ່ ຄວນຈະເຣີນສະມາທິທີ່ບໍ່ມີປີຕິແດ່ ຄວນຈະເຣີນສະມາທິທີ່ເນື່ອງດ້ວຍຄວາມຍິນດີແດ່*(ສາຕະສະຫະຕັມປິ ພາເວີຍຍາສິ)* ຄວນຈະເຣີນສະມາທິທີ່ເນື່ອງດ້ວຍອຸເປກຂາແດ່*(ອຸເປກຂາສະຫະຕັມປິ ພາເວີຍຍາສິ).*

**ພິກຂຸ! ເມື່ອໃດ ເຈົ້າຈະເຣີນສະມາທິຢ່າງນີ້ ຈະເຣີນດີແລ້ວ ເມື່ອນັ້ນເຈົ້າຄວນສຶກສາຢ່າງນີ້ວ່າ ເຮົາຈັກຈະເຣີນກະທຳໃຫ້ຫລາຍເຊິ່ງກະຣຸນາເຈໂຕວິມຸຕ ກະທຳໃຫ້ເປັນດັ່ງຍານ ກະທຳໃຫ້ເປັນທີ່ຕັ້ງ ໃຫ້ຕັ້ງໝັ້ນ ສັ່ງສົມດີແລ້ວ ປຣາຣົພດີແລ້ວ. ພິກຂຸ ເຈົ້າຄວນສຶກສາຢ່າງນີ້ແລ.**

ພິກຂຸ! ເມື່ອໃດ ເຈົ້າຈະເຣີນກະທຳໃຫ້ຫລາຍເຊິ່ງສະມາທິຢ່າງນີ້ແລ້ວ ເມື່ອນັ້ນເຈົ້າຄວນຈະເຣີນສະມາທິທີ່ມີວິຕົກວິຈາຣແດ່ ຄວນຈະເຣີນສະມາທິທີ່ບໍ່ມີວິຕົກ ມີແຕ່ວິຈາຣແດ່ ຄວນຈະເຣີນສະມາທິທີ່ບໍ່ມີວິຕົກ ບໍ່ມີວິຈາຣແດ່ ຄວນຈະເຣີນສະມາທິທີ່ມີປີຕິແດ່ ຄວນຈະເຣີນສະມາທິທີ່ບໍ່ມີປີຕິແດ່ ຄວນຈະເຣີນສະມາທິທີ່ເນື່ອງດ້ວຍຄວາມຍິນດີແດ່ ຄວນຈະເຣີນສະມາທິທີ່ເນື່ອງດ້ວຍອຸເປກຂາແດ່.

**ພິກຂຸ! ເມື່ອໃດ ເຈົ້າຈະເຣີນສະມາທິຢ່າງນີ້ ຈະເຣີນດີແລ້ວ ເມື່ອນັ້ນເຈົ້າຄວນສຶກສາຢ່າງນີ້ວ່າ ເຮົາຈັກຈະເຣີນກະທຳໃຫ້ຫລາຍເຊິ່ງມຸທິຕາເຈໂຕວິມຸຕ ກະທຳໃຫ້ເປັນດັ່ງຍານ ກະທຳໃຫ້ເປັນທີ່ຕັ້ງ ໃຫ້ຕັ້ງໝັ້ນ ສັ່ງສົມດີແລ້ວ ປຣາຣົພດີແລ້ວ. ພິກຂຸ ເຈົ້າຄວນສຶກສາຢ່າງນີ້ແລ.**

ພິກຂຸ! ເມື່ອໃດ ເຈົ້າຈະເຣີນກະທຳໃຫ້ຫລາຍເຊິ່ງສະມາທິຢ່າງນີ້ແລ້ວ ເມື່ອນັ້ນເຈົ້າຄວນຈະເຣີນສະມາທິທີ່ມີວິຕົກວິຈາຣແດ່ ຄວນຈະເຣີນສະມາທິທີ່ບໍ່ມີວິຕົກ ມີແຕ່ວິຈາຣແດ່ ຄວນຈະເຣີນສະມາທິທີ່ບໍ່ມີວິຕົກ ບໍ່ມີວິຈາຣແດ່ ຄວນຈະເຣີນສະມາທິທີ່ມີປິຕິແດ່ ຄວນຈະເຣີນສະມາທິທີ່ບໍ່ມີປິຕິແດ່ ຄວນຈະເຣີນສະມາທິທີ່ເນື່ອງດ້ວຍຄວາມຍິນດີແດ່ ຄວນຈະເຣີນສະມາທິທີ່ເນື່ອງດ້ວຍອຸເປກຂາແດ່.

**ພິກຂຸ! ເມື່ອໃດ ເຈົ້າຈະເຣີນສະມາທິຢ່າງນີ້ ຈະເຣີນດີແລ້ວ ເມື່ອນັ້ນເຈົ້າຄວນສຶກສາຢ່າງນີ້ວ່າ ເຮົາຈັກຈະເຣີນກະທຳໃຫ້ຫລາຍເຊິ່ງອຸເປກຂາເຈໂຕວິມຸຕ ກະທຳໃຫ້ເປັນດັ່ງຍານ ກະທຳໃຫ້ເປັນທີ່ຕັ້ງ ໃຫ້ຕັ້ງໝັ້ນ ສັ່ງສົມດີແລ້ວ ປຣາຣົພດີແລ້ວ. ພິກຂຸ ເຈົ້າຄວນສຶກສາຢ່າງນີ້ແລ.**

ພິກຂຸ! ເມື່ອໃດ ເຈົ້າຈະເຣີນກະທຳໃຫ້ຫລາຍເຊິ່ງສະມາທິຢ່າງນີ້ແລ້ວ ເມື່ອນັ້ນເຈົ້າຄວນຈະເຣີນສະມາທິທີ່ມີວິຕົກວິ

ຈາຣແດ່ ຄວນຈະເຣີນສະມາທິທີ່ບໍ່ມີວິຕົກ ມີແຕ່ວິຈາຣແດ່ ຄວນຈະເຣີນສະມາທິທີ່ບໍ່ມີວິຕົກ ບໍ່ມີວິຈາຣແດ່ ຄວນຈະເຣີນສະມາທິທີ່ມີປີຕິແດ່ ຄວນຈະເຣີນສະມາທິທີ່ບໍ່ມີປີຕິແດ່ ຄວນຈະເຣີນສະມາທິທີ່ເນື່ອງດ້ວຍຄວາມຍິນດີແດ່ ຄວນຈະເຣີນສະມາທິທີ່ເນື່ອງດ້ວຍອຸເປກຂາແດ່.

ພິກຂຸ! ເມື່ອໃດ ເຈົ້າຈະເຣີນສະມາທິຢ່າງນີ້ ຈະເຣີນດີແລ້ວ ເມື່ອນັ້ນເຈົ້າຄວນສຶກສາຢ່າງນີ້ວ່າ ເຮົາຈັກພິຈາຣະນາເຫັນກາຍໃນກາຍຢູ່ ມີຄວາມພຽນ ມີສັມປະຊັນຍະ ມີສະຕິ ກຳຈັດອະພິຊຊາແລະໂທມະນັສໃນໂລກອອກເສຍໄດ້. ພິກຂຸ ເຈົ້າຄວນສຶກສາຢ່າງນີ້ແລ.

ພິກຂຸ! ເມື່ອໃດ ເຈົ້າຈະເຣີນກະທຳໃຫ້ຫລາຍເຊິ່ງສະມາທິຢ່າງນີ້ແລ້ວ ເມື່ອນັ້ນເຈົ້າຄວນຈະເຣີນສະມາທິທີ່ມີວິຕົກວິຈາຣແດ່ ຄວນຈະເຣີນສະມາທິທີ່ບໍ່ມີວິຕົກ ມີແຕ່ວິຈາຣແດ່ ຄວນຈະເຣີນສະມາທິທີ່ບໍ່ມີວິຕົກ ບໍ່ມີວິຈາຣແດ່ ຄວນຈະເຣີນສະມາທິທີ່ມີປີຕິແດ່ ຄວນຈະເຣີນສະມາທິທີ່ບໍ່ມີປີຕິແດ່ ຄວນຈະເຣີນສະມາທິທີ່ເນື່ອງດ້ວຍຄວາມຍິນດີແດ່ ຄວນຈະເຣີນສະມາທິທີ່ເນື່ອງດ້ວຍອຸເປກຂາແດ່.

ພິກຂຸ! ເມື່ອໃດ ເຈົ້າຈະເຣີນສະມາທິຢ່າງນີ້ ຈະເຣີນດີແລ້ວ ເມື່ອນັ້ນເຈົ້າຄວນສຶກສາຢ່າງນີ້ວ່າ ເຮົາຈັກພິຈາຣະ

ນາເຫັນເວທະນາໃນເວທະນາທັງຫລາຍຢູ່ ມີຄວາມພຽນ ມີສັມປະຊັນຍະ ມີສະຕິ ກຳຈັດອະພິຊຊາແລະໂທມະນັສ ໃນໂລກອອກເສຍໄດ້. ພິກຂຸ ເຈົ້າຄວນສຶກສາຢ່າງນີ້ແລ.

ພິກຂຸ! ເມື່ອໃດ ເຈົ້າຈະເຣີນກະທຳໃຫ້ຫລາຍເຊິ່ງສະມາທິ ຢ່າງນີ້ແລ້ວ ເມື່ອນັ້ນເຈົ້າຄວນຈະເຣີນສະມາທິທີ່ມີວິຕົກວິ ຈາຣແດ່ ຄວນຈະເຣີນສະມາທິທີ່ບໍ່ມີວິຕົກ ມີແຕ່ວິຈາຣແດ່ ຄວນຈະເຣີນສະມາທິທີ່ບໍ່ມີວິຕົກ ບໍ່ມີວິຈາຣແດ່ ຄວນຈະ ເຣີນສະມາທິທີ່ມີປີຕິແດ່ ຄວນຈະເຣີນສະມາທິທີ່ບໍ່ມີປີຕິແດ່ ຄວນຈະເຣີນສະມາທິທີ່ເນື່ອງດ້ວຍຄວາມຍິນດີແດ່ ຄວນ ຈະເຣີນສະມາທິທີ່ເນື່ອງດ້ວຍອຸເປກຂາແດ່.

ພິກຂຸ! ເມື່ອໃດ ເຈົ້າຈະເຣີນສະມາທິຢ່າງນີ້ ຈະເຣີນດີ ແລ້ວ ເມື່ອນັ້ນເຈົ້າຄວນສຶກສາຢ່າງນີ້ວ່າ ເຮົາຈັກພິຈາຣະ ນາເຫັນຈິຕໃນຈິຕຢູ່ ມີຄວາມພຽນ ມີສັມປະຊັນຍະ ມີ ສະຕິ ກຳຈັດອະພິຊຊາແລະໂທມະນັສໃນໂລກອອກເສຍ ໄດ້. ພິກຂຸ ເຈົ້າຄວນສຶກສາຢ່າງນີ້ແລ.

ພິກຂຸ! ເມື່ອໃດ ເຈົ້າຈະເຣີນກະທຳໃຫ້ຫລາຍເຊິ່ງສະມາທິ ຢ່າງນີ້ແລ້ວ ເມື່ອນັ້ນເຈົ້າຄວນຈະເຣີນສະມາທິທີ່ມີວິຕົກວິ ຈາຣແດ່ ຄວນຈະເຣີນສະມາທິທີ່ບໍ່ມີວິຕົກ ມີແຕ່ວິຈາຣແດ່ ຄວນຈະເຣີນສະມາທິທີ່ບໍ່ມີວິຕົກ ບໍ່ມີວິຈາຣແດ່ ຄວນຈະ

ເຣີນສະມາທິທີ່ມີປີຕິແດ່ ຄວນຈະເຣີນສະມາທິທີ່ບໍ່ມີປີຕິແດ່ ຄວນຈະເຣີນສະມາທິທີ່ເນື່ອງດ້ວຍຄວາມຍິນດີແດ່ ຄວນຈະເຣີນສະມາທິທີ່ເນື່ອງດ້ວຍອຸເປກຂາແດ່.

ພິກຂຸ! ເມື່ອໃດ ເຈົ້າຈະເຣີນສະມາທິຢ່າງນີ້ ຈະເຣີນດີແລ້ວ ເມື່ອນັ້ນເຈົ້າຄວນສຶກສາຢ່າງນີ້ວ່າ ເຮົາຈັກພິຈາຣະນາເຫັນທັມໃນທັມທັງຫລາຍຢູ່ ມີຄວາມພຽນ ມີສັມປະຊັນຍະ ມີສະຕິ ກຳຈັດອະພິຊຊາແລະໂທມະນັສໃນໂລກອອກເສຍໄດ້. ພິກຂຸ ເຈົ້າຄວນສຶກສາຢ່າງນີ້ແລ.

ພິກຂຸ! ເມື່ອໃດ ເຈົ້າຈະເຣີນກະທຳໃຫ້ຫລາຍເຊິ່ງສະມາທິຢ່າງນີ້ແລ້ວ ເມື່ອນັ້ນເຈົ້າຄວນຈະເຣີນສະມາທິທີ່ມີວິຕົກວິຈາຣແດ່ ຄວນຈະເຣີນສະມາທິທີ່ບໍ່ມີວິຕົກ ມີແຕ່ວິຈາຣແດ່ ຄວນຈະເຣີນສະມາທິທີ່ບໍ່ມີວິຕົກ ບໍ່ມີວິຈາຣແດ່ ຄວນຈະເຣີນສະມາທິທີ່ມີປີຕິແດ່ ຄວນຈະເຣີນສະມາທິທີ່ບໍ່ມີປີຕິແດ່ ຄວນຈະເຣີນສະມາທິທີ່ເນື່ອງດ້ວຍຄວາມຍິນດີແດ່ ຄວນຈະເຣີນສະມາທິທີ່ເນື່ອງດ້ວຍອຸເປກຂາແດ່.

ພິກຂຸ! ເມື່ອໃດເຈົ້າຈະເຣີນສະມາທິນີ້ຢ່າງນີ້ ຈະເຣີນດີແລ້ວ ເມື່ອນັ້ນ ເຈົ້າຈະເດີນໄປໃນທີ່ໃດໆ ກໍຈັກເດີນເປັນສຸຂໃນທີ່ນັ້ນໆ, ຢືນຢູ່ໃນທີ່ໃດໆ ກໍຈັກຢືນເປັນສຸຂໃນ

ທີ່ນັ້ນໆ, ນັ່ງຢູ່ໃນທີ່ໃດໆ ກໍຈັກນັ່ງເປັນສຸຂໃນທີ່ນັ້ນໆ, ນອນຢູ່ໃນທີ່ໃດໆ ກໍຈັກນອນເປັນສຸຂໃນທີ່ນັ້ນໆ.

ຄັ້ງນັ້ນແລ ພິກຂຸອົງຄ໌ນັ້ນ ອັນພຣະຜູ້ມີພຣະພາຄຕຣັສສອນດ້ວຍພຣະໂອວາທນີ້ແລ້ວ ລຸກຈາກອາສະນະ ອະພິວາທພຣະຜູ້ມີພຣະພາຄ ກະທຳປະທັກຂິນແລ້ວຫລີກໄປ ພິກຂຸນັ້ນຫລີກອອກຈາກໝູ່ ຢູ່ຜູ້ດຽວ ບໍ່ປະມາທ ມີຄວາມພຽນ ມີໃຈເດັດດ່ຽວຢູ່ ບໍ່ນານເທົ່າໃດກໍກະທຳໃຫ້ແຈ້ງເຊິ່ງທີ່ສຸດແຫ່ງພຣົມມະຈັນຍ໌ອັນຍອດຢ້ຽມ ທີ່ກຸລະບຸຕຜູ້ອອກບວດເປັນບັນພະຊິຕໂດຍຊອບມີຄວາມຕ້ອງການນັ້ນ ດ້ວຍປັນຍາອັນຍິ່ງເອງໃນປັຈຈຸບັນເຂົ້າເຖິງຢູ່ ຮູ້ຊັດວ່າ ຊາຕສິ້ນແລ້ວ ພຣົມມະຈັນຍ໌ຢູ່ຈົບແລ້ວ ກິຈທີ່ຄວນທຳໄດ້ທຳສຳເຣັຈແລ້ວ ກິຈອື່ນເພື່ອຄວາມເປັນຢ່າງນີ້ບໍ່ໄດ້ມີອີກ ແລະພິກຂຸອົງຄ໌ນັ້ນກໍໄດ້ເປັນພຣະອະຣະຫັນຕ໌ອົງຄ໌ ໜຶ່ງໃນຈຳນວນພຣະອະຣະຫັນຕ໌ທັງຫລາຍ.

---

*ອັງຄຸຕຕະຣະນິກາຍ ສັຕຕະກະ-ອັຕຖະກະ-ນະວະກະນິບາຕ ໒໓/໔໙໗/໑໖໐*



## ເມຕຕາເຈໂຕວິມຸຕມີອັນໃດເປັນຢ່າງຍິ່ງ?

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ນິຄົມຂອງຊາວໂກລິຍະຊື່ ຫລິທທະວະສັນນະ ໃນໂກລິຍະຊົນບົທ. ຄັ້ງນັ້ນ ພິກຂຸຫລາຍອົງຄ໌ດ້ວຍກັນ ເວລາເຊົ້າ ນຸ່ງແລ້ວ ຖືບາຕ ແລະຈີວອຣເຂົ້າໄປບິນທະບາຕໃນຫລິທທະວະສັນນະນິຄົມ ຄັ້ງນັ້ນ ພິກຂຸເຫລົ່ານັ້ນມີຄວາມດຳຣິວ່າ ເວລານີ້ຍັງເຊົ້າຫລາຍທີ່ຈະທ່ຽວໄປບິນທະບາຕໃນຫລິທທະວະສັນນະນິຄົມ ຖ້າເຊັ່ນນັ້ນ ເຮົາຄວນເຂົ້າໄປທີ່ອາຣາມຂອງພວກອັນຍະເດຍຣະຖີປະຣິພາຊົກເຖີດ.

ຄັ້ງນັ້ນ ພິກຂຸເຫລົ່ານັ້ນໄດ້ເຂົ້າໄປທີ່ອາຣາມຂອງພວກອັນຍະເດຍຣະຖີປະຣິພາຊົກ ໄດ້ປາສັຍກັບພວກອັນຍະເດຍຣະຖີປະຣິພາຊົກເຫລົ່ານັ້ນ ຄັນຜ່ານການປາສັຍພໍ

ໃຫ້ຣະນຶກເຖິງກັນໄປແລ້ວ ຈຶ່ງນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ພວກອັນຍະເດຍຣະຖີປະຣິພາຊົກໄດ້ເວົ້າກັບພິກຂຸ ເຫລົ່ານັ້ນວ່າ:

ອາວຸໂສທັງຫລາຍ! ພຣະສະມະນະໂຄດົມສະແດງທັມແກ່ ສາວົກທັງຫລາຍຢ່າງນີ້ວ່າ ມາເຖີດ ພິກຂຸທັງຫລາຍ ພວກເຈົ້າທັງຫລາຍລະນີວອຣ ໕ ອັນເປັນອຸປະກິເລສ ຂອງຈິຕ ທອນກຳລັງປັນຍາແລ້ວ ຈຶ່ງມີໃຈປະກອບດ້ວຍ ເມຕຕາແຜ່ໄປຕະຫລອດທິສທີໜຶ່ງຢູ່ ທິສທີສອງ ທິສທີ ສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງ ທົ່ວສັຕທຸກ ເຫລົ່າ ໃນທີ່ທຸກສະຖານ ດ້ວຍໃຈປະກອບດ້ວຍເມຕຕາ ອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີ ພະຍາບາທຢູ່ເຖີດ.

ຈຶ່ງມີໃຈປະກອບດ້ວຍກະຣຸນາແຜ່ໄປຕະຫລອດທິສທີໜຶ່ງຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງ ທົ່ວສັຕທຸກເຫລົ່າ ໃນທີ່ທຸກສະຖານ ດ້ວຍໃຈປະກອບ ດ້ວຍກະຣຸນາອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີ ເວຣ ບໍ່ມີພະຍາບາທຢູ່ເຖີດ.

ຈົ່ງມີໃຈປະກອບດ້ວຍມຸທິຕາແຜ່ໄປຕະຫລອດທິສທີໜຶ່ງຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງ ທົ່ວສັຕທຸກເຫລົ່າ ໃນທີ່ທຸກສະຖານ ດ້ວຍໃຈປະກອບ ດ້ວຍມຸທິຕາອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທຢູ່ເຖີດ.

ຈົ່ງມີໃຈປະກອບດ້ວຍອຸເປກຂາແຜ່ໄປຕະຫລອດທິສທີໜຶ່ງຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງ ທົ່ວສັຕທຸກເຫລົ່າ ໃນທີ່ທຸກສະຖານ ດ້ວຍໃຈປະກອບດ້ວຍອຸເປກຂາອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທຢູ່ເຖີດ.

ອາວຸໂສທັງຫລາຍ! ແມ່ນແຕ່ພວກເຮົາກໍສະແດງທັມແກ່ສາວົກທັງຫລາຍຢ່າງນີ້ວ່າ ມາເຖີດ ອາວຸໂສທັງຫລາຍ ທ່ານທັງຫລາຍລະນິວອຣ ໕ ອັນເປັນອຸປະກິເລສຂອງຈິຕທອນກຳລັງປັນຍາແລ້ວ ຈົ່ງມີໃຈປະກອບດ້ວຍເມຕຕາແຜ່ໄປຕະຫລອດທິສທີໜຶ່ງຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງ ທົ່ວສັຕທຸກເຫລົ່າ ໃນທີ່ທຸກ

ສະຖານ ດ້ວຍໃຈປະກອບດ້ວຍເມຕຕາອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທຢູ່ເຖີດ.

ຈົ່ງມີໃຈປະກອບດ້ວຍກະຣຸນາແຜ່ໄປຕະຫລອດທິສທີໜຶ່ງຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງ ທົ່ວສັຕທຸກເຫລົ່າ ໃນທີ່ທຸກສະຖານ ດ້ວຍໃຈປະກອບ ດ້ວຍກະຣຸນາອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທຢູ່ເຖີດ.

ຈົ່ງມີໃຈປະກອບດ້ວຍມຸທິຕາແຜ່ໄປຕະຫລອດທິສທີໜຶ່ງຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງ ທົ່ວສັຕທຸກເຫລົ່າ ໃນທີ່ທຸກສະຖານ ດ້ວຍໃຈປະກອບ ດ້ວຍມຸທິຕາອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທຢູ່ເຖີດ.

ຈົ່ງມີໃຈປະກອບດ້ວຍອຸເປກຂາແຜ່ໄປຕະຫລອດທິສທີໜຶ່ງ ຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງ ທົ່ວສັຕທຸກເຫລົ່າ ໃນທີ່ທຸກສະຖານ ດ້ວຍໃຈ

ປະກອບດ້ວຍອຸເປກຂາອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທຢູ່ເຖີດ.

ອາວຸໂສທັງຫລາຍ! ໃນການສະແດງທັມຂອງພວກເຮົານີ້ ອັນໃດເປັນຄວາມແປກກັນ ອັນໃດເປັນປະໂຍຊນ໌ອັນຍິ່ງ ອັນໃດເປັນຄວາມແຕກຕ່າງກັນລະຫວ່າງທັມມະເທສນາຂອງພວກເຮົາກັບທັມມະເທສນາຂອງພຣະສະມະນະໂຄດົມ ຫລືອະນຸສາສນີຂອງພວກເຮົາກັບອະນຸສາສນີຂອງພຣະສະມະນະໂຄດົມ?

ຄັ້ງນັ້ນ ພິກຂຸເຫລົ່ານັ້ນບໍ່ຊື່ນຊົມ ບໍ່ຄັດຄ້ານຄຳເວົ້າຂອງພວກອັນຍະເດຍຣະຖີປະຣິພາຊົກເຫລົ່ານັ້ນ ຄັນແລ້ວລຸກຈາກອາສະນະຫລີກໄປດ້ວຍຕັ້ງໃຈວ່າ ເຮົາທັງຫລາຍຈັກຊາບເນື້ອຄວາມແຫ່ງຄຳເວົ້ານີ້ໃນສຳນັກຂອງພຣະຜູ້ມີພຣະພາຄ.

ຄັ້ງນັ້ນ ພິກຂຸເຫລົ່ານັ້ນ ຄັນທ່ຽວໄປບິນທະບາຕໃນຫລິທທະວະສັນນະນິຄົມ ເວລາປັຈສາພັຕ ກັບຈາກບິນທະບາຕແລ້ວ ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ອະພິວາທແລ້ວ ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ຄັນແລ້ວໄດ້ກຣາບທູລພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂໍປະທານພຣະວະໂຣກາສ ເມື່ອເຊົ້ານີ້ ພວກຂ້ານ້ອຍທັງຫລາຍນຸ່ງແລ້ວ ຖືບາຕແລະຈີວອຣເຂົ້າໄປບິນທະບາຕໃນຫລິທທະວະສັນນະນິຄົມ ຄັ້ງນັ້ນ ພວກຂ້ານ້ອຍທັງຫລາຍໄດ້ມີຄວາມດໍາຣິວ່າ ເວລານີ້ຍັງເຊົ້າຫລາຍທີ່ຈະທ່ຽວໄປບິນທະບາຕໃນຫລິທທະວະສັນນະນິຄົມ ຖ້າເຊັ່ນນັ້ນ ເຮົາຄວນເຂົ້າໄປທີ່ອາຣາມຂອງພວກອັນຍະເດຍຣະຖີປະຣິພາຊົກເຖີດ.

ຄັ້ງນັ້ນ ພວກຂ້ານ້ອຍທັງຫລາຍເຂົ້າໄປທີ່ອາຣາມຂອງພວກອັນຍະເດຍຣະຖີປະຣິພາຊົກ ໄດ້ປາສັຍກັບພວກອັນຍະເດຍຣະຖີປະຣິພາຊົກເຫລົ່ານັ້ນ ຄັນຜ່ານການປາສັຍພໍໃຫ້ຣະນຶກເຖິງກັນໄປແລ້ວ ຈຶ່ງນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ພວກອັນຍະເດຍຣະຖີປະຣິພາຊົກໄດ້ເວົ້າກັບພວກຂ້ານ້ອຍທັງຫລາຍວ່າ:

ອາວຸໂສທັງຫລາຍ! ພຣະສະມະນະໂຄດົມສະແດງທັມແກ່ສາວົກທັງຫລາຍຢ່າງນີ້ວ່າ ມາເຖີດ ພິກຂຸທັງຫລາຍພວກເຈົ້າທັງຫລາຍລະນີວອຣ ໕ ອັນເປັນອຸປະກິເລສຂອງຈິຕ ທອນກໍາລັງປັນຍາແລ້ວ ຈົ່ງມີໃຈປະກອບດ້ວຍເມຕຕາແຜ່ໄປຕະຫລອດທິສທີໜຶ່ງຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງ ທົ່ວສັຕທຸກ

ເຫລົ່າ ໃນທີ່ທຸກສະຖານ ດ້ວຍໃຈປະກອບດ້ວຍເມຕຕາ ອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທຢູ່ເຖີດ.

ຈົ່ງມີໃຈປະກອບດ້ວຍກະຣຸນາແຜ່ໄປຕະຫລອດທິສທີໜຶ່ງຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງ ທົ່ວສັຕທຸກເຫລົ່າ ໃນທີ່ທຸກສະຖານ ດ້ວຍໃຈປະກອບດ້ວຍກະຣຸນາອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທຢູ່ເຖີດ.

ຈົ່ງມີໃຈປະກອບດ້ວຍມຸທິຕາແຜ່ໄປຕະຫລອດທິສທີໜຶ່ງຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງ ທົ່ວສັຕທຸກເຫລົ່າ ໃນທີ່ທຸກສະຖານ ດ້ວຍໃຈປະກອບດ້ວຍມຸທິຕາອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທຢູ່ເຖີດ.

ຈົ່ງມີໃຈປະກອບດ້ວຍອຸເປກຂາແຜ່ໄປຕະຫລອດທິສທີໜຶ່ງຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງ ທົ່ວສັຕທຸກເຫລົ່າ ໃນທີ່ທຸກສະຖານ ດ້ວຍໃຈ

ປະກອບດ້ວຍອຸເປກຂາອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທຢູ່ເຖີດ.

ອາວຸໂສທັງຫລາຍ! ແມ່ນແຕ່ພວກເຮົາກໍສະແດງທັມແກ່ສາວົກທັງຫລາຍຢ່າງນີ້ວ່າ ມາເຖີດ ອາວຸໂສທັງຫລາຍທ່ານທັງຫລາຍລະນິວອຣ ໕ ອັນເປັນອຸປະກິເລສຂອງຈິຕທອນກຳລັງປັນຍາແລ້ວ ຈົ່ງມີໃຈປະກອບດ້ວຍເມຕຕາແຜ່ໄປຕະຫລອດທິສທີ່ໜຶ່ງຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງ ທົ່ວສັຕທຸກເຫລົ່າ ໃນທີ່ທຸກສະຖານ ດ້ວຍໃຈປະກອບດ້ວຍເມຕຕາອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທຢູ່ເຖີດ.

ຈົ່ງມີໃຈປະກອບດ້ວຍກະຣຸນາແຜ່ໄປຕະຫລອດທິສທີ່ໜຶ່ງຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງ ທົ່ວສັຕທຸກເຫລົ່າ ໃນທີ່ທຸກສະຖານ ດ້ວຍໃຈປະກອບດ້ວຍກະຣຸນາອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທຢູ່ເຖີດ.

ຈົ່ງມີໃຈປະກອບດ້ວຍມຸທິຕາແຜ່ໄປຕະຫລອດທິສທີ່ໜຶ່ງຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ

ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງ ທົ່ວສັຕທຸກເຫລົ່າ ໃນທີ່ທຸກສະຖານ ດ້ວຍໃຈປະກອບ ດ້ວຍມຸທິຕາອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີ ເວຣ ບໍ່ມີພະຍາບາທຢູ່ເຖີດ.

ຈົ່ງມີໃຈປະກອບດ້ວຍອຸເປກຂາແຜ່ໄປຕະຫລອດທິສທີໜຶ່ງ ຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງ ເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງ ປວງ ທົ່ວສັຕທຸກເຫລົ່າ ໃນທີ່ທຸກສະຖານ ດ້ວຍໃຈ ປະກອບດ້ວຍອຸເປກຂາອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ ໄດ້ ບໍ່ມີເວຣ ບໍ່ມີພະຍາບາທຢູ່ເຖີດ.

ອາວຸໂສທັງຫລາຍ! ໃນການສະແດງທັມຂອງພວກເຮົານີ້ ອັນໃດເປັນຄວາມແປກກັນ ອັນໃດເປັນປະໂຍຊນ໌ອັນຍິ່ງ ອັນໃດເປັນຄວາມແຕກຕ່າງກັນລະຫວ່າງທັມມະເທສນາ ຂອງພວກເຮົາກັບທັມມະເທສນາຂອງພຣະສະມະນະ ໂຄດົມ ຫລືອະນຸສາສນີຂອງພວກເຮົາກັບອະນຸສາສນີ ຂອງພຣະສະມະນະໂຄດົມ?

ຄັ້ງນັ້ນ ພວກຂ້ານ້ອຍທັງຫລາຍບໍ່ຊື່ນຊົມ ບໍ່ຄັດຄ້ານຄຳ ເວົ້າຂອງພວກອັນຍະເດຍຣະຖີປະຣິພາຊົກເຫລົ່ານັ້ນ ຄັນ ແລ້ວລຸກຈາກອາສະນະຫລີກໄປດ້ວຍຕັ້ງໃຈວ່າ ເຮົາ

ທັງຫລາຍຈັກຊາບເນື້ອຄວາມແຫ່ງຄຳເວົ້ານີ້ໃນສຳນັກຂອງພຣະຜູ້ມີພຣະພາຄ.

ພຣະຜູ້ມີພຣະພາຄຕຣັສວ່າ:

ພິກຂຸທັງຫລາຍ! ພວກອັນຍະເດຍຣະຖີປະຣິພາຊົກມີວາທະຢ່າງນີ້ ພວກເຈົ້າທັງຫລາຍຄວນຖາມຢ່າງນີ້ວ່າອາວຸໂສທັງຫລາຍ ກໍເມຕຕາເຈໂຕວິມຸຕທີ່ບຸຄຄົລຈະເຣີນແລ້ວຢ່າງໃດ ມີອັນໃດເປັນຄະຕິ ມີອັນໃດເປັນຢ່າງຍິ່ງ ມີອັນໃດເປັນຜົລ ມີອັນໃດເປັນທີ່ສຸດ?

ກະຣຸນາເຈໂຕວິມຸຕທີ່ບຸຄຄົລຈະເຣີນແລ້ວຢ່າງໃດ ມີອັນໃດເປັນຄະຕິ ມີອັນໃດເປັນຢ່າງຍິ່ງ ມີອັນໃດເປັນຜົລ ມີອັນໃດເປັນທີ່ສຸດ?

ມຸທິຕາເຈໂຕວິມຸຕທີ່ບຸຄຄົລຈະເຣີນແລ້ວຢ່າງໃດ ມີອັນໃດເປັນຄະຕິ ມີອັນໃດເປັນຢ່າງຍິ່ງ ມີອັນໃດເປັນຜົລ ມີອັນໃດເປັນທີ່ສຸດ?

ອຸເປກຂາເຈໂຕວິມຸຕທີ່ບຸຄຄົລຈະເຣີນແລ້ວຢ່າງໃດ ມີອັນໃດເປັນຄະຕິ ມີອັນໃດເປັນຢ່າງຍິ່ງ ມີອັນໃດເປັນຜົລ ມີອັນໃດເປັນທີ່ສຸດ?

ເມື່ອພວກອັນຍະເດຍຣະຖີປະຣິພາຊົກຖືກຖາມຢ່າງນີ້ແລ້ວ ຈັກບໍ່ສາມາດຕອບໄດ້ ຈັກເຖິງຄວາມອຶດອັດຢ່າງຍິ່ງ ຂໍ້ນັ້ນເພາະເຫຕໃດ? ເພາະເປັນບັນຫາທີ່ຖາມໃນຖານະທີ່ບໍ່ແມ່ນວິສັຍ.

**ພິກຂຸທັງຫລາຍ! ເຮົາຍັງບໍ່ແລເຫັນບຸຄຄົລໃນໂລກ ພ້ອມທັງເທວະໂລກ ມາຣໂລກ ພຣົມມະໂລກ ໃນໝູ່ສັຕພ້ອມທັງສະມະນະພຣາມ ເທວະດາແລະມະນຸສທີ່ຈະຍັງຈິຕໃຫ້ຍິນດີໃນການແກ້ບັນຫາເຫລົ່ານີ້ ເວັ້ນເສຍຈາກຕະຖາຄົຕ ສາວົກຂອງຕະຖາຄົຕ ຫລືຜູ້ທີ່ຟັງຈາກຕະຖາຄົຕຫລືຟັງຈາກສາວົກຂອງຕະຖາຄົຕ.**

ພິກຂຸທັງຫລາຍ! ກໍເມຕຕາເຈໂຕວິມຸຕທີ່ບຸຄຄົລຈະເຣີນແລ້ວຢ່າງໃດ ມີອັນໃດເປັນຄະຕິ ມີອັນໃດເປັນຢ່າງຍິ່ງ ມີອັນໃດເປັນຜົລ ມີອັນໃດເປັນທີ່ສຸດ?

**ພິກຂຸທັງຫລາຍ! ພິກຂຸໃນທັມວິນັຍນີ້ ຍ່ອມຈະເຣີນສະຕິສັມໂພຊຊົງທີ່ປະກອບດ້ວຍເມຕຕາ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປໃນການສະລະ.**

ຍ່ອມຈະເຣີນທັມມະວິຈະຍະສັມໂພຊຊົງທີ່ປະກອບດ້ວຍເມຕຕາ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປໃນການສະລະ.

ຍ່ອມຈະເຣີນວິຣິຍະສັມໂພຊຊົງທີ່ປະກອບດ້ວຍເມຕຕາ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປໃນການສະລະ.

ຍ່ອມຈະເຣີນປີຕິສັມໂພຊຊົງທີ່ປະກອບດ້ວຍເມຕຕາ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປໃນການສະລະ.

ຍ່ອມຈະເຣີນປັສສັທທິສັມໂພຊຊົງທີ່ປະກອບດ້ວຍເມຕຕາ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປໃນການສະລະ.

ຍ່ອມຈະເຣີນສະມາທິສັມໂພຊຊົງທີ່ປະກອບດ້ວຍເມຕຕາ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປໃນການສະລະ.

**ຍ່ອມຈະເຣີນອຸເປກຂາສັມໂພຊຊົງທີ່ປະກອບດ້ວຍເມຕຕາ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປໃນການສະລະ.**

ຖ້າເຂົາຫວັງຢູ່ວ່າ ຂໍເຮົາມີສັນຍາວ່າ ເປັນປະຕິກູລໃນສິ່ງທີ່ບໍ່ປະຕິກູລ ເຂົາກໍຍ່ອມມີສັນຍາວ່າ ເປັນປະຕິກູລໃນສິ່ງທີ່ບໍ່ປະຕິກູລນັ້ນຢູ່.

*(If he wishes: 'May I dwell perceiving the repulsive in the unrepulsive,' he dwells perceiving the repulsive therein.)* |*Translated by Bhikkhu Bodhi / Source: https://suttacentral.net/sn46.54*

ຖ້າເຂົາຫວັງຢູ່ວ່າ ຂໍເຮົາມີສັນຍາວ່າ ບໍ່ປະຕິກູລໃນສິ່ງທີ່ປະຕິກູລ ເຂົາກໍຍ່ອມມີສັນຍາວ່າ ບໍ່ປະຕິກູລໃນສິ່ງທີ່ປະຕິກູລນັ້ນຢູ່.

ຖ້າເຂົາຫວັງຢູ່ວ່າ ຂໍເຮົາມີສັນຍາວ່າ ເປັນປະຕິກູລໃນສິ່ງທີ່ບໍ່ປະຕິກູລແລະປະຕິກູລຢູ່ ເຂົາກໍຍ່ອມມີສັນຍາວ່າ ເປັນປະຕິກູລໃນສິ່ງທີ່ບໍ່ປະຕິກູລແລະປະຕິກູລນັ້ນຢູ່.

ຖ້າເຂົາຫວັງຢູ່ວ່າ ຂໍເຮົາມີສັນຍາວ່າ ບໍ່ປະຕິກູລໃນສິ່ງທີ່ປະຕິກູລແລະບໍ່ປະຕິກູລຢູ່ ເຂົາກໍຍ່ອມມີສັນຍາວ່າ ບໍ່ປະຕິກູລໃນສິ່ງທີ່ປະຕິກູລແລະບໍ່ປະຕິກູລນັ້ນຢູ່.

ຖ້າເຂົາຫວັງຢູ່ວ່າ ເຮົາຄວນເວັ້ນສິ່ງທັງສອງນັ້ນຄື ສິ່ງບໍ່ປະຕິກູລແລະສິ່ງທີ່ປະຕິກູລ ແລ້ວເປັນຜູ້ມີອຸເປກຂາ ມີສະຕິສັມປະຊັນຍະຢູ່ ກໍຍ່ອມເປັນຜູ້ມີອຸເປກຂາ ມີສະຕິສັມປະຊັນຍະໃນສິ່ງທັງສອງນັ້ນຢູ່ ຫລືອີກຢ່າງໜຶ່ງ ຍ່ອມເຂົ້າເຖິງສຸພະວິໂມກຂ໌ຢູ່.

ພິກຂຸທັງຫລາຍ! ເຮົາກ່າວເມຕຕາເຈໂຕວິມຸຕວ່າ ມີສຸພະວິໂມກຂ໌ເປັນຢ່າງຍິ່ງ ສຳຫລັບພິກຂຸຜູ້ມີປັນຍາຍັງບໍ່ແທງຕະຫລອດເຊິ່ງວິມຸຕອັນຍິ່ງໃນທັມວິນັຍນີ້ (*ສຸພະປະຣະມາຫັງ ພິກຂະເວ ເມຕຕາເຈໂຕວິມຸຕຕິງ ວະທາມິ ໆ ອິທະ ປັນຍັສສະ ພິກຂຸໂນ ອຸຕຕະຣິວິມຸຕຕິງ ອັປປະຕິວິຊຊະໂຕ*).

ພິກຂຸທັງຫລາຍ! ກໍກະຣຸນາເຈໂຕວິມຸຕທີ່ບຸຄຄົລຈະເຣີນແລ້ວຢ່າງໃດ ມີອັນໃດເປັນຄະຕິ ມີອັນໃດເປັນຢ່າງຍິ່ງ ມີອັນໃດເປັນຜົລ ມີອັນໃດເປັນທີ່ສຸດ?

**ພິກຂຸທັງຫລາຍ! ພິກຂຸໃນທັມວິນັຍນີ້ ຍ່ອມຈະເຣີນສະຕິສັມໂພຊຊົງທີ່ປະກອບດ້ວຍກະຣຸນາ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປໃນການສະລະ.**

ຍ່ອມຈະເຣີນທັມມະວິຈະຍະສັມໂພຊຊົງທີ່ປະກອບດ້ວຍ ກະຣຸນາ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປໃນການສະລະ.

ຍ່ອມຈະເຣີນວິຣິຍະສັມໂພຊຊົງທີ່ປະກອບດ້ວຍກະຣຸນາ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປ ໃນການສະລະ.

ຍ່ອມຈະເຣີນປີຕິສັມໂພຊຊົງທີ່ປະກອບດ້ວຍກະຣຸນາ ອັນ ອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປໃນ ການສະລະ.

ຍ່ອມຈະເຣີນປັສສັທທິສັມໂພຊຊົງທີ່ປະກອບດ້ວຍກະຣຸນາ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປ ໃນການສະລະ.

ຍ່ອມຈະເຣີນສະມາທິສັມໂພຊຊົງທີ່ປະກອບດ້ວຍກະຣຸນາ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປ ໃນການສະລະ.

**ຍ່ອມຈະເຣີນອຸເປກຂາສັມໂພຊຊົງທີ່ປະກອບດ້ວຍກະຣຸນາ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປໃນການສະລະ.**

ຖ້າເຂົາຫວັງຢູ່ວ່າ ຂໍເຣົາມີສັນຍາວ່າ ເປັນປະຕິກູລໃນສິ່ງທີ່ບໍ່ປະຕິກູລ ເຂົາກໍຍ່ອມມີສັນຍາວ່າ ເປັນປະຕິກູລໃນສິ່ງທີ່ບໍ່ປະຕິກູລນັ້ນຢູ່.

ຖ້າເຂົາຫວັງຢູ່ວ່າ ຂໍເຣົາມີສັນຍາວ່າ ບໍ່ປະຕິກູລໃນສິ່ງທີ່ປະຕິກູລ ເຂົາກໍຍ່ອມມີສັນຍາວ່າ ບໍ່ປະຕິກູລໃນສິ່ງທີ່ປະຕິກູລນັ້ນຢູ່.

ຖ້າເຂົາຫວັງຢູ່ວ່າ ຂໍເຣົາມີສັນຍາວ່າ ເປັນປະຕິກູລໃນສິ່ງທີ່ບໍ່ປະຕິກູລແລະປະຕິກູລຢູ່ ເຂົາກໍຍ່ອມມີສັນຍາວ່າ ເປັນປະຕິກູລໃນສິ່ງທີ່ບໍ່ປະຕິກູລແລະປະຕິກູລນັ້ນຢູ່.

ຖ້າເຂົາຫວັງຢູ່ວ່າ ຂໍເຣົາມີສັນຍາວ່າ ບໍ່ປະຕິກູລໃນສິ່ງທີ່ປະຕິກູລແລະບໍ່ປະຕິກູລຢູ່ ເຂົາກໍຍ່ອມມີສັນຍາວ່າ ບໍ່ປະຕິກູລໃນສິ່ງທີ່ປະຕິກູລແລະບໍ່ປະຕິກູລນັ້ນຢູ່.

ຖ້າເຂົາຫວັງຢູ່ວ່າ ເຣົາຄວນເວັ້ນສິ່ງທັງສອງນັ້ນຄື ສິ່ງບໍ່ປະຕິກູລແລະສິ່ງທີ່ປະຕິກູລ ແລ້ວເປັນຜູ້ມີອຸເປກຂາ ມີ

ສະຕິສັມປະຊັນຍະຢູ່ ກໍຍ່ອມເປັນຜູ້ມີອຸເປກຂາ ມີສະຕິສັມປະຊັນຍະໃນສິ່ງທັງສອງນັ້ນຢູ່ ຫລືອີກຢ່າງໜຶ່ງ ເພາະລ່ວງຮູປສັນຍາເສຍໄດ້ໂດຍປະການທັງປວງ ເພາະຄວາມດັບໄປແຫ່ງປະຕິຄະສັນຍາ ເພາະບໍ່ກະທຳໄວ້ໃນໃຈເຊິ່ງນານັຕຕະສັນຍາ ໂດຍກຳນົດວ່າ ອາກາສບໍ່ມີທີ່ສຸດ ຍ່ອມບັນລຸອາກາສານັນຈາຍະຕະນະຢູ່.

ພິກຂຸທັງຫລາຍ! ເຮົາກ່າວກະຣຸນາເຈໂຕວິມຸຕວ່າ ມີອາກາສານັນຈາຍະຕະນະເປັນຢ່າງຍິ່ງ ສຳຫລັບພິກຂຸຜູ້ມີປັນຍາຍັງບໍ່ແທງຕະຫລອດເຊິ່ງວິມຸຕອັນຍິ່ງໃນທັມວິນັຍນີ້.

ພິກຂຸທັງຫລາຍ! ກໍມຸທິຕາເຈໂຕວິມຸຕທີ່ບຸຄຄົລຈະເຣີນແລ້ວຢ່າງໃດ ມີອັນໃດເປັນຄະຕິ ມີອັນໃດເປັນຢ່າງຍິ່ງ ມີອັນໃດເປັນຜົລ ມີອັນໃດເປັນທີ່ສຸດ?

**ພິກຂຸທັງຫລາຍ! ພິກຂຸໃນທັມວິນັຍນີ້ ຍ່ອມຈະເຣີນສະຕິສັມໂພຊຊົງທີ່ປະກອບດ້ວຍມຸທິຕາ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປໃນການສະລະ.**

**ຍ່ອມຈະເຣີນທັມມະວິຈະຍະສັມໂພຊຊົງທີ່ປະກອບດ້ວຍມຸທິຕາ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປໃນການສະລະ.**

ຍ່ອມຈະເຣີນວິຣິຍະສັມໂພຊຊົງທີ່ປະກອບດ້ວຍມຸທິຕາ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປໃນການສະລະ.

ຍ່ອມຈະເຣີນປີຕິສັມໂພຊຊົງທີ່ປະກອບດ້ວຍມຸທິຕາ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປໃນການສະລະ.

ຍ່ອມຈະເຣີນປັສສັທທິສັມໂພຊຊົງທີ່ປະກອບດ້ວຍມຸທິຕາ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປໃນການສະລະ.

ຍ່ອມຈະເຣີນສະມາທິສັມໂພຊຊົງທີ່ປະກອບດ້ວຍມຸທິຕາ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປໃນການສະລະ.

ຍ່ອມຈະເຣີນອຸເປກຂາສັມໂພຊຊົງທີ່ປະກອບດ້ວຍມຸທິຕາ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປໃນການສະລະ.

ຖ້າເຂົາຫວັງຢູ່ວ່າ ຂໍເຮົາມີສັນຍາວ່າ ເປັນປະຕິກູລໃນສິ່ງທີ່ບໍ່ປະຕິກູລ ເຂົາກໍຍ່ອມມີສັນຍາວ່າ ເປັນປະຕິກູລໃນສິ່ງທີ່ບໍ່ປະຕິກູລນັ້ນຢູ່.

ຖ້າເຂົາຫວັງຢູ່ວ່າ ຂໍເຮົາມີສັນຍາວ່າ ບໍ່ປະຕິກູລໃນສິ່ງທີ່ປະຕິກູລ ເຂົາກໍຍ່ອມມີສັນຍາວ່າ ບໍ່ປະຕິກູລໃນສິ່ງທີ່ປະຕິກູລນັ້ນຢູ່.

ຖ້າເຂົາຫວັງຢູ່ວ່າ ຂໍເຮົາມີສັນຍາວ່າ ເປັນປະຕິກູລໃນສິ່ງທີ່ບໍ່ປະຕິກູລແລະປະຕິກູລຢູ່ ເຂົາກໍຍ່ອມມີສັນຍາວ່າ ເປັນປະຕິກູລໃນສິ່ງທີ່ບໍ່ປະຕິກູລແລະປະຕິກູລນັ້ນຢູ່.

ຖ້າເຂົາຫວັງຢູ່ວ່າ ຂໍເຮົາມີສັນຍາວ່າ ບໍ່ປະຕິກູລໃນສິ່ງທີ່ປະຕິກູລແລະບໍ່ປະຕິກູລຢູ່ ເຂົາກໍຍ່ອມມີສັນຍາວ່າ ບໍ່ປະຕິກູລໃນສິ່ງທີ່ປະຕິກູລແລະບໍ່ປະຕິກູລນັ້ນຢູ່.

ຖ້າເຂົາຫວັງຢູ່ວ່າ ເຮົາຄວນເວັ້ນສິ່ງທັງສອງນັ້ນຄື ສິ່ງບໍ່ປະຕິກູລແລະສິ່ງທີ່ປະຕິກູລ ແລ້ວເປັນຜູ້ມີອຸເປກຂາ ມີສະຕິສັມປະຊັນຍະຢູ່ ກໍຍ່ອມເປັນຜູ້ມີອຸເປກຂາ ມີສະຕິສັມປະຊັນຍະໃນສິ່ງທັງສອງນັ້ນຢູ່ ຫລືອີກຢ່າງໜຶ່ງ ເພາະລ່ວງອາກາສານັນຈາຍະຕະນະເສຍໄດ້ໂດຍປະການທັງ

ປວງ ໂດຍກຳນົດວ່າ ວິນຍານບໍ່ມີທີ່ສຸດ ຍ່ອມບັນລຸວິນຍາ ນັນຈາຍະຕະນະຢູ່.

ພິກຂຸທັງຫລາຍ! ເຮົາກ່າວມຸທິຕາເຈໂຕວິມຸຕວ່າ ມີວິນຍາ ນັນຈາຍະຕະນະເປັນຢ່າງຍິ່ງ ສຳຫລັບພິກຂຸຜູ້ມີປັນຍາຍັງ ບໍ່ແທງຕະຫລອດເຊິ່ງວິມຸຕອັນຍິ່ງໃນທັມວິນັຍນີ້.

ພິກຂຸທັງຫລາຍ! ກໍອຸເປກຂາເຈໂຕວິມຸຕທີ່ບຸຄຄົລຈະເຣີນ ແລ້ວຢ່າງໃດ ມີອັນໃດເປັນຄະຕິ ມີອັນໃດເປັນຢ່າງຍິ່ງ ມີ ອັນໃດເປັນຜົລ ມີອັນໃດເປັນທີ່ສຸດ?

**ພິກຂຸທັງຫລາຍ! ພິກຂຸໃນທັມວິນັຍນີ້ ຍ່ອມຈະເຣີນສະຕິ ສັມໂພຊຊົງທີ່ປະກອບດ້ວຍອຸເປກຂາ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປໃນການສະລະ.**

**ຍ່ອມຈະເຣີນທັມມະວິຈະຍະສັມໂພຊຊົງທີ່ປະກອບດ້ວຍອຸ ເປກຂາ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປໃນການສະລະ.**

**ຍ່ອມຈະເຣີນວິຣິຍະສັມໂພຊຊົງທີ່ປະກອບດ້ວຍອຸເປກຂາ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປ ໃນການສະລະ.**

**ຍ່ອມຈະເຣີນປີຕິສັມໂພຊຊົງທີ່ປະກອບດ້ວຍອຸເປກຂາ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປໃນການສະລະ.**

**ຍ່ອມຈະເຣີນປັສສັທທິສັມໂພຊຊົງທີ່ປະກອບດ້ວຍອຸເປກຂາ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປໃນການສະລະ.**

**ຍ່ອມຈະເຣີນສະມາທິສັມໂພຊຊົງທີ່ປະກອບດ້ວຍອຸເປກຂາ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປໃນການສະລະ.**

**ຍ່ອມຈະເຣີນອຸເປກຂາສັມໂພຊຊົງທີ່ປະກອບດ້ວຍອຸເປກຂາ ອັນອາສັຍວິເວກ ອາສັຍວິຣາຄະ ອາສັຍນິໂຣທ ນ້ອມໄປໃນການສະລະ.**

ຖ້າເຂົາຫວັງຢູ່ວ່າ ຂໍເຮົາມີສັນຍາວ່າ ເປັນປະຕິກູລໃນສິ່ງທີ່ບໍ່ປະຕິກູລ ເຂົາກໍຍ່ອມມີສັນຍາວ່າ ເປັນປະຕິກູລໃນສິ່ງທີ່ບໍ່ປະຕິກູລນັ້ນຢູ່.

ຖ້າເຂົາຫວັງຢູ່ວ່າ ຂໍເຮົາມີສັນຍາວ່າ ບໍ່ປະຕິກູລໃນສິ່ງທີ່ປະຕິກູລ ເຂົາກໍຍ່ອມມີສັນຍາວ່າ ບໍ່ປະຕິກູລໃນສິ່ງທີ່ປະຕິກູລນັ້ນຢູ່.

ຖ້າເຂົາຫວັງຢູ່ວ່າ ຂໍເຮົາມີສັນຍາວ່າ ເປັນປະຕິກູລໃນສິ່ງທີ່ບໍ່ປະຕິກູລແລະປະຕິກູລຢູ່ ເຂົາກໍຍ່ອມມີສັນຍາວ່າ ເປັນປະຕິກູລໃນສິ່ງທີ່ບໍ່ປະຕິກູລແລະປະຕິກູລນັ້ນຢູ່.

ຖ້າເຂົາຫວັງຢູ່ວ່າ ຂໍເຮົາມີສັນຍາວ່າ ບໍ່ປະຕິກູລໃນສິ່ງທີ່ປະຕິກູລແລະບໍ່ປະຕິກູລຢູ່ ເຂົາກໍຍ່ອມມີສັນຍາວ່າ ບໍ່ປະຕິກູລໃນສິ່ງທີ່ປະຕິກູລແລະບໍ່ປະຕິກູລນັ້ນຢູ່.

ຖ້າເຂົາຫວັງຢູ່ວ່າ ເຮົາຄວນເວັ້ນສິ່ງທັງສອງນັ້ນຄື ສິ່ງບໍ່ປະຕິກູລແລະສິ່ງທີ່ປະຕິກູລ ແລ້ວເປັນຜູ້ມີອຸເປກຂາ ມີສະຕິສັມປະຊັນຍະຢູ່ ກໍຍ່ອມເປັນຜູ້ມີອຸເປກຂາ ມີສະຕິສັມປະຊັນຍະໃນສິ່ງທັງສອງນັ້ນຢູ່ ຫລືອີກຢ່າງໜຶ່ງ ເພາະລ່ວງວິນຍານັນຈາຍະຕະນະເສຍໄດ້ໂດຍປະການທັງປວງໂດຍກຳນົດວ່າ ບໍ່ມີອັນໃດ ຍ່ອມບັນລຸອາກິນຈັນຍາຍະຕະນະຢູ່.

ພິກຂຸທັງຫລາຍ! ເຮົາກ່າວອຸເປກຂາເຈໂຕວິມຸຕວ່າ ມີອາກິນຈັນຍາຍະຕະນະເປັນຢ່າງຍິ່ງ ສຳຫລັບພິກຂຸຜູ້ມີປັນຍາຍັງບໍ່ແທງຕະຫລອດເຊິ່ງວິມຸຕອັນຍິ່ງໃນທັມວິນັຍນີ້.

*(ອາກິນຈັນຍາຍະຕະນະປະຣະມາຫັງ ພິກຂະເວ ອຸເປກຂາເຈໂຕວິມຸຕຕິງ ວະທາມິ ໆ ອິທະ ປັນຍັສສະ ພິກຂຸໂນ ອຸຕຕະຣິວິມຸຕຕິງ ອັປປະຕິວິຊຊະໂຕຕິ)*

---

*ສັງຍຸຕຕະນິກາຍ ມະຫາວາຣະວັຄ ໑໙/໑໔໐-໑໔໗/໕໗໘-໕໐໐*



# ພິກຂຸທີ່ເປັນຜູ້ປະຕິບັຕຂໍ້ປະຕິບັຕອັນດີຍິ່ງ ຂອງສະມະນະ

ພິກຂຸທັງຫລາຍ! ກໍຢ່າງໃດ ພິກຂຸຈຶ່ງຊື່ວ່າເປັນຜູ້ປະຕິບັຕຂໍ້ປະຕິບັຕອັນດີຍິ່ງຂອງສະມະນະ?

ພິກຂຸທັງຫລາຍ! ພິກຂຸອົງຄ໌ໃດມີອະພິຊຊາຫລາຍ ກໍລະອະພິຊຊາເສຍໄດ້, ມີຈິຕພະຍາບາທຫລາຍ ກໍລະພະຍາບາທເສຍໄດ້, ມີຄວາມມັກໂກທ ກໍລະຄວາມມັກໂກທເສຍໄດ້, ມີຄວາມຜູກໂກທ ກໍລະຄວາມຜູກໂກທເສຍໄດ້, ມີຄວາມລົບຫລູ່ ກໍລະຄວາມລົບຫລູ່ເສຍໄດ້, ມີຄວາມຕີສະເໝີ ກໍລະຄວາມຕີສະເໝີເສຍໄດ້, ມີຄວາມອິສສາ ກໍ

ລະຄວາມອິສສາເສຍໄດ້, ມີຄວາມຂີ້ຖີ່ ກໍລະຄວາມຂີ້ຖີ່ເສຍໄດ້, ມີຄວາມໂອ້ອວດ ກໍລະຄວາມໂອ້ອວດເສຍໄດ້, ມີມາຍາ ກໍລະມາຍາເສຍໄດ້, ມີຄວາມປາຖນາຊົ່ວ ກໍລະຄວາມປາຖນາຊົ່ວເສຍໄດ້, ມີຄວາມເຫັນຜິດ ກໍລະຄວາມເຫັນຜິດເສຍໄດ້.

ພິກຂຸທັງຫລາຍ! ເພາະລະເສຍໄດ້ເຊິ່ງກິເລສອັນເປັນມົລທິນ ເປັນໂທສ ເປັນດັ່ງນ້ຳຝາດຂອງສະມະນະ ອັນເປັນເຫຕໃຫ້ເກີດໃນອະບາຍ ມີວິບາກອັນຕົນຈະສເວີຍໃນທຸຄະຕິເຫລົ່ານີ້ແລ ເຮົາຈິ່ງກ່າວວ່າ ພິກຂຸນັ້ນເປັນຜູ້ປະຕິບັຕຂໍ້ປະຕິບັຕທີ່ດີຍິ່ງຂອງສະມະນະ.

ພິກຂຸນັ້ນຍ່ອມພິຈາຣະນາເຫັນຕົນບໍຣິສຸທ ພົ້ນແລ້ວຈາກອະກຸສົລທັມອັນເປັນບາບທັງປວງນີ້ ເມື່ອເຂົາພິຈາຣະນາເຫັນຕົນບໍຣິສຸທ ພົ້ນແລ້ວຈາກອະກຸສົລທັມອັນເປັນບາບເຫລົ່ານັ້ນແລ້ວ ປາໂມທຍ່ອມເກີດ ເມື່ອເກີດປາໂມທແລ້ວປິຕິຍ່ອມເກີດ ເມື່ອມີໃຈປະກອບດ້ວຍປິຕິແລ້ວ ກາຍຍ່ອມສງົບ ຜູ້ມີກາຍສງົບ ຍ່ອມໄດ້ສເວີຍສຸຂ ເມື່ອມີສຸຂຈິຕຍ່ອມຕັ້ງໝັ້ນ **ເຂົາມີຈິຕປະກອບດ້ວຍເມຕຕາ ແຜ່ໄປສູ່ທິສທີ ໑ ຢູ່; ແຜ່ໄປສູ່ທິສທີ ໒ ກໍຢ່າງນັ້ນ; ແຜ່ໄປສູ່ທິສທີ ໓ ກໍຢ່າງນັ້ນ; ແຜ່ໄປສູ່ທິສທີ ໔ ກໍຢ່າງນັ້ນ; ແລະເຂົາມີຈິຕປະກອບດ້ວຍເມຕຕາອັນໄພບູນ ຍິ່ງໃຫຍ່ ຫາ**

**ປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທ ແຜ່ໄປທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ທົ່ວທຸກທາງ ສະເໝີໜ້າກັນຕະຫລອດໂລກທັງປວງທີ່ມີຢູ່.**

ເຂົາມີຈິຕປະກອບດ້ວຍກະຣຸນາ ແຜ່ໄປສູ່ທິສທີ ໑ ຢູ່; ແຜ່ໄປສູ່ທິສທີ ໒ ກໍຢ່າງນັ້ນ; ແຜ່ໄປສູ່ທິສທີ ໓ ກໍຢ່າງນັ້ນ; ແຜ່ໄປສູ່ທິສທີ ໔ ກໍຢ່າງນັ້ນ; ແລະເຂົາມີຈິຕປະກອບດ້ວຍກະຣຸນາອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທ ແຜ່ໄປທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ທົ່ວທຸກທາງ ສະເໝີໜ້າກັນຕະຫລອດໂລກທັງປວງທີ່ມີຢູ່.

ເຂົາມີຈິຕປະກອບດ້ວຍມຸທິຕາ ແຜ່ໄປສູ່ທິສທີ ໑ ຢູ່; ແຜ່ໄປສູ່ທິສທີ ໒ ກໍຢ່າງນັ້ນ; ແຜ່ໄປສູ່ທິສທີ ໓ ກໍຢ່າງນັ້ນ; ແຜ່ໄປສູ່ທິສທີ ໔ ກໍຢ່າງນັ້ນ; ແລະເຂົາມີຈິຕປະກອບດ້ວຍມຸທິຕາອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທ ແຜ່ໄປທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ທົ່ວທຸກທາງ ສະເໝີໜ້າກັນຕະຫລອດໂລກທັງປວງທີ່ມີຢູ່.

ເຂົາມີຈິຕປະກອບດ້ວຍອຸເປກຂາ ແຜ່ໄປສູ່ທິສທີ ໑ ຢູ່; ແຜ່ໄປສູ່ທິສທີ ໒ ກໍຢ່າງນັ້ນ; ແຜ່ໄປສູ່ທິສທີ ໓ ກໍຢ່າງ

ນັ້ນ; ແຜ່ໄປສູ່ທິສທີ ໔ ກໍຢ່າງນັ້ນ; ແລະເຂົາມີຈິຕ ປະກອບດ້ວຍອຸເປກຂາອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທ ແຜ່ໄປທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ທົ່ວທຸກທາງ ສະເໝີໜ້າກັນຕະຫລອດໂລກທັງປວງທີ່ມີຢູ່.

ພິກຂຸທັງຫລາຍ! ສະໂບກຂະຣະນີ ມີນ້ຳໃສຈືດ ເຢັນສະອາດ ມີທ່າອັນດີ ໜ້າຊື່ນຊົມ ຖ້າບຸຣຸສມາແຕ່ທິສຕາເວັນອອກ ທິສຕາເວັນຕົກ ທິສເໜືອ ທິສໃຕ້ ແລະຈາກສະຖານທີ່ໃດໆ ອັນຄວາມຮ້ອນແຜດເຜົາ ຮ້ອນອົບເອົ້າ ລຳບາກ ຫິວໂຫຍ ຢາກດື່ມນ້ຳ ເຂົາມາເຖິງສະໂບກຂະຣະນີນັ້ນແລ້ວ ກໍບັນເທົາຄວາມຢາກດື່ມນ້ຳ ແລະຄວາມກະວົນກະວາຍເພາະຄວາມຮ້ອນເສຍໄດ້ສັນໃດ; ພິກຂຸທັງຫລາຍ ຖ້າກຸລະບຸຕອອກຈາກສະກຸນກະສັຕ ມາບວດເປັນບັນພະຊິຕ ເຂົາມາເຖິງທັມວິນັຍທີ່ຕະຖາຄົຕປະກາສແລ້ວ ຈະເຣີນເມຕຕາ ກະຣຸນາ ມຸທິຕາ ແລະອຸເປກຂາຢ່າງນັ້ນ ຍ່ອມໄດ້ຄວາມສງົບຈິຕໃນພາຍໃນ ກໍສັນນັ້ນເໝືອນກັນ ເຮົາກ່າວວ່າ ເປັນຜູ້ປະຕິບັຕຂໍ້ປະຕິບັຕທີ່ດີຍິ່ງຂອງສະມະນະ.

ຖ້າກຸລະບຸຕອອກຈາກສະກຸນພຣາມ ມາບວດເປັນບັນພະຊິຕ ເຂົາມາເຖິງທັມວິນັຍທີ່ຕະຖາຄົຕປະກາສແລ້ວ ຈະ

ເຣີນເມຕຕາ ກະຣຸນາ ມຸທິຕາ ແລະອຸເປກຂາຢ່າງນັ້ນ ຍ່ອມໄດ້ຄວາມສງົບຈິຕໃນພາຍໃນ ກໍສັນນັ້ນເໝືອນກັນ ເຮົາກ່າວວ່າ ເປັນຜູ້ປະຕິບັຕຂໍ້ປະຕິບັຕທີ່ດີຍິ່ງຂອງ ສະມະນະ.

ຖ້າກຸລະບຸຕອອກຈາກສະກຸນແພສຍ໌ ມາບວດເປັນບັນພະ ຊິຕ ເຂົ້າມາເຖິງທັມວິນັຍທີ່ຕະຖາຄົຕປະກາສແລ້ວ ຈະ ເຣີນເມຕຕາ ກະຣຸນາ ມຸທິຕາ ແລະອຸເປກຂາຢ່າງນັ້ນ ຍ່ອມໄດ້ຄວາມສງົບຈິຕໃນພາຍໃນ ກໍສັນນັ້ນເໝືອນກັນ ເຮົາກ່າວວ່າ ເປັນຜູ້ປະຕິບັຕຂໍ້ປະຕິບັຕທີ່ດີຍິ່ງຂອງ ສະມະນະ.

ຖ້າກຸລະບຸຕອອກຈາກສະກຸນສູທ ມາບວດເປັນບັນພະຊິຕ ເຂົ້າມາເຖິງທັມວິນັຍທີ່ຕະຖາຄົຕປະກາສແລ້ວ ຈະເຣີນ ເມຕຕາ ກະຣຸນາ ມຸທິຕາ ແລະອຸເປກຂາຢ່າງນັ້ນ ຍ່ອມ ໄດ້ຄວາມສງົບຈິຕໃນພາຍໃນ ກໍສັນນັ້ນເໝືອນກັນ ເຮົາ ກ່າວວ່າ ເປັນຜູ້ປະຕິບັຕຂໍ້ປະຕິບັຕທີ່ດີຍິ່ງຂອງສະມະນະ.

ຖ້າກຸລະບຸຕອອກຈາກສະກຸນໃດໆກໍຕາມ ມາບວດເປັນບັນ ພະຊິຕ ເຂົ້າມາເຖິງທັມວິນັຍທີ່ຕະຖາຄົຕປະກາສແລ້ວ ຈະເຣີນເມຕຕາ ກະຣຸນາ ມຸທິຕາ ແລະອຸເປກຂາຢ່າງນັ້ນ ຍ່ອມໄດ້ຄວາມສງົບຈິຕໃນພາຍໃນ ກໍສັນນັ້ນເໝືອນກັນ

ເຮົາກ່າວວ່າ ເປັນຜູ້ປະຕິບັຕຂໍ້ປະຕິບັຕທີ່ດີຍິ່ງຂອງສະມະນະ.

ຖ້າກຸລະບຸຕອອກຈາກສະກຸນກະສັຕມາບວດເປັນບັນພະຊິຕ ເຂົາກະທຳໃຫ້ແຈ້ງເຊິ່ງເຈໂຕວິມຸຕ ປັນຍາວິມຸຕ ອັນຫາອາສະວະບໍ່ໄດ້ ເພາະອາສະວະທັງຫລາຍສິ້ນໄປດ້ວຍປັນຍາອັນຍິ່ງເອງໃນປັຈຈຸບັນເຂົ້າເຖິງຢູ່ ເຮົາກ່າວວ່າ ເປັນສະມະນະເພາະສິ້ນອາສະວະທັງຫລາຍ.

ຖ້າກຸລະບຸຕອອກຈາກສະກຸນພຣາມ..., ຖ້າກຸລະບຸຕອອກຈາກສະກຸນແພສຍ໌..., ຖ້າກຸລະບຸຕອອກຈາກສະກຸນສູທ..., ຖ້າກຸລະບຸຕອອກຈາກສະກຸນໃດໆກໍຕາມ ມາບວດເປັນບັນພະຊິຕ ເຂົາກະທຳໃຫ້ແຈ້ງເຊິ່ງເຈໂຕວິມຸຕ ປັນຍາວິມຸຕ ອັນຫາອາສະວະບໍ່ໄດ້ ເພາະອາສະວະທັງຫລາຍສິ້ນໄປດ້ວຍປັນຍາອັນຍິ່ງເອງໃນປັຈຈຸບັນເຂົ້າເຖິງຢູ່ ເຮົາກ່າວວ່າ ເປັນສະມະນະເພາະສິ້ນອາສະວະທັງຫລາຍ.

---

*ມັຊຊິມະນິກາຍ ມູລປັນນາສກ໌ ໑໘/໕໗໘/໔໗໔*



# ການຂ້າສັຕເຈາະຈົງພຣະຕະຖາຄົຕ ຫລືສາວົກຂອງພຣະຕະຖາຄົຕ ຜູ້ນັ້ນຍ່ອມປະສົບກັບສິ່ງທີ່ບໍ່ເປັນບຸນຍ໌ເປັນອັນມາກ

ສມັຍໜຶ່ງພຣະຜູ້ມີພຣະພາຄປະທັບຢູ່ທີ່ອັມພະວັນຂອງໝໍຊີວົກ ໂກມາຣະພັຈ ເຂດພຣະນະຄອຣຣາຊະຄືຫ໌ ຄັ້ງນັ້ນແລ ໝໍຊີວົກ ໂກມາຣະພັຈເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຖວາຍບັງຄົມພຣະຜູ້ມີພຣະພາຄແລ້ວ ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ໄດ້ກຣາບທູລພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍໄດ້ຟັງຄຳນີ້ມາວ່າ ຊົນທັງຫລາຍຍ່ອມຂ້າສັຕເຈາະຈົງພຣະສະມະນະໂຄດົມ ພຣະສະມະນະໂຄດົມຊົງຊາບຂໍ້ນັ້ນຢູ່ ຍັງສເວີຍເນື້ອທີ່ເຂົາທຳສະເພາະຕົນ ອາສັຍຕົນທຳ ດັ່ງນີ້,

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຊົນເຫລົ່າໃດກ່າວຢ່າງນີ້ວ່າ ຊົນທັງຫລາຍຍ່ອມຂ້າສັຕເຈາະຈົງພຣະສະມະນະໂຄດົມ ພຣະສະມະນະໂຄດົມຊົງຊາບຂໍ້ນັ້ນຢູ່ ຍັງສເວີຍເນື້ອທີ່ເຂົາທຳສະເພາະຕົນ ອາສັຍຕົນທຳດັ່ງນີ້ ຊົນເຫລົ່ານັ້ນຊື່ວ່າ ກ່າວຕົງກັບທີ່ພຣະຜູ້ມີພຣະພາຄຕຣັສ ບໍ່ຊື່ວ່າກ່າວຕູ່ພຣະຜູ້ມີພຣະພາຄດ້ວຍຄຳອັນບໍ່ເປັນຈິງ ຊື່ວ່າຢືນຢັນທັມອັນສົມຄວນແກ່ທັມ ການກ່າວແລະກ່າວຕາມຄຳກ່າວເຊັ່ນນັ້ນ ຈະບໍ່ເຖິງຂໍ້ຕິຕຽນຫລືໜໍ?

ຊີວົກ! ຊົນເຫລົ່າໃດກ່າວຢ່າງນີ້ວ່າ ຊົນທັງຫລາຍຍ່ອມຂ້າສັຕເຈາະຈົງພຣະສະມະນະໂຄດົມ ພຣະສະມະນະໂຄດົມຊົງຊາບຂໍ້ນັ້ນຢູ່ ຍັງສເວີຍເນື້ອທີ່ເຂົາທຳສະເພາະຕົນ ອາສັຍຕົນທຳ ດັ່ງນີ້ ຊົນເຫລົ່ານັ້ນບໍ່ຊື່ວ່າກ່າວຕົງຕາມຄຳທີ່ເຮົາກ່າວ ຊື່ວ່າກ່າວຕູ່ເຮົາດ້ວຍຄຳອັນບໍ່ເປັນຈິງ.

ຊີວົກ! ເຮົາກ່າວເນື້ອວ່າເປັນຂອງບໍ່ຄວນບໍຣິໂພຄດ້ວຍເຫຕ ໓ ປະການ ຄື **ເນື້ອທີ່ຕົນເຫັນ, ເນື້ອທີ່ຕົນໄດ້ຍິນ, ເນື້ອທີ່ຕົນສົງສັຍ***(ໂຂ ອະຫັງ ຊີວະກະ ຖານານິ ມັງສັງ ອັປປະຣິໂພຄັນຕິ ວະທາມິ ທິຕຖັງ ສຸຕັງ ປະຣິສັງກິຕັງ).* ຊີວົກ ເຮົາກ່າວເນື້ອວ່າເປັນຂອງບໍ່ຄວນບໍຣິໂພຄດ້ວຍເຫຕ ໓ ປະການນີ້ແລ.

ຊີວົກ! ເຮົາກ່າວເນື້ອວ່າເປັນຂອງຄວນບໍຣິໂພຄດ້ວຍເຫຕ ໓ ປະການ ຄື ເນື້ອທີ່ຕົນບໍ່ໄດ້ເຫັນ, ເນື້ອທີ່ຕົນບໍ່ໄດ້ຍິນ, ເນື້ອທີ່ຕົນບໍ່ໄດ້ສົງສັຍ*(ໂຂ ອະຫັງ ຊີວະກະ ຕີເນຫີ ມັງສັງ ປະຣິໂພຄັນຕິ ວະທາມິ ອະທິຕຖັງ ອະສຸຕັງ ອະປະຣິສັງກິຕັງ).* ຊີວົກ ເຮົາກ່າວເນື້ອວ່າເປັນຂອງຄວນບໍຣິໂພຄດ້ວຍເຫຕ ໓ ປະການນີ້ແລ.

ຊີວົກ! ພິກຂຸໃນທັມວິນັຍນີ້ ອາສັຍບ້ານຫລືນິຄົມແຫ່ງໃດແຫ່ງໜຶ່ງຢູ່ ເຂົາມີໃຈປະກອບດ້ວຍເມຕຕາ ແຜ່ໄປຕະຫລອດທິສທີໜຶ່ງຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງ ທົ່ວສັຕທຸກເຫລົ່າ ໃນທີ່ທຸກສະຖານ ດ້ວຍໃຈປະກອບດ້ວຍເມຕຕາອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທຢູ່ ຄະຫະບໍດີຫລືບຸຕຂອງຄະຫະບໍດີເຂົ້າໄປຫາເຂົາແລ້ວນິມົນສັນອາຫານໃນຕອນເຊົ້າມື້ອື່ນ.

ຊີວົກ! ເມື່ອພິກຂຸຫວັງຢູ່ ກໍຮັບນິມົນ ພໍຜ່ານຣາຕຣີນັ້ນໄປເວລາເຊົ້າພິກຂຸນັ້ນນຸ່ງຫົ່ມແລ້ວຖືບາຕແລະຈີວອຣເຂົ້າໄປຍັງນິເວສນ໌ຂອງຄະຫະບໍດີຫລືບຸຕຂອງຄະຫະບໍດີ ແລ້ວນັ່ງລົງໃນອາສະນະທີ່ເຂົາປູໄວ້ ຄະຫະບໍດີຫລືບຸຕຂອງຄະຫະບໍດີນັ້ນ ຖວາຍອາຫານເຂົາດ້ວຍບິນທະບາຕອັນປະ

ນິຕ ຄວາມຄິດວ່າ ດີໜໍ ຄະຫະບໍດີຫລືບຸຕຂອງຄະຫະບໍດີຜູ້ນີ້ ຖວາຍອາຫານເຮົາດ້ວຍບິນທະບາຕອັນປະນີຕ ດັ່ງນີ້ ຍ່ອມບໍ່ມີແກ່ເຂົາ ແມ່ນແຕ່ຄວາມຄິດວ່າ ໂອໜໍ ຄະຫະບໍດີຫລືບຸຕຂອງຄະຫະບໍດີຜູ້ນີ້ ຄວນຖວາຍອາຫານເຮົາດ້ວຍບິນທະບາຕອັນປະນີຕເຊັ່ນນີ້ໃນຄັ້ງຕໍ່ໄປ ດັ່ງນີ້ ກໍບໍ່ມີແກ່ເຂົາ ເຂົາບໍ່ກຳນັດ ບໍ່ມົວເມົາ ບໍ່ຟ້າວກືນບິນທະບາຕນັ້ນ ມີປົກກະຕິເຫັນໂທສ ມີປັນຍາເປັນເຄື່ອງສະລັດອອກ ບໍຣິໂພຄຢູ່.

ຊີວົກ! ທ່ານຈະສຳຄັນຄວາມຂໍ້ນັ້ນວ່າຢ່າງໃດ? ສມັຍນັ້ນ ພິກຂຸນັ້ນ ຍ່ອມຄິດເພື່ອບຽດບຽນຕົນ ຄິດເພື່ອບຽດບຽນຜູ້ອື່ນ ຫລືຄິດເພື່ອບຽດບຽນທັງສອງຝ່າຍຫລືໜໍ?

*ບໍ່ເປັນເຊັ່ນນັ້ນ ພຣະອົງຄ໌ຜູ້ຈະເຣີນ!*

ຊີວົກ! ສມັຍນັ້ນ ພິກຂຸນັ້ນຊື່ວ່າ ສັນອາຫານອັນບໍ່ມີໂທສບໍ່ແມ່ນຫລື?

*ເປັນເຊັ່ນນັ້ນ ພຣະອົງຄ໌ຜູ້ຈະເຣີນ!*

*ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍໄດ້ຟັງມາວ່າ ພຣົມມີປົກກະຕິຢູ່ດ້ວຍເມຕຕາ ຄຳນັ້ນເປັນຄຳທີ່ຂ້ານ້ອຍໄດ້ຟັງມາ ຄຳ*

*ນີ້ພຣະຜູ້ມີພຣະພາຄເປັນອົງຄ໌ພະຍານປາກົຕແລ້ວ ດ້ວຍວ່າ ພຣະຜູ້ມີພຣະພາຄຊົງມີປົກກະຕິຢູ່ດ້ວຍເມຕຕາ.*

ຊີວົກ! ບຸຄຄົລຍ່ອມມີຄວາມພະຍາບາທ ເພາະຣາຄະ ໂທສະ ໂມຫະໃດ, ຣາຄະ ໂທສະ ໂມຫະນັ້ນ ຕະຖາຄົຕ ລະໄດ້ແລ້ວ ມີມູລອັນຂາດແລ້ວ ເປັນເໝືອນຕານຍອດດ້ວນ ເຖິງຄວາມບໍ່ມີ ມີອັນບໍ່ເກີດອີກຕໍ່ໄປເປັນທັມມະດາ.

ຊີວົກ! ຖ້າທ່ານກ່າວໂດຍໝາຍເອົາການລະຣາຄະ ໂທສະ ໂມຫະເປັນຕົ້ນນີ້ ເຮົາອະນຸຍາດການກ່າວເຊັ່ນນັ້ນແກ່ທ່ານ.

*ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍກ່າວໂດຍໝາຍເອົາການລະຣາຄະ ໂທສະ ໂມຫະ ເປັນຕົ້ນນີ້.*

ຊີວົກ! ພິກຂຸໃນທັມວິນັຍນີ້ ອາສັຍບ້ານຫລືນິຄົມແຫ່ງໃດແຫ່ງໜຶ່ງຢູ່ ເຂົາມີໃຈປະກອບດ້ວຍກະຣຸນາ ແຜ່ໄປຕະຫລອດທິສທີໜຶ່ງຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງ ທົ່ວສັຕທຸກເຫລົ່າ ໃນທີ່ທຸກສະຖານ ດ້ວຍໃຈປະກອບດ້ວຍກະຣຸນາອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທຢູ່

ຄະຫະບໍດີຫລືບຸຕຂອງຄະຫະບໍດີເຂົ້າໄປຫາເຂົາແລ້ວ ນິມົນສັນອາຫານໃນຕອນເຊົ້າມື້ອື່ນ.

ຊີວົກ! ເມື່ອພິກຂຸຫວັງຢູ່ ກໍຮັບນິມົນ ພໍຜ່ານຣາຕຣີນັ້ນໄປ ເວລາເຊົ້າພິກຂຸນັ້ນນຸ່ງຫົ່ມແລ້ວຖືບາຕແລະຈີວອຣເຂົ້າໄປ ຍັງນິເວສນ໌ຂອງຄະຫະບໍດີຫລືບຸຕຂອງຄະຫະບໍດີ ແລ້ວ ນັ່ງລົງໃນອາສະນະທີ່ເຂົາປູໄວ້ ຄະຫະບໍດີຫລືບຸຕຂອງ ຄະຫະບໍດີນັ້ນ ຖວາຍອາຫານເຂົາດ້ວຍບິນທະບາຕອັນປະ ນີຕ ຄວາມຄິດວ່າ ດີໜໍ ຄະຫະບໍດີຫລືບຸຕຂອງຄະຫະບໍດີ ຜູ້ນີ້ ຖວາຍອາຫານເຮົາດ້ວຍບິນທະບາຕອັນປະນີຕ ດັ່ງນີ້ ຍ່ອມບໍ່ມີແກ່ເຂົາ ແມ່ນແຕ່ຄວາມຄິດວ່າ ໂອໜໍ ຄະຫະບໍດີ ຫລືບຸຕຂອງຄະຫະບໍດີຜູ້ນີ້ ຄວນຖວາຍອາຫານເຮົາດ້ວຍ ບິນທະບາຕອັນປະນີຕເຊັ່ນນີ້ໃນຄັ້ງຕໍ່ໄປ ດັ່ງນີ້ ກໍບໍ່ມີແກ່ ເຂົາ ເຂົາບໍ່ກຳນັດ ບໍ່ມົວເມົາ ບໍ່ຟ້າວກືນບິນທະບາຕນັ້ນ ມີປົກກະຕິເຫັນໂທສ ມີປັນຍາເປັນເຄື່ອງສະລັດອອກ ບໍຣິ ໂພຄຢູ່.

ຊີວົກ! ທ່ານຈະສຳຄັນຄວາມຂໍ້ນັ້ນວ່າຢ່າງໃດ? ສມັຍນັ້ນ ພິກຂຸນັ້ນ ຍ່ອມຄິດເພື່ອບຽດບຽນຕົນ ຄິດເພື່ອບຽດບຽນ ຜູ້ອື່ນ ຫລືຄິດເພື່ອບຽດບຽນທັງສອງຝ່າຍຫລືໜໍ?

*ບໍ່ເປັນເຊັ່ນນັ້ນ ພຣະອົງຄ໌ຜູ້ຈະເຣີນ!*

ຊີວົກ! ສມັຍນັ້ນ ພິກຂຸນັ້ນຊື່ວ່າ ສັນອາຫານອັນບໍ່ມີໂທສບໍ່ແມ່ນຫລື?

*ເປັນເຊັ່ນນັ້ນ ພຣະອົງຄ໌ຜູ້ຈະເຣີນ!*

*ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍໄດ້ຟັງມາວ່າ ພຣົມມີປົກກະຕິຢູ່ດ້ວຍກະຣຸນາ ຄຳນັ້ນເປັນຄຳທີ່ຂ້ານ້ອຍໄດ້ຟັງມາ ຄຳນີ້ພຣະຜູ້ມີພຣະພາຄເປັນອົງຄ໌ພະຍານປາກົຕແລ້ວ ດ້ວຍວ່າພຣະຜູ້ມີພຣະພາຄຊົງມີປົກກະຕິຢູ່ດ້ວຍກະຣຸນາ.*

ຊີວົກ! ບຸຄຄົລຍ່ອມມີຄວາມພະຍາບາທ ເພາະຣາຄະ ໂທສະ ໂມຫະໃດ, ຣາຄະ ໂທສະ ໂມຫະນັ້ນ ຕະຖາຄົຕລະໄດ້ແລ້ວ ມີມູລອັນຂາດແລ້ວ ເປັນເໝືອນຕານຍອດດ້ວນ ເຖິງຄວາມບໍ່ມີ ມີອັນບໍ່ເກີດອີກຕໍ່ໄປເປັນທັມມະດາ.

ຊີວົກ! ຖ້າທ່ານກ່າວໂດຍໝາຍເອົາການລະຣາຄະ ໂທສະໂມຫະເປັນຕົ້ນນີ້ ເຮົາອະນຸຍາດການກ່າວເຊັ່ນນັ້ນແກ່ທ່ານ.

*ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍກ່າວໂດຍໝາຍເອົາການລະຣາຄະ ໂທສະ ໂມຫະ ເປັນຕົ້ນນີ້.*

ຊີວົກ! ພິກຂຸໃນທັມວິນັຍນີ້ ອາສັຍບ້ານຫລືນິຄົມແຫ່ງໃດແຫ່ງໜຶ່ງຢູ່ ເຂົາມີໃຈປະກອບດ້ວຍມຸທິຕາ ແຜ່ໄປຕະຫລອດທິສທີໜຶ່ງຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງ ທົ່ວສັຕທຸກເຫລົ່າ ໃນທີ່ທຸກສະຖານ ດ້ວຍໃຈປະກອບດ້ວຍມຸທິຕາອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທຢູ່ ຄະຫະບໍດີຫລືບຸຕຂອງຄະຫະບໍດີເຂົ້າໄປຫາເຂົາແລ້ວນິມົນສັນອາຫານໃນຕອນເຊົ້າມື້ອື່ນ.

ຊີວົກ! ເມື່ອພິກຂຸຫວັງຢູ່ ກໍຮັບນິມົນ ພໍຜ່ານຣາຕຣີນັ້ນໄປເວລາເຊົ້າພິກຂຸນັ້ນນຸ່ງຫົ່ມແລ້ວຖືບາຕແລະຈີວອຣເຂົ້າໄປຍັງນິເວສນ໌ຂອງຄະຫະບໍດີຫລືບຸຕຂອງຄະຫະບໍດີ ແລ້ວນັ່ງລົງໃນອາສະນະທີ່ເຂົາປູໄວ້ ຄະຫະບໍດີຫລືບຸຕຂອງຄະຫະບໍດີນັ້ນ ຖວາຍອາຫານເຂົາດ້ວຍບິນທະບາຕອັນປະນີຕ ຄວາມຄິດວ່າ ດີໜໍ ຄະຫະບໍດີຫລືບຸຕຂອງຄະຫະບໍດີຜູ້ນີ້ ຖວາຍອາຫານເຮົາດ້ວຍບິນທະບາຕອັນປະນີຕ ດັ່ງນີ້ຍ່ອມບໍ່ມີແກ່ເຂົາ ແມ່ນແຕ່ຄວາມຄິດວ່າ ໂອໜໍ ຄະຫະບໍດີຫລືບຸຕຂອງຄະຫະບໍດີຜູ້ນີ້ ຄວນຖວາຍອາຫານເຮົາດ້ວຍບິນທະບາຕອັນປະນີຕເຊັ່ນນີ້ໃນຄັ້ງຕໍ່ໄປ ດັ່ງນີ້ ກໍບໍ່ມີແກ່ເຂົາ ເຂົາບໍ່ກຳນັດ ບໍ່ມົວເມົາ ບໍ່ຟ້າວກືນບິນທະບາຕນັ້ນ

ມີປີກກະຕິເຫັນໂທສ ມີປັນຍາເປັນເຄື່ອງສະລັດອອກ ບໍຣິໂພຄຢູ່.

ຊີວົກ! ທ່ານຈະສຳຄັນຄວາມຂໍ້ນັ້ນວ່າຢ່າງໃດ? ສມັຍນັ້ນ ພິກຂຸນັ້ນ ຍ່ອມຄິດເພື່ອບຽດບຽນຕົນ ຄິດເພື່ອບຽດບຽນຜູ້ອື່ນ ຫລືຄິດເພື່ອບຽດບຽນທັງສອງຝ່າຍຫລືໜໍ?

*ບໍ່ເປັນເຊັ່ນນັ້ນ ພຣະອົງຄ໌ຜູ້ຈະເຣີນ!*

ຊີວົກ! ສມັຍນັ້ນ ພິກຂຸນັ້ນຊື່ວ່າ ສັນອາຫານອັນບໍ່ມີໂທສບໍ່ແມ່ນຫລື?

*ເປັນເຊັ່ນນັ້ນ ພຣະອົງຄ໌ຜູ້ຈະເຣີນ!*

*ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍໄດ້ຟັງມາວ່າ ພຣົມມີປີກກະຕິຢູ່ດ້ວຍມຸທິຕາ ຄຳນັ້ນເປັນຄຳທີ່ຂ້ານ້ອຍໄດ້ຟັງມາ ຄຳນີ້ພຣະຜູ້ມີພຣະພາຄເປັນອົງຄ໌ພະຍານປາກົຕແລ້ວ ດ້ວຍວ່າພຣະຜູ້ມີພຣະພາຄຊົງມີປີກກະຕິຢູ່ດ້ວຍມຸທິຕາ.*

ຊີວົກ! ບຸຄຄົລຍ່ອມມີຄວາມພະຍາບາທ ເພາະຣາຄະ ໂທສະ ໂມຫະໃດ, ຣາຄະ ໂທສະ ໂມຫະນັ້ນ ຕະຖາຄົຕ

ລະໄດ້ແລ້ວ ມີມູລອັນຂາດແລ້ວ ເປັນເໝືອນຕານຍອດດ້ວນ ເຖິງຄວາມບໍ່ມີ ມີອັນບໍ່ເກີດອີກຕໍ່ໄປເປັນທັມມະດາ.

ຊີວົກ! ຖ້າທ່ານກ່າວໂດຍໝາຍເອົາການລະຣາຄະ ໂທສະໂມຫະເປັນຕົ້ນນີ້ ເຮົາອະນຸຍາດການກ່າວເຊັ່ນນັ້ນແກ່ທ່ານ.

*ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍກ່າວໂດຍໝາຍເອົາການລະຣາຄະ ໂທສະ ໂມຫະ ເປັນຕົ້ນນີ້.*

ຊີວົກ! ພິກຂຸໃນທັມວິນັຍນີ້ ອາສັຍບ້ານຫລືນິຄົມແຫ່ງໃດແຫ່ງໜຶ່ງຢູ່ ເຂົາມີໃຈປະກອບດ້ວຍອຸເປກຂາ ແຜ່ໄປຕະຫລອດທິສທີໜຶ່ງຢູ່ ທິສທີສອງ ທິສທີສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດໂລກທັງປວງ ທົ່ວສັຕທຸກເຫລົ່າ ໃນທີ່ທຸກສະຖານ ດ້ວຍໃຈອັນປະກອບດ້ວຍອຸເປກຂາອັນໄພບູນຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີເວຣ ບໍ່ມີພະຍາບາທຢູ່ຄະຫະບໍດີຫລືບຸຕຂອງຄະຫະບໍດີ ເຂົ້າໄປຫາເຂົາແລ້ວນິມົນສັນອາຫານໃນຕອນເຊົ້າມື້ອື່ນ.

ຊີວົກ! ເມື່ອພິກຂຸຫວັງຢູ່ ກໍຮັບນິມົນ ພໍຜ່ານຣາຕຣີນັ້ນໄປເວລາເຊົ້າພິກຂຸນັ້ນນຸ່ງຫົ່ມແລ້ວຖືບາຕແລະຈີວອຣເຂົ້າໄປ

ຍັງນິເວສນ໌ຂອງຄະຫະບໍດີຫລືບຸດຂອງຄະຫະບໍດີ ແລ້ວນັ່ງລົງໃນອາສະນະທີ່ເຂົາປູໄວ້ ຄະຫະບໍດີຫລືບຸດຂອງຄະຫະບໍດີນັ້ນ ຖວາຍອາຫານເຂົາດ້ວຍບິນທະບາດອັນປະນີດ ຄວາມຄິດວ່າ ດີໜໍ ຄະຫະບໍດີຫລືບຸດຂອງຄະຫະບໍດີຜູ້ນີ້ ຖວາຍອາຫານເຮົາດ້ວຍບິນທະບາດອັນປະນີດ ດັ່ງນີ້ ຍ່ອມບໍ່ມີແກ່ເຂົາ ແມ່ນແຕ່ຄວາມຄິດທີ່ວ່າ ໂອໜໍ ຄະຫະບໍດີຫລືບຸດຂອງຄະຫະບໍດີຜູ້ນີ້ ຄວນຖວາຍອາຫານເຮົາດ້ວຍບິນທະບາດອັນປະນີດເຊັ່ນນີ້ໃນຄັ້ງຕໍ່ໄປ ດັ່ງນີ້ ກໍບໍ່ມີແກ່ເຂົາ ເຂົາບໍ່ກຳນັດ ບໍ່ມົວເມົາ ບໍ່ຟ້າວກືນບິນທະບາດນັ້ນ ມີປົກກະຕິເຫັນໂທສ ມີປັນຍາເປັນເຄື່ອງສະລັດອອກບໍຣິໂພຄຢູ່.

ຊີວົກ! ທ່ານຈະສຳຄັນຄວາມຂໍ້ນັ້ນວ່າຢ່າງໃດ ສມັຍນັ້ນພິກຂຸນັ້ນຍ່ອມຄິດເພື່ອບຽດບຽນຕົນ ຄິດເພື່ອບຽດບຽນຜູ້ອື່ນ ຫລືຄິດເພື່ອບຽດບຽນທັງສອງຝ່າຍຫລືໜໍ?

*ບໍ່ເປັນເຊັ່ນນັ້ນ ພຣະອົງຄ໌ຜູ້ຈະເຣີນ!*

ຊີວົກ! ສມັຍນັ້ນ ພິກຂຸນັ້ນຊື່ວ່າ ສັນອາຫານອັນບໍ່ມີໂທສບໍ່ແມ່ນຫລື?

*ເປັນເຊັ່ນນັ້ນ ພຣະອົງຄ໌ຜູ້ຈະເຣີນ!*

*ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍໄດ້ຟັງມາວ່າ ພຣົມມີປີກາະຕິຢູ່ດ້ວຍອຸເປກຂາ ຄຳນັ້ນເປັນຄຳທີ່ຂ້ານ້ອຍໄດ້ຟັງມາ ຄຳນີ້ພຣະຜູ້ມີພຣະພາຄເປັນອົງຄ໌ພະຍານປາກົຕແລ້ວ ດ້ວຍວ່າພຣະຜູ້ມີພຣະພາຄຊົງມີປີກາະຕິຢູ່ດ້ວຍອຸເປກຂາ.*

ຊີວົກ! ບຸຄຄົລຍ່ອມມີຄວາມພະຍາບາທ ເພາະຣາຄະ ໂທສະ ໂມຫະໃດ, ຣາຄະ ໂທສະ ໂມຫະນັ້ນ ຕະຖາຄົຕລະໄດ້ແລ້ວ ເປັນເໝືອນຕານຍອດດ້ວນ ມີມູລອັນຂາດແລ້ວ ເຖິງຄວາມບໍ່ມີ ມີອັນບໍ່ເກີດອີກຕໍ່ໄປເປັນທັມມະດາ.

ຊີວົກ! ຖ້າທ່ານກ່າວໂດຍໝາຍເອົາການລະຣາຄະ ໂທສະ ໂມຫະ ເປັນຕົ້ນນີ້ ເຮົາອະນຸຍາດການກ່າວເຊັ່ນນັ້ນແກ່ທ່ານ.

*ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍກ່າວໂດຍໝາຍເອົາການລະຣາຄະ ໂທສະ ໂມຫະ ເປັນຕົ້ນນີ້.*

ຊີວົກ! ຜູ້ໃດຂ້າສັຕເຈາະຈົງຕະຖາຄົຕ ຫລືສາວົກຂອງຕະຖາຄົຕ ຜູ້ນັ້ນຍ່ອມປະສົບກັບສິ່ງທີ່ບໍ່ເປັນບຸນຍ໌ເປັນອັນມາກດ້ວຍເຫຕ ໕ ປະການຄື:

ຜູ້ນັ້ນກ່າວຢ່າງນີ້ວ່າ ທ່ານທັງຫລາຍຈົ່ງໄປນຳສັຕຊື່ນັ້ນມາ ດັ່ງນີ້ ຊື່ວ່າຍ່ອມປະສົບກັບສິ່ງທີ່ບໍ່ເປັນບຸນຍ໌ເປັນອັນມາກ ດ້ວຍເຫຕປະການທີ ໑ ນີ້

ສັຕນັ້ນເມື່ອຖືກເຂົາຜູກຄໍນຳມາ ໄດ້ສເວີຍທຸກຂ໌ ໂທມະນັສ ຊື່ວ່າຍ່ອມປະສົບກັບສິ່ງທີ່ບໍ່ເປັນບຸນຍ໌ເປັນອັນມາກ ດ້ວຍເຫຕປະການທີ ໒ ນີ້

ຜູ້ນັ້ນກ່າວຢ່າງນີ້ວ່າ ທ່ານທັງຫລາຍຈົ່ງໄປຂ້າສັຕນີ້ ຊື່ວ່າຍ່ອມປະສົບກັບສິ່ງທີ່ບໍ່ເປັນບຸນຍ໌ເປັນອັນມາກດ້ວຍເຫຕປະການທີ ໓ ນີ້

ສັຕນັ້ນເມື່ອຖືກເຂົາກຳລັງຂ້າຢູ່ ຍ່ອມສເວີຍທຸກຂ໌ ໂທມະນັສ ຊື່ວ່າຍ່ອມປະສົບກັບສິ່ງທີ່ບໍ່ເປັນບຸນຍ໌ເປັນອັນມາກ ດ້ວຍເຫຕປະການທີ ໔ ນີ້

ຜູ້ນັ້ນຍ່ອມຍັງຕະຖາຄົຕແລະສາວົກຂອງຕະຖາຄົຕໃຫ້ຍິນດີດ້ວຍເນື້ອອັນເປັນອະກັປປິຍະ ຊື່ວ່າຍ່ອມປະສົບກັບສິ່ງທີ່ບໍ່ເປັນບຸນຍ໌ເປັນອັນມາກດ້ວຍເຫຕປະການທີ ໕ ນີ້

ຊີວົກ! ຜູ້ໃດຂ້າສັຕເຈາະຈົງຕະຖາຄົຕ ຫລືສາວົກຂອງຕະຖາຄົຕ ຜູ້ນັ້ນຍ່ອມປະສົບກັບສິ່ງທີ່ບໍ່ເປັນບຸນຍ໌ເປັນອັນມາກດ້ວຍເຫຕ ໕ ປະການນີ້ແລ.

ເມື່ອພຣະຜູ້ມີພຣະພາຄຕຣັສຢ່າງນີ້ແລ້ວ ຊີວົກໂກມາຣະພັຈໄດ້ກຣາບທູລພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ໜ້າອັສສະຈັນຍ໌!

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ບໍ່ເຄີຍມີ!

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ພິກຂຸທັງຫລາຍຍ່ອມສັນອາຫານອັນບໍ່ມີໂທສໜໍ.

ຂ້າແຕ່ພຣະອົງ໌ຜູ້ຈະເຣີນ! ພາສິຕຂອງພຣະອົງຄ໌ແຈ່ມແຈ້ງຫລາຍ ຂ້າແຕ່ພຣະອົງ໌ຜູ້ຈະເຣີນ ພາສິຕຂອງພຣະອົງຄ໌ແຈ່ມແຈ້ງຫລາຍ ປຽບເໝືອນບຸຄຄົລຫງາຍຂອງທີ່ຂວ້ຳ ເປີດຂອງທີ່ປິດ ບອກທາງແກ່ຄົນຫລົງທາງ ຫລືສ່ອງປະທີບໃນທີ່ມືດດ້ວຍຄິດວ່າ ຜູ້ມີຈັກຂຸຈັກເຫັນຮູປ ສັນໃດ; ພຣະຜູ້ມີພຣະພາຄຊົງປະກາສທັມໂດຍອະເນກປະຣິຍາຍ ສັນນັ້ນເໝືອນກັນ.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍຂໍເຖິງພຣະຜູ້ມີພຣະພາຄພຣະທັມ ແລະພຣະພິກຂຸສົງຄ໌ວ່າເປັນສະຣະນະ ຂໍພຣະຜູ້

ມີພຣະພາຄຊົງຈຳຂ້ານ້ອຍວ່າ ເປັນອຸປາສົກຜູ້ເຖິງສະຣະນະ ຕະຫລອດຊີວິຕຕັ້ງແຕ່ວັນນີ້ເປັນຕົ້ນໄປ ດັ່ງນີ້.

---

*ມັຊຊິມະນິກາຍ ມັຊຊິມະປັນນາສກ໌ ໑໓/໔໔-໔໕/໕໖-໖໑*



# ລັກສະນະຂອງບຸຄຄົລທີ່ມີທະມະແລະອຸປະສະມະ

*ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ພຣະວິຫາຣເຊຕະວັນ ອາຣາມຂອງທ່ານອະນາຖະບິນດິກະເສດຖີ ເຂດພຣະນະຄອຣ ສາວັຕຖີ ໃນຄັ້ງນັ້ນ ທ່ານພຣະປຸນນະອອກຈາກທີ່ຫລີກເຣັ້ນໃນຕອນແລງ ທ່ານໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຖວາຍອະພິວາທພຣະຜູ້ມີພຣະພາຄແລ້ວ ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ແລ້ວໄດ້ກຣາບທູລພຣະຜູ້ມີພຣະພາຄດັ່ງນີ້ວ່າ:*

*ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂໍພຣະຜູ້ມີພຣະພາຄໂປດສັ່ງສອນຂ້ານ້ອຍດ້ວຍໂອວາທຫຍໍ້ໆດ້ວຍເຖີດຂ້ານ້ອຍ ເມື່ອຂ້ານ້ອຍໄດ້ສະດັບໃນທັມຂອງພຣະຜູ້ມີພຣະພາຄແລ້ວ ຈະເປັນຜູ້ຫລີກໄປຢູ່ຜູ້ດຽວ ບໍ່ປະມາທ ມີຄວາມພຽນ ມີຕົນສົ່ງໄປໃນທັມຢູ່.*

ປຸນນະ! ຖ້າຢ່າງນັ້ນ ເຈົ້າຈົ່ງຟັງ ຈົ່ງໃສ່ໃຈໃຫ້ດີ ເຮົາຈັກກ່າວ;

*ໂດຍ ພຣະອົງຄ໌ຜູ້ຈະເຣີນ!*

ປຸນນະ! ຮູບທີ່ຮູ້ໄດ້ດ້ວຍຕາ ອັນໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ອັນເປັນທີ່ຮັກໃຄ່ພໍໃຈ ປະກອບດ້ວຍກາມ ເປັນທີ່ຕັ້ງແຫ່ງຄວາມກຳນັດ ຖ້າພິກຂຸເພີດເພີນ ພໍ່າສັນລະເສີນ ຫລົງມົວເມົາໃນຮູບນັ້ນ ນັນທິຍ່ອມເກີດແກ່ບຸຄຄົລຜູ້ເພີດເພີນ ພໍ່າສັນລະເສີນ ຫລົງມົວເມົາໃນຮູບນັ້ນ ເພາະນັນທິເກີດ ເຮົາກ່າວວ່າ ທຸກຂ໌ເກີດນະ ປຸນນະ.

ປຸນນະ! ສຽງທີ່ຮູ້ໄດ້ດ້ວຍໂສຕະ ອັນໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ອັນເປັນທີ່ຮັກໃຄ່ພໍໃຈ ປະກອບດ້ວຍກາມ ເປັນທີ່ຕັ້ງແຫ່ງຄວາມກຳນັດ ຖ້າພິກຂຸເພີດເພີນ ພໍ່າສັນລະເສີນ ຫລົງມົວເມົາໃນສຽງນັ້ນ ນັນທິຍ່ອມເກີດແກ່ບຸຄຄົລຜູ້ເພີດເພີນ ພໍ່າສັນລະເສີນ ຫລົງມົວເມົາໃນສຽງນັ້ນ ເພາະນັນທິເກີດ ເຮົາກ່າວວ່າ ທຸກຂ໌ເກີດນະ ປຸນນະ.

ປຸນນະ! ກິ່ນທີ່ຮູ້ໄດ້ດ້ວຍຄານະ ອັນໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ອັນເປັນທີ່ຮັກໃຄ່ພໍໃຈ ປະກອບດ້ວຍກາມ ເປັນທີ່ຕັ້ງແຫ່ງຄວາມກຳນັດ ຖ້າພິກຂຸເພີດເພີນ ພໍ່າ

ສັນລະເສີນ ຫລົງມົວເມົາໃນກິ່ນນັ້ນ ນັນທິຍ່ອມເກີດແກ່ບຸຄຄົລຜູ້ເພີດເພີນ ພ່ຳສັນລະເສີນ ຫລົງມົວເມົາໃນກິ່ນນັ້ນ ເພາະນັນທິເກີດ ເຮົາກ່າວວ່າ ທຸກຂ໌ເກີດນະ ປຸນນະ.

ປຸນນະ! ຣົສທີ່ຮູ້ໄດ້ດ້ວຍຊິວຫາ ອັນໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ອັນເປັນທີ່ຮັກໃຄ່ພໍໃຈ ປະກອບດ້ວຍກາມ ເປັນທີ່ຕັ້ງແຫ່ງຄວາມກຳນັດ ຖ້າພິກຂຸເພີດເພີນ ພ່ຳສັນລະເສີນ ຫລົງມົວເມົາໃນຣົສນັ້ນ ນັນທິຍ່ອມເກີດແກ່ບຸຄຄົລຜູ້ເພີດເພີນ ພ່ຳສັນລະເສີນ ຫລົງມົວເມົາໃນຣົສນັ້ນ ເພາະນັນທິເກີດ ເຮົາກ່າວວ່າ ທຸກຂ໌ເກີດນະ ປຸນນະ.

ປຸນນະ! ໂຜຕຖັພພະທີ່ຮູ້ໄດ້ດ້ວຍກາຍ ອັນໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ອັນເປັນທີ່ຮັກໃຄ່ພໍໃຈ ປະກອບດ້ວຍກາມ ເປັນທີ່ຕັ້ງແຫ່ງຄວາມກຳນັດ ຖ້າພິກຂຸເພີດເພີນ ພ່ຳສັນລະເສີນ ຫລົງມົວເມົາໃນໂຜຕຖັພພະນັ້ນ ນັນທິຍ່ອມເກີດແກ່ບຸຄຄົລຜູ້ເພີດເພີນ ພ່ຳສັນລະເສີນ ຫລົງມົວເມົາໃນໂຜຕຖັພພະນັ້ນ ເພາະນັນທິເກີດ ເຮົາກ່າວວ່າ ທຸກຂ໌ເກີດນະ ປຸນນະ.

ປຸນນະ! ທັມມາຣົມທີ່ຮູ້ໄດ້ດ້ວຍໃຈ ອັນໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ອັນເປັນທີ່ຮັກໃຄ່ພໍໃຈ ປະກອບດ້ວຍກາມ ເປັນທີ່ຕັ້ງແຫ່ງຄວາມກຳນັດ ຖ້າພິກຂຸເພີດເພີນ ພ່ຳ

ສັນລະເສີນ ຫລົງມົວເມົາໃນທັມມາຣົມນັ້ນ ນັນທິຍ່ອມເກີດແກ່ບຸຄຄົລຜູ້ເພີດເພີນ ພໍ່າສັນລະເສີນ ຫລົງມົວເມົາໃນທັມມາຣົມນັ້ນ ເພາະນັນທິເກີດ ເຮົາກ່າວວ່າ ທຸກຂ໌ເກີດນະ ປຸນນະ.

ປຸນນະ! ຣູປທີ່ຮູ້ໄດ້ດ້ວຍຕາ ອັນໜ້າປາຖນາ ໜ້າຮັກໃຄ່ໜ້າພໍໃຈ ອັນເປັນທີ່ຮັກໃຄ່ພໍໃຈ ປະກອບດ້ວຍກາມ ເປັນທີ່ຕັ້ງແຫ່ງຄວາມກຳນັດ ຖ້າພິກຂຸບໍ່ເພີດເພີນ ບໍ່ພໍ່າສັນລະເສີນ ບໍ່ຫລົງມົວເມົາໃນຣູປນັ້ນ ນັນທິຂອງຜູ້ບໍ່ເພີດເພີນ ບໍ່ພໍ່າສັນລະເສີນ ບໍ່ຫລົງມົວເມົາໃນຣູປນັ້ນຍ່ອມດັບໄປ ເຮົາກ່າວວ່າ ທຸກຂ໌ດັບນະ ປຸນນະ.

ປຸນນະ! ສຽງທີ່ຮູ້ໄດ້ດ້ວຍໂສຕະ ອັນໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ອັນເປັນທີ່ຮັກໃຄ່ພໍໃຈ ປະກອບດ້ວຍກາມເປັນທີ່ຕັ້ງແຫ່ງຄວາມກຳນັດ ຖ້າພິກຂຸບໍ່ເພີດເພີນ ບໍ່ພໍ່າສັນລະເສີນ ບໍ່ຫລົງມົວເມົາໃນສຽງນັ້ນ ນັນທິຂອງຜູ້ບໍ່ເພີດເພີນ ບໍ່ພໍ່າສັນລະເສີນ ບໍ່ຫລົງມົວເມົາໃນສຽງນັ້ນຍ່ອມດັບໄປ ເຮົາກ່າວວ່າ ທຸກຂ໌ດັບນະ ປຸນນະ.

ປຸນນະ! ກິ່ນທີ່ຮູ້ໄດ້ດ້ວຍຄານະ ອັນໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ອັນເປັນທີ່ຮັກໃຄ່ພໍໃຈ ປະກອບດ້ວຍກາມເປັນທີ່ຕັ້ງແຫ່ງຄວາມກຳນັດ ຖ້າພິກຂຸບໍ່ເພີດເພີນ ບໍ່ພໍ່າ

ສັນລະເສີນ ບໍ່ຫລົງມົວເມົາໃນກິ່ນນັ້ນ ນັນທິຂອງຜູ້ບໍ່ເພີດເພີນ ບໍ່ພ່ຳສັນລະເສີນ ບໍ່ຫລົງມົວເມົາໃນກິ່ນນັ້ນ ຍ່ອມດັບໄປ ເຮົາກ່າວວ່າ ທຸກຂ໌ດັບນະ ປຸນນະ.

ປຸນນະ! ຣົສທີ່ຮູ້ໄດ້ດ້ວຍຊິວຫາ ອັນໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ອັນເປັນທີ່ຮັກໃຄ່ພໍໃຈ ປະກອບດ້ວຍການ ເປັນທີ່ຕັ້ງແຫ່ງຄວາມກຳນັດ ຖ້າພິກຂຸບໍ່ເພີດເພີນ ບໍ່ພ່ຳສັນລະເສີນ ບໍ່ຫລົງມົວເມົາໃນຣົສນັ້ນ ນັນທິຂອງຜູ້ບໍ່ເພີດເພີນ ບໍ່ພ່ຳສັນລະເສີນ ບໍ່ຫລົງມົວເມົາໃນຣົສນັ້ນ ຍ່ອມດັບໄປ ເຮົາກ່າວວ່າ ທຸກຂ໌ດັບນະ ປຸນນະ.

ປຸນນະ! ໂຜຕຖັພພະທີ່ຮູ້ໄດ້ດ້ວຍກາຍ ອັນໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ອັນເປັນທີ່ຮັກໃຄ່ພໍໃຈ ປະກອບດ້ວຍການ ເປັນທີ່ຕັ້ງແຫ່ງຄວາມກຳນັດ ຖ້າພິກຂຸບໍ່ເພີດເພີນ ບໍ່ພ່ຳສັນລະເສີນ ບໍ່ຫລົງມົວເມົາໃນໂຜຕຖັພພະນັ້ນ ນັນທິຂອງຜູ້ບໍ່ເພີດເພີນ ບໍ່ພ່ຳສັນລະເສີນ ບໍ່ຫລົງມົວເມົາໃນໂຜຕຖັພພະນັ້ນ ຍ່ອມດັບໄປ ເຮົາກ່າວວ່າ ທຸກຂ໌ດັບນະ ປຸນນະ.

ປຸນນະ! ທັມມາຣົມທີ່ຮູ້ໄດ້ດ້ວຍໃຈ ອັນໜ້າປາຖນາ ໜ້າຮັກໃຄ່ ໜ້າພໍໃຈ ອັນເປັນທີ່ຮັກໃຄ່ພໍໃຈ ປະກອບດ້ວຍການ ເປັນທີ່ຕັ້ງແຫ່ງຄວາມກຳນັດ ຖ້າພິກຂຸບໍ່ເພີດເພີນ ບໍ່

ພໍ່າສັນລະເສີນ ບໍ່ຫລົງມົວເມົາໃນທັມມາຣົມນັ້ນ ນັນທິຂອງຜູ້ບໍ່ເພີດເພີນ ບໍ່ພໍ່າສັນລະເສີນ ບໍ່ຫລົງມົວເມົາໃນທັມມາຣົມນັ້ນ ຍ່ອມດັບໄປ ເຮົາກ່າວວ່າ ທຸກຂ໌ດັບນະປຸນນະ.

ປຸນນະ! ເມື່ອເຮົາໄດ້ກ່າວສອນເຈົ້າດ້ວຍໂອວາທອັນຫຍໍ້ໆນີ້ແລ້ວ ເຈົ້າຈະໄປຢູ່ໃນຊົນບົທໃດ?

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ເມື່ອພຣະຜູ້ມີພຣະພາຄຊົງກ່າວສອນດ້ວຍໂອວາທຫຍໍ້ໆນີ້ແລ້ວ ຂ້ານ້ອຍຈະໄປອາສັຍຢູ່ທີ່ສຸນາປະຣັນຕະຊົນບົທ.

ປຸນນະ! ພວກມະນຸສຊາວສຸນາປະຣັນຕະຊົນບົທນັ້ນໂຫດຮ້າຍຫຍາບຄາຍຫລາຍ ຖ້າພວກມະນຸສຊາວສຸນາປະຣັນຕະຊົນບົທດ່າວ່າ ບໍຣິພາສເຈົ້າ ເຈົ້າຈັກມີຄວາມຄິດຢ່າງໃດໃນໝູ່ມະນຸສພວກນັ້ນ?

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຖ້າພວກມະນຸສຊາວສຸນາປະຣັນຕະຊົນບົທດ່າວ່າ ບໍຣິພາສຂ້ານ້ອຍ ຂ້ານ້ອຍຈັກມີຄວາມຄິດຢ່າງນີ້ວ່າ **ຍັງດີໜໍ ທີ່ພວກມະນຸສຊາວສຸນາປະຣັນຕະຊົນບົທນີ້ບໍ່ປະຫານເຮົາດ້ວຍຝາມື.**

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍຈັກມີຄວາມຄິດໃນມະນຸສ ພວກນັ້ນຢ່າງນີ້ແລ.

ປຸນນະ! ກໍຖ້າພວກມະນຸສຊາວສຸນາປະຣັນຕະຊົນບົທຈັກ ປະຫານເຈົ້າດ້ວຍຝາມື ເຈົ້າຈັກມີຄວາມຄິດຢ່າງໃດກັບ ມະນຸສພວກນັ້ນ?

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຖ້າພວກມະນຸສຊາວສຸນາປະຣັນຕະ ຊົນບົທຈັກປະຫານຂ້ານ້ອຍດ້ວຍຝາມື ຂ້ານ້ອຍຈັກມີຄວາມຄິດ ໃນພວກເຂົາຢ່າງນີ້ວ່າ **ຍັງດີໜໍ ທີ່ພວກມະນຸສຊາວສຸນາປະ ຣັນຕະຊົນບົທບໍ່ປະຫານເຮົາດ້ວຍກ້ອນດິນ**.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍຈັກມີຄວາມຄິດໃນມະນຸສ ພວກນັ້ນຢ່າງນີ້ແລ.

ປຸນນະ! ກໍຖ້າພວກມະນຸສຊາວສຸນາປະຣັນຕະຊົນບົທຈັກ ປະຫານເຈົ້າດ້ວຍກ້ອນດິນ ເຈົ້າຈັກມີຄວາມຄິດຢ່າງໃດກັບ ມະນຸສພວກນັ້ນ?

ຂ້າແຕ່ພຣະອົງຜູ້ຈະເຣີນ! ຖ້າພວກມະນຸສຊາວສຸນາປະຣັນຕະ ຊົນບົທຈັກປະຫານຂ້ານ້ອຍດ້ວຍກ້ອນດິນ ຂ້ານ້ອຍຈັກມີຄວາມ ຄິດໃນພວກເຂົາຢ່າງນີ້ວ່າ **ຍັງດີໜໍ ທີ່ພວກມະນຸສຊາວສຸນາປະ ຣັນຕະຊົນບົທບໍ່ປະຫານເຮົາດ້ວຍທ່ອນໄມ້**.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍຈັກມີຄວາມຄິດໃນມະນຸສ ພວກນັ້ນຢ່າງນີ້ແລ.

ປຸນນະ! ກໍຖ້າພວກມະນຸສຊາວສຸນາປະຣັນຕະຊົນບົທຈັກ ປະຫານເຈົ້າດ້ວຍທ່ອນໄມ້ ເຈົ້າຈັກມີຄວາມຄິດຢ່າງໃດກັບ ມະນຸສພວກນັ້ນ?

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຖ້າພວກມະນຸສຊາວສຸນາປະຣັນຕະ ຊົນບົທຈັກປະຫານຂ້ານ້ອຍດ້ວຍທ່ອນໄມ້ ຂ້ານ້ອຍຈັກມີຄວາມ ຄິດໃນພວກເຂົາຢ່າງນີ້ວ່າ **ຍັງດີໜໍ ທີ່ພວກມະນຸສຊາວສຸນາປະ ຣັນຕະຊົນບົທບໍ່ປະຫານເຮົາດ້ວຍສັສຕຣາ.**

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍຈັກມີຄວາມຄິດໃນມະນຸສ ພວກນັ້ນຢ່າງນີ້ແລ.

ປຸນນະ! ກໍຖ້າພວກມະນຸສຊາວສຸນາປະຣັນຕະຊົນບົທຈັກ ປະຫານເຈົ້າດ້ວຍສັສຕຣາ ເຈົ້າຈັກມີຄວາມຄິດຢ່າງໃດກັບ ມະນຸສພວກນັ້ນ?

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຖ້າພວກມະນຸສຊາວສຸນາປະຣັນຕະ ຊົນບົທຈັກປະຫານຂ້ານ້ອຍດ້ວຍສັສຕຣາ ຂ້ານ້ອຍຈັກມີຄວາມ ຄິດໃນພວກເຂົາຢ່າງນີ້ວ່າ **ຍັງດີໜໍ ທີ່ພວກມະນຸສຊາວສຸນາປະ ຣັນຕະຊົນບົທບໍ່ປົງຊີວິຕເຮົາດ້ວຍສັສຕຣາອັນຄົມ.**

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍຈັກມີຄວາມຄິດໃນມະນຸສ ພວກນັ້ນຢ່າງນີ້ແລ.

ປຸນນະ! ກໍຖ້າພວກມະນຸສຊາວສຸນາປະຣັນຕະຊົນບົທຈັກ ປົງຊີວິຕເຈົ້າດ້ວຍສັສຕຣາອັນຄົມ ເຈົ້າຈັກມີຄວາມຄິດ ຢ່າງໃດກັບມະນຸສພວກນັ້ນ?

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຖ້າພວກມະນຸສຊາວສຸນາປະຣັນຕະ ຊົນບົທຈັກປົງຊີວິຕຂອງຂ້ານ້ອຍດ້ວຍສັສຕຣາອັນຄົມ ຂ້ານ້ອຍ ຈັກມີຄວາມຄິດໃນພວກເຂົາຢ່າງນີ້ວ່າ **ມີເຫລົ່າສາວົກຂອງພຣະ ຜູ້ມີພຣະພາຄທີ່ອຶດອັດກຽດຊັງຮ່າງກາຍແລະຊີວິຕ ພາກັນ ສະແຫວງຫາສັສຕຣາສັງຫານຊີບຢູ່ ເຮົາບໍ່ຕ້ອງສະແຫວງຫາ ສິ່ງນັ້ນເລີຍ ກໍໄດ້ສັສຕຣາສັງຫານຊີບແລ້ວ.**

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂ້ານ້ອຍຈັກມີຄວາມຄິດໃນມະນຸສ ພວກນັ້ນຢ່າງນີ້ແລ.

**ດີລະ ດີລະ ປຸນນະ! ເຈົ້າເປັນຜູ້ປະກອບດ້ວຍທະມະ ແລະອຸປະສະມະດັ່ງນີ້ແລ້ວ ກໍຈັກສາມາດຢູ່ໃນສຸນາປະ ຣັນຕະຊົນບົທໄດ້ແລ.**

ຄັ້ງນັ້ນແລ ທ່ານພຣະປຸນນະຍິນດີອະນຸໂມທະນາພຣະ ພາສິຕຂອງພຣະຜູ້ມີພຣະພາຄແລ້ວ ລຸກຈາກອາສະນະ

ອະພິວາທພຣະຜູ້ມີພຣະພາຄແລ້ວກະທຳປະທັກຂິນ ແລ້ວເກັບອາສະນະ ຖືບາຕແລະຈີວອຣເດີນທາງຈາຣິກໄປຍັງສຸນາປະຣັນຕະຊົນບົທ ເມື່ອຈາຣິກໄປໂດຍລຳດັບກໍໄດ້ໄປເຖິງສຸນາປະຣັນຕະຊົນບົທ.

ໃນສມັຍທີ່ທ່ານພຣະປຸນນະຢູ່ໃນສຸນາປະຣັນຕະຊົນບົທນັ້ນ ທ່ານພຣະປຸນນະໄດ້ໃຫ້ພວກມະນຸສຊາວສຸນາປະຣັນຕະຊົນບົທສະແດງຕົນເປັນອຸປາສົກປະມານ ໕໐໐ ຄົນ ພາຍໃນພັນສານັ້ນ ສະແດງຕົນເປັນອຸປາສິກາປະມານ ໕໐໐ ຄົນ ພາຍໃນພັນສານັ້ນ ແລະຕົວທ່ານກໍໄດ້ທຳໃຫ້ແຈ້ງເຊິ່ງວິຊຊາ ໓ ພາຍໃນພັນສານັ້ນເໝືອນກັນ ຄັນສມັຍຕໍ່ມາ ທ່ານກໍໄດ້ປະຣິນິພພານ.

ຄັ້ງນັ້ນແລ ພິກຂຸຈຳນວນຫລາຍເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ອະພິວາທພຣະຜູ້ມີພຣະພາຄແລ້ວ ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ຄັນນັ່ງຮຽບຮ້ອຍແລ້ວ ໄດ້ທູລຖາມພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ກຸລະບຸຕຊື່ປຸນນະທີ່ພຣະຜູ້ມີພຣະພາຄຊົງສັ່ງສອນດ້ວຍໂອວາທຫຍໍ້ໆນັ້ນ ທຳກາລະເສຍແລ້ວ ຄະຕິຂອງເຂົາເປັນຢ່າງໃດ ສັມປະຣາຍະພົບຂອງເຂົາເປັນຢ່າງໃດ?

**ພິກຂຸທັງຫລາຍ! ປຸນນະກຸລະບຸຕເປັນບັນດິຕ ໄດ້ບັນລຸທັມ ສົມຄວນແກ່ທັມແລ້ວ ທັງບໍ່ເຮັດໃຫ້ເຮົາລຳບາກເພາະເຫຕ ແຫ່ງການສະແດງທັມ.**

**ພິກຂຸທັງຫລາຍ! ປຸນນະກຸລະບຸຕປະຣິນິພພານແລ້ວ.**

ເມື່ອພຣະຜູ້ມີພຣະພາຄໄດ້ຕຣັສພຣະພາສິຕນີ້ແລ້ວ ພິກຂຸ ເຫລົ່ານັ້ນຕ່າງຊື່ນຊົມຍິນດີພຣະພາສິຕຂອງພຣະຜູ້ມີພຣະ ພາຄແລ.

---

*ມັຊຊິມະນິກາຍ ອຸປະຣິປັນນາສກ໌ ໑໔/໓໙໑-໓໙໔/໗໕໔-໗໙໓*



## ພຣະນາງສາມາວະດີ
## ຜູ້ມີປົກກະຕິຢູ່ດ້ວຍເມຕຕາ

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ໂຄສິຕາຣາມ ໃກ້ພຣະນະຄອຣໂກສັມພີ ກໍສມັຍນັ້ນ ເມື່ອພຣະເຈົ້າອຸເທນສະເດັຈປະພາສພຣະຣາຊະອຸທິຍານ ພາຍໃນພຣະຣາຊະວັງຖືກໄຟໄໝ້ ຍິງ ໕໐໐ ຄົນ ມີພຣະນາງສາມາວະດີເປັນປະມຸຂໄດ້ທຳກາລະລົງ.

ຄັ້ງນັ້ນເປັນເວລາເຊົ້າ ພິກຂຸຫລາຍອົງຄ໌ດ້ວຍກັນນຸ່ງຮົ່ມແລ້ວ ຖືບາຕແລະຈີວອຣເຂົ້າໄປບິນທະບາຕໃນພຣະນະຄອຣໂກສັມພີ ເມື່ອກັບຈາກບິນທະບາຕໃນພຣະ

ນະຄອຣໂກສັມພິພາຍຫລັງສັນບິນທະບາຕແລ້ວ ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ອະພິວາທແລ້ວນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ໄດ້ທູລຖາມພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂໍປະທານໂອກາສ ເມື່ອພຣະເຈົ້າອຸເທນສະເດັຈປະພາສພຣະຣາຊະອຸທິຍານ ພາຍໃນພຣະຣາຊະວັງຖືກໄຟໄໝ້ ຍິງ ໕໐໐ ຄົນ ມີພຣະນາງສາມາວະດີເປັນປະມຸຂໄດ້ທຳກາລະລົງ; ຄະຕິຂອງອຸປາສິກາເຫລົ່ານັ້ນເປັນຢ່າງໃດ? ພົພໜ້ານັ້ນເປັນແນວໃດ ພຣະອົງຄ໌ຜູ້ຈະເຣີນ?

ພິກຂຸທັງຫລາຍ! ບັນດາອຸປາສິກາເຫລົ່ານັ້ນ ອຸປາສິກາທີ່ເປັນໂສດາບັນມີຢູ່ ເປັນສະກະທາຄາມີມີຢູ່ ເປັນອະນາຄາມີມີຢູ່.

ພິກຂຸທັງຫລາຍ! ອຸປາສິກາທັງໝົດນັ້ນເປັນຜູ້ບໍ່ໄຮ້ຜົລທຳກາລະ.

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງຊາບເນື້ອຄວາມນັ້ນແລ້ວຊົງເປັ່ງອຸທານໃນເວລານັ້ນວ່າ:

**ສັຕໂລກມີໂມຫະເປັນເຄື່ອງຜູກພັນ ຍ່ອມປາກົຕເໝືອນສົມບູນດ້ວຍເຫຕ; ຄົນພາລມີອຸປະທິເປັນເຄື່ອງຜູກພັນ ຖືກຄວາມມືດຫໍ່ຫຸ້ມໄວ້ ຍ່ອມປາກົຕເໝືອນວ່າທ່ຽງຍັ້ງຢືນ; ກິເລສເຄື່ອງກັງວົນ ຍ່ອມບໍ່ມີແກ່ຜູ້ພິຈາຣະນາເຫັນຢູ່.**

*(ພຣະຜູ້ມີພຣະພາຄຊົງສັນລະເສີນພຣະນາງສາມາວະດີວ່າ ເລີດກວ່າອຸປາສິກາສາວິກາຂອງພຣະອົງຄ໌ ຜູ້ມີປົກກະຕິຢູ່ດ້ວຍເມຕຕາ)*

---

*ຂຸທທະກະນິກາຍ ຂຸທທະກະປາຖະ-ທັມມະບົທ-ອຸທານ-ອິຕິວຸຕຕະກະ-ສຸຕຕະນິບາຕ ໒໕/໑໒໑-໑໒໒/໑໕໗*



## ການໂຈດທີ່ເດືອດຮ້ອນແລະບໍ່ເດືອດຮ້ອນ

*ພິກຂຸຜູ້ໂຈດໂດຍບໍ່ເປັນທັມຍ່ອມເຖິງຄວາມເດືອດຮ້ອນ ດ້ວຍອາການເທົ່າໃດໜໍ ພຣະອົງຄ໌ຜູ້ຈະເຣີນ?*

ອຸບາລີ! ພິກຂຸຜູ້ໂຈດໂດຍບໍ່ເປັນທັມຍ່ອມເຖິງຄວາມ ເດືອດຮ້ອນດ້ວຍ ໕ ອາການຄື:

**ເຂົາໂຈດໂດຍກາລອັນບໍ່ຄວນ ບໍ່ໂຈດໂດຍກາລອັນຄວນ ເຂົາຕ້ອງເດືອດຮ້ອນ.**

**ເຂົາໂຈດດ້ວຍເຣື່ອງບໍ່ຈິງ ບໍ່ໂຈດດ້ວຍເຣື່ອງຈິງ ເຂົາຕ້ອງ**

ເດືອດຮ້ອນ.

ເຂົາໂຈດດ້ວຍຄຳຫຍາບ ບໍ່ໂຈດດ້ວຍຄຳສຸພາບ ເຂົາຕ້ອງເດືອດຮ້ອນ.

ເຂົາໂຈດດ້ວຍເຣື່ອງບໍ່ປະກອບດ້ວຍປະໂຍຊນ໌ ບໍ່ໂຈດດ້ວຍເຣື່ອງປະກອບດ້ວຍປະໂຍຊນ໌ ເຂົາຕ້ອງເດືອດຮ້ອນ

ເຂົາໂຈດດ້ວຍຄວາມປະສົງຮ້າຍ ບໍ່ໂຈດດ້ວຍຄວາມມີເມຕຕາຈິຕ ເຂົາຕ້ອງເດືອດຮ້ອນ.

*ພິກຂຸຜູ້ຖືກໂຈດໂດຍບໍ່ເປັນທັມ ບໍ່ຕ້ອງເດືອດຮ້ອນດ້ວຍອາການເທົ່າໃດໜໍ ພຣະອົງຄ໌ຜູ້ຈະເຣີນ?*

ອຸບາລີ! ພິກຂຸຜູ້ຖືກໂຈດໂດຍບໍ່ເປັນທັມ ບໍ່ຕ້ອງເດືອດຮ້ອນດ້ວຍ ໕ ອາການຄື:

ເຂົາຖືກໂຈດໂດຍກາລອັນບໍ່ຄວນ ບໍ່ໂຈດໂດຍກາລອັນຄວນ ເຂົາບໍ່ຕ້ອງເດືອດຮ້ອນ.

ເຂົາຖືກໂຈດດ້ວຍເຣື່ອງບໍ່ຈິງ ບໍ່ໄດ້ຖືກໂຈດດ້ວຍເຣື່ອງຈິງ ເຂົາບໍ່ຕ້ອງເດືອດຮ້ອນ.

**ເຂົາຖືກໂຈດດ້ວຍຄຳຫຍາບ ບໍ່ຖືກໂຈດດ້ວຍຄຳສຸພາບ ເຂົາບໍ່ຕ້ອງເດືອດຮ້ອນ.**

**ເຂົາຖືກໂຈດດ້ວຍເຣື່ອງທີ່ບໍ່ປະກອບດ້ວຍປະໂຍຊນ໌ ບໍ່ຖືກໂຈດດ້ວຍເຣື່ອງທີ່ປະກອບດ້ວຍປະໂຍຊນ໌ ເຂົາບໍ່ຕ້ອງເດືອດຮ້ອນ.**

**ເຂົາຖືກໂຈດດ້ວຍຄວາມປະສົງຮ້າຍ ບໍ່ຖືກໂຈດດ້ວຍຄວາມມີເມຕຕາຈິຕ ເຂົາບໍ່ຕ້ອງເດືອດຮ້ອນ.**

*ພິກຂຸຜູ້ໂຈດໂດຍເປັນທັມ ຍ່ອມເຖິງຄວາມບໍ່ເດືອດຮ້ອນດ້ວຍອາການເທົ່າໃດ ພຣະອົງຄ໌ຜູ້ຈະເຣີນ?*

ອຸບາລີ! ພິກຂຸຜູ້ໂຈດໂດຍເປັນທັມ ຍ່ອມເຖິງຄວາມບໍ່ເດືອດຮ້ອນດ້ວຍ ໕ ອາການຄື:

**ເຂົາໂຈດໂດຍກາລອັນຄວນ ບໍ່ໄດ້ໂຈດໂດຍກາລອັນບໍ່ຄວນ ເຂົາບໍ່ຕ້ອງເດືອດຮ້ອນ.**

**ເຂົາໂຈດດ້ວຍເຣື່ອງຈິງ ບໍ່ໄດ້ໂຈດດ້ວຍເຣື່ອງບໍ່ຈິງ ເຂົາບໍ່ຕ້ອງເດືອດຮ້ອນ.**

**ເຂົາໂຈດດ້ວຍຄຳສຸພາບ ບໍ່ໄດ້ໂຈດດ້ວຍຄຳຫຍາບ ເຂົາບໍ່ຕ້ອງເດືອດຮ້ອນ.**

**ເຂົາໂຈດດ້ວຍເຣື່ອງທີ່ປະກອບດ້ວຍປະໂຍຊນ໌ ບໍ່ໄດ້ໂຈດດ້ວຍເຣື່ອງທີ່ບໍ່ປະກອບດ້ວຍປະໂຍຊນ໌ ເຂົາບໍ່ຕ້ອງເດືອດຮ້ອນ.**

**ເຂົາໂຈດດ້ວຍຄວາມມີເມຕຕາຈິຕ ບໍ່ໄດ້ໂຈດດ້ວຍຄວາມປະສົງຮ້າຍ ເຂົາບໍ່ຕ້ອງເດືອດຮ້ອນ.**

ອຸບາລີ! ພິກຂຸຜູ້ໂຈດໂດຍເປັນທັມ ຍ່ອມເຖິງຄວາມບໍ່ເດືອດຮ້ອນດ້ວຍ ໕ ອາການນີ້ ຂໍ້ນັ້ນເປັນເພາະເຫຕໃດ? ເພາະແມ່ນແຕ່ພິກຂຸອື່ນກໍສຳຄັນວ່າ ຄວນໂຈດດ້ວຍເຣື່ອງຈິງ.

*ກໍພິກຂຸຜູ້ຖືກໂຈດໂດຍທັມຍ່ອມເຖິງຄວາມເດືອດຮ້ອນດ້ວຍອາການເທົ່າໃດ ພຣະອົງຄ໌ຜູ້ຈະເຣີນ?*

ອຸບາລີ! ພິກຂຸຜູ້ຖືກໂຈດໂດຍທັມ ຍ່ອມເຖິງຄວາມເດືອດຮ້ອນດ້ວຍ ໕ ອາການຄື:

**ເຂົາຖືກໂຈດໂດຍກາລອັນຄວນ ບໍ່ໄດ້ຖືກໂຈດໂດຍກາລ**

**ອັນບໍ່ຄວນ ເຂົາຕ້ອງເດືອດຮ້ອນ.**

**ເຂົາຖືກໂຈດດ້ວຍເຣື່ອງຈິງ ບໍ່ໄດ້ຖືກໂຈດດ້ວຍເຣື່ອງບໍ່ຈິງ ເຂົາຕ້ອງເດືອດຮ້ອນ.**

**ເຂົາຖືກໂຈດດ້ວຍຄໍາສຸພາບ ບໍ່ໄດ້ຖືກໂຈດດ້ວຍຄໍາຫຍາບ ເຂົາຕ້ອງເດືອດຮ້ອນ.**

**ເຂົາຖືກໂຈດດ້ວຍເຣື່ອງປະກອບດ້ວຍປະໂຍຊນ໌ ບໍ່ໄດ້ຖືກໂຈດດ້ວຍເຣື່ອງບໍ່ປະກອບດ້ວຍປະໂຍຊນ໌ ເຂົາຕ້ອງເດືອດຮ້ອນ.**

**ເຂົາຖືກໂຈດດ້ວຍເມຕຕາຈິຕ ບໍ່ໄດ້ຖືກໂຈດດ້ວຍຄວາມປະສົງຮ້າຍ ເຂົາຕ້ອງເດືອດຮ້ອນ.**

ອຸບາລີ! ພິກຂຸຜູ້ຖືກໂຈດໂດຍທັມ ຍ່ອມເຖິງຄວາມເດືອດຮ້ອນດ້ວຍ ໕ ອາການນີ້ແລ.

*ພິກຂຸຜູ້ໂຈດປາຖນາຈະໂຈດຜູ້ອື່ນ ຄວນມະນະສິການທັມເທົ່າໃດໄວ້ໃນຕົນ ແລ້ວຈິ່ງໂຈດຜູ້ອື່ນ ພຣະອົງຄ໌ຜູ້ຈະເຣີນ?*

ອຸບາລີ! ພິກຂຸຜູ້ໂຈດ ປາຖນາຈະໂຈດຜູ້ອື່ນ ຄວນມະນະສິການທັມ ໕ ຢ່າງໄວ້ໃນຕົນແລ້ວຈຶ່ງໂຈດຜູ້ອື່ນຄື:

**ຄວາມສົງສານ** *(ກາຣຸນຍະຕາ)*

**ຄວາມຫວັງປະໂຍຊນ໌** *(ຫິເຕສິຕາ)*

**ຄວາມເອັນດູ** *(ອະນຸກັມປິຕາ)*

**ຄວາມອອກຈາກອາບັດ** *(ອາປັຕຕິວຸຕ ຖານະຕາ)*

**ຄວາມກະທຳວິນັຍອັນເປັນເບື້ອງຕົ້ນ**

*(ວິນະຍະປຸເຣກຂາຣະຕາຕິ)*

ອຸບາລີ! ພິກຂຸຜູ້ໂຈດ ປາຖນາຈະໂຈດຜູ້ອື່ນ ຄວນມະນະສິການທັມ ໕ ຢ່າງນີ້ແລໄວ້ໃນຕົນແລ້ວຈຶ່ງໂຈດຜູ້ອື່ນ.

*ພິກຂຸຜູ້ຖືກໂຈດຄວນຕັ້ງຢູ່ໃນທັມເທົ່າໃດ ພຣະອົງຄ໌ຜູ້ຈະເຣີນ?*

ອຸບາລີ! ພິກຂຸຜູ້ຖືກໂຈດຄວນຕັ້ງຢູ່ໃນທັມ ໔ ປະການຄື: **ຄວາມຈິງ ໑, ຄວາມບໍ່ຂັດເຄືອງ ໑.**

---

*ວິນັຍປິດົກ ຈຸລະວັກ ພາກ ໔ ກ/໔໐໐-໔໐໓/໕໐໗-໕໑໑*



# ວິທີຣະງັບຄວາມອາຄາຕ

ພິກຂຸທັງຫລາຍ! ທັມເປັນທີ່ຣະງັບຄວາມອາຄາຕ [ອາຄາຕະປະຕິວິນະຍາ] ເຊິ່ງເກີດຂຶ້ນແກ່ພິກຂຸໂດຍປະການທັງປວງ ໕ ປະການນີ້; ໕ ປະການເປັນຢ່າງໃດ? ຄື:

ຄວາມອາຄາຕເກີດຂຶ້ນໃນບຸຄຄົລໃດ ຄວນຈະເຣີນເມຕຕາໃນບຸຄຄົລນັ້ນ ໑

ຄວາມອາຄາຕເກີດຂຶ້ນໃນບຸຄຄົລໃດ ຄວນຈະເຣີນກະຣຸນາໃນບຸຄຄົລນັ້ນ ໑

ຄວາມອາຄາຕເກີດຂຶ້ນໃນບຸຄຄົລໃດ ຄວນຈະເຣີນອຸເປກຂາໃນບຸຄຄົລນັ້ນ ໑

ຄວາມອາຄາຕເກີດຂຶ້ນໃນບຸຄຄົລໃດ ບໍ່ຄວນນຶກບໍ່ຄວນມະນະສິການ [ອະສະຕິອະມະນະສິກາໂຣ] ໃນບຸຄຄົລນັ້ນ ໑

ຄວາມອາຄາຕເກີດຂຶ້ນໃນບຸຄຄົລໃດ ຄວນນຶກເຖິງຄວາມເປັນຜູ້ມີກັມເປັນຂອງໆຕົນໃຫ້ໝັ້ນໃນບຸຄຄົລນັ້ນວ່າ ທ່ານຜູ້ນີ້ເປັນຜູ້ມີກັມເປັນຂອງໆຕົນ ເປັນທາຍາຕແຫ່ງກັມ ມີກັມເປັນກຳເນີດ ມີກັມເປັນເຜົ່າພັນ ມີກັມເປັນທີ່ເພິ່ງອາສັຍ ກະທຳກັມໃດໄວ້ ດີກໍຕາມ ຊົ່ວກໍຕາມ ຈັກເປັນຜູ້ຮັບຜົລຂອງກັມນັ້ນ ດັ່ງນີ້ ໑

ພິກຂຸຄວນຣະງັບຄວາມອາຄາຕໃນບຸຄຄົລນັ້ນດັ່ງນີ້.

ພິກຂຸທັງຫລາຍ! ທັມເປັນທີ່ຣະງັບຄວາມອາຄາຕເຊິ່ງເກີດຂຶ້ນແກ່ພິກຂຸໂດຍປະການທັງປວງ ໕ ປະການນີ້ແລ.

*ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໒໔/໑໙໗/໑໖໑*



## ຈະເຣີນເມຕຕາເພື່ອລະໂທສະ

ພິກຂຸທັງຫລາຍ! ທັມ ๓ ປະການນີ້, ๓ ປະການເປັນຢ່າງໃດ? ຄື:

**ຣາຄະ,**

**ໂທສະ,**

**ໂມຫະ,**

ພິກຂຸທັງຫລາຍ! ທັມ ๓ ປະການນີ້ແລ.

ພິກຂຸທັງຫລາຍ! ທັມ ๓ ປະການນີ້ ພິກຂຸຄວນຈະເຣີນເພື່ອລະທັມ ๓ ປະການນັ້ນ, ๓ ປະການເປັນຢ່າງໃດ? ຄື:

**ອະສຸພະ** ອັນພິກຂຸຄວນຈະເຣີນເພື່ອລະຣາຄະ
**ເມຕຕາ** ອັນພິກຂຸຄວນຈະເຣີນເພື່ອລະໂທສະ
**ປັນຍາ** ອັນພິກຂຸຄວນຈະເຣີນເພື່ອລະໂມຫະ

ພິກຂຸທັງຫລາຍ! ທັມ ໔ ປະການນີ້ແລ ພິກຂຸຄວນຈະເຣີນເພື່ອລະທັມ ໔ ປະການເຫລົ່ານັ້ນ.

---

*ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໒໒/໑໙໙/໑໗໘*



# ບຸຄຄົລປຽບເໝືອນຮອຍຂີດ

ພິກຂຸທັງຫລາຍ ບຸຄຄົລ ๓ ຈຳພວກນີ້ມີປາກົຕຢູ່ໃນໂລກ, ๓ ຈຳພວກເປັນຢ່າງໃດ? ຄື:

ບຸຄຄົລປຽບດ້ວຍຮອຍຂີດທີ່ແຜ່ນຫີນ ๑

ບຸຄຄົລປຽບດ້ວຍຮອຍຂີດທີ່ແຜ່ນດິນ ๑

ບຸຄຄົລປຽບດ້ວຍຮອຍຂີດທີ່ນ້ຳ ๑

ພິກຂຸທັງຫລາຍ! ກໍບຸຄຄົລປຽບດ້ວຍຮອຍຂີດທີ່ແຜ່ນຫີນເປັນຢ່າງໃດ?

ພິກຂຸທັງຫລາຍ! ບຸຄຄົລບາງຄົນໃນໂລກນີ້ ມີຄວາມໂກທຢູ່ເນື່ອງໆ ທັງຄວາມໂກທຂອງເຂົານັ້ນ ກໍນອນເນື່ອງຢູ່ດົນ ປຽບເໝືອນຮອຍຂີດທີ່ແຜ່ນຫີນ ບໍ່ລົບເລືອນໄດ້ງ່າຍດ້ວຍລົມຫລືນ້ຳ ຍ່ອມຕັ້ງຢູ່ໄດ້ດົນສັນໃດ ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ກໍສັນນັ້ນເໝືອນກັນ ຍອ່ມໂກທເນື່ອງໆ ທັງຄວາມໂກທຂອງເຂົານັ້ນກໍນອນເນື່ອງຢູ່ດົນ ພິກຂຸທັງຫລາຍ ນີ້ຮຽກວ່າ ບຸຄຄົລຜູ້ປຽບດ້ວຍຮອຍຂີດທີ່ແຜ່ນຫີນ.

ພິກຂຸທັງຫລາຍ! ກໍບຸຄຄົລຜູ້ປຽບດ້ວຍຮອຍຂີດທີ່ແຜ່ນດິນເປັນຢ່າງໃດ?

ພິກຂຸທັງຫລາຍ! ບຸຄຄົລບາງຄົນໃນໂລກນີ້ ມີຄວາມໂກທເນື່ອງໆ ແຕ່ຄວາມໂກທຂອງເຂົານັ້ນບໍ່ນອນເນື່ອງຢູ່ດົນ ປຽບເໝືອນຮອຍຂີດທີ່ແຜ່ນດິນ ລົບເລືອນໄດ້ໂດຍງ່າຍເພາະລົມແລະນ້ຳ ບໍ່ຕັ້ງຢູ່ໄດ້ດົນສັນໃດ ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ກໍສັນນັ້ນເໝືອນກັນ ຍ່ອມໂກທເນື່ອງໆ ແຕ່ຄວາມໂກທຂອງເຂົານັ້ນ ບໍ່ນອນເນື່ອງຢູ່ດົນ ພິກຂຸທັງຫລາຍ ນີ້ຮຽກວ່າ ບຸຄຄົລຜູ້ປຽບດ້ວຍຮອຍຂີດທີ່ແຜ່ນດິນ.

ພິກຂຸທັງຫລາຍ! ກໍບຸຄຄົລຜູ້ປຽບດ້ວຍຮອຍຂີດທີ່ນ້ຳເປັນຢ່າງໃດ?

ພິກຂຸທັງຫລາຍ! ບຸຄຄົລບາງຄົນໃນໂລກນີ້ ແມ່ນຈະຖືກວ່າດ້ວຍຄຳໜັກໆ ແມ່ນຈະຖືກວ່າດ້ວຍຄຳຫຍາບໆ ແມ່ນຈະຖືກວ່າດ້ວຍຄຳທີ່ບໍ່ໜ້າພໍໃຈ ກໍຍັງສະໝານໄມຕຣີກົມກຽວ ປອງດອງກັນຢູ່ ປຽບເໝືອນຮອຍຂີດທີ່ນ້ຳ ຈະຂາດຈາກກັນກໍພຽງຄາວດຽວເທົ່ານັ້ນ ບໍ່ຕັ້ງຢູ່ໄດ້ດົນສັນໃດ ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ກໍສັນນັ້ນເໝືອນກັນ ແມ່ນຈະຖືກວ່າດ້ວຍຄຳໜັກໆ ແມ່ນຈະຖືກວ່າດ້ວຍຄຳຫຍາບໆ ແມ່ນຈະຖືກວ່າດ້ວຍຄຳທີ່ບໍ່ໜ້າພໍໃຈ ກໍຍັງສະໝານໄມຕຣີກົມກຽວປອງດອງກັນຢູ່ ພິກຂຸທັງຫລາຍ ນີ້ຮຽກວ່າ ບຸຄຄົລປຽບດ້ວຍຮອຍຂີດທີ່ນ້ຳ.

ພິກຂຸທັງຫລາຍ! ບຸຄຄົລ ໓ ຈຳພວກນີ້ແລ ມີປາກົຕຢູ່ໃນໂລກ.

---

*ອັງຄຸຕຕຣນິກາຍ ເອກ-ທຸກ-ຕິກະນິບາຕ ໒໐/໒໗໐/໕໗໒*



# ພຣະຜູ້ມີພຣະພາຄຊົງແຜ່ເມຕຕາຈິຕ ໄປສູ່ຊ້າງນາລາຄີຣີ

ສມັຍນັ້ນ ໃນພຣະນະຄອຣຣາຊະຄຶມີຊ້າງຊື່ນາລາຄີຣີ ເປັນສັຕໂຫດຮ້າຍ ຂ້າມະນຸສ ດັ່ງນັ້ນ ພຣະເທວະທັຕເຂົ້າໄປສູ່ພຣະນະຄອຣຣາຊະຄຶ ແລ້ວໄປຍັງໂຮງຊ້າງ ໄດ້ກ່າວກັບຄວານຊ້າງວ່າ:

ທ່ານ! ເຮົາເປັນພຣະຣາຊະຍາຕ ສາມາດຈະແຕ່ງຕັ້ງຜູ້ທີ່ຢູ່ໃນຕຳແໜ່ງຕ່ຳໄວ້ໃນຕຳແໜ່ງສູງໄດ້ ສາມາດຈະເພີ່ມໄດ້ທັງເບ້ຍລ້ຽງແລະເງິນເດືອນ.

ທ່ານ! ຖ້າຢ່າງນັ້ນ ເວລາໃດພຣະສະມະນະໂຄດົມ ຊົງພຣະດຳເນີນມາທາງນີ້ ເວລານັ້ນ ພວກທ່ານຈົ່ງປ່ອຍ ຊ້າງນາລາຄິຣິເຂົ້າໄປຍັງທາງນີ້ ຄວານຊ້າງເຫລົ່ານັ້ນຮັບ ຄຳພຣະເທວະທັດແລ້ວ.

ຄັນເວລາເຊົ້າ ພຣະຜູ້ມີພຣະພາຄຊົງຄອງອັນຕະຣະວາ ສົກແລ້ວ ຊົງຖືບາດແລະຈີວອຣ ສະເດັຈເຂົ້າໄປຍັງພຣະ ນະຄອຣຣາຊະຄຶພ້ອມກັບພິກຂຸຫລາຍອົງຄ໌ ຊົງພຣະ ດຳເນີນເຖິງທາງນັ້ນ ຄວານຊ້າງເຫລົ່ານັ້ນໄດ້ແລ ເຫັນພຣະຜູ້ມີພຣະພາຄຊົງພຣະດຳເນີນເຖິງທາງນັ້ນ ຈິ່ງ ປ່ອຍຊ້າງນາລາຄິຣີໃຫ້ໄປຍັງທາງນັ້ນ.

ຊ້າງນາລາຄິຣີໄດ້ແລເຫັນພຣະຜູ້ມີພຣະພາຄຊົງພຣະ ດຳເນີນມາແຕ່ໄກ ແລ້ວໄດ້ຊູງວງ ຫູຊັນ ຫາງຊີ້ ວິ່ງແລ່ນ ໄປທາງພຣະຜູ້ມີພຣະພາຄ ພິກຂຸເຫລົ່ານັ້ນໄດ້ແລເຫັນ ຊ້າງນາລາຄິຣີແລ່ນມາແຕ່ໄກ ແລ້ວໄດ້ກຣາບທູລພຣະຜູ້ ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຊ້າງນາລາຄິຣີນີ້ໂຫດຮ້າຍ ຫຍາບຊ້າ ຂ້າມະນຸສ ເດີນເຂົ້າມາທາງນີ້ແລ້ວ ຂໍພຣະຜູ້ ມີພຣະພາຄຈົ່ງສະເດັຈກັບເຖີດ ຂໍພຣະສຸຄົຕຈົ່ງສະເດັຈ ກັບເຖີດ ພຣະອົງຄ໌ຜູ້ຈະເຣີນ!

ພຣະຜູ້ມີພຣະພາຄຕຣັສສັ່ງວ່າ:
**ມາເຖີດ ພິກຂຸທັງຫລາຍ ພວກເຈົ້າທັງຫລາຍຢ່າກົວເລີຍ ຂໍ້ທີ່ບຸຄຄົລຈະປົງຊີວິຕຕະຖາຄົຕດ້ວຍຄວາມພະຍາຍາມຂອງຜູ້ອື່ນນັ້ນ ບໍ່ແມ່ນຖານະ ບໍ່ແມ່ນໂອກາສ ເພາະຕະຖາຄົຕທັງຫລາຍຍ່ອມບໍ່ປະຣີນິພພານດ້ວຍຄວາມພະຍາຍາມຂອງຜູ້ອື່ນ.**

ແມ່ນແຕ່ຄັ້ງທີ ໔ ພິກຂຸເຫລົ່ານັ້ນກໍໄດ້ກຣາບທູລພຣະຜູ້ມີພຣະພາຄວ່າ ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ຊ້າງນາລາຄີຣີນີ້ໂຫດຮ້າຍ ຫຍາບຊ້າ ຂ້າມະນຸສ ເດີນເຂົ້າມາທາງນີ້ແລ້ວ ຂໍພຣະຜູ້ມີພຣະພາຄຈົ່ງສະເດັຈກັບເຖີດ ຂໍພຣະສຸຄົຕຈົ່ງສະເດັຈກັບເຖີດ ພຣະອົງຄ໌ຜູ້ຈະເຣີນ!

ພຣະຜູ້ມີພຣະພາຄກໍຕຣັສສັ່ງວ່າ:
**ມາເຖີດ ພິກຂຸທັງຫລາຍ ພວກເຈົ້າທັງຫລາຍຢ່າກົວເລີຍ ຂໍ້ທີ່ບຸຄຄົລຈະປົງຊີວິຕຕະຖາຄົຕດ້ວຍຄວາມພະຍາຍາມຂອງຜູ້ອື່ນນັ້ນ ບໍ່ແມ່ນຖານະ ບໍ່ແມ່ນໂອກາສ ເພາະຕະຖາຄົຕທັງຫລາຍຍ່ອມບໍ່ປະຣີນິພພານດ້ວຍຄວາມພະຍາຍາມຂອງຜູ້ອື່ນ.**

ແມ່ນແຕ່ຄັ້ງທີ ໕ ພິກຂຸເຫລົ່ານັ້ນກໍໄດ້ກຣາບທູລພຣະຜູ້ມີພຣະພາຄວ່າ ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ຊ້າງນາລາຄີຣີ

ນີ້ໄຫດຮ້າຍ ຫຍາບຊ້າ ຂ້າມະນຸສ ເດີນເຂົ້າມາທາງນີ້ແລ້ວ ຂໍພຣະຜູ້ມີພຣະພາຄຈົ່ງສະເດັຈກັບເຖີດ ຂໍພຣະສຸຄົຕຈົ່ງສະເດັຈກັບເຖີດ ພຣະອົງຄ໌ຜູ້ຈະເຣີນ!

ພຣະຜູ້ມີພຣະພາຄກໍຕຣັສສັ່ງວ່າ:
**ມາເຖີດ ພິກຂຸທັງຫລາຍ ພວກເຈົ້າທັງຫລາຍຢ່າກົວເລີຍ ຂໍ້ທີ່ບຸຄຄົລຈະປົງຊີວິຕຕະຖາຄົຕດ້ວຍຄວາມພະຍາຍາມຂອງຜູ້ອື່ນນັ້ນ ບໍ່ແມ່ນຖານະ ບໍ່ແມ່ນໂອກາສ ເພາະຕະຖາຄົຕທັງຫລາຍຍ່ອມບໍ່ປະຣິນິພພານດ້ວຍຄວາມພະຍາຍາມຂອງຜູ້ອື່ນ.**

ຄາວນັ້ນ ຄົນທັງຫລາຍໜີຂຶ້ນໄປເທິງປາສາທແດ່ ເທິງເຮືອນໂລ້ນແດ່ ເທິງຫລັງຄາແດ່ ບັນດາຄົນເຫລົ່ານັ້ນພວກທີ່ບໍ່ມີສັທທາ ບໍ່ເຫລື້ອມໃສ ໄຮ້ປັນຍາ ກ່າວຢ່າງນີ້ວ່າ ຊາວເຮົາຜູ້ຈະເຣີນ ພຣະສະມະນະໂຄດົມຜູ້ຣູປງາມຈັກຖືກຊ້າງບຽດບຽນ.

ສ່ວນພວກທີ່ມີສັທທາ ເຫລື້ອມໃສ ມີປັນຍາ ກ່າວຢ່າງນີ້ວ່າ ຊາວເຮົາຜູ້ຈະເຣີນ ບໍ່ດົນດອກ ມະຫາສະມະນະໂຄຕະມະນາຄະ *(ໂຄຕະໂມ ມະຫາສະມະໂນ ນາເຄນະ)* ຈັກຊົງທຳສົງຄາມກັບຊ້າງ.

ດັ່ງນັ້ນ ພຣະຜູ້ມີພຣະພາຄຊົງແຜ່ເມຕຕາຈິຕໄປສູ່ຊ້າງນາລາຄີຣີ.

ລຳດັບນັ້ນ ຊ້າງນາລາຄີຣີໄດ້ສັມຜັສພຣະເມຕຕາຈິຕຂອງພຣະຜູ້ມີພຣະພາຄແລ້ວ ລົດງວງລົງ ແລ້ວເຂົ້າໄປທາງພຣະຜູ້ມີພຣະພາຄ ແລ້ວໄດ້ຢືນຢູ່ທີ່ຕໍ່ໜ້າພຣະພັກຂອງພຣະຜູ້ມີພຣະພາຄ.

ຂະນະນັ້ນ ພຣະຜູ້ມີພຣະພາຄຊົງຍົກພຣະຫັຕຖ໌ຂວາລູບກະພອງ *(ສ່ວນທີ່ນູນເປັນປຸ່ມຂ້າງຫົວຊ້າງ)* ຊ້າງນາລາຄີຣີ ພາງຕຣັສກັບຊ້າງນາລາຄີຣີດ້ວຍຄາຖາວ່າ:

**ກຸນຊອນ! ເຈົ້າຢ່າຄິດເຂົ້າມາທຳຮ້າຍນາຄະສະມາທະ ເພາະການຄິດເຂົ້າມາທຳຮ້າຍນາຄະສະມາທະເປັນເຫຕແຫ່ງທຸກຂ໌.**

**ກຸນຊອນ! ຜູ້ຂ້ານາຄະສະມາທະ ຈາກຊາຕນີ້ໄປສູ່ຊາຕໜ້າຍ່ອມບໍ່ມີສຸຄະຕິເລີຍ. ເຈົ້າຢ່າມົວເມົາ ຢ່າປະມາທ ເພາະຄົນຜູ້ປະມາທແລ້ວຍ່ອມໄປສູ່ສຸຄະຕິບໍ່ໄດ້ ເຈົ້ານີ້ແຫລະ ຈັກກະທຳເຫຕທີ່ເປັນໄປສູ່ສຸຄະຕິໄດ້.**

ລຳດັບນັ້ນ ຊ້າງນາລາຄີຣີເອົາງວງລູບລະອອງທຸລີພຣະບາທຂອງພຣະຜູ້ມີພຣະພາຄແລ້ວພົ່ນລົງເທິງຄະໜ່ອມ ຫຍໍ້ໂຕຖອຍອອກໄປຊົ່ວໄລຍະທີ່ແລເຫັນພຣະຜູ້ມີພຣະພາຄ ໄປສູ່ໂຮງຊ້າງແລ້ວໄດ້ຢືນຢູ່ໃນທີ່ຂອງຕົນ ກໍແລຊ້າງນາລາຄີຣີເປັນສັຕອັນພຣະຜູ້ມີພຣະພາຄຊົງຝຶກແລ້ວດ້ວຍປະການນັ້ນ.

ສມັຍນັ້ນ ຄົນທັງຫລາຍຂັບຮ້ອງຄາຖານີ້ ວ່າດັ່ງນີ້:
ຄົນພວກໜຶ່ງຍ່ອມຝຶກຊ້າງແລະມ້າດ້ວຍໃຊ້ທ່ອນໄມ້ແດ່ ໃຊ້ຂໍແດ່ ໃຊ້ແສ້ແດ່ ພຣະພຸທທະເຈົ້າຜູ້ສະແຫວງພຣະຄຸນອັນໃຫຍ່ຊົງຝຶກຊ້າງໂດຍບໍ່ຕ້ອງໃຊ້ທ່ອນໄມ້ ບໍ່ຕ້ອງໃຊ້ສັສຕຣາ.

ຄົນທັງຫລາຍຕ່າງກໍເພັ່ງໂທສ ຕຳນິຕິຕຽນວ່າ ພຣະເທວະທັຕນີ້ເປັນຄົນມີບາບ ບໍ່ມີບຸນຍ໌ ເພາະພະຍາຍາມປົງພຣະຊົນພຣະສະມະນະໂຄດົມ ຜູ້ມີລິທທລາຍຢ່າງນີ້ ມີອານຸພາບຫລາຍຢ່າງນີ້, ລາພສັກກາຣະຂອງພຣະເທວະທັຕກໍເສື່ອມລົງ ສ່ວນລາພສັກກາຣະຂອງພຣະຜູ້ມີພຣະພາຄຈະເຣີນຍິ່ງຂຶ້ນ.



# ວິທີປະຕິບັຕເມື່ອມີຄົນຕຳນິຫລືສັນລະເສີນ ພຣະພຸທທະເຈົ້າ ພຣະທັມ ພຣະສົງຄ໌

ສມັຍໜຶ່ງ ພຣະຜູ້ມີພຣະພາຄສະເດັຈດຳເນີນທາງໄກລະຫວ່າງພຣະນະຄອຣຣາຊະຄຶກັບເມືອງນາລັນທາ ພ້ອມດ້ວຍພິກຂຸສົງຄ໌ໝູ່ໃຫຍ່ປະມານ ໕໐໐ ອົງຄ໌ ແມ່ນແຕ່ສຸປປິຍະປະຣິພາຊົກກໍໄດ້ເດີນທາງໄກລະຫວ່າງພຣະນະຄອຣຣາຊະຄຶກັບເມືອງນາລັນທາ ພ້ອມດ້ວຍພຣົມມະທັຕຕະມານົບຜູ້ເປັນອັນເຕວາສິກ. ໄດ້ຍິນວ່າໃນລະຫວ່າງທາງນັ້ນ ສຸປປິຍະປະຣິພາຊົກກ່າວຕິຕຽນພຣະພຸທທະເຈົ້າ ຕິຕຽນພຣະທັມ ຕິຕຽນພຣະສົງຄ໌ ໂດຍອະເນກປະຣິຍາຍ ສ່ວນພຣົມມະທັຕຕະມານົບອັນເປັນເຕວາສິກຂອງສຸປ

ປິຍະປະຣິພາຊິກ ກ່າວສັນລະເສີນພຣະພຸທທະເຈົ້າ ສັນລະເສີນພຣະທັມ ສັນລະເສີນພຣະສົງຄ໌ ໂດຍອະເນກ ປະຣິຍາຍ ອາຈານຣ໌ແລະສິຕທັງສອງນັ້ນ ມີຖ້ອຍຄຳອັນ ເປັນຂ້າເສິກແກ່ກັນໂດຍກົງຢ່າງນີ້ ເດີນຕາມພຣະຜູ້ມີພຣະ ພາຄແລະພິກຂຸສົງຄ໌ໄປຂ້າງຫລັງໆ.

ລຳດັບນັ້ນ ພຣະຜູ້ມີພຣະພາຄສະເດັຈເຂົ້າໄປປະທັບ ແຮມຣາຕຣີໜຶ່ງໃນພຣະສຳນັກຫລວງ ໃນພຣະຣາຊະອຸ ທະຍານອັມພະລັຕຖິກາພ້ອມດ້ວຍພິກຂຸສົງຄ໌ ແມ່ນແຕ່ສຸປ ປິຍະປະຣິພາຊິກກໍໄດ້ເຂົ້າພັກແຮມຣາຕຣີໜຶ່ງໃກ້ພຣະ ສຳນັກຫລວງໃນພຣະຣາຊະອຸທະຍານອັມພະລັຕຖິກາ ກັບພຣົມມະທັຕຕະມານົບຜູ້ເປັນສິຕ ໄດ້ຍິນວ່າແມ່ນແຕ່ ໃນທີ່ນັ້ນ ສຸປປິຍະປະຣິພາຊິກກໍກ່າວຕິຕຽນພຣະພຸທທະ ເຈົ້າ ຕິຕຽນພຣະທັມ ຕິຕຽນພຣະສົງຄ໌ ໂດຍອະເນກປະຣິ ຍາຍ ສ່ວນພຣົມມະທັຕຕະມານົບອັນເປັນເຕວາສິກຂອງ ສຸປປິຍະປະຣິພາຊິກ ກໍກ່າວສັນລະເສີນພຣະພຸທທະເຈົ້າ ສັນລະເສີນພຣະທັມ ສັນລະເສີນພຣະສົງຄ໌ ໂດຍອະເນກ ປະຣິຍາຍ ອາຈານຣ໌ແລະສິຕທັງສອງນັ້ນ ມີຖ້ອຍຄຳອັນ ເປັນຂ້າເສິກແກ່ກັນໂດຍກົງຢ່າງນີ້.

ຄັ້ງນັ້ນ ພິກຂຸຫລາຍອົງຄ໌ລຸກຂຶ້ນໃນເວລາໃກ້ແຈ້ງ ນັ່ງ ປະຊຸມກັນຢູ່ໃນສາລານັ່ງຫລິ້ນ ເກີດສົນທະນາກັນວ່າ

ທ່ານທັງຫລາຍ ພຣະຜູ້ມີພຣະພາຄຜູ້ຊົງຮູ້ຊົງເຫັນ ເປັນພຣະອະຣະຫັນຕະສັມມາສັມພຸທທະພຣະອົງຄ໌ນັ້ນ ຊົງຊາບຄວາມທີ່ໝູ່ສັຕມີອັທທະຍາສັຍຕ່າງໆກັນໄດ້ເປັນຢ່າງດີນີ້ ໜ້າອັສສະຈັນຍ໌ຫລາຍ ບໍ່ເຄີຍມີມາ ຄວາມຈິງ ສຸປປິຍະປະຣິພາຊົກຜູ້ນີ້ກ່າວຕິຕຽນພຣະພຸທທະເຈົ້າ ຕິຕຽນພຣະທັມ ຕິຕຽນພຣະສົງຄ໌ ໂດຍອະເນກປະຣິຍາຍ ສ່ວນພຣົມມະທັຕຕະມານົບອັນເປັນເຕວາສິກຂອງສຸປປິຍະປະຣິພາຊົກ ກ່າວສັນລະເສີນພຣະພຸທທະເຈົ້າ ສັນລະເສີນພຣະທັມ ສັນລະເສີນພຣະສົງຄ໌ ໂດຍອະເນກປະຣິຍາຍ ອາຈາຣຍ໌ແລະສິຕທັງສອງນັ້ນ ມີຖ້ອຍຄຳອັນເປັນຂ້າເສິກແກ່ກັນໂດຍກົງຢ່າງນີ້ ເດີນຕາມພຣະຜູ້ມີພຣະພາຄແລະພິກຂຸສົງຄ໌ໄປຂ້າງຫລັງໆ.

ລຳດັບນັ້ນແລ ພຣະຜູ້ມີພຣະພາຄຊົງຊາບຄຳສົນທະນາຂອງພິກຂຸເຫລົ່ານັ້ນແລ້ວ ສະເດັຈໄປຍັງສາລານັ່ງຫລິ້ນ ປະທັບໃນອາສະນະທີ່ເຂົາຈັດຖວາຍ ແລ້ວຕຣັສຖາມພິກຂຸທັງຫລາຍວ່າ:

ພິກຂຸທັງຫລາຍ! ບັດນີ້ພວກເຈົ້າທັງຫລາຍນັ່ງປະຊຸມສົນທະນາອັນໃດກັນ ແລະເຣື່ອງອັນໃດທີ່ພວກເຈົ້າເວົ້າຄ້າງໄວ້?

ເມື່ອຕຣັສຖາມຢ່າງນີ້ແລ້ວ ພິກຂຸເຫລົ່ານັ້ນໄດ້ກາບທູລພຣະຜູ້ມີພຣະພາຄດັ່ງນີ້ວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ໃນທີ່ນີ້ ເມື່ອພວກຂ້ານ້ອຍລຸກຂຶ້ນໃນເວລາໃກ້ແຈ້ງ ນັ່ງປະຊຸມກັນຢູ່ໃນສາລານັ່ງຫລິ້ນ ເກີດສົນທະນາກັນວ່າ ທ່ານທັງຫລາຍ ພຣະຜູ້ມີພຣະພາຄຜູ້ຊົງຮູ້ຊົງເຫັນ ເປັນພຣະອະຣະຫັນຕະສັມມາສັມພຸທທະພຣະອົງຄ໌ນັ້ນ ຊົງຊາບຄວາມທີ່ໝູ່ສັຕມີອັທທະຍາສັຍຕ່າງໆກັນໄດ້ເປັນຢ່າງດີນີ້ ໜ້າອັສສະຈັນຍ໌ຫລາຍບໍ່ເຄີຍມີມາ ຄວາມຈິງສຸປປິຍະປະຣິພາຊົກຜູ້ນີ້ກ່າວຕິຕຽນພຣະພຸທທະເຈົ້າ ຕິຕຽນພຣະທັມ ຕິຕຽນພຣະສົງຄ໌ໂດຍອະເນກປະຣິຍາຍ ສ່ວນພຣົມມະທັຕຕະມານົບອັນເປັນເຕວາສິກຂອງສຸປປິຍະປະຣິພາຊົກ ກ່າວສັນລະເສີນພຣະພຸທທະເຈົ້າ ສັນລະເສີນພຣະທັມສັນລະເສີນພຣະສົງຄ໌ ໂດຍອະເນກປະຣິຍາຍ ອາຈາຣຍ໌ແລະສິຕທັງສອງນັ້ນ ມີຖ້ອຍຄຳອັນເປັນຂ້າເສິກແກ່ກັນໂດຍກົງຢ່າງນີ້ ເດີນຕາມພຣະຜູ້ມີພຣະພາຄແລະພິກຂຸສົງຄ໌ໄປຂ້າງຫລັງໆ ພຣະອົງຄ໌ຜູ້ຈະເຣີນ ເຣື່ອງນີ້ແລທີ່ພວກຂ້ານ້ອຍທັງຫລາຍເວົ້າຄ້າງໄວ້ ພໍດີພຣະອົງຄ໌ສະເດັຈມາເຖິງ.

ພິກຂຸທັງຫລາຍ! ຄົນພວກອື່ນຈະກ່າວຕຳນິເຮົາ ຕຳນິພຣະທັມ ຕຳນິພຣະສົງຄ໌ກໍຕາມ ພວກເຈົ້າທັງຫລາຍບໍ່ຄວນອາຄາຕ ບໍ່ຄວນໂທມະນັສນ້ອຍໃຈ ບໍ່ຄວນແຄ້ນເຄືອງໃຈໃນຄົນເຫລົ່ານັ້ນ; ຖ້າພວກເຈົ້າທັງຫລາຍແຄ້ນເຄືອງຫລືມີໂທມະນັສນ້ອຍໃຈໃນຄົນເຫລົ່ານັ້ນ ອັນຕະລາຍຈະມີແກ່ພວກເຈົ້າທັງຫລາຍເພາະເຫຕນັ້ນ.

ພິກຂຸທັງຫລາຍ! ຄົນພວກອື່ນຈະກ່າວຕຳນິເຮົາ ຕຳນິພຣະທັມ ຕຳນິພຣະສົງຄ໌ ຖ້າພວກເຈົ້າທັງຫລາຍແຄ້ນເຄືອງຫລືມີໂທມະນັສນ້ອຍໃຈໃນຄົນເຫລົ່ານັ້ນ ພວກເຈົ້າທັງຫລາຍຈະຮູ້ຄຳທີ່ເຂົາເວົ້າຖືກ ຫລືຄຳທີ່ເຂົາເວົ້າຜິດໄດ້ຫລືໜໍ?

ພິກຂຸທັງຫລາຍກຣາບທູລວ່າ:
ຂໍ້ນັ້ນເປັນໄປບໍ່ໄດ້ເລີຍ ພຣະອົງຄ໌ຜູ້ຈະເຣີນ!

ພິກຂຸທັງຫລາຍ! ຄົນພວກອື່ນຈະກ່າວຕຳນິເຮົາ ຕຳນິພຣະທັມ ຕຳນິພຣະສົງຄ໌ ໃນຄຳທີ່ເຂົາກ່າວຕຳນິນັ້ນ ຄຳທີ່ບໍ່ຈິງ ພວກເຈົ້າທັງຫລາຍຄວນແກ້ໃຫ້ເຫັນໂດຍຄວາມບໍ່ເປັນຈິງວ່າ ນັ້ນບໍ່ຈິງ ເພາະເຫຕນີ້ ນັ້ນບໍ່ແທ້ ເພາະເຫຕນີ້ ນັ້ນກໍບໍ່ມີໃນເຮົາທັງຫລາຍ ແລະຄຳນັ້ນຫາບໍ່ໄດ້ໃນເຮົາທັງຫລາຍ.

ພິກຂຸທັງຫລາຍ! ຄົນພວກອື່ນຈະກ່າວສັນລະເສີນເຮົາ ສັນລະເສີນພຣະທັມ ສັນລະເສີນພຣະສົງຄ໌ ພວກເຈົ້າທັງຫລາຍບໍ່ຄວນເບີກບານໃຈ ບໍ່ຄວນດີໃຈ ບໍ່ຄວນກະເຫີມໃຈໃນຄຳສັນລະເສີນນັ້ນ.

ພິກຂຸທັງຫລາຍ! ຄົນພວກອື່ນຈະກ່າວສັນລະເສີນເຮົາ ສັນລະເສີນພຣະທັມ ສັນລະເສີນພຣະສົງຄ໌, ພິກຂຸທັງຫລາຍ ຖ້າພວກເຈົ້າທັງຫລາຍເບີກບານໃຈ ດີໃຈ ກະເຫີມໃຈໃນຄຳສັນລະເສີນນັ້ນ ອັນຕະລາຍຈະມີແກ່ພວກເຈົ້າທັງຫລາຍເພາະເຫຕນັ້ນ.

ພິກຂຸທັງຫລາຍ! ຄົນພວກອື່ນຈະກ່າວສັນລະເສີນເຮົາ ສັນລະເສີນພຣະທັມ ສັນລະເສີນພຣະສົງຄ໌ ໃນຄຳສັນລະເສີນນັ້ນ ຄຳທີ່ຈິງ ພວກເຈົ້າທັງຫລາຍຄວນປະຕິຍານໃຫ້ເຫັນໂດຍຄວາມເປັນຈິງວ່າ ນັ້ນຈິງ ເພາະເຫຕນີ້ ນັ້ນແທ້ ເພາະເຫຕນີ້ ແມ່ນແຕ່ຄຳນັ້ນກໍມີໃນເຮົາທັງຫລາຍ ແລະຄຳນັ້ນຫາໄດ້ໃນເຮົາທັງຫລາຍ.

On one occasion the Exalted One was travelling along the highway between Rājagaha and Nālandā together with a great company of bhikkhus, with about five hundred bhikkhus. At the same time the

wanderer Suppiya was also travelling along the highway between Rājagaha and Nālandā together with his pupil, the youth Brahmadatta. Along the way, the wanderer Suppiya spoke in many ways in dispraise of the Buddha, the Dhamma, and the Sangha. But his pupil, the youth Brahmadatta, spoke in many ways in praise of the Buddha, the Dhamma, and the Sangha. Thus these two, teacher and pupil, followed closely behind the Exalted One and the company of bhikkhus, making assertions in direct contradiction to each other.

Then the Exalted One together with the company of bhikkhus entered the royal rest-house in the Ambalaṭṭhika garden in order to pass the night. The wanderer Suppiya together with his pupil, the youth Brahmadatta, also entered the royal rest-house in the Ambalaṭṭhika garden in order to pass the night. There, too, the wanderer Suppiya spoke in many ways in dispraise of the Buddha, the Dhamma, and the Sangha, while his pupil Brahmadatta spoke in many ways in their praise. Thus these two, teacher and pupil, dwelt together making assertions in direct contradiction to each other.

When dawn broke a number of bhikkhus, after rising, assembled in the pavilion. As they sat together, the following conversation sprang up among them: “It is wonderful and marvellous, friends, how the Exalted One, he who knows and sees, the Worthy One, the perfectly enlightened Buddha, has so thoroughly penetrated the diversity in the dispositions of beings. For this wanderer Suppiya spoke in many ways in dispraise of the Buddha, the Dhamma, and the Sangha, while his own pupil, the youth Brahmadatta, spoke in many ways in their praise. These two, teacher and pupil, followed closely behind the Exalted One and the company of bhikkhus, making assertions in direct contradiction to each other.”

Then the Exalted One, realizing the turn their discussion had taken, entered the pavilion, sat down on the prepared seat, and addressed the bhikkhus: “What kind of discussion were you holding just now, bhikkhus? What was the subject of your conversation?”

The bhikkhus replied: “When dawn had broken, Lord, after rising we assembled in the pavilion. As we sat here, the following conversation sprang up among us: ‘It is

wonderful and marvellous friends, how the Exalted One, he who knows and sees, the Worthy One, the perfectly enlightened Buddha, has so thoroughly penetrated the diversity in the dispositions of beings. For this wanderer Suppiya spoke in many ways in dispraise of the Buddha, the Dhamma, and the Sangha, while his own pupil, the youth Brahmadatta, spoke in many ways in their praise. These two, teacher and pupil, followed closely behind the Exalted One and the company of bhikkhus, making assertions in direct contradiction to each other.' This, Lord, was the conversation we were having when the Exalted One arrived."

" If, bhikkhus, others speak in dispraise of me, or in dispraise of the Dhamma, or in dispraise of the Sangha, you should not give way to resentment, displeasure, or animosity against them in your heart. For if you were to become angry or upset in such a situation, you would only be creating an obstacle for yourselves. If you were to become angry or upset when others speak in dispraise of us, would you be able to recognize whether their statements are rightly or wrongly spoken?"

"Certainly not, Lord."

“ If, bhikkhus, others speak in dispraise of me, or in dispraise of the Dhamma, or in dispraise of the Sangha, you should unravel what is false and point it out as false, saying: ‘For such and such a reason this is false, this is untrue, there is no such thing in us, this is not found among us.’

“And if, bhikkhus, others speak in praise of me, or in praise of the Dhamma, or in praise of the Sangha, you should not give way to jubilation, joy, and exultation in your heart. For if you were to become jubilant, joyful, and exultant in such a situation, you would only be creating an obstacle for yourselves. If others speak in praise of me, or in praise of the Dhamma, or in praise of the Sangha, you should acknowledge what is fact as fact, saying: ‘For such and such a reason this is a fact, this is true, there is such a thing in us, this is found among us.’

---

ທີຄະນິກາຍ ສີລຂັນທະວັຄ ໗/໑-໓/໑

Brahmajāla Sutta DN 1 DN i 1

https://suttacentral.net/dn1

Translated by Bhikkhu Bodhi



## ເວຣຍ່ອມຣະງັບດ້ວຍການບໍ່ຈ່ອງເວຣ

ສມັຍຕໍ່ມາ ພິກຂຸທັງຫລາຍເກີດຄວາມບາດໝາງ ເກີດຄວາມວິວາທຜິດຖຽງກັນ ຍ່ອມສຽບແທງກັນດ້ວຍຫອກຄືປາກໃນທ່າມກາງສົງຄ໌ຢູ່ ພິກຂຸເຫລົ່ານັ້ນບໍ່ສາມາດຣະງັບອະທິກອຣນັ້ນໄດ້.

ຄັ້ງນັ້ນ ມີພິກຂຸອົງຄ໌ໜຶ່ງເຂົ້າໄປໃນພຸທທະສຳນັກ ອະພິວາທພຣະຜູ້ມີພຣະພາຄແລ້ວໄດ້ຢືນຢູ່ໃນທີ່ຄວນສ່ວນຂ້າງໜຶ່ງ ພິກຂຸນັ້ນຢືນຢູ່ໃນທີ່ຄວນສ່ວນຂ້າງໜຶ່ງແລ້ວໄດ້ກຣາບທູລຄຳນີ້ແດ່ພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ພິກຂຸທັງຫລາຍໃນວັດໂຄສິຕາຣາມນີ້ ເກີດຄວາມບາດໝາງ ເກີດຄວາມວິວາທຜິດຖຽງກັນ ຍ່ອມສຽບແທງກັນດ້ວຍຫອກຄືປາກໃນທ່າມກາງສົງຄ໌ຢູ່ ພິກຂຸເຫລົ່ານັ້ນບໍ່ສາມາດຣະງັບອະທິກອຣນັ້ນໄດ້.

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂໍປະທານພຣະວະໂຣກາສ ຂໍພຣະຜູ້ມີພຣະພາຄຊົງໂປດອາສັຍຄວາມອະນຸເຄາະ ສະເດັຈເຂົ້າໄປຫາພິກຂຸເຫລົ່ານັ້ນດ້ວຍເຖີດ ພຣະອົງຄ໌ຜູ້ຈະເຣີນ!

ພຣະຜູ້ມີພຣະພາຄຊົງຮັບອາຣາທະນາດ້ວຍອາການດຸສນີຄັນແລ້ວໄດ້ສະເດັຈເຂົ້າໄປຫາພິກຂຸເຫລົ່ານັ້ນ ປະທັບນັ່ງເທິງອາສະນະທີ່ເຂົາຈັດຖວາຍ ປະທັບນັ່ງແລ້ວໄດ້ຕຣັສຄຳນີ້ແກ່ພິກຂຸເຫລົ່ານັ້ນວ່າ:

ຢ່າເລີຍ ພິກຂຸທັງຫລາຍ ພວກເຈົ້າທັງຫລາຍຢ່າບາດໝາງ ຢ່າຜິດຖຽງ ຢ່າແຍ້ງຊີງ ຢ່າວິວາທກັນເລີຍ.

ເມື່ອພຣະຜູ້ມີພຣະພາຄຕຣັສຢ່າງນີ້ແລ້ວ ພິກຂຸອະທັມມະວາທີອົງຄ໌ໜຶ່ງໄດ້ກາຣາບທູລຄຳນີ້ແດ່ພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂໍພຣະຜູ້ມີພຣະພາຄຜູ້ເປັນເຈົ້າຂອງແຫ່ງທັມ ຈົ່ງຊົງກະຣຸນາລໍກ່ອນ ຂໍພຣະຜູ້ມີພຣະພາຄຈົ່ງຊົງມີຄວາມຂວນຂວາຍນ້ອຍ ປະກອບສຸຂະວິຫານໃນປັຈຈຸບັນຢູ່ເຖີດ ພວກຂ້ານ້ອຍຈັກປາກົຕດ້ວຍຄວາມບາດໝາງ ດ້ວຍຄວາມຜິດຖຽງ ດ້ວຍຄວາມແຢ້ງຊິງ ດ້ວຍການວິວາທນັ້ນ.

ພຣະຜູ້ມີພຣະພາຄໄດ້ຕຣັສຄຳນີ້ແກ່ພິກຂຸເຫລົ່ານັ້ນເປັນຄັ້ງທີສອງວ່າ:

ຢ່າເລີຍ ພິກຂຸທັງຫລາຍ ພວກເຈົ້າທັງຫລາຍຢ່າບາດໝາງ ຢ່າຜິດຖຽງ ຢ່າແຢ້ງຊິງ ຢ່າວິວາທກັນເລີຍ.

ພິກຂຸອະທັມມະວາທີນັ້ນກໍໄດ້ກາຣາບທູລຄຳນີ້ແດ່ພຣະຜູ້ມີພຣະພາຄເປັນຄັ້ງທີສອງວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂໍພຣະຜູ້ມີພຣະພາຄຜູ້ເປັນເຈົ້າຂອງແຫ່ງທັມ ຈົ່ງຊົງກະຣຸນາລໍກ່ອນ ຂໍພຣະຜູ້ມີພຣະພາຄຈົ່ງຊົງມີຄວາມຂວນຂວາຍນ້ອຍ ປະກອບສຸຂະວິຫານໃນປັຈຈຸບັນຢູ່ເຖີດ ພວກຂ້ານ້ອຍຈັກປາກົຕດ້ວຍຄວາມບາດໝາງ ດ້ວຍຄວາມຜິດຖຽງ ດ້ວຍຄວາມແຢ້ງຊິງ ດ້ວຍການວິວາທນັ້ນ.

ດັ່ງນັ້ນ ພຣະຜູ້ມີພຣະພາຄໄດ້ຕຣັສກັບພິກຂຸທັງຫລາຍວ່າ:

ພິກຂຸທັງຫລາຍ! ເຣື່ອງເຄີຍມີມາແລ້ວ ໃນພຣະນະຄອຣພາຣານະສີ ໄດ້ມີພຣະເຈົ້າກາສີພຣະນາມວ່າ ພຣົມມະທັຕ ຊຶ່ງເປັນກະສັຕທີ່ມັ່ງຄັ່ງ ມີພຣະຣາຊະຊັພຍ໌ຫລາຍ ມີພຣະຣາຊະສົມບັດຫລາຍ ມີຣີ້ພົລຫລາຍ ມີພຣະຣາຊະພາຫະນະຫລາຍ ມີພຣະຣາຊະອານາຈັກໃຫຍ່ ມີຄັງສັສຕຣາອາວຸທຍຸທທະພັນ ແລະຄັງທັນຍາຫາຣບໍຣິບູນ ສ່ວນພຣະເຈົ້າໂກສົລພຣະນາມວ່າ ທີຄິຕິ ຊຶ່ງເປັນກະສັຕຂັດສົນ ມີພຣະຣາຊະຊັພຍ໌ໜ້ອຍ ມີພຣະຣາຊະສົມບັດໜ້ອຍ ມີຣີ້ພົລໜ້ອຍ ມີພຣະຣາຊະພາຫະນະໜ້ອຍ ມີພຣະຣາຊະອານາຈັກນ້ອຍ ມີຄັງສັສຕຣາອາວຸທຍຸທທະພັນ ແລະຄັງທັນຍາຫາຣບໍ່ບໍຣິບູນ.

ດັ່ງນັ້ນ ພຣະເຈົ້າພຣົມມະທັຕກາສີກະຣາຊ ສະເດັຈກຣີທາຈາຕຸຣົງຄະເສນາໄປໂຈມຕີພຣະເຈົ້າທີຄິຕິໂກສົລຣາຊ ພຣະເຈົ້າທີຄິຕິໂກສົລຣາຊໄດ້ຊົງສະດັບຂ່າວວ່າ ພຣະເຈົ້າພຣົມມະທັຕກາສີກະຣາຊ ສະເດັຈກຣີທາຈາຕຸຣົງຄະເສນາມາໂຈມຕີພຣະອົງຄ໌ ຈຶ່ງຊົງພຣະຣາຊະດຳຣິວ່າ ພຣະເຈົ້າພຣົມມະທັຕກາສີກະຣາຊ ຊຶ່ງເປັນກະສັຕທີ່ມັ່ງຄັ່ງ ມີພຣະຣາຊະຊັພຍ໌ຫລາຍ ມີພຣະຣາຊະສົມບັດຫລາຍ ມີຣີ້ພົລຫລາຍ ມີພຣະຣາຊະພາຫະນະຫລາຍ ມີພຣະຣາ

ຊະອານາຈັກໃຫຍ່ ມີຄັງສັສຕຣາອາວຸທຍຸທທະພັນ ແລະຄັງທັນຍາຫານບໍຣິບູນ ສ່ວນເຮົາເປັນຄົນທີ່ຂັດສົນ ມີພຣະຣາຊະຊັພຍ໌ໜ້ອຍ ມີພຣະຣາຊະສົມບັດໜ້ອຍ ມີຣິ້ພົລໜ້ອຍ ມີພຣະຣາຊະພາຫະນະໜ້ອຍ ມີພຣະຣາຊະອານາຈັກນ້ອຍ ມີຄັງສັສຕຣາອາວຸທຍຸທທະພັນແລະຄັງທັນຍາຫານບໍ່ບໍຣິບູນ ເຮົາບໍ່ສາມາດຈະຕໍ່ສູ້ກັບພຣະເຈົ້າພຣົມມະທັຕກາສີກະຣາຊແມ່ນພຽງເສິກດຽວ ຖ້າເຊັ່ນນັ້ນ ເຮົາຄວນຟ້າວໜີອອກຈາກພຣະນະຄອຣໄປເສຍກ່ອນດີກວ່າ ຄັນແລ້ວຊົງພາມະເຫສີສະເດັຈໜີອອກຈາກພຣະນະຄອຣໄປເສຍກ່ອນ ຝ່າຍພຣະເຈົ້າພຣົມມະທັຕກາສີກະຣາຊຊົງຍຶດຣິ້ພົລ ພາຫະນະ ຊົນບົທຄັງສັສຕຣາອາວຸທຍຸທທະພັນແລະຄັງທັນຍາຫານຂອງພຣະເຈົ້າທີຄີຕິໂກສົລຣາຊໄວ້ໄດ້ແລ້ວສະເດັຈເຂົ້າຄອບຄອງແທນ.

ຄັ້ງນັ້ນ ພຣະເຈົ້າທີຄີຕິໂກສົລຣາຊພ້ອມກັບພຣະມະເຫສີໄດ້ສະເດັຈໜີໄປທາງພຣະນະຄອຣພາຣານະສີ ສະເດັຈໂຄຈອຣໄປຕາມລຳດັບ ເຖິງພຣະນະຄອຣພາຣານະສີແລ້ວ ຂ່າວວ່າພຣະອົງຄ໌ພ້ອມກັບມະເຫສີຊົງປອມແປງພຣະອົງຄ໌ບໍ່ໃຫ້ໃຜຮູ້ຈັກ ຊົງນຸ່ງຫົ່ມເໝືອນປະຣິພາຊົກ ສະເດັຈອາສັຍຢູ່ໃນເຮືອນຂອງຊ່າງໝໍ້ ເຊິ່ງຕັ້ງຢູ່ຊາຍແດນແຫ່ງໜຶ່ງເຂດພຣະນະຄອຣພາຣານະສີນັ້ນ ຄັນຕໍ່ມາ

ບໍ່ນານເທົ່າໃດ ມະເຫສີຂອງພຣະເຈົ້າທີຄີຕິໂກສົລຣາຊຊົງຕັ້ງພຣະຄັນ ພຣະນາງຊົງແພ້ພຣະຄັນເຫັນປານນີ້ຄື ເມື່ອຍາມຮຸ່ງອາຣຸນ ຊົງປາຖນາຈະທອດພຣະເນຕຈະຕຸຣົງຄະເສນາຜູ້ຜູກສອດສວມເກາະຢືນຢູ່ໃນສະໜາມຣົບ ແລະປາຖນາຈະຊົງສເວີຍນ້ຳລ້າງພຣະແສງຂັນ *(ນ້ຳລ້າງດາບ)* ຈຶ່ງກຣາບທູລຄຳນີ້ແດ່ພຣະຣາຊະສາມີໃນທັນທີວ່າ:

ຂໍເດຊະ ນ້ອງມີຄັນ ໄດ້ແພ້ຄັນເຫັນປານນີ້ຄື ເມື່ອຍາມຮຸ່ງອາຣຸນ ນ້ອງປາຖນາຈະທອດພຣະເນຕຈະຕຸຣົງຄະເສນາຜູ້ຜູກສອດສວມເກາະຢືນຢູ່ໃນສະໜາມຣົບ ແລະປາຖນາດື່ມນ້ຳລ້າງພຣະແສງຂັນ ຂ້ານ້ອຍ!

ພຣະຣາຊາຕຣັສສັ່ງວ່າ ແມ່ເທວີ ເຮົາທັງສອງກຳລັງຕົກຢູ່ໃນຄວາມຍາກລຳບາກ ຈະໄດ້ຈະຕຸຣົງຄະເສນາຜູ້ຜູກສອດສວມເກາະຢືນຢູ່ໃນສະໜາມຣົບແລະນ້ຳລ້າງພຣະແສງຂັນມາແຕ່ໃສ.

ພຣະຣາຊະເທວີກຣາບທູລວ່າ ຖ້ານ້ອງບໍ່ໄດ້ຄົງຕາຍແນ່ຂ້ານ້ອຍ.

ກໍສມັຍນັ້ນ ພຣາມປຸໂຣຫິຕຂອງພຣະເຈົ້າພຣົມມະທັຕກາສີກະຣາຊເປັນສະຫາຍຂອງພຣະເຈົ້າທີຄີຕິໂກສົລຣາຊ

ພຣະເຈົ້າທີຄີຕິໂກສົລຣາຊຈຶ່ງສະເດັຈເຂົ້າໄປຫາພຣາມປຸໂຣຫິຕຂອງພຣະເຈົ້າພຣົມມະທັຕກາສິກະຣາຊ ຄັນເຖິງແລ້ວໄດ້ຕຣັສຄຳນີ້ແກ່ທ່ານພຣາມວ່າ ສະຫາຍ ເພື່ອນຍິງຂອງເພື່ອນມີຄັນ ນາງແພ້ທ້ອງມີອາການເຫັນປານນີ້ຄື ເມື່ອຍາມຮຸ່ງອາຣຸນ ນາງປາຖນາຈະທອດພຣະເນຕຈະຕຸຣົງຄະເສນາຜູ້ຜູກສອດສວມເກາະຢືນຢູ່ໃນສະໜາມຣົບ ແລະປາຖນາດື່ມນ້ຳລ້າງພຣະແສງຂັນ.

ພຣາມປຸໂຣຫິຕກຣາບທູລວ່າ ຂໍເດຊະ ຖ້າເຊັ່ນນັ້ນ ເຮົາຈະຂໍເຝົ້າພຣະເທວີກ່ອນ.

ລຳດັບນັ້ນ ພຣະມະເຫສີຂອງພຣະເຈົ້າທີຄີຕິໂກສົລຣາຊໄດ້ສະເດັຈເຂົ້າໄປຫາພຣາມປຸໂຣຫິຕຂອງພຣະເຈົ້າພຣົມມະທັຕກາສິກະຣາຊ ພຣາມປຸໂຣຫິຕຂອງພຣະເຈົ້າພຣົມມະທັຕກາສິກະຣາຊໄດ້ແລເຫັນພຣະມະເຫສີຂອງພຣະເຈົ້າທີຄີຕິໂກສົລຣາຊກຳລັງສະເດັຈມາແຕ່ໄກ ຄັນແລ້ວລຸກຈາກທີ່ນັ່ງ ຫົ່ມຜ້າບ່ຽງບ່າ ປະນົມມືໄປທາງພຣະມະເຫສີຂອງພຣະເຈົ້າທີຄີຕິໂກສົລຣາຊ ແລ້ວເປັ່ງອຸທານຂຶ້ນ ໓ ຄັ້ງວ່າ:

ທ່ານຜູ້ຈະເຣີນ! ພຣະເຈົ້າໂກສົລປະທັບຢູ່ໃນພຣະອຸທອນແນ່ແລ້ວ, ພຣະເຈົ້າໂກສົລປະທັບຢູ່ໃນພຣະອຸທອນແນ່

ແລ້ວ, ພຣະເຈົ້າໂກສົລປະທັບຢູ່ໃນພຣະອຸທອນແນ່ແລ້ວ, ເພາະສະນັ້ນ ພຣະເທວີຢ່າໄດ້ເສຍພຣະທັຍ ເມື່ອຍາມຮຸ່ງອາຣຸນ ຈັກໄດ້ທອດພຣະເນຕຈະຕຸຣົງຄະເສນາຜູ້ຜູກສອດສວມເກາະຢືນຢູ່ໃນສະໜາມຣົບ ແລະຈັກໄດ້ຊົງສເວີຍນ້ຳລ້າງພຣະແສງຂັນແນ່ແທ້.

ພຣາມປຸໂຣຫິຕຂອງພຣະເຈົ້າພຣົມມະທັຕກາສີກະຣາຊຈຶ່ງເຂົ້າໄປໃນພຣະຣາຊະສຳນັກ ຄັນເຖິງແລ້ວໄດ້ກຣາບທູລພຣະເຈົ້າພຣົມມະທັຕກາສີກະຣາຊວ່າ:

ຂໍເດຊະ! ນິມິຕທັງຫລາຍປາກົຕຕາມກຳນົດວິທີການຄື ໃນເວລາຮຸ່ງອາຣຸນໃນມື້ອື່ນ ຈະຕຸຣົງຄະເສນາຈະຜູກສອດສວມເກາະຢືນຢູ່ໃນສະໜາມຣົບ ແລະເຈົ້າພະນັກງານຈະເອົານ້ຳລ້າງພຣະແສງຂັນດ້ວຍ ຂ້ານ້ອຍ.

ລຳດັບນັ້ນ ພຣະເຈົ້າພຣົມມະທັຕກາສີກະຣາຊຈຶ່ງມີພຣະບໍຣົມຣາຊະອົງການສັ່ງເຈົ້າພະນັກງານທັງຫລາຍວ່າ:

ທ່ານທັງຫລາຍ! ພຣາມປຸໂຣຫິຕສັ່ງການຢ່າງໃດ ພວກເຈົ້າຈົ່ງກະທຳຢ່າງນັ້ນ.

ພຣະມະເຫສີຂອງພຣະເຈົ້າທີຄີຕິໂກສົລຣາຊໄດ້ທອດພຣະເນຕຈະຕຸຣົງຄະເສນາ ຜູ້ຜູກສອດສວມເກາະຢືນຢູ່ໃນສະໜາມຣົບ ແລະໄດ້ສເວີຍນ້ຳພຣະແສງຂັນໃນເວລາຮຸ່ງອາຣຸນສົມປາຖນາ ຄັນຕໍ່ມາຊົງອາສັຍຄວາມແກ່ແຫ່ງຄັນນັ້ນ ໄດ້ປະສູຕພຣະຣາຊະໂອຣົສ ພຣະຊະນົກຊົນນະນີໄດ້ຂະໜານພຣະນາມພຣະຣາຊະໂອຣົສນັ້ນວ່າ ທີຄາວຸ ແລະຕໍ່ມາບໍ່ນານເທົ່າໃດ ທີຄາວຸຣາຊະກຸມາຣກໍເຖິງຄວາມເປັນຜູ້ຮູ້ດຽງສາ.

ຄັ້ງນັ້ນ ພຣະເຈົ້າທີຄີຕິໂກສົລຣາຊດຳຣິວ່າ ພຣະເຈົ້າພຣົມມະທັຕກາສີກະຣາຊນີ້ ກໍ່ຄວາມພິນາສໃຫ້ແກ່ພວກເຮົາມາກມາຍ ໄດ້ຊ່ວງຊິງເອົາຣີ້ພົລ ພາຫະນະ ຊົນບົທຄັງສັສຕຣາອາວຸທຍຸທທະພັນແລະຄັງທັນຍາຫາຣຂອງພວກເຮົາໄປ ຖ້າພຣະອົງຄ໌ຈັກສືບຊາບເຖິງພວກເຮົາ ຄົງສັ່ງໃຫ້ປະຫານຊີວິຕໝົດທັງສາມຄົນ ຖ້າເຊັ່ນນັ້ນ ເຮົາຄວນໃຫ້ທີຄາວຸຣາຊະກຸມາຣຫລົບຢູ່ນອກພຣະນະຄອຣ ຄັນແລ້ວໄດ້ໃຫ້ທີຄາວຸຣາຊະກຸມາຣຫລົບຢູ່ນອກພຣະນະຄອຣ ຄັນທີຄາວຸຣາຊະກຸມາຣຫລົບຢູ່ນອກພຣະນະຄອຣ ບໍ່ນານເທົ່າໃດ ກໍໄດ້ສຶກສາສີລະປະສຳເຣັຈທຸກສາຂາ.

ພິກຂຸທັງຫລາຍ! ກໍສມັຍນັ້ນ ນາຍຊ່າງກັລບົກຂອງພຣະເຈົ້າທີຄີຕິໂກສົລຣາຊໄດ້ສະສວາມິພັກກັບພຣະເຈົ້າພຣົມມະທັຕກາສີກະຣາຊ ເຂົາໄດ້ເຫັນພຣະເຈົ້າທີຄີຕິໂກສົລຣາຊພ້ອມກັບມະເຫສີຊົງປອມແປງພຣະກາຍບໍ່ໃຫ້ໃຜຮູ້ຈັກ ຊົງນຸ່ງຫົ່ມເໝືອນປະຣິພາຊົກ ສະເດັຈອາສັຍຢູ່ໃນເຮືອນຂອງຊ່າງໝໍ້ ເຊິ່ງຕັ້ງຢູ່ໃນຊາຍແດນແຫ່ງໜຶ່ງເຂດພຣະນະຄອຣພຣະພາຣານະສີ ຄັນແລ້ວຈິ່ງໄດ້ເຂົ້າໄປເຝົ້າພຣະເຈົ້າພຣົມມະທັຕກາສີກະຣາຊ ໄດ້ກຣາບທູລວ່າ:

ຂໍເດຊະ! ພຣະເຈົ້າທີຄີຕິໂກສົລຣາຊຊົງປອມແປງພຣະກາຍບໍ່ໃຫ້ໃຜຮູ້ຈັກ ຊົງນຸ່ງຫົ່ມເໝືອນປະຣິພາຊົກ ສະເດັຈອາສັຍຢູ່ໃນເຮືອນຂອງຊ່າງໝໍ້ ເຊິ່ງຕັ້ງຢູ່ໃນຊາຍແດນແຫ່ງໜຶ່ງ ເຂດພຣະນະຄອຣພາຣານະສີ ຂ້ານ້ອຍ.

ຄັ້ງນັ້ນ ພຣະເຈົ້າພຣົມມະທັຕກາສີກະຣາຊຈິ່ງມີພຣະບໍຣົມຣາຊະອົງການສັ່ງເຈົ້າພະນັກງານທັງຫລາຍວ່າ:

ທ່ານທັງຫລາຍ! ຖ້າຢ່າງນັ້ນ ພວກເຈົ້າຈົ່ງໄປຈັບພຣະເຈົ້າທີຄີຕິໂກສົລຣາຊພ້ອມກັບພຣະມະເຫສີ.

ພວກເຂົາທູລຮັບສະໜອງພຣະບໍຣົມຣາຊະອົງການວ່າ ເປັນດັ່ງພຣະກະແສຮັບສັ່ງ ຂ້ານ້ອຍ ດັ່ງນັ້ນແລ້ວໄປ ຈັບພຣະເຈົ້າທີຄີຕິໂກສົລຣາຊພ້ອມກັບພຣະມະເຫສີມາ ຖວາຍ.

ພຣະເຈົ້າພຣົມມະທັຕກາສີກະຣາຊຈຶ່ງມີພຣະບໍຣົມຣາຊະ ອົງການສັ່ງເຈົ້າພະນັກງານທັງຫລາຍວ່າ:

ທ່ານທັງຫລາຍ! ຖ້າຢ່າງນັ້ນ ພວກເຈົ້າຈົ່ງເອົາເຊືອກທີ່ ໜຽວໆມັດພຣະເຈົ້າທີຄີຕິໂກສົລຣາຊພ້ອມກັບພຣະ ມະເຫສີ ມັດໃຫ້ແໜ້ນໃຫ້ມີພຣະພາຫະໄຂ່ວຫລັງ ແຖພຣະສຽນໃຫ້ໂລ້ນ ແລ້ວນໍາຕະເວນໄປຕາມຖະໜົນ ຕາມຮ່ອມທຸກແຫ່ງ ດ້ວຍວັຊຊະເພຣີມີສໍານຽງອັນຄືມຄາຍ ແລ້ວໃຫ້ອອກໄປທາງປະຕູດ້ານທັກຂີນ ຮັ່ນໂຕອອກເປັນ ໔ ທ່ອນ ວາງຮຽງໄວ້ໃນຂຸມ ໔ ທິສທາງດ້ານທັກຂີນ ແຫ່ງພຣະນະຄອຣ ພວກເຂົາທູລຮັບສະໜອງພຣະ ບໍຣົມຣາຊະອົງການວ່າ:

ເປັນດັ່ງພຣະກະແສຮັບສັ່ງ ຂ້ານ້ອຍ! ດັ່ງນັ້ນແລ້ວ ໄດ້ ເອົາເຊືອກຢ່າງໜຽວມັດພຣະເຈົ້າທີຄີຕິໂກສົລຣາຊພ້ອມ ກັບມະເຫສີ ມັດໃຫ້ແໜ້ນ ໃຫ້ມີພຣະພາຫະໄຂ່ວຫລັງ ແຖພຣະສຽນໃຫ້ໂລ້ນ ແລ້ວນໍາຕະເວນໄປຕາມຖະໜົນ

ຕາມຮ່ອມທົ່ວທຸກແຫ່ງດ້ວຍວັຊຊະເພຣີທີ່ມີສຳນຽງຄົມຄາຍ.

ຄັ້ງນັ້ນ ທີຄາວຸຣາຊະກຸມາຣໄດ້ຊົງດຳຣິດັ່ງນີ້ວ່າ ນານມາແລ້ວທີ່ເຮົາໄດ້ເຂົ້າຢ້ຽມພຣະຊະນົກຊົນນະນີ ຖ້າເຊັ່ນນັ້ນເຮົາຄວນໄປເຝົ້າຢ້ຽມພຣະຊະນົກຊົນນະນີ ຄັນແລ້ວເຂົ້າໄປສູ່ພຣະນະຄອຣພາຣານະສີ ໄດ້ທອດພຣະເນຕເຫັນເຈົ້າພະນັກງານທັງຫລາຍເອົາເຊືອກຢ່າງໜຽວມັດພຣະຊະນົກຊົນນະນີຈົນແໜ້ນ ໃຫ້ມີພຣະພາຫະໄຂ່ວຫລັງແຖພຣະສຽນໃຫ້ໂລ້ນ ນຳຕະເວນໄປຕາມຖະໜົນ ຕາມຮ່ອມທົ່ວທຸກແຫ່ງດ້ວຍວັຊຊະເພຣີທີ່ມີສຳນຽງຄົມຄາຍ ຄັນແລ້ວສະເດັຈພຣະດຳເນີນເຂົ້າໄປໃກ້ພຣະຊະນົກຊົນນະນີ ພຣະເຈົ້າທີຄີຕິໂກສົລຣາຊໄດ້ທອດພຣະເນຕເຫັນທີຄາວຸກຸມາຣສະເດັຈດຳເນີນມາແຕ່ໄກ ຄັນແລ້ວໄດ້ຕຣັສພຣະບໍຣົມຣາຊະໂອວາທນີ້ແກ່ທີຄາວຸກຸມາຣວ່າ:

ທີຄາວຸ! ເຈົ້າຢ່າເຫັນແກ່ຍາວ ເຈົ້າຢ່າເຫັນແກ່ສັ້ນ ເວຣທັງຫລາຍຍ່ອມບໍ່ຣະງັບເພາະການຈ່ອງເວຣເລີຍ ແຕ່ຍ່ອມຣະງັບໄດ້ເພາະການບໍ່ຈ່ອງເວຣ.

ເມື່ອພຣະອົງຄ໌ຕຣັສຢ່າງນີ້ແລ້ວ ເຈົ້າພະນັກງານເຫລົ່ານັ້ນໄດ້ທູລຄຳນີ້ແກ່ພຣະອົງຄ໌ວ່າ ພຣະເຈົ້າທີຄີຕິໂກສົລຣາຊນີ້

ເປັນຜູ້ວິກົລຈະຣິຕຈິ່ງບິ່ນເພີ້ຢູ່ ທີຄາວຸຂອງພຣະອົງຄ໌ຄືໃຜ ພຣະອົງຄ໌ຕຣັສຢ່າງນີ້ກັບໃຜວ່າ ທີຄາວຸ ເຈົ້າຢ່າເຫັນແກ່ຍາວ ເຈົ້າຢ່າເຫັນແກ່ສັ້ນ ເວຣທັງຫລາຍຍ່ອມບໍ່ຣະງັບເພາະການຈ່ອງເວຣເລີຍ ແຕ່ຍ່ອມຣະງັບໄດ້ເພາະການບໍ່ຈ່ອງເວຣ.

ພຣະເຈົ້າທີຄີຕິໂກສົລຣາຊຕຣັສວ່າ ທ່ານທັງຫລາຍ ເຮົາບໍ່ໄດ້ເສຍຈະຣິຕບິ່ນເພີ້ຢູ່ ແຕ່ຜູ້ໃດຮູ້ເຣື່ອງ ຜູ້ນັ້ນຈັກເຂົ້າໃຈ.

ພຣະເຈົ້າທີຄີຕິໂກສົລຣາຊໄດ້ຕຣັສພຣະບໍຣົມຣາຊະໂອວາທນີ້ແກ່ທີຄາວຸກຸມານເປັນຄັ້ງທີສອງວ່າ:

ທີຄາວຸ! ເຈົ້າຢ່າເຫັນແກ່ຍາວ ເຈົ້າຢ່າເຫັນແກ່ສັ້ນ ເວຣທັງຫລາຍຍ່ອມບໍ່ຣະງັບເພາະການຈ່ອງເວຣເລີຍ ແຕ່ຍ່ອມຣະງັບໄດ້ເພາະການບໍ່ຈ່ອງເວຣ.

ເມື່ອພຣະອົງຄ໌ຕຣັສຢ່າງນີ້ແລ້ວ ເຈົ້າພະນັກງານເຫລົ່ານັ້ນໄດ້ທູລຄຳນີ້ແກ່ພຣະອົງຄ໌ວ່າ ພຣະເຈົ້າທີຄີຕິໂກສົລຣາຊນີ້ເປັນຜູ້ວິກົລຈະຣິຕຈິ່ງບິ່ນເພີ້ຢູ່ ທີຄາວຸຂອງພຣະອົງຄ໌ຄືໃຜ ພຣະອົງຄ໌ຕຣັສຢ່າງນີ້ກັບໃຜວ່າ ທີຄາວຸ ເຈົ້າຢ່າເຫັນແກ່ຍາວ ເຈົ້າຢ່າເຫັນແກ່ສັ້ນ ເວຣທັງຫລາຍຍ່ອມບໍ່ຣະງັບ

ເພາະການຈ່ອງເວຣເລີຍ ແຕ່ຍ່ອມຣະງັບໄດ້ເພາະການບໍ່ຈ່ອງເວຣ.

ພຣະເຈົ້າທີຄີຕິໂກສົລຣາຊຕຣັສວ່າ ທ່ານທັງຫລາຍ ເຮົາບໍ່ໄດ້ເສຍຈະຣິຕບົ່ນເພີ້ຢູ່ ແຕ່ຜູ້ໃດຮູ້ເຣື່ອງ ຜູ້ນັ້ນຈັກເຂົ້າໃຈ.

ພຣະເຈົ້າທີຄີຕິໂກສົລຣາຊໄດ້ຕຣັສພຣະບໍຣິມຣາຊະໂອວາຫນີ້ແກ່ທີຄາວຸກຸມານເປັນຄັ້ງທີສາມວ່າ:

ທີຄາວຸ! ເຈົ້າຢ່າເຫັນແກ່ຍາວ ເຈົ້າຢ່າເຫັນແກ່ສັ້ນ ເວຣທັງຫລາຍຍ່ອມບໍ່ຣະງັບເພາະການຈ່ອງເວຣເລີຍ ແຕ່ຍ່ອມຣະງັບໄດ້ເພາະການບໍ່ຈ່ອງເວຣ.

ເມື່ອພຣະອົງຄ໌ຕຣັສຢ່າງນີ້ແລ້ວ ເຈົ້າພະນັກງານເຫລົ່ານັ້ນໄດ້ທູລຄຳນີ້ແກ່ພຣະອົງຄ໌ວ່າ ພຣະເຈົ້າທີຄີຕິໂກສົລຣາຊນີ້ເປັນຜູ້ວິກົລຈະຣິຕຈິ່ງບົ່ນເພີ້ຢູ່ ທີຄາວຸຂອງພຣະອົງຄ໌ຄືໃຜ ພຣະອົງຄ໌ຕຣັສຢ່າງນີ້ກັບໃຜວ່າ ທີຄາວຸ ເຈົ້າຢ່າເຫັນແກ່ຍາວ ເຈົ້າຢ່າເຫັນແກ່ສັ້ນ ເວຣທັງຫລາຍຍ່ອມບໍ່ຣະງັບເພາະການຈ່ອງເວຣເລີຍ ແຕ່ຍ່ອມຣະງັບໄດ້ເພາະການບໍ່ຈ່ອງເວຣ.

ພຣະເຈົ້າທີຄີຕິໂກສົລຣາຊຕຣັສວ່າ ທ່ານທັງຫລາຍ ເຮົາບໍ່ໄດ້ເສຍຈະຣິຕບົ່ນເພີ້ຍູ່ ແຕ່ຜູ້ໃດຮູ້ເຣື່ອງ ຜູ້ນັ້ນຈັກເຂົ້າໃຈ.

ພະນັກງານເຫລົ່ານັ້ນໄດ້ນຳພຣະເຈົ້າທີຄີຕິໂກສົລຣາຊພ້ອມກັບພຣະມະເຫສີໄປຕາມຖະໜົນ ຕາມຮ່ອມທົ່ວທຸກແຫ່ງ ແລ້ວໃຫ້ອອກໄປທາງປະຕູດ້ານທັກຂິນ ຮັ່ນໂຕອອກເປັນ ໔ ທ່ອນ ວາງຮຽງໄວ້ໃນຂຸມ ໔ ທິສທາງດ້ານທັກຂິນແຫ່ງພຣະນະຄອຣ ວາງຍາມຄອຍລະວັງເຫຕການໄວ້ແລ້ວກັບໄປ.

ຄັ້ງນັ້ນ ທີຄາວຸຣາຊະກຸມາຣເຂົ້າໄປສູ່ພຣະນະຄອຣພາຣານະສີ ນຳສຸຣາມາລ້ຽງພວກເຈົ້າໜ້າທີ່ທີ່ຢູ່ຍາມ ເມື່ອເວລາທີ່ຄືນເຫລົ່ານັ້ນເມົາຟຸບລົງ ທີຄາວຸຣາຊະກຸມາຣຈິ່ງຈັດຫາຟືນມາວາງຮຽງກັນໄວ້ ຍົກພຣະບໍຣົມສົບຂອງພຣະຊະນົກຊົນນະນີຂຶ້ນສູ່ພຣະຈິຕກາທານ ຖວາຍພຣະເພີງ ແລ້ວປະນົມພຣະຫັຕຖ໌ ກະທຳປະທັກຂິນພຣະຈິຕກາທານ ໓ ຮອບ.

ຂະນະນັ້ນ ພຣະເຈົ້າພຣົມມະທັຕກາສີກະຣາຊປະທັບຢູ່ຊັ້ນເທິງແຫ່ງປາສາທອັນປະເສີດໄດ້ທອດພຣະເນຕເຫັນທີຄາວຸຣາຊະກຸມາຣກຳລັງປະນົມພຣະຫັຕຖ໌ກະທຳປະທັກຂິນພຣະຈິຕກາທານ ໓ ຮອບ ຄັນແລ້ວໄດ້ຊົງດຳຣິວ່າ

ເຈົ້າຄົນນັ້ນຄົງເປັນຍາຕຫລືສາຍໂລຫິຕຂອງພຣະເຈົ້າທີຄີຕິໂກສົລຣາຊແນ່ນອນ ໜ້າກົວ ຈະກໍ່ຄວາມຈິບຫາຍແກ່ເຮົາ ຊ່າງບໍ່ມີໃຜບອກເຮົາເລີຍ.

ຄັ້ງນັ້ນ ທີຄາວຸຣາຊະກຸມາຣສະເດັຈຫລົບເຂົ້າປ່າໄປ ຊົງກັນແສງຮ້ອງໄຫ້ຈົນພໍແກ່ເຫຕ ຊົງຊັບນ້ຳພຣະເນຕ ແລ້ວສະເດັຈເຂົ້າພຣະນະຄອຣພາຣານະສີ ໄປເຖິງໂຮງຊ້າງໃກ້ພຣະບໍຣົມມະຫາຣາຊະວັງ ແລ້ວໄດ້ຕຣັສຄຳນີ້ແກ່ນາຍຫັຕຖາຈາຣຍ໌ວ່າ:

ທ່ານອາຈາຣຍ໌! ຂ້ານ້ອຍປາຖນາຈະສຶກສາສີລະປະ

ນາຍຫັຕຖາຈາຣຍ໌ຕອບວ່າ ຖ້າເຊັ່ນນັ້ນ ເຊີນມາສຶກສາເຖີດເຈົ້າໜຸ່ມນ້ອຍ.

ຢູ່ມາວັນໜຶ່ງ ທີຄາວຸຣາຊະກຸມາຣຊົງຕື່ນບັນທົມຕອນປັຈຈຸສມັຍແຫ່ງຣາຕຣີ ແລ້ວຊົງຂັບຮ້ອງແລະດີດພິນຄໍສຽງເຈີ້ຍແຈ່ວຢູ່ທີ່ໂຮງຊ້າງ.

ພຣະເຈົ້າພຣົມມະທັຕກາສີກະຣາຊຊົງຕື່ນບັນທົມຕອນເວລາປັຈຈຸສມັຍແຫ່ງຣາຕຣີ ໄດ້ຊົງສະດັບສຽງເພງແລະ

ສຽງພິນທີ່ດີດ ຄໍາສຽງອັນເຈື້ອຍແຈ່ວດັງແວ່ວມາທາງໂຮງມຸງຄຸລຫັດຖີ ຈຶ່ງມີພຣະດໍາຣັສຖາມພວກມະຫາດເລັກວ່າ:

ທ່ານທັງຫລາຍ! ໃຜຕື່ນໃນເວລາເຊົ້າມືດແຫ່ງຣາຕຣີແລ້ວຂັບຮ້ອງແລະດີດພິນແວ່ວມາທາງໂຮງຊ້າງ?

ພວກມະຫາດເລັກກຣາບທູລວ່າ ຂໍເດຊະຂ້ານ້ອຍ ຊາຍໜຸ່ມສິດຂອງນາຍຫັດຖາຈາຣຍ໌ຊື່ນັ້ນ ຕື່ນໃນເວລາເຊົ້າມືດແຫ່ງຣາຕຣີແລ້ວ ຂັບຮ້ອງແລະດີດພິນ ຄໍາສຽງເຈື້ອຍແຈ່ວດັງທີ່ໂຮງຊ້າງ ຂ້ານ້ອຍ!

ພຣະເຈົ້າພຣົມມະທັຕກາສີກະຣາຊຕຣັສວ່າ ທ່ານທັງຫລາຍ ຖ້າຢ່າງນັ້ນ ຈົ່ງພາຊາຍໜຸ່ມມາເຝົ້າ ພວກເຂົາທູລຮັບສະໜອງພຣະບໍຣົມຣາຊະອົງການແລ້ວ ພາທີຄາວຸຣາຊະກຸມາຣມາເຝົ້າ ພຣະເຈົ້າພຣົມມະທັຕກາສີກະຣາຊຈຶ່ງໄດ້ຕຣັສຖາມທີຄາວຸຣາຊະກຸມາຣວ່າ:

ເຈົ້າຊາຍໜຸ່ມ! ເຈົ້າຕື່ນໃນເວລາເຊົ້າແຫ່ງຣາຕຣີແລ້ວຂັບຮ້ອງແລະດີດພິນຄໍາສຽງອັນເຈື້ອຍແຈ່ວດັງທາງໂຮງຊ້າງຫລື?

ທີຄາວຸຣາຊະກຸມາຣທູລຮັບວ່າ ເປັນດັ່ງນັ້ນ ຂ້ານ້ອຍ!

ພຣະເຈົ້າພຣົມມະທັຕກາສີກະຣາຊຕຣັສວ່າ ເຈົ້າຊາຍໜຸ່ມ ຖ້າເຊັ່ນນັ້ນ ເຈົ້າຈົ່ງຂັບຮ້ອງແລະດີດພິນໄປ

ທີຄາວຸຣາຊະກຸມາຣທູລຮັບສະໜອງພຣະບໍຣົມຣາຊະອົງ ການວ່າ ເປັນດັ່ງພຣະກະແສຮັບສັ່ງ ຂ້ານ້ອຍ ດັ່ງນັ້ນ ແລ້ວປະສົງຈະໃຫ້ຊົງເປັນທີ່ໂປດປານ ຈົ່ງຂັບຮ້ອງແລະ ດີດພິນດ້ວຍສຽງອັນມ່ວນ.

ພຣະເຈົ້າພຣົມມະທັຕກາສີກະຣາຊຕຣັສວ່າ ເຈົ້າຊາຍໜຸ່ມ ເຈົ້າຈົ່ງຢູ່ຮັບໃຊ້ເຮົາເຖີດ.

ທີຄາວຸຣາຊະກຸມາຣທູລຮັບສະໜອງພຣະບໍຣົມຣາຊະອົງ ການວ່າ ເປັນດັ່ງພຣະກະແສຮັບສັ່ງ ຂ້ານ້ອຍ ດັ່ງນັ້ນ ແລ້ວ ຈົ່ງປະພຶດທຳນອງຕື່ນກ່ອນນອນທີຫລັງ ຄອຍເຝົ້າ ຟັງພຣະຣາຊະດຳຣັສໃຊ້ ປະພຶດໃຫ້ຖືກພຣະອັທທະຍາ ສັຍ ເຈຣະຈາດ້ວຍຖ້ອຍຄຳອັນມ່ວນຕໍ່ພຣະເຈົ້າພຣົມມະ ທັຕກາສີກະຣາຊ.

ຄັນຕໍ່ມາບໍ່ນານ ພຣະອົງຄ໌ຊົງແຕ່ງຕັ້ງທີຄາວຸຣາຊະກຸມາຣ ໄວ້ໃນຕຳແໜ່ງຜູ້ໄວ້ວາງພຣະຣາຊະຫະລະທັຍ ໃກ້ຊິດສະ ໜິດພາຍໃນ.

ຢູ່ມາວັນໜຶ່ງ ພຣະອົງຄ໌ໄດ້ຕຣັສຄຳນີ້ແກ່ທີຄາວຸຣາຊະກຸມາຣວ່າ

ເຈົ້າຊາຍໜຸ່ມ! ເຈົ້າຈົ່ງທຽມຣົຖ ພວກເຮົາຈັກໄປລ່າເນື້ອ

ທີຄາວຸຣາຊະກຸມາຣທູລຮັບສະໜອງພຣະບໍຣົມຣາຊະອົງການວ່າ ເປັນດັ່ງພຣະກະແສຮັບສັ່ງ ຂ້ານ້ອຍ ແລ້ວຈັດທຽມຣົຖໄວ້ສຳເຣັຈ ໄດ້ກຣາບທູລຄຳນີ້ແດ່ພຣະເຈົ້າພຣົມມະທັຕກາສີກະຣາຊວ່າ ຂໍເດຊະ ຣົຖພຣະທີ່ນັ່ງທຽມສຳເຣັຈແລ້ວ ຂ້ານ້ອຍ ບັດນີ້ ຂໍພຣະອົງຄ໌ຊົງພຣະກະຣຸນາໂປດຊາບກາລອັນຄວນເຖີດ ຂ້ານ້ອຍ.

ລຳດັບນັ້ນ ພຣະເຈົ້າພຣົມມະທັຕກາສີກະຣາຊສະເດັຈຂຶ້ນຣາຊະຣົຖ ທີຄາວຸຣາຊະກຸມາຣຂັບຣາຊະຣົຖໄປ ແຕ່ຂັບຣາຊະຣົຖໄປໂດຍວິທີທີ່ໝູ່ເສນາໄດ້ແຍກໄປທາງໜຶ່ງ ຣາຊະຣົຖໄດ້ແຍກໄປອີກທາງໜຶ່ງ ຄັ້ງນັ້ນ ພຣະເຈົ້າພຣົມມະທັຕກາສີກະຣາຊສະເດັຈໄປໄກ ແລ້ວໄດ້ຕຣັສຄຳນີ້ແກ່ທີຄາວຸຣາຊະກຸມາຣວ່າ:

ເຈົ້າຊາຍໜຸ່ມ! ຖ້າເຊັ່ນນັ້ນເຈົ້າຈົ່ງຈອດຣົຖ ເຮົາອິດເມື່ອຍຈັກນອນພັກ.

ທີຄາວຸຣາຊະກຸມາຣທູລຮັບສະໜອງພຣະບໍຣົມຣາຊະອົງ ກາຣວ່າ ເປັນດັ່ງພຣະກະແສຮັບສັ່ງ ຂ້ານ້ອຍ ດັ່ງນັ້ນ ແລ້ວຈອດຣົຖ ນັ່ງຂັດສະມາທິຢູ່ທີ່ພື້ນດິນ ພຣະເຈົ້າພຣົມ ມະທັຕກາສີກະຣາຊຈຶ່ງຊົງພາດພຣະສຽນບັນທົມຢູ່ເທິງຕັກ ຂອງທີຄາວຸຣາຊະກຸມາຣ ເມື່ອພຣະອົງຄ໌ຊົງອິດເມື່ອຍມາ ພຽງຊົ່ວຂະນະດຽວກໍບັນທົມຫລັບ.

ຂະນະນັ້ນ ທີຄາວຸຣາຊະກຸມາຣຄິດເຖິງຄວາມຫລັງວ່າ ພຣະເຈົ້າພຣົມມະທັຕກາສີກະຣາຊນີ້ແລ ຊົງກໍ່ຄວາມ ຈິບຫາຍແກ່ພວກເຮົາມາກມາຍ ພຣະອົງຄ໌ຊົງຊ່ວງ ຊິງຣີ້ພົລ ຣາຊະພາຫະນະ ຊົນບົທ ຄັງສັສຕຣາອາວຸທຍຸທ ທະພັນແລະຄັງທັນຍາຫາຣຂອງພວກເຮົາໄປ ແລະຍັງໄດ້ ປົງພຣະຊົນຊີບພຣະຊະນົກຊົນນະນີຂອງເຮົາອີກດ້ວຍ ເວລານີ້ເປັນເວລາທີ່ເຮົາພົບຄູ່ເວຣ ດັ່ງນີ້ ຈຶ່ງຊັກພຣະແສງ ຂັນອອກຈາກຝັກ ແຕ່ເຈົ້າຊາຍໄດ້ຊົງຍັ້ງພຣະທັຍໄວ້ໄດ້ ທັນທີວ່າ ພຣະຊະນົກໄດ້ຊົງສັ່ງເຮົາໄວ້ເມື່ອໃກ້ສວັນຄົຕວ່າ ທີຄາວຸ ເຈົ້າຢ່າເຫັນແກ່ຍາວ ເຈົ້າຢ່າເຫັນແກ່ສັ້ນ ເວຣ ທັງຫລາຍຍ່ອມບໍ່ຣະງັບເພາະການຈ່ອງເວຣເລີຍ ແຕ່ ຍ່ອມຣະງັບໄດ້ເພາະການບໍ່ຈ່ອງເວຣ ການທີ່ຈະ ລະເມີດພຣະດຳຣັສສັ່ງຂອງພຣະຊະນົກນັ້ນ ບໍ່ສົມຄວນ ແກ່ເຮົາເລີຍ ດັ່ງນີ້ ແລ້ວສອດພຣະແສງຂັນເຂົ້າໄວ້ໃນ ຝັກ.

ທີຄາວຸຣາຊະກຸມາຣຄິດເຖິງຄວາມຫລັງເປັນຄັ້ງທີສອງວ່າ ພຣະເຈົ້າພຣົມມະທັຕກາສິກະຣາຊນີ້ແລ ຊົງກໍ່ຄວາມຈິບຫາຍແກ່ພວກເຮົາມາກມາຍ ພຣະອົງຄ໌ຊົງຊ່ວງຊິງຣີ້ພົລ ຣາຊະພາຫະນະ ຊົນບົທ ຄັງສັສຕຣາອາວຸທຍຸທທະພັນແລະຄັງທັນຍາຫາຣຂອງພວກເຮົາໄປ ແລະຍັງໄດ້ປົງພຣະຊົນຊີບພຣະຊະນົກຊົນນະນີຂອງເຮົາອີກດ້ວຍ ເວລານີ້ເປັນເວລາທີ່ເຮົາພົບຄູ່ເວຣ ດັ່ງນີ້ ຈິ່ງຊັກພຣະແສງຂັນອອກຈາກຝັກ ແຕ່ກໍຊົງຍັ້ງພຣະທັຍໄວ້ໄດ້ທັນທີວ່າ ພຣະຊະນົກໄດ້ຊົງສັ່ງເຮົາໄວ້ເມື່ອໃກ້ສວັນຄົຕວ່າ ທີຄາວຸເຈົ້າຢ່າເຫັນແກ່ຍາວ ເຈົ້າຢ່າເຫັນແກ່ສັ້ນ ເວຣທັງຫລາຍຍ່ອມບໍ່ຣະງັບເພາະການຈ່ອງເວຣເລີຍ ແຕ່ຍ່ອມຣະງັບໄດ້ເພາະການບໍ່ຈ່ອງເວຣ ການທີ່ຈະລະເມີດພຣະດຳຣັສສັ່ງຂອງພຣະຊະນົກນັ້ນ ບໍ່ສົມຄວນແກ່ເຮົາເລີຍ ດັ່ງນີ້ ແລ້ວສອດພຣະແສງຂັນເຂົ້າໄວ້ໃນຝັກ.

ທີຄາວຸຣາຊະກຸມາຣຄິດເຖິງຄວາມຫລັງເປັນທີສາມວ່າ ພຣະເຈົ້າພຣົມມະທັຕກາສິກະຣາຊນີ້ແລ ຊົງກໍ່ຄວາມຈິບຫາຍແກ່ພວກເຮົາມາກມາຍ ພຣະອົງຄ໌ຊົງຊ່ວງຊິງຣີ້ພົລ ຣາຊະພາຫະນະ ຊົນບົທ ຄັງສັສຕຣາອາວຸທຍຸທທະພັນແລະຄັງທັນຍາຫາຣຂອງພວກເຮົາໄປ ແລະຍັງໄດ້ປົງພຣະຊົນຊີບພຣະຊະນົກຊົນນະນີຂອງເຮົາອີກດ້ວຍ ເວລານີ້ເປັນເວລາທີ່ເຮົາພົບຄູ່ເວຣ ດັ່ງນີ້ ຈິ່ງຊັກພຣະແສງ

ຂັນອອກຈາກຝັກ ແຕ່ກໍຊົງຍັ້ງພຣະທັຍໄວ້ໄດ້ທັນທີວ່າ ພຣະຊະນົກໄດ້ຊົງສັ່ງເຮົາໄວ້ເມື່ອໃກ້ສວັນຄົຕວ່າ ທີຄາວຸ ເຈົ້າຢ່າເຫັນແກ່ຍາວ ເຈົ້າຢ່າເຫັນແກ່ສັ້ນ ເວຣທັງຫລາຍ ຍ່ອມບໍ່ຣະງັບເພາະການຈ່ອງເວຣເລີຍ ແຕ່ຍ່ອມຣະງັບໄດ້ ເພາະການບໍ່ຈ່ອງເວຣ ການທີ່ຈະລະເມີດພຣະດຳຣັສສັ່ງ ຂອງພຣະຊະນົກນັ້ນ ບໍ່ສົມຄວນແກ່ເຮົາເລີຍ ດັ່ງນີ້ ແລ້ວ ສອດພຣະແສງຂັນເຂົ້າໄວ້ໃນຝັກຕາມເດີມ.

ຂະນະນັ້ນ ພຣະເຈົ້າພຣົມມະທັຕການສີກະຣາຊຊົງກົວ ຫວາດຫວັ່ນ ສະດຸ້ງພຣະທັຍຟ້າວສະເດັຈລຸກຂຶ້ນ ທີ ຄາວຸຣາຊະກຸມານໄດ້ກາບທູລຄຳນີ້ແດ່ພຣະເຈົ້າພຣົມມະ ທັຕການສີກະຣາຊໃນທັນທີວ່າ:

ຂໍເດຊະ! ເພາະອັນໃດຫລື ພຣະອົງຄ໌ຈຶ່ງຊົງກົວ ຫວາດ ຫວັ່ນ ສະດຸ້ງພຣະທັຍຟ້າວສະເດັຈລຸກຂຶ້ນ ຂ້ານ້ອຍ?

ພຣະເຈົ້າພຣົມມະທັຕການສີກະຣາຊຕຣັສຕອບວ່າ ເຈົ້າຊາຍ ໜຸ່ມ ເຮົາຝັນວ່າ ທີຄາວຸຣາຊະກຸມານໂອຣົສຂອງພຣະເຈົ້າ ທີຄີຕິໂກສົລຣາຊຟາດຟັນເຮົາດ້ວຍພຣະແສງຂັນໃນທີ່ນີ້ ເພາະເຫຕນັ້ນ ເຮົາຈຶ່ງກົວ ຫວາດຫວັ່ນ ຕົກໃຈຟ້າວ ລຸກຂຶ້ນ.

ທັນໃດນັ້ນ ທີຄາວຸຣາຊະກຸມາຣຈັບພຣະສຽນຂອງພຣະເຈົ້າພຣົມມະທັຕກາສີກະຣາຊດ້ວຍພຣະຫັຕຖ໌ຊ້າຍ ຊັກພຣະແສງຂັນດ້ວຍພຣະຫັຕຖ໌ຂວາ ແລ້ວໄດ້ກ່າວຄຳຂູ່ແກ່ພຣະເຈົ້າພຣົມມະທັຕກາສີກະຣາຊວ່າ:

ຂໍເດຊະ! ຂ້ານ້ອຍຄືທີຄາວຸຣາຊະກຸມາຣ ໂອຣົສຂອງພຣະເຈົ້າທີຄີຕິໂກສົລຣາຊຄົນນັ້ນ ພຣະອົງຄ໌ຊົງກໍ່ຄວາມພິນາດຈິບຫາຍແກ່ພວກເຮົາມາກມາຍຄື ຊົງຊ່ວງຊິງຣີ້ພົລ ຣາຊະພາຫະນະ ຊົນບົທ ຄັງສັສຕຣາອາວຸທຍຸທທະພັນແລະຄັງທັນຍາຫາຣຂອງພວກເຮົາໄປ ແລະຍັງໄດ້ປົງພຣະຊົນຊີບພຣະຊະນົກຊົນນະນີຂອງເຮົາອີກດ້ວຍ ເວລານີ້ເປັນເວລາທີ່ຂ້ານ້ອຍພົບຄູ່ເວຣແລ້ວລະ.

ພຣະເຈົ້າພຣົມມະທັຕກາສີກະຣາຊຈຶ່ງຊົບພຣະສຽນລົງແທບຍຸຄົລບາທຂອງທີຄາວຸຣາຊະກຸມາຣ ແລ້ວໄດ້ຕຣັສຄຳວິງວອນແກ່ເຈົ້າຊາຍວ່າ:

ທີຄາວຸ! ເຈົ້າຈົ່ງໃຫ້ຊີວິຕແກ່ເຮົາ ທີຄາວຸ ເຈົ້າຈົ່ງໃຫ້ຊີວິຕແກ່ເຮົາດ້ວຍເຖີດ.

ທີຄາວຸກຣາບທູລວ່າ:

ຂ້ານ້ອຍຫລືຈະເອື້ອມອາດທູລເກົ້າຖວາຍຊີວິຕແກ່ພຣະອົງຄ໌ ພຣະອົງຄ໌ຕ່າງຫາກຄວນພຣະຣາຊະທານຊີວິຕແກ່ຂ້ານ້ອຍ.

ພຣະເຈົ້າພຣົມມະທັຕກາສີກະຣາຊຕຣັສວ່າ:
ທີຄາວຸ! ຖ້າຢ່າງນັ້ນ ເຈົ້າຈົ່ງໃຫ້ຊີວິດແກ່ເຮົາ ແລະເຮົາກໍໃຫ້ຊີວິຕແກ່ເຈົ້າ.

ຄັ້ງນັ້ນ ພຣະເຈົ້າພຣົມມະທັຕກາສີກະຣາຊ ແລະທີຄາວຸຣາຊະກຸມາຣຕ່າງໄດ້ໃຫ້ຊີວິຕແກ່ກັນແລະກັນ ໄດ້ຈັບພຣະຫັຕຖ໌ກັນ ແລະໄດ້ທຳການສາບານ ເພື່ອບໍ່ທຳຮ້າຍກັນ ພຣະເຈົ້າພຣົມມະທັຕກາສີກະຣາຊຈຶ່ງໄດ້ຕຣັສຄຳນີ້ແກ່ທີຄາວຸຣາຊະກຸມາຣວ່າ:

ທີຄາວຸ! ຖ້າເຊັ່ນນັ້ນ ເຈົ້າຈົ່ງທຽມຣົຖໄປກັນເຖີດ.

ທີຄາວຸຣາຊະກຸມາຣທູລຮັບສະໜອງພຣະບໍຣົມຣາຊະອົງການວ່າ ເປັນດັ່ງພຣະກະແສຮັບສັ່ງ ຂ້ານ້ອຍ ດັ່ງນັ້ນແລ້ວ ທຽມຣົຖ ໄດ້ກຣາບທູລພຣະເຈົ້າພຣົມມະທັຕກາສີກະຣາຊວ່າ:

ຣິຖພຣະທີ່ນັ່ງຫຼຽມສຳເຣັຈແລ້ວ ຂ້ານ້ອຍ ບັດນີ້ ຂໍພຣະອົງຄ໌ໂປດຊົງຊາບກາລອັນຄວນເຖີດ ຂ້ານ້ອຍ!

ພຣະເຈົ້າພຣົມມະທັຕກາສິກະຣາຊຈຶ່ງຊົງສະເດັຈຂຶ້ນຣົຖແລ້ວທີຄາວຸຣາຊະກຸມາຣກໍຂັບຣົຖໄປ ໂດຍວິທີທີ່ບໍ່ນານເທົ່າໃດກໍມາພົບກອງທະຫານ ຄັນພຣະເຈົ້າພຣົມມະທັຕກາສິກະຣາຊສະເດັຈເຂົ້າສູ່ພຣະນະຄອຣພາຣານະສີແລ້ວຊົງພຣະກະຣຸນາໂປດໃຫ້ຮຽກປະຊຸມໝູ່ອຳມາຕ ຣາຊະບໍຣິສັທ ໄດ້ຕຣັສຖາມຄວາມໃນຂໍ້ນີ້ວ່າ:

ທ່ານທັງຫລາຍ! ຖ້າທ່ານທັງຫລາຍພົບທີຄາວຸຣາຊະກຸມາຣໂອຣົສຂອງພຣະເຈົ້າທີຄີຕິໂກສົລຣາຊ ຈະເຮັດແນວໃດກັບເຂົາ?

ອຳມາຕບາງພວກກຣາບທູລວ່າ ຂໍເດຊະ ພວກຂ້ານ້ອຍຈະຕັດມື ຕັດເທົ້າ ຕັດທັງມືທັງເທົ້າ ຈະຕັດຫູ ຈະຕັດດັງຈະຕັດທັງຫູທັງດັງ ຈະຕັດຫົວ ຂ້ານ້ອຍ!

ພຣະເຈົ້າພຣົມມະທັຕກາສິກະຣາຊຕຣັສວ່າ: ທ່ານທັງຫລາຍ ຊາຍໜຸ່ມຜູ້ນີ້ແລຄື ທີຄາວຸຣາຊະກຸມາຣ ໂອຣົສຂອງພຣະເຈົ້າທີຄີຕິໂກສົລຣາຊຄົນນັ້ນ ຊາຍໜຸ່ມຜູ້ນີ້ໃຜໆຈະທຳອັນໃດບໍ່ໄດ້ ເພາະຊາຍໜຸ່ມຜູ້ນີ້ໄດ້ໃຫ້ຊີວິຕແກ່ເຮົາ

ແລະເຮົາກໍໄດ້ໃຫ້ຊີວິຕແກ່ຊາຍໜຸ່ມຜູ້ນີ້ ຄັນແລ້ວໄດ້ຕຣັສຖາມຄວາມຂໍ້ນີ້ແກ່ທີຄາວຸຣາຊະກຸມາຣວ່າ:

ທີຄາວຸ! ພຣະຊະນົກຂອງເຈົ້າໄດ້ຕຣັສຖ້ອຍຄໍາໄວ້ເມື່ອໃກ້ຈະສວັນຄົຕວ່າ ທີຄາວຸ! ເຈົ້າຢ່າເຫັນແກ່ຍາວ ເຈົ້າຢ່າເຫັນແກ່ສັ້ນ ເວຣທັງຫລາຍຍ່ອມບໍ່ຣະງັບເພາະການຈ່ອງເວຣເລີຍ ແຕ່ຍ່ອມຣະງັບໄດ້ເພາະການບໍ່ຈ່ອງເວຣ ດັ່ງນີ້ ພຣະຊະນົກຂອງເຈົ້າໄດ້ຕຣັສຄໍານັ້ນ ໝາຍຄວາມວ່າຢ່າງໃດ?

ທີຄາວຸຣາຊະກຸມາຣກຣາບທູລວ່າ: ຂໍເດຊະ ພຣະຊະນົກຂອງຂ້ານ້ອຍໄດ້ຕຣັສພຣະບໍຣົມຣາໂຊວາທໄວ້ເມື່ອໃກ້ສວັນຄົຕວ່າ ເຈົ້າຢ່າເຫັນແກ່ຍາວ ດັ່ງນີ້ ໝາຍຄວາມວ່າເຈົ້າຢ່າໄດ້ຈ່ອງເວຣໃຫ້ຍືດເຍື້ອ ເພາະສະນັ້ນ ພຣະຊະນົກຂອງຂ້ານ້ອຍຈຶ່ງໄດ້ຕຣັສພຣະບໍຣົມຣາໂຊວາທໄວ້ເມື່ອໃກ້ສວັນຄົຕວ່າ ເຈົ້າຢ່າເຫັນແກ່ຍາວ.

ພຣະຊະນົກຂອງຂ້ານ້ອຍໄດ້ຕຣັສພຣະບໍຣົມຣາໂຊວາທໄວ້ເມື່ອໃກ້ສວັນຄົຕວ່າ ເຈົ້າຢ່າເຫັນແກ່ສັ້ນ ດັ່ງນີ້ ໝາຍຄວາມວ່າ ເຈົ້າຢ່າແຕກແຍກຈາກມິຕໄວຫລາຍ ເພາະສະນັ້ນ ພຣະຊະນົກຂອງຂ້ານ້ອຍຈຶ່ງໄດ້ຕຣັສພຣະ

ບໍຣິມຣາໂຊວາທໄວ້ເມື່ອໃກ້ສວັນຄົຕວ່າ ເຈົ້າຢ່າເຫັນແກ່ສັ້ນ.

ພຣະຊະນົກຂອງຂ້ານ້ອຍໄດ້ຕຣັສພຣະບໍຣິມຣາໂຊວາທໄວ້ເມື່ອໃກ້ສວັນຄົຕວ່າ ທີຄາວຸ ເວຣທັງຫລາຍຍ່ອມບໍ່ຣະງັບເພາະການຈ່ອງເວຣເລີຍ ແຕ່ຍ່ອມຣະງັບໄດ້ເພາະການບໍ່ຈ່ອງເວຣ ດັ່ງນີ້ ໝາຍຄວາມວ່າ ພຣະຊະນົກຊົນນະນີຂອງຂ້ານ້ອຍຖືກພຣະອົງຄ໌ປົງພຣະຊົນຊີບຂອງພຣະອົງຄ໌ ຄົນເຫລົ່າໃດໃຝ່ໃນຄວາມຈະເຣີນຂອງພຣະອົງຄ໌ ຄົນເຫລົ່ານັ້ນຈະປົງຊີວິຕຂອງຂ້ານ້ອຍ ຄົນເຫລົ່າໃດໃຝ່ໃນຄວາມຈະເຣີນຂອງຂ້ານ້ອຍ ຄົນເຫລົ່ານັ້ນຈະປົງຊີວິຕຄົນເຫລົ່ານັ້ນ ເມື່ອເປັນເຊັ່ນນີ້ ເວຣນັ້ນຍ່ອມບໍ່ຣະງັບເພາະເວຣ ແຕ່ມາບັດນີ້ ພຣະອົງຄ໌ຊົງພຣະກະຣຸນາໂປດພຣະຣາຊະທານຊີວິຕແກ່ຂ້ານ້ອຍ ແລະຂ້ານ້ອຍກໍໄດ້ທູລຖວາຍພຣະຊົນຊີບແກ່ພຣະອົງຄ໌ ເປັນອັນວ່າເວຣນັ້ນຣະງັບແລ້ວ ເພາະການບໍ່ຈ່ອງເວຣ.

ພຣະຊະນົກຂອງຂ້ານ້ອຍຈຶ່ງໄດ້ຕຣັສພຣະບໍຣິມຣາໂຊວາທອັນນີ້ແລໄວ້ເມື່ອໃກ້ຈະສວັນຄົຕວ່າ: ທີຄາວຸ ເວຣທັງຫລາຍຍ່ອມບໍ່ຣະງັບເພາະການຈ່ອງເວຣເລີຍ ແຕ່ຍ່ອມຣະງັບໄດ້ເພາະການບໍ່ຈ່ອງເວຣ ຂ້ານ້ອຍ!

ລຳດັບນັ້ນ ພຣະເຈົ້າພຣົມມະທັຕກາສີກະຣາຊຕຣັສວ່າ ທ່ານຜູ້ຈະເຣີນທັງຫລາຍ ໜ້າອັສສະຈັນຍ໌ຫລາຍ ບໍ່ເຄີຍມີເລີຍ ທີ່ຄາວຸຣາຊະກຸມານນີ້ເປັນບັນດິຕ ຈຶ່ງໄດ້ເຂົ້າໃຈເນື້ອຄວາມແຫ່ງພາສິຕອັນພຣະຊະນົກຕຣັສແລ້ວໂດຍຫຍໍ້ໄດ້ໂດຍພິສດານ ແລ້ວຊົງພຣະກະຣຸນາໂປດພຣະຣາຊທານຄືນຣີ້ພົລ ຣາຊະພາຫະນະ ຊົນບົທ ຄັງສັສຕຣາອາວຸທຍຸທທະພັນແລະຄັງທັນຍາຫານອັນເປັນພຣະຣາຊະສົມບັດຂອງພຣະຊະນົກ ແລະໄດ້ພຣະຣາຊະທານພຣະຣາຊະທິສາອະພິເສກສົມຣົສດ້ວຍ.

ພິກຂຸທັງຫລາຍ! ຂັນຕິ ໂສຣັຈຈະ ເຫັນປານນີ້ ໄດ້ມີແລ້ວແກ່ພຣະຣາຊາເຫລົ່ານັ້ນ ຜູ້ຖືອາດຍາ ຜູ້ຖືສັສຕຣາ ກໍການທີ່ພວກເຈົ້າທັງຫລາຍບວດໃນທັມວິນັຍ ອັນເຮົາກ່າວດີແລ້ວຢ່າງນີ້ ມີຄວາມອົດທົນແລະສງົບສະຫງ່ຽມນັ້ນ ກໍຍ່ອມງົດງາມໃນທັມວິນັຍນີ້.

ພຣະຜູ້ມີພຣະພາຄໄດ້ຕຣັສຄຳນີ້ແກ່ພິກຂຸເຫລົ່ານັ້ນເປັນຄັ້ງທີສາມວ່າ:

ຢ່າເລີຍ ພິກຂຸທັງຫລາຍ ພວກເຈົ້າທັງຫລາຍຢ່າບາດໝາງ ຢ່າຜິດຖຽງ ຢ່າແຍ້ງຊີງ ຢ່າວິວາທກັນເລີຍ.

ພິກຂຸອະທັມມະວາທີນັ້ນໄດ້ກຣາບທູລຄຳນີ້ແດ່ພຣະຜູ້ມີພຣະພາຄເປັນຄັ້ງທີສາມວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ຂໍພຣະຜູ້ມີພຣະພາຄຜູ້ເປັນເຈົ້າຂອງແຫ່ງທັມ ຈົ່ງຊົງກະຣຸນາລໍກ່ອນ ຂໍພຣະຜູ້ມີພຣະພາຄຈົ່ງຊົງມີຄວາມຂົນຂວາຍນ້ອຍ ປະກອບສຸຂະວິຫານໃນປັຈຈຸບັນຢູ່ເຖີດ ພວກຂ້ານ້ອຍຈັກປາກົຕດ້ວຍຄວາມບາດໝາງ ດ້ວຍຄວາມຜິດຖຽງ ດ້ວຍຄວາມແຍ້ງຊີງດ້ວຍການວິວາທນັ້ນ.

ພຣະຜູ້ມີພຣະພາຄຈຶ່ງຊົງດຳຣິວ່າ:

ໂມຄະບຸຣຸສເຫລົ່ານີ້ຫົວດື້ຫລາຍແລ ເຮົາຈະໃຫ້ໂມຄະບຸຣຸສເຫລົ່ານີ້ເຂົ້າໃຈກັນ ກະທຳບໍ່ໄດ້ງ່າຍເລີຍ ແລ້ວສະເດັຈລຸກຈາກອາສະນະກັບໄປ.

---

*ວິນັຍປິດົກ ມະຫາວັຄ ພາຄ ໔ ເຫລັ້ມ ៥/໔໕໑-໔໖໔/໔໔໔-໔໔໕*



# ທັມປະຣິຍາຍທີ່ຄວນນ້ອມເຂົ້າມາໃນຕົນ

ສມັຍໜຶ່ງ ພຣະຜູ້ມີພຣະພາຄສະເດັຈທ່ຽວຈາຣິກໄປໃນໂກສົລຊົນບົທພ້ອມດ້ວຍພິກຂຸສົງຄ໌ໝູ່ໃຫຍ່ ສະເດັຈເຖິງພຣາມມະນະຄາມຂອງຊາວໂກສົລຊື່ ເວລຸທະວາຣະ.

ພຣາມແລະຄະຫະບໍດີຊາວເວລຸທະວາຣະໄດ້ສະດັບຂ່າວວ່າ ພຣະສະມະນະໂຄດົມຜູ້ເປັນໂອຣົສຂອງເຈົ້າສາກະຍະສະເດັຈອອກຜະນວດຈາກສາກະຍະສະກຸລ ສະເດັຈທ່ຽວຈາຣິກໄປໃນໂກສົລຊົນບົທພ້ອມດ້ວຍພິກຂຸສົງຄ໌ໝູ່ໃຫຍ່ ສະເດັຈເຖິງເວລຸທະວາຣະຄາມແລ້ວ ກໍກິຕຕິສັພອັນງາມຂອງທ່ານພຣະໂຄດົມພຣະອົງຄ໌ນັ້ນຂະຈອຣໄປຢ່າງນີ້ວ່າ:

ເພາະເຫຕຢ່າງນີ້ໆ ພຣະຜູ້ມີພຣະພາຄພຣະອົງຄ໌ນັ້ນ ເປັນພຣະອະຣະຫັນຕ໌ ຕຣັສຮູ້ເອງໂດຍຊອບ ເຖິງພ້ອມດ້ວຍວິຊຊາແລະຈະຣະນະ ສະເດັຈໄປດີແລ້ວ ຊົງຮູ້ແຈ້ງໂລກ ເປັນສາຣະຖີຝຶກບຸຣຸສທີ່ຄວນຝຶກບໍ່ມີໃຜຍິ່ງກວ່າ ເປັນສາສດາຂອງເທວະດາແລະມະນຸສທັງຫລາຍ ເປັນຜູ້ເບີກບານແລ້ວ ເປັນຜູ້ຈຳແນກທັມ. ພຣະສະມະນະໂຄດົມພຣະອົງຄ໌ນັ້ນ ຊົງກະທຳໂລກນີ້ພ້ອມທັງເທວະໂລກ ມາຣໂລກ ພຣົມມະໂລກໃຫ້ແຈ້ງຊັດດ້ວຍພຣະປັນຍາອັນຍິ່ງເອງແລ້ວ ຊົງສອນໝູ່ສັຕ ພ້ອມທັງສະມະນະພຣາມເທວະດາແລະມະນຸສໃຫ້ຮູ້ຕາມ ພຣະອົງຄ໌ຊົງສະແດງທັມງາມໃນເບື້ອງຕົ້ນ ງາມໃນທ່າມກາງ ງາມໃນທີ່ສຸດ ຊົງປະກາສພຣົມມະຈັນຍ໌ພ້ອມທັງອັຕຖະ ພ້ອມທັງພະຍັນຊະນະບໍຣິສຸທ ບໍຣິບູນສິ້ນເຊີງ ກໍການໄດ້ເຫັນພຣະອະຣະຫັນຕ໌ເຫັນປານນັ້ນເປັນການດີ.

ຄັ້ງນັ້ນ ພຣາມແລະຄະຫະບໍດີຊາວເວລຸທະວາຣະຄາມໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ບາງພວກອະພິວາທພຣະຜູ້ມີພຣະພາຄ ບາງພວກໄດ້ປາສັຍກັບພຣະຜູ້ມີພຣະພາຄ ບາງພວກປະນົມມືອັນຊະລີໄປທາງພຣະຜູ້ມີພຣະພາຄ ບາງພວກປະກາສຊື່ແລະໂຄຕໃນສຳນັກຂອງພຣະຜູ້ມີພຣະພາຄແລ້ວນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ຄັນແລ້ວໄດ້ກຣາບທູລພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະໂຄດົມຜູ້ຈະເຣີນ! ພວກຂ້ານ້ອຍທັງຫລາຍມີຄວາມປາຖນາ ມີຄວາມພໍໃຈ ມີຄວາມປະສົງຢ່າງນີ້ໆວ່າ ຂໍເຮົາທັງຫລາຍຈົ່ງແອອັດໄປດ້ວຍບຸຕຢູ່ຄອງເຮືອນ ໄດ້ລູບທາແກ່ນຈັນທີ່ເຂົານຳມາຈາກແຄວັນກາສີ ໄດ້ປະດັບມາລາຂອງຫອມແລະເຄື່ອງລູບທາ ມີຄວາມຍິນດີເງິນແລະຄຳ ເມື່ອແຕກກາຍຕາຍໄປ ຂໍໄດ້ເຂົ້າເຖິງສຸຄະຕິໂລກສວັນ. ພວກຂ້ານ້ອຍທັງຫລາຍຈະແອອັດໄປດ້ວຍບຸຕຢູ່ຄອງເຮືອນ ໄດ້ລູບທາແກ່ນຈັນທີ່ເຂົານຳມາຈາກແຄວັນກາສີ ໄດ້ປະດັບມາລາຂອງຫອມແລະເຄື່ອງລູບທາຍິນດີເງິນແລະຄຳ ເມື່ອແຕກກາຍຕາຍໄປ ຍ່ອມເຂົ້າເຖິງສຸຄະຕິໂລກສວັນໄດ້ດ້ວຍປະການໃດ ຂໍທ່ານພຣະໂຄດົມໂປດຊົງສະແດງທັມດ້ວຍປະການນັ້ນແກ່ພວກຂ້ານ້ອຍທັງຫລາຍຜູ້ມີຄວາມປາຖນາ ມີຄວາມພໍໃຈ ມີຄວາມປະສົງຢ່າງນັ້ນໆເຖີດ.

ພຣາມແລະຄະຫະບໍດີທັງຫລາຍ! ເຮົາຈັກສະແດງທັມປະຣິຍາຍທີ່ຄວນນ້ອມເຂົ້າມາໃນຕົນແກ່ທ່ານທັງຫລາຍທ່ານທັງຫລາຍຈົ່ງຟັງທັມປະຣິຍາຍນັ້ນ ຈົ່ງໃສ່ໃຈໃຫ້ດີເຮົາຈັກກ່າວ.

ພຣາມແລະຄະຫະບໍດີຊາວເວລຸທະວາຣະຄາມທູລຮັບພຣະດໍາຣັສພຣະຜູ້ມີພຣະພາຄແລ້ວ ພຣະຜູ້ມີພຣະພາຄໄດ້ຕຣັສວ່າ:

ພຣາມແລະຄະຫະບໍດີທັງຫລາຍ! ທັມປະຣິຍາຍທີ່ຄວນນ້ອມເຂົ້າມາໃນຕົນເປັນຢ່າງໃດ?

ພຣາມແລະຄະຫະບໍດີທັງຫລາຍ! ອະຣິຍະສາວົກໃນທັມວິນັຍນີ້ ຍ່ອມພິຈາຣະນາເຫັນດັ່ງນີ້ວ່າ ເຮົາຢາກເປັນຢູ່ ບໍ່ຢາກຕາຍ ຮັກສຸຂ ລັງກຽດທຸກຂ໌ ຜູ້ໃດຈະປົງຊີວິຕຂອງເຮົາຜູ້ຢາກເປັນຢູ່ ບໍ່ຢາກຕາຍ ຮັກສຸຂ ລັງກຽດທຸກຂ໌ ຂໍ້ນັ້ນບໍ່ເປັນທີ່ຮັກທີ່ພໍໃຈຂອງເຮົາເລີຍ ອີກຢ່າງໜຶ່ງ ເຮົາຈະປົງຊີວິຕຂອງຜູ້ອື່ນຜູ້ຢາກເປັນຢູ່ ບໍ່ຢາກຕາຍ ຮັກສຸຂ ລັງກຽດທຸກຂ໌ ຂໍ້ນັ້ນກໍບໍ່ເປັນທີ່ຮັກທີ່ພໍໃຈຂອງຜູ້ອື່ນ ທັມຂໍ້ໃດບໍ່ເປັນທີ່ຮັກທີ່ພໍໃຈຂອງເຮົາ ທັມຂໍ້ນັ້ນ ກໍບໍ່ເປັນທີ່ຮັກທີ່ພໍໃຈຂອງຜູ້ອື່ນ ທັມຂໍ້ໃດບໍ່ເປັນທີ່ຮັກທີ່ພໍໃຈຂອງເຮົາ ເຮົາຈະປະກອບຜູ້ອື່ນໄວ້ດ້ວຍທັມຂໍ້ນັ້ນໄດ້ຢ່າງໃດ. ອະຣິຍະສາວົກນັ້ນພິຈາຣະນາເຫັນດັ່ງນີ້ແລ້ວ ຕົນເອງຍ່ອມງົດເວັ້ນຈາກປານາຕິບາຕດ້ວຍ, ຊັກຊວນຜູ້ອື່ນໃຫ້ງົດເວັ້ນຈາກປານາຕິບາຕດ້ວຍ, ກ່າວສັນລະເສີນຄຸນແຫ່ງການງົດເວັ້ນຈາກປານາຕິບາຕດ້ວຍ, ກາຍສະມາຈາຣຂອງອະຣິຍະສາວົກນັ້ນຍ່ອມບໍຣິສຸທໂດຍສ່ວນສາມຢ່າງນີ້.

ພຣາມແລະຄະຫະບໍດີທັງຫລາຍ! ອີກປະການໜຶ່ງ ອະຣິຍະສາວົກຍ່ອມພິຈາຣະນາເຫັນດັ່ງນີ້ວ່າ ຜູ້ໃດຖືເອົາສິ່ງຂອງທີ່ເຮົາບໍ່ໄດ້ໃຫ້ດ້ວຍອາການແຫ່ງຂະໂມຍ ຂໍ້ນັ້ນບໍ່ເປັນທີ່ຮັກທີ່ພໍໃຈຂອງເຮົາເລີຍ ອີກຢ່າງໜຶ່ງ ເຮົາຈະຖືເອົາສິ່ງຂອງທີ່ຜູ້ອື່ນບໍ່ໄດ້ໃຫ້ດ້ວຍອາການແຫ່ງຂະໂມຍ ຂໍ້ນັ້ນກໍບໍ່ເປັນທີ່ຮັກທີ່ພໍໃຈຂອງຜູ້ອື່ນ ທັມຂໍ້ໃດບໍ່ເປັນທີ່ຮັກທີ່ພໍໃຈຂອງເຮົາ ທັມຂໍ້ນັ້ນ ກໍບໍ່ເປັນທີ່ຮັກທີ່ພໍໃຈຂອງຜູ້ອື່ນ ທັມຂໍ້ໃດບໍ່ເປັນທີ່ຮັກທີ່ພໍໃຈຂອງເຮົາ ເຮົາຈະປະກອບຜູ້ອື່ນໄວ້ດ້ວຍທັມຂໍ້ນັ້ນໄດ້ຢ່າງໃດ. ອະຣິຍະສາວົກນັ້ນພິຈາຣະນາເຫັນດັ່ງນີ້ແລ້ວ ຕົນເອງຍ່ອມງົດເວັ້ນຈາກອະທິນນາທານດ້ວຍ, ຊັກຊວນຜູ້ອື່ນໃຫ້ງົດເວັ້ນຈາກອະທິນນາທານດ້ວຍ, ກ່າວສັນລະເສີນຄຸນແຫ່ງການງົດເວັ້ນຈາກອະທິນນາທານດ້ວຍ, ກາຍສະມາຈານຂອງອະຣິຍະສາວົກນັ້ນຍ່ອມບໍຣິສຸທໂດຍສ່ວນສາມຢ່າງນີ້.

ພຣາມແລະຄະຫະບໍດີທັງຫລາຍ! ອີກປະການໜຶ່ງ ອະຣິຍະສາວົກຍ່ອມພິຈາຣະນາເຫັນດັ່ງນີ້ວ່າ ຜູ້ໃດປະພຶດຜິດໃນພັລຍາຂອງເຮົາ ຂໍ້ນັ້ນບໍ່ເປັນທີ່ຮັກທີ່ພໍໃຈຂອງເຮົາເລີຍ ອີກຢ່າງໜຶ່ງ ເຮົາຈະປະພຶດຜິດໃນພັລຍາຂອງຜູ້ອື່ນ ຂໍ້ນັ້ນກໍບໍ່ເປັນທີ່ຮັກທີ່ພໍໃຈຂອງຜູ້ອື່ນ ທັມຂໍ້ໃດບໍ່ເປັນທີ່ຮັກທີ່ພໍໃຈຂອງເຮົາ ທັມຂໍ້ນັ້ນ ກໍບໍ່ເປັນທີ່ຮັກທີ່ພໍໃຈຂອງຜູ້ອື່ນ ທັມຂໍ້ໃດບໍ່ເປັນທີ່ຮັກທີ່ພໍໃຈຂອງເຮົາ ເຮົາຈະປະກອບຜູ້

ອື່ນໄວ້ດ້ວຍທັມຂໍ້ນັ້ນໄດ້ຢ່າງໃດ. ອະຣິຍະສາວົກນັ້ນພິຈາຣະນາເຫັນດັ່ງນີ້ແລ້ວ ຕົນເອງຍ່ອມງົດເວັ້ນຈາກກາເມສຸມິຈສາຈາຣດ້ວຍ, ຊັກຊວນຜູ້ອື່ນໃຫ້ງົດເວັ້ນຈາກກາເມສຸມິຈສາຈາຣດ້ວຍ, ກ່າວສັນລະເສີນຄຸນແຫ່ງການງົດເວັ້ນຈາກກາເມສຸມິຈສາຈາຣດ້ວຍ, ກາຍສະມາຈາຣຂອງອະຣິຍະສາວົກນັ້ນຍ່ອມບໍຣິສຸທໂດຍສ່ວນສາມຢ່າງນີ້.

ພຣາມແລະຄະຫະບໍດີທັງຫລາຍ! ອີກປະການໜຶ່ງ ອະຣິຍະສາວົກຍ່ອມພິຈາຣະນາເຫັນດັ່ງນີ້ວ່າ ຜູ້ໃດຈະທຳລາຍປະໂຍຊນ໌ຂອງເຮົາດ້ວຍການກ່າວຕົວະ ຂໍ້ນັ້ນບໍ່ເປັນທີ່ຮັກທີ່ພໍໃຈຂອງເຮົາເລີຍ ອີກຢ່າງໜຶ່ງ ເຮົາຈະທຳລາຍປະໂຍຊນ໌ຂອງຜູ້ອື່ນດ້ວຍການກ່າວຕົວະ ຂໍ້ນັ້ນກໍບໍ່ເປັນທີ່ຮັກທີ່ພໍໃຈຂອງຜູ້ອື່ນ ທັມຂໍ້ໃດບໍ່ເປັນທີ່ຮັກທີ່ພໍໃຈຂອງເຮົາທັມຂໍ້ນັ້ນ ກໍບໍ່ເປັນທີ່ຮັກທີ່ພໍໃຈຂອງຜູ້ອື່ນ ທັມຂໍ້ໃດບໍ່ເປັນທີ່ຮັກທີ່ພໍໃຈຂອງເຮົາ ເຮົາຈະປະກອບຜູ້ອື່ນໄວ້ດ້ວຍທັມຂໍ້ນັ້ນໄດ້ຢ່າງໃດ. ອະຣິຍະສາວົກນັ້ນພິຈາຣະນາເຫັນດັ່ງນີ້ແລ້ວ ຕົນເອງຍ່ອມງົດເວັ້ນຈາກມຸສາວາທດ້ວຍ, ຊັກຊວນຜູ້ອື່ນໃຫ້ງົດເວັ້ນຈາກມຸສາວາທດ້ວຍ, ກ່າວສັນລະເສີນຄຸນແຫ່ງການງົດເວັ້ນຈາກມຸສາວາທດ້ວຍ, ວະຈີສະມາຈາຣຂອງອະຣິຍະສາວົກນັ້ນຍ່ອມບໍຣິສຸທໂດຍສ່ວນສາມຢ່າງນີ້.

ພຣາມແລະຄະຫະບໍດີທັງຫລາຍ! ອີກປະການໜຶ່ງ ອະຣິຍະສາວົກຍ່ອມພິຈາຣະນາເຫັນດັ່ງນີ້ວ່າ ຜູ້ໃດຈະຍຸຍົງໃຫ້ເຮົາແຕກຈາກມິຕດ້ວຍຄຳສໍ່ສຽດ ຂໍ້ນັ້ນບໍ່ເປັນທີ່ຮັກທີ່ພໍໃຈຂອງເຮົາເລີຍ ອີກຢ່າງໜຶ່ງ ເຮົາຈະຍຸຍົງໃຫ້ຜູ້ອື່ນແຕກຈາກມິຕດ້ວຍຄຳສໍ່ສຽດ ຂໍ້ນັ້ນກໍບໍ່ເປັນທີ່ຮັກທີ່ພໍໃຈຂອງຜູ້ອື່ນ ທັມຂໍ້ໃດບໍ່ເປັນທີ່ຮັກທີ່ພໍໃຈຂອງເຮົາ ທັມຂໍ້ນັ້ນ ກໍບໍ່ເປັນທີ່ຮັກທີ່ພໍໃຈຂອງຜູ້ອື່ນ ທັມຂໍ້ໃດບໍ່ເປັນທີ່ຮັກທີ່ພໍໃຈຂອງເຮົາ ເຮົາຈະປະກອບຜູ້ອື່ນໄວ້ດ້ວຍທັມຂໍ້ນັ້ນໄດ້ຢ່າງໃດ. ອະຣິຍະສາວົກນັ້ນພິຈາຣະນາເຫັນດັ່ງນີ້ແລ້ວ ຕົນເອງຍ່ອມງົດເວັ້ນຈາກປິສຸນາວາຈາດ້ວຍ, ຊັກຊວນຜູ້ອື່ນໃຫ້ງົດເວັ້ນຈາກປິສຸນາວາຈາດ້ວຍ, ກ່າວສັນລະເສີນຄຸນແຫ່ງການງົດເວັ້ນຈາກປິສຸນາວາຈາດ້ວຍ, ວະຈີສະມາຈານຂອງອະຣິຍະສາວົກນັ້ນຍ່ອມບໍຣິສຸທໂດຍສ່ວນສາມຢ່າງນີ້.

ພຣາມແລະຄະຫະບໍດີທັງຫລາຍ! ອີກປະການໜຶ່ງ ອະຣິຍະສາວົກຍ່ອມພິຈາຣະນາເຫັນດັ່ງນີ້ວ່າ ຜູ້ໃດຈະເວົ້າກັບເຮົາດ້ວຍຄຳຫຍາບ ຂໍ້ນັ້ນບໍ່ເປັນທີ່ຮັກທີ່ພໍໃຈຂອງເຮົາເລີຍ ອີກຢ່າງໜຶ່ງ ເຮົາຈະເວົ້າກັບຜູ້ອື່ນດ້ວຍຄຳຫຍາບ ຂໍ້ນັ້ນກໍບໍ່ເປັນທີ່ຮັກທີ່ພໍໃຈຂອງຜູ້ອື່ນ ທັມຂໍ້ໃດບໍ່ເປັນທີ່ຮັກທີ່ພໍໃຈຂອງເຮົາ ທັມຂໍ້ນັ້ນ ກໍບໍ່ເປັນທີ່ຮັກທີ່ພໍໃຈຂອງຜູ້ອື່ນ ທັມຂໍ້ໃດບໍ່ເປັນທີ່ຮັກທີ່ພໍໃຈຂອງເຮົາ ເຮົາຈະປະກອບຜູ້ອື່ນໄວ້

ດ້ວຍທັມຂໍ້ນັ້ນໄດ້ຢ່າງໃດ. ອະຣິຍະສາວົກນັ້ນພິຈາຣະນາເຫັນດັ່ງນີ້ແລ້ວ ຕົນເອງຍ່ອມງົດເວັ້ນຈາກຜະຣຸສະວາຈາດ້ວຍ, ຊັກຊວນຜູ້ອື່ນໃຫ້ງົດເວັ້ນຈາກຜະຣຸສະວາຈາດ້ວຍ, ກ່າວສັນລະເສີນຄຸນແຫ່ງການງົດເວັ້ນຈາກຜະຣຸສະວາຈາດ້ວຍ, ວະຈີສະມາຈານຂອງອະຣິຍະສາວົກນັ້ນຍ່ອມບໍຣິສຸທໂດຍສ່ວນສາມຢ່າງນີ້.

ພຣາມແລະຄະຫະບໍດີທັງຫລາຍ! ອີກປະການໜຶ່ງ ອະຣິຍະສາວົກຍ່ອມພິຈາຣະນາເຫັນດັ່ງນີ້ວ່າ ຜູ້ໃດຈະເວົ້າກັບເຮົາດ້ວຍຄຳສັມຜັປປະລາປະ ຂໍ້ນັ້ນບໍ່ເປັນທີ່ຮັກທີ່ພໍໃຈຂອງເຮົາເລີຍ ອີກຢ່າງໜຶ່ງ ເຮົາຈະເວົ້າກັບຜູ້ອື່ນດ້ວຍຄຳສັມຜັປປະລາປະ ຂໍ້ນັ້ນກໍບໍ່ເປັນທີ່ຮັກທີ່ພໍໃຈຂອງຜູ້ອື່ນ ທັມຂໍ້ໃດບໍ່ເປັນທີ່ຮັກທີ່ພໍໃຈຂອງເຮົາ ທັມຂໍ້ນັ້ນກໍບໍ່ເປັນທີ່ຮັກທີ່ພໍໃຈຂອງຜູ້ອື່ນ ທັມຂໍ້ໃດບໍ່ເປັນທີ່ຮັກທີ່ພໍໃຈຂອງເຮົາ ເຮົາຈະປະກອບຜູ້ອື່ນໄວ້ດ້ວຍທັມຂໍ້ນັ້ນໄດ້ຢ່າງໃດ. ອະຣິຍະສາວົກນັ້ນພິຈາຣະນາເຫັນດັ່ງນີ້ແລ້ວ ຕົນເອງຍ່ອມງົດເວັ້ນຈາກສັມຜັປປະລາປະດ້ວຍ, ຊັກຊວນຜູ້ອື່ນໃຫ້ງົດເວັ້ນຈາກສັມຜັປປະລາປະດ້ວຍ, ກ່າວສັນລະເສີນຄຸນແຫ່ງການງົດເວັ້ນຈາກສັມຜັປປະລາປະດ້ວຍ, ວະຈີສະມາຈານຂອງອະຣິຍະສາວົກນັ້ນຍ່ອມບໍຣິສຸທໂດຍສ່ວນສາມຢ່າງນີ້.

---

*ໝາຍເຫດ: ເບິ່ງຄວາມໝາຍຂອງສັມຜັປປະລາປະ ໃນໜ້າທີ 286 (ຂ້າງລຸ່ມ)*

ອະຣິຍະສາວົກນັ້ນປະກອບດ້ວຍຄວາມເຫລື້ອມໃສອັນບໍ່ຫວັ່ນໄຫວໃນພຣະພຸທທະເຈົ້າວ່າ:
ເພາະເຫຕຢ່າງນີ້ໆ
ພຣະຜູ້ມີພຣະພາຄ ພຣະອົງຄ໌ນັ້ນ ເປັນພຣະອະຣະຫັນຕ໌,
ຕຣັສຮູ້ເອງໂດຍຊອບ,
ເຖິງພ້ອມດ້ວຍວິຊຊາແລະຈະຣະນະ,
ສະເດັຈໄປດີແລ້ວ,
ຊົງຮູ້ແຈ້ງໂລກ,
ເປັນສາຣະຖີຝຶກບຸຣຸສທີ່ຄວນຝຶກໄດ້ຢ່າງບໍ່ມີໃຜຍິ່ງກວ່າ,
ເປັນສາສດາຂອງເທວະດາແລະມະນຸສທັງຫລາຍ,
ເປັນຜູ້ເບີກບານແລ້ວ,
ເປັນຜູ້ຈຳແນກທັມ ດັ່ງນີ້.

ອະຣິຍະສາວົກນັ້ນປະກອບດ້ວຍຄວາມເຫລື້ອມໃສອັນບໍ່ຫວັ່ນໄຫວໃນພຣະທັມວ່າ:
ພຣະທັມເປັນສິ່ງທີ່ພຣະຜູ້ມີພຣະພາຄຕຣັສໄວ້ດີແລ້ວ,
ເປັນສິ່ງທີ່ຜູ້ສຶກສາແລະປະຕິບັຕຍ່ອມເຫັນໄດ້ດ້ວຍຕົນເອງ
ເປັນສິ່ງທີ່ປະຕິບັຕໄດ້ແລະໃຫ້ຜົລໄດ້ບໍ່ຈຳກັດການ,
ເປັນສິ່ງທີ່ຄວນກ່າວກັບຜູ້ອື່ນວ່າ ທ່ານຈົ່ງມາເບິ່ງເຖີດ,
ເປັນສິ່ງທີ່ຄວນນ້ອມເຂົ້າມາໃສ່ຕົວ,
ເປັນສິ່ງທີ່ວິນຍູຊົນຍ່ອມຮູ້ໄດ້ສະເພາະຕົນ ດັ່ງນີ້.

ອະຣິຍະສາວົກນັ້ນປະກອບດ້ວຍຄວາມເຫລື້ອມໃສອັນບໍ່
ຫວັ່ນໄຫວໃນພຣະສົງຄ໌ວ່າ:
ສົງຄ໌ສາວົກຂອງພຣະຜູ້ມີພຣະພາຄ
ເປັນຜູ້ປະຕິບັຕດີແລ້ວ,
ສົງຄ໌ສາວົກຂອງພຣະຜູ້ມີພຣະພາຄ
ເປັນຜູ້ປະຕິບັຕຕົງແລ້ວ,
ສົງຄ໌ສາວົກຂອງພຣະຜູ້ມີພຣະພາຄ
ເປັນຜູ້ປະຕິບັຕຊອບແລ້ວ,
ສົງຄ໌ສາວົກຂອງພຣະຜູ້ມີພຣະພາຄ
ເປັນຜູ້ປະຕິບັຕສົມຄວນແລ້ວ,
ໄດ້ແກ່ບຸຄຄົລເຫລົ່ານີ້ຄື:
ຄູ່ແຫ່ງບຸຣຸສສີ່ຄູ່ ນັບຮຽງຕົວໄດ້ ໘ ບຸຣຸສ
ນັ້ນແຫລະຄືສົງຄ໌ສາວົກຂອງພຣະຜູ້ມີພຣະພາຄ,
ເປັນສົງຄ໌ຄວນແກ່ສັກກາຣະທີ່ເຂົານຳມາບູຊາ,
ເປັນສົງຄ໌ຄວນແກ່ສັກກາຣະທີ່ເຂົາຈັດໄວ້ຕ້ອນຮັບ,
ເປັນສົງຄ໌ຄວນຮັບທັກຂິນາທານ,
ເປັນສົງຄ໌ທີ່ບຸຄຄົລທົ່ວໄປຄວນທຳອັນຊະລີ
ເປັນສົງຄ໌ທີ່ເປັນນາບຸນຍ໌ຂອງໂລກ ບໍ່ມີນາບຸນຍ໌ອື່ນຍິ່ງ
ກວ່າ ດັ່ງນີ້.

ເປັນຜູ້ປະກອບດ້ວຍສີລທີ່ພຣະອະຣິຍະເຈົ້າໃຄ່ແລ້ວ ບໍ່ຂາດ ບໍ່ທະລຸ ບໍ່ດ່າງ ບໍ່ພ້ອຍ ເປັນອິສສະຣະ ວິນຍູຊົນສັນລະເສີນ ບໍ່ມີອັນໃດຄອບງຳ ເປັນໄປເພື່ອສະມາທິ.

ພຣາມແລະຄະຫະບໍດີທັງຫລາຍ! **ເມື່ອໃດ ອະຣິຍະສາວົກປະກອບດ້ວຍສັທທັມ ໆ ປະການເຫລົ່ານີ້ ແລະດ້ວຍຖານະອັນເປັນທີ່ຕັ້ງແຫ່ງຄວາມຫວັງ ໔ ປະການເຫລົ່ານີ້ ເມື່ອນັ້ນ ອະຣິຍະສາວົກນັ້ນຫວັງຢູ່ ຍ່ອມພະຍາກອນຕົນດ້ວຍຕົນເອງໄດ້ວ່າ** ເຮົາມີນະຣົກສິ້ນແລ້ວ ມີກຳເນີດດິຣັຈສານສິ້ນແລ້ວ ມີເປຕວິສັຍສິ້ນແລ້ວ ມີອະບາຍ ທຸຄະຕິວິນິບາຕສິ້ນແລ້ວ ເຮົາເປັນໂສດາບັນ ມີຄວາມບໍ່ຕົກຕ່ຳເປັນທັມມະດາ ເປັນຜູ້ທ່ຽງແທ້ທີ່ຈະຕຣັສຮູ້ໃນເບື້ອງໜ້າ.

ເມື່ອພຣະຜູ້ມີພຣະພາຄຕຣັສຢ່າງນີ້ແລ້ວ ພຣາມແລະຄະຫະບໍດີຊາວເວລຸທະວາຣະຄາມໄດ້ກຣາບທູລພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະໂຄດົມຜູ້ຈະເຣີນ! ພາສິຕຂອງພຣະອົງຄ໌ແຈ່ມແຈ້ງຫລາຍ ຂ້າແຕ່ພຣະໂຄດົມຜູ້ຈະເຣີນ ພາສິຕຂອງພຣະອົງຄ໌ແຈ່ມແຈ້ງຫລາຍ ພຣະອົງຄ໌ຊົງປະກາສທັມໂດຍອະເນກປະຣິຍາຍ ປຽບເໝືອນຫງາຍຂອງທີ່ຂວ້ຳ ເປີດຂອງທີ່ປິດ ບອກທາງແກ່ຄົນຫລົງທາງ ຫລືຕາມ

ປະທີບໄວ້ໃນທີ່ມືດດ້ວຍຫວັງວ່າ ຄົນມີຈັກຊຸຈັກເຫັນຮູບໄດ້ສັນນັ້ນ ພວກຂ້ານ້ອຍທັງຫລາຍຂໍເຖິງທ່ານພຣະໂຄດົມກັບທັງພຣະທັມແລະພຣະພິກຂຸສົງຄ໌ວ່າເປັນສະຣະນະ ຂໍທ່ານພຣະໂຄດົມໂປດຊົງຈຳພວກຂ້ານ້ອຍວ່າ ເປັນອຸປາສົກຜູ້ເຖິງສະຣະນະຕະຫລອດຊີວິຕຕັ້ງແຕ່ວັນນີ້ເປັນຕົ້ນໄປ.

---

*ສັງຍຸຕຕະນິກາຍ ມະຫາວາຣະວັຄ ໑໙/໓໕໓-໓໕໖/໑໔໕໔-໑໔໕໗*



# ບຸຄຄົລຜູ້ປະກອບດ້ວຍທັມ ໔໐ ປະການ ຍ່ອມເກີດໃນນະຣົກ ແລະບຸຄຄົລຜູ້ປະກອບດ້ວຍທັມ ໔໐ ປະການຍ່ອມເກີດໃນສວັນ

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໔໐ ປະການ ຍ່ອມເປັນຜູ້ຖືກປະຖິ້ມໄວ້ໃນນະຣົກ ເໝືອນສິ່ງຂອງທີ່ເຂົານຳມາປະຖິ້ມໄວ້. ທັມ ໔໐ ປະການເປັນຢ່າງໃດ? ຄື:
ເປັນຜູ້ຂ້າສັດ,
ຊັກຊວນຜູ້ອື່ນໃນການຂ້າສັດ,
ພໍໃຈໃນການຂ້າສັດ,
ກ່າວສັນລະເສີນການຂ້າສັດ.

ເປັນຜູ້ລັກຊັພຍ໌,
ຊັກຊວນຜູ້ອື່ນໃນການລັກຊັພຍ໌,
ພໍໃຈໃນການລັກຊັພຍ໌,
ກ່າວສັນລະເສີນການລັກຊັພຍ໌.

ເປັນຜູ້ປະພຶດຜິດໃນກາມທັງຫລາຍ,
ຊັກຊວນຜູ້ອື່ນໃນການປະພຶດຜິດໃນກາມທັງຫລາຍ,
ພໍໃຈໃນການປະພຶດຜິດໃນກາມທັງຫລາຍ,

ກ່າວສັນລະເສີນການປະພຶດຜິດໃນກາມທັງຫລາຍ.

ເປັນຜູ້ເວົ້າຕົວະ,
ຊັກຊວນຜູ້ອື່ນໃນການເວົ້າຕົວະ,
ພໍໃຈໃນການເວົ້າຕົວະ,
ກ່າວສັນລະເສີນການເວົ້າຕົວະ.

ເປັນຜູ້ເວົ້າສໍ່ສຽດ,
ຊັກຊວນຜູ້ອື່ນໃນການເວົ້າສໍ່ສຽດ,
ພໍໃຈໃນການເວົ້າສໍ່ສຽດ,
ກ່າວສັນລະເສີນການເວົ້າສໍ່ສຽດ.

ເປັນຜູ້ເວົ້າຄຳຫຍາບ,
ຊັກຊວນຜູ້ອື່ນໃນການເວົ້າຄຳຫຍາບ,
ພໍໃຈໃນການເວົ້າຄຳຫຍາບ,
ກ່າວສັນລະເສີນການເວົ້າຄຳຫຍາບ.

ເປັນຜູ້ເວົ້າຄຳ**ສັມຜັປປະລາປະ** (1),
ຊັກຊວນຜູ້ອື່ນໃນການເວົ້າຄຳສັມຜັປປະລາປະ,
ພໍໃຈໃນການເວົ້າຄຳສັມຜັປປະລາປະ,
ກ່າວສັນລະເສີນການເວົ້າຄຳສັມຜັປປະລາປະ.

---

*(1). **ສັມຜັປປະລາປະ** ຄື ກ່າວບໍ່ຖືກກາລ ກ່າວບໍ່ຈິງ ກ່າວບໍ່ອີງອັຕຖະ ກ່າວບໍ່ອີງທັມ ກ່າວບໍ່ອີງວິນັຍ ກ່າວວາຈາບໍ່ມີຫລັກຖານ ບໍ່ມີທີ່ອ້າງອີງ ບໍ່ມີທີ່ສຸດ ບໍ່ຖືກກາລະເທສະ ບໍ່ປະກອບດ້ວຍປະໂຍຊນ໌.*

*ອັງຄຸຕຕະຣະນິກາຍ ທ. ເອກ. ໔໔/໔໕໙/໑໙໙*

ເປັນຜູ້ຢາກໄດ້ຂອງຜູ້ອື່ນ,
ຊັກຊວນຜູ້ອື່ນໃນການຢາກໄດ້ຂອງຜູ້ອື່ນ,
ພໍໃຈໃນການຢາກໄດ້ຂອງຜູ້ອື່ນ,
ກ່າວສັນລະເສີນການຢາກໄດ້ຂອງຜູ້ອື່ນ.

ເປັນຜູ້ມີຈິຕພະຍາບາທ,
ຊັກຊວນຜູ້ອື່ນໃນການມີຈິຕພະຍາບາທ,
ພໍໃຈໃນການມີຈິຕພະຍາບາທ,
ກ່າວສັນລະເສີນການມີຈິຕພະຍາບາທ.

ເປັນຜູ້ມີຄວາມເຫັນຜິດ,
ຊັກຊວນຜູ້ອື່ນໃນຄວາມເຫັນຜິດ,
ພໍໃຈໃນຄວາມເຫັນຜິດ,
ກ່າວສັນລະເສີນຄວາມເຫັນຜິດ.

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໔໐ ປະການ ນີ້ແລ ຍ່ອມເປັນຜູ້ຖືກປະຖິ້ມໄວ້ໃນນະຣົກ ເໝືອນສິ່ງຂອງ ທີ່ເຂົານຳມາປະຖິ້ມໄວ້.

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໔໐ ປະການ ນີ້ ຍ່ອມເປັນຜູ້ຖືກເຊີນມາໃນສວັນ ເໝືອນສິ່ງຂອງທີ່ເຂົາ

ນຳມາປະດິດສະຖານໄວ້. ທັມ ៨໐ ປະການເປັນຢ່າງໃດ?
ຄື:

ເປັນຜູ້ງົດເວັ້ນຈາກການຂ້າສັຕ,
ຊັກຊວນຜູ້ອື່ນໃນການງົດເວັ້ນຈາກການຂ້າສັຕ,
ພໍໃຈໃນການງົດເວັ້ນຈາກການຂ້າສັຕ,
ກ່າວສັນລະເສີນການງົດເວັ້ນຈາກການຂ້າສັຕ.

ເປັນຜູ້ງົດເວັ້ນຈາກການລັກຊັພຍ໌,
ຊັກຊວນຜູ້ອື່ນໃນການງົດເວັ້ນຈາກການລັກຊັພຍ໌,
ພໍໃຈໃນການງົດເວັ້ນຈາກການລັກຊັພຍ໌,
ກ່າວສັນລະເສີນການງົດເວັ້ນຈາກການລັກຊັພຍ໌.

ເປັນຜູ້ງົດເວັ້ນຈາກການປະພຶດຜິດໃນກາມທັງຫລາຍ,
ຊັກຊວນຜູ້ອື່ນໃນການງົດເວັ້ນຈາກການປະພຶດຜິດໃນກາມ
ທັງຫລາຍ,
ພໍໃຈໃນການງົດເວັ້ນຈາກການປະພຶດຜິດໃນກາມ
ທັງຫລາຍ,
ກ່າວສັນລະເສີນການງົດເວັ້ນຈາກການປະພຶດຜິດໃນກາມ
ທັງຫລາຍ.

ເປັນຜູ້ງົດເວັ້ນຈາກການເວົ້າຕົວະ,

ຊັກຊວນຜູ້ອື່ນໃນການງົດເວັ້ນຈາກການເວົ້າຕົວະ,
ພໍໃຈໃນການງົດເວັ້ນຈາກການເວົ້າຕົວະ,
ກ່າວສັນລະເສີນການງົດເວັ້ນຈາກການເວົ້າຕົວະ.

ເປັນຜູ້ງົດເວັ້ນຈາກການເວົ້າສໍ່ສຽດ,
ຊັກຊວນຜູ້ອື່ນໃນການງົດເວັ້ນຈາກການເວົ້າສໍ່ສຽດ,
ພໍໃຈໃນການງົດເວັ້ນຈາກການເວົ້າສໍ່ສຽດ,
ກ່າວສັນລະເສີນການງົດເວັ້ນຈາກການເວົ້າສໍ່ສຽດ.

ເປັນຜູ້ງົດເວັ້ນຈາກການເວົ້າຄໍາຫຍາບ,
ຊັກຊວນຜູ້ອື່ນໃນການງົດເວັ້ນຈາກການເວົ້າຄໍາຫຍາບ,
ພໍໃຈໃນການງົດເວັ້ນຈາກການເວົ້າຄໍາຫຍາບ,
ກ່າວສັນລະເສີນການງົດເວັ້ນຈາກການເວົ້າຄໍາຫຍາບ.

ເປັນຜູ້ງົດເວັ້ນຈາກການເວົ້າຄໍາສັມຜັປປະລາປະ,
ຊັກຊວນຜູ້ອື່ນໃນການງົດເວັ້ນຈາກການເວົ້າຄໍາສັມຜັປປະລາປະ,
ພໍໃຈໃນການງົດເວັ້ນຈາກການເວົ້າຄໍາສັມຜັປປະລາປະ,
ກ່າວສັນລະເສີນການງົດເວັ້ນຈາກການເວົ້າຄໍາສັມຜັປປະລາປະ.

ເປັນຜູ້ບໍ່ຢາກໄດ້ຂອງຜູ້ອື່ນ,

ຊັກຊວນຜູ້ອື່ນໃນການບໍ່ຢາກໄດ້ຂອງຜູ້ອື່ນ,
ພໍໃຈໃນການບໍ່ຢາກໄດ້ຂອງຜູ້ອື່ນ,
ກ່າວສັນລະເສີນການບໍ່ຢາກໄດ້ຂອງຜູ້ອື່ນ.

ເປັນຜູ້ມີຈິຕບໍ່ພະຍາບາທ,
ຊັກຊວນຜູ້ອື່ນໃນການມີຈິຕບໍ່ພະຍາບາທ,
ພໍໃຈໃນການມີຈິຕບໍ່ພະຍາບາທ,
ກ່າວສັນລະເສີນການມີຈິຕບໍ່ພະຍາບາທ.

ເປັນຜູ້ມີຄວາມເຫັນຊອບ,
ຊັກຊວນຜູ້ອື່ນໃນຄວາມເຫັນຊອບ,
ພໍໃຈໃນຄວາມເຫັນຊອບ,
ກ່າວສັນລະເສີນຄວາມເຫັນຊອບ.

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໔໐ ປະການນີ້ແລ ຍ່ອມເປັນຜູ້ຖືກເຊີນມາໃນສວັນ ເໝືອນສິ່ງຂອງທີ່ເຂົານຳມາປະດິດສະຖານໄວ້.

---

*ອັງຄຸຕຕະຣະນິກາຍ ທະສະກະ-ເອກາທະສະກະນິບາຕ ໒໔/໒໗໙/໒໐໑*



# ຄວາມທຸກຂ໌ຍ່ອມບໍ່ເປັນທີ່ຮັກຂອງເຮົາ ຄວາມທຸກຂ໌ກໍບໍ່ເປັນທີ່ຮັກຂອງຜູ້ອື່ນເໝືອນກັນ

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ພຣະວິຫາຣເຊຕະວັນ ອາຣາມຂອງທ່ານອະນາຖະບິນດິກະເສດຖີ ໃກ້ພຣະນະຄອຣ ສາວັຕຖີ ກໍສມັຍນັ້ນ ເດັກນ້ອຍຈຳນວນຫລາຍພາກັນຈັບປາຢູ່ ໃນລະຫວ່າງພຣະນະຄອຣສາວັຕຖີກັບພຣະວິຫາຣເຊຕະວັນ.

ຄັ້ງນັ້ນເປັນເວລາເຊົ້າ ພຣະຜູ້ມີພຣະພາຄຊົງອັນຕະຣະວາສົກ ແລ້ວ ຊົງຖືບາຕແລະຈີວອຣສະເດັຈເຂົ້າໄປບິນທະບາຕໃນພຣະ ນະຄອຣສາວັຕຖີ ໄດ້ທອດພຣະເນດເຫັນເດັກນ້ອຍຈຳນວນ ຫລາຍພາກັນຈັບປາໃນລະຫວ່າງພຣະນະຄອຣສາວັຕຖີ ກັບພຣະວິຫາຣເຊຕະວັນ ຄັນແລ້ວໄດ້ສະເດັຈເຂົ້າໄປຫາ ເດັກນ້ອຍເຫລົ່ານັ້ນ ແລ້ວໄດ້ຕຣັສຖາມວ່າ:

**ກຸມາຣທັງຫລາຍ! ພວກເຈົ້າທັງຫລາຍຢ້ານກົວຕໍ່ຄວາມທຸກຂ໌ ຄວາມທຸກຂ໌ກໍບໍ່ເປັນທີ່ຮັກຂອງພວກເຈົ້າທັງຫລາຍບໍ່ແມ່ນຫລື?**

ເດັກເຫລົ່ານັ້ນກຣາບທູລວ່າ:

ເປັນຢ່າງນັ້ນ ພຣະອົງຄ໌ຜູ້ຈະເຣີນ ພວກຂ້ານ້ອຍທັງຫລາຍຢ້ານກົວຕໍ່ຄວາມທຸກຂ໌ ຄວາມທຸກຂ໌ກໍບໍ່ເປັນທີ່ຮັກຂອງພວກຂ້ານ້ອຍທັງຫລາຍ.

*ລຳດັບນັ້ນ, ພຣະຜູ້ມີພຣະພາຄຊົງຊາບເນື້ອຄວາມນັ້ນແລ້ວ ໄດ້ຊົງເປັ່ງອຸທານໃນເວລານັ້ນວ່າ:*

**ຖ້າພວກເຈົ້າທັງຫລາຍຢ້ານກົວຕໍ່ຄວາມທຸກຂ໌ ຖ້າຄວາມທຸກຂ໌ບໍ່ເປັນທີ່ຮັກຂອງພວກເຈົ້າທັງຫລາຍແລ້ວ ພວກເຈົ້າທັງຫລາຍຢ່າໄດ້ກະທຳບາບກັມທັງໃນທີ່ແຈ້ງຫລືໃນທີ່ລັບເລີຍ ຖ້າພວກເຈົ້າທັງຫລາຍຈະກະທຳຫລືກະທຳຢູ່ເຊິ່ງບາບກັມແລ້ວນັ້ນ ພວກເຈົ້າທັງຫລາຍເຖິງຈະເຫາະໜີໄປກໍຍ່ອມບໍ່ພົ້ນໄປຈາກຄວາມທຸກຂ໌.**

*ຂຸທທະກະນິກາຍ ຂຸທທະກະປາຖະ-ທັມມະບົທ-ອຸທານ-ອິຕິວຸຕຕະກະ-ສຸຕຕະນິບາຕ ໒໕/໑໐໗/໑໑໕*



# ວິທີປະຕິບັດເມື່ອຖືກຄົນຕຳນິຕໍ່ໜ້າ

ສມັຍໜຶ່ງ ພຣະຜູ້ມີພຣະພາຄປະທັບຢູ່ທີ່ພຣະວິຫາຣເຊຕະວັນ ອາຣາມຂອງທ່ານອະນາຖະບິນດິກະເສດຖີ ເຂດພຣະນະຄອຣ ສາວັຕຖີ ໂດຍສມັຍນັ້ນ ທ່ານພຣະໂມລິຍະຜັຄຄຸນະຢູ່ຄຸກຄີກັບ ພິກຂຸນີທັງຫລາຍເກີນເວລາ ທ່ານພຣະໂມລິຍະຜັຄຄຸນະຢູ່ຄຸກຄີ ກັບພວກພິກຂຸນີຢ່າງນີ້ ຖ້າພິກຂຸອົງຄ໌ໃດຕິຕຽນພິກຂຸນີເຫລົ່ານັ້ນ ຕໍ່ໜ້າ ທ່ານພຣະໂມລິຍະຜັຄຄຸນະກໍໂກທ ຂັດໃຈພິກຂຸອົງຄ໌ນັ້ນ ເຖິງກັບກະທຳໃຫ້ເປັນອະທິກອຣກໍມີ. ອີກຢ່າງໜຶ່ງ ຖ້າພິກຂຸ ອົງຄ໌ໃດຕິຕຽນທ່ານພຣະໂມລິຍະຜັຄຄຸນະຕໍ່ໜ້າພິກຂຸນີ ເຫລົ່ານັ້ນ ພວກພິກຂຸນີກໍພາກັນໂກທ ຂັດໃຈພິກຂຸອົງຄ໌ນັ້ນ ເຖິງກັບກະທຳໃຫ້ເປັນອະທິກອຣກໍມີ ທ່ານພຣະໂມລິຍະຜັຄຄຸ ນະຢູ່ຄຸກຄີກັບພິກຂຸນີທັງຫລາຍຢ່າງນີ້.

ຄັ້ງນັ້ນ ພິກຂຸອົງຄ໌ໜຶ່ງເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ອະພິວາທແລ້ວນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ໄດ້ກຣາບທູລພຣະຜູ້ມີພຣະພາຄວ່າ:

ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ! ທ່ານພຣະໂມລິຍະຜັຄຄຸນະຢູ່ຄຸກຄີກັບພິກຂຸນີທັງຫລາຍເກີນເວລາ ທ່ານພຣະໂມລິຍະຜັຄຄຸນະຢູ່ຄຸກຄີກັບພວກພິກຂຸນີຢ່າງນີ້ ຖ້າພິກຂຸອົງຄ໌ໃດຕິຕຽນພິກຂຸນີເຫລົ່ານັ້ນຕໍ່ໜ້າ ທ່ານພຣະໂມລິຍະຜັຄຄຸນະກໍໂກທ ຂັດໃຈພິກຂຸອົງຄ໌ນັ້ນ ເຖິງກັບກະທຳໃຫ້ເປັນອະທິກອຣກໍມີ ອີກຢ່າງໜຶ່ງ ຖ້າພິກຂຸອົງຄ໌ໃດຕິຕຽນທ່ານພຣະໂມລິຍະຜັຄຄຸນະຕໍ່ໜ້າພິກຂຸນີເຫລົ່ານັ້ນ ພວກພິກຂຸນີກໍພາກັນໂກທ ຂັດໃຈພິກຂຸອົງຄ໌ນັ້ນ ເຖິງກັບກະທຳໃຫ້ເປັນອະທິກອຣກໍມີ ທ່ານພຣະໂມລິຍະຜັຄຄຸນະຢູ່ຄຸກຄີກັບພິກຂຸນີທັງຫລາຍຢ່າງນີ້.

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງຕຣັສຮຽກພິກຂຸອົງຄ໌ໜຶ່ງມາສັ່ງວ່າ:

ພິກຂຸ! ເຈົ້າຈົ່ງໄປບອກໂມລິຍະຜັຄຄຸນະຕາມຄຳຂອງເຮົາວ່າ ທ່ານໂມລິຍະຜັຄຄຸນະ ພຣະສາສດາຕຣັສສັ່ງໃຫ້ໄປຫາ.

ພິກຂຸນັ້ນທູລຮັບພຣະດຳຣັສຂອງພຣະຜູ້ມີພຣະພາຄແລ້ວ ເຂົ້າໄປຫາທ່ານພຣະໂມລິຍະຜັຄຄຸນະເຖິງທີ່ຢູ່ ຄັນແລ້ວໄດ້ກ່າວຄຳ

ນີ້ກັບທ່ານພຣະໂມລິຍະຜັຄຄຸນະວ່າ ທ່ານໂມລິຍະຜັຄຄຸນະ ພຣະສາສດາຕຣັສສັ່ງໃຫ້ໄປຫາ ທ່ານໂມລິຍະຜັຄຄຸນະ ຮັບຄຳພິກຂຸອົງຄ໌ນັ້ນແລ້ວກໍເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ອະພິວາທພຣະຜູ້ມີພຣະພາຄແລ້ວ ນັ່ງໃນທີ່ຄວນສ່ວນຂ້າງໜຶ່ງ ພຣະຜູ້ມີພຣະພາຄໄດ້ຕຣັສຖາມທ່ານພຣະໂມລິຍະຜັຄຄຸນະດັ່ງນີ້ວ່າ:

ຜັຄຄຸນະ! ໄດ້ຊາບວ່າ ເຈົ້າຢູ່ຄຸກຄີກັບພວກພິກຂຸນີຈົນເກີນເວລາ.

ຜັຄຄຸນະ! ເຈົ້າຢູ່ຄຸກຄີກັບພວກພິກຂຸນີເຊັ່ນນັ້ນ ຖ້າພິກຂຸອົງຄ໌ໃດຕິຕຽນພິກຂຸນີເຫລົ່ານັ້ນຕໍ່ໜ້າເຈົ້າ ເຈົ້າກໍໂກທຂັດໃຈພິກຂຸອົງຄ໌ນັ້ນ ເຖິງກັບກະທຳໃຫ້ເປັນອະທິກອຣກໍມີອີກຢ່າງໜຶ່ງ ຖ້າພິກຂຸອົງຄ໌ໃດຕິຕຽນເຈົ້າຕໍ່ໜ້າພິກຂຸນີເຫລົ່ານັ້ນ ພວກພິກຂຸນີກໍພາກັນໂກທ ຂັດໃຈພິກຂຸອົງຄ໌ນັ້ນ ເຖິງກັບກະທຳໃຫ້ເປັນອະທິກອຣກໍມີ.

ຜັຄຄຸນະ! ເຈົ້າຢູ່ຄຸກຄີກັບພິກຂຸນີທັງຫລາຍເຊັ່ນນີ້ຈິງຫລື?

ພຣະໂມລິຍະຜັຄຄຸນະທູລຮັບວ່າ ຈິງ ພຣະອົງຄ໌ຜູ້ຈະເຣີນ!

ຜັຄຄຸນະ! ເຈົ້າເປັນກຸລະບຸຕອອກຈາກເຮືອນບວດເປັນບັນພະຊິຕດ້ວຍສັທທາບໍ່ແມ່ນຫລື?

ຢ່າງນັ້ນ ພຣະອົງຄ໌ຜູ້ຈະເຣີນ!

ຜັຄຄຸນະ! ການທີ່ເຈົ້າຢູ່ຄຸກຄີກັບພວກພິກຂຸນີຈົນເກີນເວລານີ້ ບໍ່ສົມຄວນແກ່ເຈົ້າຜູ້ເປັນກຸລະບຸຕອອກຈາກເຮືອນບວດເປັນບັນພະຊິຕດ້ວຍສັທທາເລີຍ.

ຜັຄຄຸນະ! ເພາະສະນັ້ນແລ ຖ້າພິກຂຸອົງຄ໌ໃດຕິຕຽນພິກຂຸນີເຫລົ່ານັ້ນຕໍ່ໜ້າເຈົ້າ ໃນຂໍ້ນັ້ນ ເຈົ້າຄວນລະຄວາມພໍໃຈແລະວິຕົກອັນອາສັຍເຮືອນເສຍ, ໃນຂໍ້ນັ້ນ ເຈົ້າຄວນສຶກສາຢ່າງນີ້ວ່າ ຈິຕຂອງເຮົາຈັກບໍ່ປັ່ນປ່ວນ ແລະເຮົາຈັກບໍ່ກ່າວວາຈາອັນຊົ່ວຫຍາບ ຈັກອະນຸເຄາະດ້ວຍສິ່ງອັນເປັນປະໂຍຊນ໌ ແລະຈັກເປັນຜູ້ມີເມຕຕາຈິຕ ບໍ່ມີໂທສະໃນພາຍໃນ. ຜັຄຄຸນະ ເຈົ້າຄວນສຶກສາຢ່າງນີ້ແລ.

ຜັຄຄຸນະ! ເພາະສະນັ້ນ ຖ້າໃຜໆປະຫານພິກຂຸນີເຫລົ່ານັ້ນດ້ວຍຝາມື ດ້ວຍກ້ອນດິນ ດ້ວຍທ່ອນໄມ້ ດ້ວຍສັສຕຣາຕໍ່ໜ້າເຈົ້າ ແມ່ນແຕ່ໃນຂໍ້ນັ້ນ ເຈົ້າຄວນລະຄວາມພໍໃຈແລະວິຕົກອັນອາສັຍເຮືອນເສຍ, ໃນຂໍ້ນັ້ນ ເຈົ້າຄວນສຶກສາຢ່າງນີ້ວ່າ ຈິຕຂອງເຮົາຈັກບໍ່ປັ່ນປ່ວນ ແລະເຮົາຈັກບໍ່ກ່າວ

ວາຈາອັນຊົ່ວຫຍາບ ຈັກອະນຸເຄາະດ້ວຍສິ່ງອັນເປັນປະໂຍຊນ໌ ແລະຈັກເປັນຜູ້ມີເມຕຕາຈິຕ ບໍ່ມີໂທສະໃນພາຍໃນ. ຜັຄຄຸນະ ເຈົ້າຄວນສຶກສາຢ່າງນີ້ແລ.

ຜັຄຄຸນະ! ເພາະສະນັ້ນ ຖ້າໃຜໆຕິຕຽນຕົວເຈົ້າເອງຕໍ່ໜ້າເຈົ້າ ແມ່ນແຕ່ໃນຂໍ້ນັ້ນ ເຈົ້າຄວນລະຄວາມພໍໃຈແລະວິຕົກອັນອາສັຍເຮືອນເສຍ, ໃນຂໍ້ນັ້ນ ເຈົ້າຄວນສຶກສາຢ່າງນີ້ວ່າ ຈິຕຂອງເຮົາຈັກບໍ່ປັ່ນປ່ວນ ແລະເຮົາຈັກບໍ່ກ່າວວາຈາອັນຊົ່ວຫຍາບ ຈັກອະນຸເຄາະດ້ວຍສິ່ງອັນເປັນປະໂຍຊນ໌ ແລະຈັກເປັນຜູ້ມີເມຕຕາຈິຕ ບໍ່ມີໂທສະໃນພາຍໃນ. ຜັຄຄຸນະ ເຈົ້າຄວນສຶກສາຢ່າງນີ້ແລ.

ຜັຄຄຸນະ! ເພາະສະນັ້ນ ຖ້າໃຜໆປະຫານເຈົ້າດ້ວຍຝາມືດ້ວຍກ້ອນດິນ ດ້ວຍທ່ອນໄມ້ ດ້ວຍສັສຕຣາ ແມ່ນແຕ່ໃນຂໍ້ນັ້ນ ເຈົ້າຄວນລະຄວາມພໍໃຈແລະວິຕົກອັນອາສັຍເຮືອນເສຍ, ໃນຂໍ້ນັ້ນ ເຈົ້າຄວນສຶກສາຢ່າງນີ້ວ່າ ຈິຕຂອງເຮົາຈັກບໍ່ປັ່ນປ່ວນ ແລະເຮົາຈັກບໍ່ກ່າວວາຈາອັນຊົ່ວຫຍາບ ຈັກອະນຸເຄາະດ້ວຍສິ່ງອັນເປັນປະໂຍຊນ໌ ແລະຈັກເປັນຜູ້ມີເມຕຕາຈິຕ ບໍ່ມີໂທສະໃນພາຍໃນ. ຜັຄຄຸນະ ເຈົ້າຄວນສຶກສາຢ່າງນີ້ແລ.

*ມັຊຊິມະນິກາຍ ມູລປັນນາສກ໌ ໑໘/໑໗໑-໑໗໘/໘໖໓-໘໖໔*



## ແມ່ເຮືອນເວເທຫິກາ

ພິກຂຸທັງຫລາຍ! ເຣື່ອງເຄີຍມີມາແລ້ວ ທີ່ພຣະນະຄອຣສາວັຕຖີນີ້ແລ ມີແມ່ເຮືອນຄົນໜຶ່ງຊື່ ເວເທຫິກາ ພິກຂຸທັງຫລາຍ ກຽດຕິສັພອັນງາມຂອງແມ່ເຮືອນເວເທຫິກາຂະຈອຣໄປແລ້ວຢ່າງນີ້ວ່າ ແມ່ເຮືອນເວເທຫິກາເປັນຄົນສງົບສະຫງ່ຽມອ່ອນໂຍນ ຮຽບຮ້ອຍ.

ພິກຂຸທັງຫລາຍ! ກໍແມ່ເຮືອນເວເທຫິກາມີທາສີຊື່ ກາລີເປັນຄົນຂະຫຍັນ ບໍ່ກຽດຄ້ານ ຈັດການງານດີ ຕໍ່ມາ ນາງກາລີໄດ້ຄິດຢ່າງນີ້ວ່າ ກຽດຕິສັພອັນງາມຂອງຄຸນນາຍຂອງເຮົາຂະຈອຣໄປແລ້ວຢ່າງນີ້ວ່າ ແມ່ເຮືອນເວເທຫິກາ

ເປັນຄົນສງົບສະຫງ່ຽມອ່ອນໂຍນ ຮຽບຮ້ອຍ ດັ່ງນີ້ ຄຸນນາຍຂອງເຮົາບໍ່ທຳຄວາມໂກທທີ່ມີຢູ່ໃນພາຍໃນໃຫ້ປາກົຕ ຫລືວ່າບໍ່ມີຄວາມໂກທຢູ່ເລີຍ ຫລືວ່າ ຄຸນນາຍຂອງເຮົາບໍ່ທຳຄວາມໂກທທີ່ມີຢູ່ໃນພາຍໃນໃຫ້ປາກົຕເພາະເຮົາຈັດການງານທັງຫລາຍຮຽບຮ້ອຍດີ ບໍ່ແມ່ນບໍ່ມີຄວາມໂກທ ຖ້າເຊັ່ນນັ້ນ ເຮົາຈະຕ້ອງທົດລອງຄຸນນາຍເບິ່ງ ເຊົ້າວັນຕໍ່ມາ ນາງກາລີທາສີກໍແກ້ງລຸກຂຶ້ນສວຍ.

ພິກຂຸທັງຫລາຍ! ຝ່າຍແມ່ເຮືອນເວເທຫິກາກໍໄດ້ຕວາດນາງກາລີທາສີຂຶ້ນວ່າ:

ເຮີ້ຍ! ອີ່ຄົນໃຊ້ກາລີ

ນາງກາລີຈຶ່ງຂານຮັບວ່າ ອັນໃດໜໍ ຂ້ານ້ອຍ!

ເຮີ້ຍ! ເອງເປັນອັນໃດຈຶ່ງນອນຕື່ນສວຍ?

ບໍ່ເປັນຫຍັງດອກ ຂ້ານ້ອຍ!

ນາງຈຶ່ງກ່າວອີກວ່າ ອີ່ຄົນຊົ່ວ ກໍເມື່ອບໍ່ເປັນອັນໃດ ເປັນຫຍັງເອງຈຶ່ງນອນຕື່ນສວຍ ດັ່ງນີ້ແລ້ວ ກໍໂກທ ຂັດໃຈທຳໜ້າບຶ້ງ.

ພິກຂຸທັງຫລາຍ! ທີນັ້ນ ນາງກາລີທາສີຈິ່ງຄິດວ່າ ຄຸນນາຍຂອງເຮົາບໍ່ທຳຄວາມໂກທທີ່ມີຢູ່ໃນພາຍໃນໃຫ້ປາກົຕເທົ່ານັ້ນ ບໍ່ແມ່ນບໍ່ມີຄວາມໂກທ ທີ່ບໍ່ທຳຄວາມໂກທທີ່ມີຢູ່ໃນພາຍໃນໃຫ້ປາກົຕ ກໍເພາະເຮົາຈັດການງານທັງຫລາຍຮຽບຮ້ອຍດີ ບໍ່ແມ່ນບໍ່ມີຄວາມໂກທ ຖ້າເຊັ່ນນັ້ນເຮົາຕ້ອງທົດລອງຄຸນນາຍໃຫ້ຍິ່ງຂຶ້ນໄປ.

ພິກຂຸທັງຫລາຍ! ຖັດຈາກວັນນັ້ນມາ ນາງກາລີທາສີຈິ່ງລຸກຂຶ້ນສວຍກວ່າວັນນັ້ນອີກ ຄັ້ງນັ້ນ ແມ່ເຮືອນເວເທຫິກາກໍຕວາດນາງກາລີທາສີອີກວ່າ:

ເຮີ້ຍ! ອີ່ຄົນໃຊ້ກາລີ

ອັນໃດໜໍ ຂ້ານ້ອຍ?

ອີ່ຄົນໃຊ້! ເອງເປັນອັນໃດຈິ່ງນອນຕື່ນສວຍ?

ບໍ່ເປັນຫຍັງດອກ ຂ້ານ້ອຍ!

ນາງຈິ່ງກ່າວອີກວ່າ ອີ່ຄົນຊົ່ວ ກໍເມື່ອບໍ່ເປັນອັນໃດ ເປັນຫຍັງເອງຈິ່ງນອນຕື່ນສວຍດັ່ງນີ້ແລ້ວ ກໍໂກທ ຂັດໃຈແຜດສຽງດ່າດ້ວຍຖ້ອຍຄຳຫຍາບຄາຍ.

ພິກຂຸທັງຫລາຍ! ທີນັ້ນ ນາງກາລີທາສີຈຶ່ງຄິດດັ່ງນີ້ວ່າ ຄຸນນາຍຂອງເຮົາບໍ່ທຳຄວາມໂກທທີ່ມີຢູ່ໃນພາຍໃນໃຫ້ປາກົຕເທົ່ານັ້ນ ບໍ່ແມ່ນບໍ່ມີຄວາມໂກທ ທີ່ບໍ່ທຳຄວາມໂກທທີ່ມີຢູ່ໃນພາຍໃນໃຫ້ປາກົຕ ກໍເພາະເຮົາຈັດການງານທັງຫລາຍຮຽບຮ້ອຍດີ ບໍ່ແມ່ນບໍ່ມີຄວາມໂກທ ຖ້າເຊັ່ນນັ້ນ ເຮົາຕ້ອງທົດລອງຄຸນນາຍໃຫ້ຍິ່ງຂຶ້ນໄປກວ່ານີ້ອີກ ດັ່ງນີ້.

ພິກຂຸທັງຫລາຍ! ແຕ່ນັ້ນມາ ນາງກາລີກໍລຸກຂຶ້ນສວຍກວ່າທຸກວັນ ຄັ້ງນັ້ນ ແມ່ເຮືອນເວເທຫິກາຜູ້ເປັນນາຍກໍຮ້ອງດ່າຕວາດນາງກາລີທາສີອີກວ່າ:

ອີ່ກາລີຕົວຮ້າຍ

ອັນໃດໜໍ ຂ້ານ້ອຍ!

ອີ່ຄົນໃຊ້! ເອງເປັນອັນໃດຈຶ່ງຕື່ນສວຍແທ້?

ບໍ່ເປັນຫຍັງດອກ ຂ້ານ້ອຍ!

ນາງຈຶ່ງກ່າວອີກວ່າ ເຮີ້ຍ ອີ່ຊາຕຊົ່ວ ເມື່ອບໍ່ເປັນອັນໃດເປັນຫຍັງຈຶ່ງນອນຕື່ນສວຍແທ້ ດັ່ງນີ້ແລ້ວ ກໍໂກທຢ່າງ

ແຮງ ຈຶ່ງຄວ້າຫລິ້ມປະຕູແກວ່ງໃສ່ຫົວ ປາກກໍວ່າ ກູຈະທຳລາຍຫົວມຶງ.

ພິກຂຸທັງຫລາຍ! ຄາວນັ້ນ ນາງກາລີທາສີມີຫົວແຕກເລືອດໄຫລອອກ ຈຶ່ງທ່ຽວກ່າວໂທສໃຫ້ບ້ານໃກ້ເຮືອນຄຽງຊາບວ່າ:

ແມ່ພໍ່ທັງຫລາຍ! ເຊີນເບິ່ງການກະທຳຂອງຄົນສງົບສະຫງ່ຽມ ອ່ອນໂຍນ ຮຽບຮ້ອຍເອົາເຖີດ ເປັນຫຍັງຈຶ່ງກະທຳກັບທາສີຄົນດຽວຢ່າງນີ້ໜໍ ເພາະໂກທເຄືອງວ່ານອນຕື່ນສວຍ ຈຶ່ງຄວ້າຫລິ້ມປະຕູແກວ່ງໃສ່ຫົວ ປາກກໍວ່າ ກູຈະທຳລາຍຫົວມຶງ ດັ່ງນີ້.

ພິກຂຸທັງຫລາຍ! ແຕ່ນັ້ນມາ ກຽດຕິສັພອັນຊົ່ວຂອງແມ່ເຮືອນເວເທຫິກາກໍຂະຈອຣໄປຢ່າງນີ້ວ່າ ແມ່ເຮືອນເວເທຫິກາເປັນຄົນໂຫດຮ້າຍ ບໍ່ອ່ອນໂຍນ ບໍ່ສງົບສະຫງ່ຽມຮຽບຮ້ອຍ ສັນໃດ, ພິກຂຸທັງຫລາຍ ພິກຂຸບາງອົງຄ໌ໃນທັມວິນັຍນີ້ກໍສັນນັ້ນ ເປັນຄົນສງົບສະຫງ່ຽມຫລາຍ ເປັນຄົນອ່ອນໂຍນຫລາຍ ເປັນຄົນຮຽບຮ້ອຍຫລາຍ ໄດ້ກໍຕໍ່ເມື່ອເວລາທີ່ຍັງບໍ່ໄດ້ກະທົບດ້ວຍຖ້ອຍຄຳອັນບໍ່ເປັນທີ່ພໍໃຈເທົ່ານັ້ນ.

ພິກຂຸທັງຫລາຍ! ກໍເມື່ອໃດ ເຂົາກະທົບດ້ວຍຖ້ອຍຄຳອັນບໍ່ເປັນທີ່ພໍໃຈເຂົ້າ ກໍຍັງເປັນຄົນສງົບສະຫງ່ຽມ ອ່ອນໂຍນຮຽບຮ້ອຍຢູ່ໄດ້, ພິກຂຸທັງຫລາຍ ເມື່ອນັ້ນແລ ຈິ່ງຄວນຖືວ່າເຂົາເປັນຄົນສງົບສະຫງ່ຽມ ອ່ອນໂຍນ ຮຽບຮ້ອຍຈິງ.

ພິກຂຸທັງຫລາຍ! ເຮົາບໍ່ຮຽກພິກຂຸທີ່ເປັນຄົນວ່າງ່າຍ ເຖິງຄວາມເປັນຄົນວ່າງ່າຍ ເພາະເຫຕທີ່ໄດ້ຈີວອຣ ບິນທະບາຕ ເສນາສະນະ ແລະຄິລານະປັຈຈັຍເພສັຊບໍຣິຂານວ່າເປັນຄົນວ່າງ່າຍ. ພິກຂຸທັງຫລາຍ ອີກຢ່າງໜຶ່ງ ພິກຂຸອົງຄ໌ໃດແລ ມາສັກການະ ເຄົາຣົພ ນອບນ້ອມພຣະທັມຢູ່ເປັນຄົນວ່າງ່າຍ ເຖິງຄວາມເປັນຜູ້ວ່າງ່າຍ ເຮົາຮຽກພິກຂຸອົງຄ໌ນັ້ນວ່າ ເປັນຄົນວ່າງ່າຍ ດັ່ງນີ້.

ພິກຂຸທັງຫລາຍ! ເພາະສະນັ້ນແລ ພວກເຈົ້າທັງຫລາຍຄວນສຶກສາຢ່າງນີ້ວ່າ ເຮົາຈັກເປັນຜູ້ສັກການະ ເຄົາຣົພນອບນ້ອມພຣະທັມ ຈັກເປັນຄົນວ່າງ່າຍ ຈັກເຖິງຄວາມເປັນຄົນວ່າງ່າຍ ດັ່ງນີ້.

---

*ມັຊຊິມະນິກາຍ ມູລປັນນາສກ໌ ໑໘/໑໓໔-໑໓໕/໘໕*



# ໂທສຂອງຄວາມບໍ່ອົດທົນ ແລະອານິສົງສ໌ຂອງຄວາມອົດທົນ (ສູດທີ ໑)

ພິກຂຸທັງຫລາຍ! ໂທສຂອງຄວາມບໍ່ອົດທົນ ໕ ປະການນີ້, ໕ ປະການເປັນຢ່າງໃດ? ຄື

ຜູ້ບໍ່ອົດທົນຍ່ອມບໍ່ເປັນທີ່ຮັກ ບໍ່ເປັນທີ່ພໍໃຈຂອງຄົນທັງຫລາຍ *(ພະຫຸໂນ ຊະນັສສະ ອັປປິໂຍ ໂຫຕິ)* ໑

ຍ່ອມເປັນຜູ້ມີເວຣຫລາຍ *(ອະມະນາໂປ ເວຣະພະຫຸໂລ ຈະ ໂຫຕິ)* ໑

ຍ່ອມເປັນຜູ້ມີໂທສຫລາຍ *(ວັຊຊະພະຫຸໂລ ຈະ)* ໑

ຍ່ອມເປັນຜູ້ຫລົງທຳກາລະ *(ສັມມູໂລຫະ ກາລັງ ກະໂຣຕິ)* ໑

ເມື່ອແຕກກາຍຕາຍໄປຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ *(ກາຍັສສະ ເພທາ ປະຣັມມະຣະນາ ອະປາຍັງ ທຸຄຄະຕິງ ວິນິປາຕັງ ນິຣະຍັງ ອຸປປັຊຊະຕິ)* ໑

ພິກຂຸທັງຫລາຍ! ໂທສຂອງຄວາມບໍ່ອົດທົນ ໕ ປະການນີ້ແລ.

ພິກຂຸທັງຫລາຍ! ອານິສົງສ໌ຂອງຄວາມອົດທົນ ໕ ປະການນີ້, ໕ ປະການເປັນຢ່າງໃດ? ຄື

**ຜູ້ອົດທົນຍ່ອມເປັນທີ່ຮັກ ເປັນທີ່ພໍໃຈຂອງຄົນທັງຫລາຍ** *(ພະຫຸໂນ ຊະນັສສະ ປິໂຍ ໂຫຕິ)* ໑

**ຍ່ອມເປັນຜູ້ບໍ່ມີເວຣຫລາຍ** *(ນະບາໂປ ນະ ເວຣະພະຫຸໂລ ໂຫຕິ)* ໑

**ຍ່ອມເປັນຜູ້ບໍ່ມີໂທສຫລາຍ** *(ນະ ວັຊຊະພະຫຸໂລ)* ໑

**ຍ່ອມເປັນຜູ້ບໍ່ຫລົງທຳກາລະ** *(ອະສັມມູໂລຫະ ກາລັງ ກະໂຣຕິ)* ໑

**ເມື່ອແຕກກາຍຕາຍໄປຍ່ອມເຂົ້າເຖິງສຸຄະຕິໂລກສວັນ** *(ກາຍັສສະ ເພທາ ປະຣັມມະຣະນາ ສຸຄະຕິງ ສັຄຄັງ ໂລກັງ ອຸປປັຊຊະຕິ)* ໑

ພິກຂຸທັງຫລາຍ! ອານິສົງສ໌ຂອງຄວາມອົດທົນ ໕ ປະການນີ້ແລ.

---

*ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໔໔/໔໔໗/໔໑໕*

## ໂທສຂອງຄວາມບໍ່ອົດທົນ
## ແລະອານິສົງສ໌ຂອງຄວາມອົດທົນ (ສູຕທີ ໘)

ພິກຂຸທັງຫລາຍ! ໂທສຂອງຄວາມບໍ່ອົດທົນ ໕ ປະການນີ້, ໕ ປະການເປັນຢ່າງໃດ? ຄື

ຜູ້ບໍ່ອົດທົນຍ່ອມບໍ່ເປັນທີ່ຮັກ ບໍ່ເປັນທີ່ພໍໃຈຂອງຄົນທັງຫລາຍ *(ພະຫຸໂນ ຊະນັສສະ ອັປປິໂຍ ໂຫຕິ)* ໑

ຍ່ອມເປັນຜູ້ໂຫດຮ້າຍ *(ອະມະນາໂປ ລຸຫໂທ ຈະ ໂຫຕິ)* ໑

ຍ່ອມເປັນຜູ້ເດືອດຮ້ອນ *(ວິປປະຕິສາຣີ ຈະ)* ໑

ຍ່ອມເປັນຜູ້ຫລົງທຳກາລະ *(ສັມມູໂລຫະ ກາລັງ ກະໂຣຕິ)* ໑

ເມື່ອແຕກກາຍຕາຍໄປຍ່ອມເຂົ້າເຖິງອະບາຍ ທຸຄະຕິ ວິນິບາຕ ນະຣົກ *(ກາຍັສສະ ເພທາ ປະຣັມມະຣະນາ ອະປາຍັງ ທຸຄຄະຕິງ ວິນິປາຕັງ ນິຣະຍັງ ອຸປປັຊຊະຕິ)* ໑

ພິກຂຸທັງຫລາຍ! ໂທສຂອງຄວາມບໍ່ອົດທົນ ໕ ປະການນີ້ແລ.

ພິກຂຸທັງຫລາຍ! ອານິສົງສ໌ຂອງຄວາມອົດທົນ ໕ ປະການນີ້, ໕ ປະການເປັນຢ່າງໃດ? ຄື

**ຜູ້ອົດທົນຍ່ອມເປັນທີ່ຮັກ ເປັນທີ່ພໍໃຈຂອງຄົນທັງຫລາຍ** *(ພະຫຸໂນ ຊະນັສສະ ປິໂຍ ໂຫຕິ)* ໑

**ຍ່ອມເປັນຜູ້ບໍ່ໂຫດຮ້າຍ** *(ນະບາໂປ ອະລຸທໂທ ຈະ ໂຫຕິ)* ໑

**ຍ່ອມເປັນຜູ້ບໍ່ເດືອດຮ້ອນ** *(ອະວິປປະຕິສາຣີ ຈະ)* ໑

**ຍ່ອມເປັນຜູ້ບໍ່ຫລົງທຳກາລະ** *(ອະສັມມູໂລຫະ ກາລັງ ກະໂຣຕິ)* ໑

**ເມື່ອແຕກກາຍຕາຍໄປຍ່ອມເຂົ້າເຖິງສຸຄະຕິໂລກສວັນ** *(ກາຍັສສະ ເພທາ ປະຣັມມະຣະນາ ສຸຄະຕິງ ສັຄຄັງ ໂລກັງ ອຸປປັຊຊະຕິ)* ໑

ພິກຂຸທັງຫລາຍ! ອານິສົງສ໌ຂອງຄວາມອົດທົນ ໕ ປະການນີ້ແລ.

---

*ອັງຄຸຕຕະຣະນິກາຍ ປັນຈະກະ-ສັກກະນິບາຕ ໔໔/໔໔໗/໔໑໕*



## ເຈົ້າໂກທເຮັດຫຍັງໜໍ?

ພຣະຜູ້ມີພຣະພາຄປະທັບຢູ່ທີ່ພຣະເຊຕະວັນ ອາຣາມຂອງທ່ານອະນາຖະບິນດິກະເສດຖີ ເຂດພຣະນະຄອຣສາວັຕຖີ ຄັ້ງນັ້ນແລ ທ່ານພຣະຕິສສະຜູ້ເປັນໂອຣົສພຣະເຈົ້າອາຂອງພຣະຜູ້ມີພຣະພາຄ ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ອະພິວາທແລ້ວ ນັ່ງເປັນທຸກຂ໌ເສຍໃຈ ຫລັ່ງນ້ຳຕາຢູ່ໃນທີ່ຄວນສ່ວນຂ້າງໜຶ່ງ.

ລຳດັບນັ້ນ ພຣະຜູ້ມີພຣະພາຄໄດ້ຕຣັສຖາມທ່ານພຣະຕິສສະວ່າ:

**ຕິສສະ! ເຫຕໃດໜໍ ເຈົ້າຈຶ່ງມານັ່ງເປັນທຸກຂ໌ເສຍໃຈ ຫລັ່ງນ້ຳຕາຢູ່?**

ທ່ານພຣະຕິສສະກຣາບທູລວ່າ:
ຂ້າແຕ່ພຣະອົງຄ໌ຜູ້ຈະເຣີນ ພິກຂຸທັງຫລາຍພາກັນສຽບແທງຂ້ານ້ອຍດ້ວຍວາຈາເໝືອນດັ່ງປະຕັກ.

**ຈິງຢ່າງນັ້ນ ຕິສສະ ເຈົ້າວ່າເຂົາຂ້າງດຽວ ແຕ່ເຈົ້າບໍ່ອົດທົນຕໍ່ຖ້ອຍຄຳ ຂໍ້ທີ່ເຈົ້າວ່າເຂົາຂ້າງດຽວ ບໍ່ອົດທົນຕໍ່ຖ້ອຍຄຳນັ້ນ ບໍ່ສົມຄວນແກ່ເຈົ້າຜູ້ເປັນກຸລະບຸຕອອກບວດເປັນບັນພະຊິຕດ້ວຍສັທທາ, ແຕ່ຂໍ້ທີ່ເຈົ້າວ່າເຂົາດ້ວຍອົດທົນຕໍ່ຖ້ອຍຄຳໄດ້ດ້ວຍ ນັ້ນແລ ສົມຄວນແກ່ເຈົ້າຜູ້ເປັນກຸລະບຸຕອອກບວດເປັນບັນພະຊິຕດ້ວຍສັທທາ.**

ພຣະຜູ້ມີພຣະພາຄຜູ້ສຸຄົຕສາສດາ ຄັນໄດ້ຕຣັສໄວຍາກອຣພາສິຕນີ້ແລ້ວ ຈຶ່ງໄດ້ຕຣັສຄາຖາປະພັນຕໍ່ໄປວ່າ:

**ເຈົ້າໂກທເຮັດຫຍັງໜໍ, ຕິສສະ, ເຈົ້າຢ່າໂກທ**
**ຄວາມບໍ່ໂກທເປັນຄວາມປະເສີດຂອງເຈົ້າ**
**ແທ້ຈິງ ບຸຄຄົລຍ່ອມປະພຶດພຣົມມະຈັນຍ໌ກໍເພື່ອກຳຈັດຄວາມໂກທ ຄວາມຖືຕົວ ແລະຄວາມລົບຫລູ່ຄຸນທ່ານ.**

*ສັງຍຸຕຕະນິກາຍ ນິທານວັຄ ໑໗/໔໘໔/໗໑໓*



## ຜູ້ໜັກໃນຄວາມໂກທແລະຄວາມລົບຫລູ່ ໜັກໃນລາພແລະສັກກາຣະ ພວກເຂົາຍ່ອມບໍ່ງອກງາມໃນທັມອັນພຣະສັມມາສັມພຸທທະເຈົ້າຊົງສະແດງແລ້ວ

ພິກຂຸທັງຫລາຍ! ບຸຄຄົລ ໔ ຈຳພວກນີ້ ມີປາກົຕຢູ່ໃນໂລກ, ໔ ຈຳພວກເປັນຢ່າງໃດ? ຄື:

ເປັນຜູ້ໜັກໃນຄວາມໂກທ ບໍ່ໜັກໃນສັທທັມ
*(ໂກທະຄຣຸນະ ສັທທັມມະຄຣຸ)* ໑
ເປັນຜູ້ໜັກໃນຄວາມລົບຫລູ່ ບໍ່ໜັກໃນສັທທັມ ໑
ເປັນຜູ້ໜັກໃນລາພ ບໍ່ໜັກໃນສັທທັມ ໑
ເປັນຜູ້ໜັກໃນສັກກາຣະ ບໍ່ໜັກໃນສັທທັມ ໑

ພິກຂຸທັງຫລາຍ! ບຸຄຄົລ ໔ ຈຳພວກນີ້ແລ ມີປາກົຕຢູ່ໃນໂລກ.

ພິກຂຸທັງຫລາຍ! ບຸຄຄົລ ໔ ຈຳພວກນີ້ ມີປາກົຕຢູ່ໃນໂລກ, ໔ ຈຳພວກເປັນຢ່າງໃດ? ຄື

ເປັນຜູ້ໜັກໃນສັທທັມ ບໍ່ໜັກໃນຄວາມໂກທ
*(ສັທທັມມະຄຣຸ ນະ ໂກທະຄຣຸ)* ໑
ເປັນຜູ້ໜັກໃນສັທທັມ ບໍ່ໜັກໃນຄວາມລົບຫລູ່ ໑
ເປັນຜູ້ໜັກໃນສັທທັມ ບໍ່ໜັກໃນລາພ໑
ເປັນຜູ້ໜັກໃນສັທທັມ ບໍ່ໜັກໃນສັກກາຣະ ໑

ພິກຂຸທັງຫລາຍ! ບຸຄຄົລ ໔ ຈຳພວກນີ້ແລ ມີປາກົຕຢູ່ໃນໂລກ.

ພິກຂຸຜູ້ໜັກໃນຄວາມໂກທແລະຄວາມລົບຫລູ່ ໜັກໃນລາພແລະສັກກາຣະ ພວກເຂົາຍ່ອມບໍ່ງອກງາມໃນທັມອັນພຣະສັມມາສັມພຸທທະເຈົ້າຊົງສະແດງແລ້ວ.

ສ່ວນພິກຂຸເຫລົ່າໃດເປັນຜູ້ໜັກໃນສັທທັມຢູ່ແລ້ວ ແລະກຳລັງເປັນຜູ້ໜັກໃນສັທທັມຢູ່ ພິກຂຸເຫລົ່ານັ້ນແລ ຍ່ອມ

ໆອກາງານໃນທັນອັນພຣະສັມມາສັມພຸທທະເຈົ້າຊົງສະແດງແລ້ວ.

---

*ອັງຄຸຕຕະຣະນິກາຍ ຈະຕຸກກະນິບາຕ ໔໑/໔໗/໔໘*



## ອະສັທທັມ ໔ ປະການ

ພິກຂຸທັງຫລາຍ! ອະສັທທັມ ໔ ປະການນີ້, ໔ ປະການ ເປັນຢ່າງໃດ? ຄື:

ຄວາມເປັນຜູ້ໜັກໃນຄວາມໂກທ ບໍ່ໜັກໃນສັທທັມ *(ໂກທະຄຣຸຕາ ນະ ສັທທັມມະຄຣຸຕາ)* ໑
ຄວາມເປັນຜູ້ໜັກໃນຄວາມລົບຫລູ່ ບໍ່ໜັກໃນສັທທັມ ໑
ຄວາມເປັນຜູ້ໜັກໃນລາພ ບໍ່ໜັກໃນສັທທັມ ໑
ຄວາມເປັນຜູ້ໜັກໃນສັກກາຣະ ບໍ່ໜັກໃນສັທທັມ ໑
ພິກຂຸທັງຫລາຍ ອະສັທທັມ ໔ ປະການນີ້ແລ.

ພິກຂຸທັງຫລາຍ! ສັທທັມ ໔ ປະການນີ້, ໔ ປະການເປັນ ຢ່າງໃດ? ຄື:

ຄວາມເປັນຜູ້ໜັກໃນສັທທັມ ບໍ່ໜັກໃນຄວາມໂກທ
*(ສັທທັມມະຄຣຸຕາ ນະ ໂກທະຄຣຸຕາ)* ໑
ຄວາມເປັນຜູ້ໜັກໃນສັທທັມ ບໍ່ໜັກໃນຄວາມລົບຫລູ່ ໑
ຄວາມເປັນຜູ້ໜັກໃນສັທທັມ ບໍ່ໜັກໃນລາພ ໑
ຄວາມເປັນຜູ້ໜັກໃນສັທທັມ ບໍ່ໜັກໃນສັກການະ ໑
ພິກຂຸທັງຫລາຍ ສັທທັມ ໔ ປະການນີ້ແລ.

ພິກຂຸຜູ້ໜັກໃນຄວາມໂກທແລະຄວາມລົບຫລູ່ ໜັກໃນລາພແລະສັກການະຍ່ອມບໍ່ງອກງາມໃນພຣະສັທທັມ ເໝືອນພືດທີ່ຫວ່ານໄວ້ໃນນາບໍ່ດີ.

ສ່ວນພິກຂຸເຫລົ່າໃດ ເປັນຜູ້ໜັກໃນສັທທັມຢູ່ແລ້ວ ແລະກຳລັງເປັນຜູ້ໜັກໃນສັທທັມຢູ່ ພິກຂຸເຫລົ່ານັ້ນແລ ຍ່ອມງອກງາມໃນທັມ ເໝືອນຕົ້ນໄມ້ອາສັຍຢາງງອກງາມຢູ່ສັນນັ້ນ.

---

*ອັງຄຸຕຕະຣະນິກາຍ ຈະຕຸກກະນິບາຕ ໒໑/໔໓-໔໗/໔໔*



# ຜູ້ໜັກໃນຄວາມໂກທ ບໍ່ໜັກໃນສັທທັມ ຍ່ອມໄປສູ່ນະຣົກ

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໔ ປະການ ຍ່ອມເກີດໃນນະຣົກເໝືອນຖືກນຳມາໂຍນລົງ, ທັມ ໔ ປະການເປັນຢ່າງໃດ? ຄື:

**ເປັນຜູ້ໜັກໃນຄວາມໂກທ ບໍ່ໜັກໃນສັທທັມ**

*(ໂກທະຄຣຸ ໂທຕິ ນະ ສັທທັມມະຄຣຸ)* ໑

**ເປັນຜູ້ໜັກໃນຄວາມລົບຫລູ່ ບໍ່ໜັກໃນສັທທັມ** ໑

**ເປັນຜູ້ໜັກໃນລາພ ບໍ່ໜັກໃນສັທທັມ** ໑

**ເປັນຜູ້ໜັກໃນສັກກາຣະ ບໍ່ໜັກໃນສັທທັມ** ໑

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໔ ປະການນີ້ແລ ຍ່ອມເກີດໃນນະຣົກເໝືອນຖືກນຳມາໂຍນລົງ.

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໔ ປະການ ຍ່ອມເກີດໃນສວັນເໝືອນຖືກເຊີນມາ, ທັມ ໔ ປະການ ເປັນຢ່າງໃດ? ຄື:

ເປັນຜູ້ໜັກໃນສັທທັມ ບໍ່ໜັກໃນຄວາມໂກທ
*(ສັທທັມມະຄຣຸ ໂທຕິ ນະ ໂກທະຄຣຸ)* ໑
ເປັນຜູ້ໜັກໃນສັທທັມ ບໍ່ໜັກໃນຄວາມລົບຫລູ່ ໑
ເປັນຜູ້ໜັກໃນສັທທັມ ບໍ່ໜັກໃນລາພ ໑
ເປັນຜູ້ໜັກໃນສັທທັມ ບໍ່ໜັກໃນສັກການະ ໑

ພິກຂຸທັງຫລາຍ! ບຸຄຄົລຜູ້ປະກອບດ້ວຍທັມ ໔ ປະການນີ້ ແລ ຍ່ອມເກີດໃນສວັນເໝືອນຖືກເຊີນມາ.

---

*ອັງຄຸຕຕະຣະນິກາຍ ຈຕຸກກະນິບາຕ ໒໑/໘໔/໘໔*



## ອະຄະຕິ ໔

ພິກຂຸທັງຫລາຍ! ການເຖິງເຊິ່ງອະຄະຕິ ໔ ປະການນີ້, ໔ ປະການເປັນຢ່າງໃດ? ຄື:
**ບຸຄຄົລຍ່ອມລຳອຽງເພາະຮັກ** *(ສັນທາຄະຕິງ ຄັຈສະຕິ)*,
**ຍ່ອມລຳອຽງເພາະຊັງ** *(ໂທສາຄະຕິງ ຄັຈສະຕິ)*,
**ຍ່ອມລຳອຽງເພາະຫລົງ** *(ໂມຫາຄະຕິງ ຄັຈສະຕິ)*,
**ຍ່ອມລຳອຽງເພາະຢ້ານ** *(ພະຍາຄະຕິງ ຄັຈສະຕິ)*
ພິກຂຸທັງຫລາຍ! ການເຖິງເຊິ່ງອະຄະຕິ ໔ ປະການນີ້ແລ.

**ຜູ້ໃດປະພຶດລ່ວງທັມເພາະຄວາມຮັກ ເພາະຄວາມຊັງ ເພາະຄວາມຫລົງ ເພາະຄວາມຢ້ານ ຍົສຂອງຜູ້ນັ້ນຍ່ອມເສື່ອມ ເໝືອນດວງຈັນທ໌ໃນຂ້າງແຮມ ສັນນັ້ນ.**

ພິກຂຸທັງຫລາຍ! ການບໍ່ເຖິງເຊິ່ງອະຄະຕິ ໔ ປະການນີ້, ໔ ປະການເປັນຢ່າງໃດ? ຄື:
ບຸຄຄົລຍ່ອມບໍ່ລຳອຽງເພາະຮັກ *(ນະ ສັນທາຄະຕິງ ຄັຈສະຕິ)*,
ຍ່ອມບໍ່ລຳອຽງເພາະຊັງ *(ນະ ໂທສາຄະຕິງ ຄັຈສະຕິ)*,
ຍ່ອມບໍ່ລຳອຽງເພາະຫລົງ *(ນະ ໂມຫາຄະຕິງ ຄັຈສະຕິ)*,
ຍ່ອມບໍ່ລຳອຽງເພາະຢ້ານ *(ນະ ພະຍາຄະຕິງ ຄັຈສະຕິ)*
ພິກຂຸທັງຫລາຍ! ການບໍ່ເຖິງເຊິ່ງອະຄະຕິ ໔ ປະການນີ້ແລ.

**ຜູ້ໃດບໍ່ປະພຶດລ່ວງທັມເພາະຄວາມຮັກ ເພາະຄວາມຊັງ ເພາະຄວາມຫລົງ ເພາະຄວາມຢ້ານ ຍົສຂອງຜູ້ນັ້ນຍ່ອມເຕັມປ່ຽມ ເໝືອນດວງຈັນທ໌ໃນຂ້າງຂຶ້ນ ສັນນັ້ນ.**

---

*ອັງຄຸຕຕະຣະນິກາຍ ຈະຕຸກກະນິບາຕ ໔໑/໑໗/໑໘*



## ພັຕຕຸທເທສະກະສູຕ[2]

ພິກຂຸທັງຫລາຍ! ພັຕຕຸທເທສະກະ*(ຜູ້ແຈກອາຫານ)* ປະກອບດ້ວຍທັມ ໔ ປະການ ເໝືອນຖືກນຳໄປວາງໄວ້ໃນນະຣົກ, ທັມ ໔ ປະການເປັນຢ່າງໃດ? ຄື

ພັຕຕຸທເທສະກະຍ່ອມເຖິງເຊິ່ງຄວາມລຳອຽງເພາະຮັກ, ຍ່ອມເຖິງເຊິ່ງຄວາມລຳອຽງເພາະຊັງ, ຍ່ອມເຖິງເຊິ່ງຄວາມລຳອຽງເພາະຫລົງ, ຍ່ອມເຖິງເຊິ່ງຄວາມລຳອຽງເພາະຢ້ານ. ພິກຂຸທັງຫລາຍ ພັຕຕຸທເທສະກະຜູ້ປະກອບດ້ວຍທັມ ໔ ປະການນີ້ແລ ເໝືອນຖືກນຳໄປວາງໄວ້ໃນນະຣົກ.

---

[2] *ອັງຄຸຕຕະຣະນິກາຍ ຈະຕຸກກະນິບາຕ ໔໑/໑໗/໔໐*

ພິກຂຸທັງຫລາຍ! ພັຕຕຸທເທສະກະຜູ້ປະກອບດ້ວຍທັມ ໔ ປະການ ເໝືອນຖືກນຳໄປວາງໄວ້ໃນສວັນ, ທັມ ໔ ປະການເປັນຢ່າງໃດ? ຄື

ພັຕຕຸທເທສະກະຍ່ອມບໍ່ເຖິງເຊິ່ງຄວາມລຳອຽງເພາະຮັກ, ຍ່ອມບໍ່ເຖິງເຊິ່ງຄວາມລຳອຽງເພາະຊັງ, ຍ່ອມບໍ່ເຖິງເຊິ່ງຄວາມລຳອຽງເພາະຫລົງ, ຍ່ອມບໍ່ເຖິງເຊິ່ງຄວາມລຳອຽງເພາະຢ້ານ. ພິກຂຸທັງຫລາຍ ພັຕຕຸທເທສະກະຜູ້ປະກອບດ້ວຍທັມ ໔ ປະການນີ້ແລ ເໝືອນຖືກນຳໄປວາງໄວ້ໃນສວັນ.

ຊົນເຫລົ່າໃດບໍ່ສັງຣວມໃນກາມ ບໍ່ປະກອບດ້ວຍທັມ ບໍ່ເຄົາຣົພໃນທັມ ມີປົກກະຕິເຖິງສັນທາຄະຕິ ໂທສາຄະຕິ ໂມຫາຄະຕິ ແລະພະຍາຄະຕິ ບຸຄຄົລນີ້ແລເຮົາຮຽກວ່າ ເປັນຂີ້ເຫຍື່ອໃນບໍຣິສັທ ອັນສະມະນະຜູ້ຮູ້ກ່າວແລ້ວຢ່າງນີ້.

ຊົນເຫລົ່າໃດຕັ້ງຢູ່ໃນທັມ ມີປົກກະຕິບໍ່ເຖິງສັນທາຄະຕິ ໂທສາຄະຕິ ໂມຫາຄະຕິ ແລະພະຍາຄະຕິ ຍ່ອມບໍ່ກະທຳກັມອັນເປັນບາບ ເພາະສະນັ້ນ ບຸຄຄົລນັ້ນຊື່ວ່າ ສັປບຸຣຸສທີ່ໜ້າສັນລະເສີນ ບຸຄຄົລນີ້ເຮົາຮຽກວ່າ ເປັນຜູ້ຜຸດຜ່ອງໃນບໍຣິສັທ ອັນສະມະນະຜູ້ຮູ້ກ່າວແລ້ວຢ່າງນີ້.

ພິກຂຸທັງຫລາຍ ພວກເຈົ້າທັງຫລາຍຈົ່ງທ່ຽວຈາຣິກໄປເພື່ອປະໂຍຊນ໌ເກື້ອກູນແກ່ມະຫາຊົນ ເພື່ອຄວາມສຸຂແກ່ມະຫາຊົນ ເພື່ອອະນຸເຄາະໂລກ ເພື່ອປະໂຍຊນ໌ ເພື່ອເກື້ອກູນ ເພື່ອຄວາມສຸຂແກ່ເທວະດາແລະມະນຸສທັງຫລາຍ...

ພິກຂຸທັງຫລາຍ ພວກເຈົ້າທັງຫລາຍຈົ່ງສະແດງທັມງາມໃນເບື້ອງຕົ້ນ ງາມໃນທ່າມກາງ ງາມໃນທີ່ສຸດ ປະກາສພຣົມມະຈັນຍ໌ ພ້ອມທັງອັຕຖະ ພ້ອມທັງພະຍັນຊະນະບໍຣິສຸທ ບໍຣິບູນສິ້ນເຊີງ ສັຕທັງຫລາຍຜູ້ມີທຸລີໃນຈັກຂຸໜ້ອຍມີຢູ່ ເພາະບໍ່ໄດ້ຟັງທັມຍ່ອມເຂົ້າເຖິງຄວາມເສື່ອມ ຜູ້ຮູ້ທົ່ວເຖິງທັມຍ່ອມມີ.

*ສັງຍຸຕຕະນິກາຍ ສະຄາຖະວັຄ ໑໕/໑໙໐/໔໔໗*



**“ຄູ່ມືການຈະເຣີນເມດຕາ”**

ໄດ້ແປແລະຮຽບຮຽງຈາກພຣະໄຕຣປີດົກ
ສະບັບຫລວງ ພາສາໄທ ແລະໄດ້ຜ່ານ
ການທຽບຄຽງກັບພຣະໄຕຣປີດົກຫລາຍສຳນັກເຊັ່ນ:
ພຣະໄຕຣປີດົກສະບັບມະຫາຈຸລາ,
ສະບັບພາສາບາລີ-ໄທ ແລະພຣະໄຕຣປີດົກ
ພາສາອັງກິດຈາກ **Suttacentral.net**
ພຣະສູຕທີ່ເປັນພາສາອັງກິດຮຽບຮຽງຈາກ
**Suttacentral.net**

ຜູ້ຮຽບຮຽງແລະອອກແບບໜັງສື:
ວ. ວົງແສງສີ

ພິກຂຸທັງຫລາຍ ບຸຄຄົລບາງຄົນໃນໂລກນີ້ ມີໃຈປະກອບດ້ວຍເມຕຕາ ແຜ່ໄປ ຕະຫລອດທິສທີ່ໜຶ່ງຢູ່ ທິສທີສອງ ທິສທີ ສາມ ທິສທີສີ່ກໍເໝືອນກັນ ທັງເບື້ອງເທິງ ເບື້ອງລຸ່ມ ເບື້ອງຂວາງ ແຜ່ໄປຕະຫລອດ ໂລກທັງປວງ ທົ່ວສັຕທຸກເຫລົ່າ ໃນທີ່ທຸກ ສະຖານ ດ້ວຍໃຈປະກອບດ້ວຍເມຕຕາ ອັນໄພບູນ ຍິ່ງໃຫຍ່ ຫາປະມານບໍ່ໄດ້ ບໍ່ມີ ເວຣ ບໍ່ມີພະຍາບາທຢູ່ ຮູປ ເວທະນາ ສັນຍາ ສັງຂາຣ ວິນຍານ ອັນໃດມີຢູ່ໃນ ເມຕຕານັ້ນ ບຸຄຄົລນັ້ນພິຈາຣະນາເຫັນທັມ ເຫລົ່ານັ້ນໂດຍຄວາມເປັນຂອງບໍ່ທ່ຽງ ເປັນ ທຸກຂ໌ ເປັນດັ່ງໂຣຄ ເປັນດັ່ງຫົວຝີ ເປັນດັ່ງ ລູກສອນ ເປັນຂອງທົນໄດ້ຍາກ ເປັນຂອງ ບຽດບຽນ ເປັນຂອງບໍ່ເຊື່ອຟັງ ເປັນຂອງ ຕ້ອງແຕກທຳລາຍໄປ ເປັນຂອງວ່າງເປົ່າ ເປັນຂອງບໍ່ແມ່ນຕົວຕົນ ບຸຄຄົລນັ້ນເມື່ອ ແຕກກາຍຕາຍໄປ ຍ່ອມເຂົ້າເຖິງຄວາມ ເປັນສະຫາຍຂອງເທວະດາເຫລົ່າສຸທທາ ວາສ. ພິກຂຸທັງຫລາຍ ຄວາມອຸບັຕນີ້ແລ ບໍ່ມີທົ່ວໄປໃນປຸຖຸຊົນ.

ອັງຄຸຕຕະຣະນິກາຍ ຈະຕຸກກະນິບາຕ ໒໑/໑໓໐/໑໒໕

**For Free Distribution**
For more information: Please contact us:
buddhavacana.word@gmail.com